
ນິທານ
ນາງແຕງອ່ອນ

ອຸທິນ ບຸນຍາວົງ

ນິທານ

ນາງແຕງອ່ອນ

ຖອດເປັນຮ້ອຍແກ້ວ

ໂດຍ: ພ. ພວງສະບາ

ພິມເທື່ອທີ I

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

ວຽງຈັນ 1991

ແຕ້ມໜ້າປົກ ໂດຍ: ຄຳເພັດ

ທະບຽນເລກທີ 234 / ພ ຈ ທນ ປ

ຈຳນວນ 2.000 ເຫຼັ້ມ

ຄຳນຳ

ນິທານນາງແຕງອ່ອນ ແມ່ນໜຶ່ງໃນຈຳນວນວັນນະຄະດີບູຮານທີ່ເດັ່ນ ເຊິ່ງເຄີຍໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນດ້ວຍການອ່ານຫລືເລົ່ານັບແຕ່ສະໄໝຂອງປູ່ຍ່າຕາຍາຍ ສືບທອດກັນມາ ເປັນລຳດັບຕາມຍຸກຕາມສະໄໝຕ່າງໆ ໄດ້ຫລາຍສະຕະວັດມາແລ້ວ.

ຕໍ່ມາປຶ້ມນິທານດັ່ງກ່າວນີ້ ກໍໄດ້ຖືກຈັດພິມຂຶ້ນເປັນປຶ້ມຄັ້ງທຳ ອິດ ໂດຍໄດ້ຈັດພິມເປັນຄຳຮ້ອຍກອງ (ຄຳກອນ) ຊຶ່ງກໍເຫັນວ່າ ໄດ້ຮັບຄວາມນິຍົມຈາກຜູ້ອ່ານຢ່າງກວ້າງຂວາງເຊັ່ນດຽວກັນ. ສະນັ້ນເພື່ອເປັນການສົ່ງເສີມມູນມໍລະດົກທາງດ້ານວັນນະກຳເກົ່າແກ່ນີ້ໄວ້ໃຫ້ຍືນຍົງເປັນສົມບັດຂອງມວນຊົນຊາວລາວສືບຕໍ່ໄປພາຍໜ້າ ທາງສຳນັກພິມຂອງພວກເຮົາຈຶ່ງໄດ້ຈັດພິມນິທານເລື່ອງນີ້ຄືນໃໝ່ ດ້ວຍ ການຖອດມາເປັນຄຳຮ້ອຍແກ້ວ (ຄຳເວົ້າທຳມະດາ) ເພື່ອຊ່ວຍໃຫ້ຜູ້ອ່ານທົ່ວໆໄປຕະຫລອດທັງເດັກນ້ອຍ ແລະ ຜູ້ໃຫຍ່ສາມາດເຂົ້າໃຈ ໄດ້ງ່າຍ.

ພວກເຮົາຫວັງຢ່າງຍິ່ງວ່າປຶ້ມນິທານຫລົ້ມນີ້ ຈະກາຍເປັນເໝືອນຢາບຳລຸງ ຊຶ່ງຈະຊ່ວຍກະຕຸ້ນຄວາມເບີກບານຫັນສາແກ່ ຜູ້ທີ່ມີລົດນິຍົມ ໂອນອຽງໄປທາງດ້ານ ວັນນະກຳເກົ່າແກ່ທັງຫລາຍແລະຂໍຝາກປຶ້ມຫລົ້ມດັ່ງກ່າວນີ້ ໄວ້ປະດັບຫ້ອງສະໝຸດຂອງບັນດາ ທ່ານນັກອ່ານທຸກຖ້ວນໜ້າດ້ວຍ.

ສຳນັກພິມແລະຈຳໜ່າຍປຶ້ມ ແຫ່ງລັດ ສ.ປ.ປ.ລາວ.

ຜູ້ຮຽບໂຮມ ຮຽບຮຽງ

ທ່ານຜູ້ອ່ານທີ່ຮັກແພງ ໜັງສືນິທານນາງແຕງອ່ອນທີ່ທ່ານພວມອ່ານຢູ່ນີ້ ຫລາຍທ່ານຄົງຈະຄິດແປກໃຈ, ເພາະຜ່ານມາ ນິທານນາງແຕງອ່ອນທັງສະບັບໃບລານ ແລະ ສະບັບພິມເປັນປຶ້ມອອກຈຳໜ່າຍ ລ້ວນແຕ່ເປັນຄຳກອນຫລືເອີ້ນວ່າຄຳຮ້ອຍກອງ; ສຳ ຫລັບສະບັບນີ້ ຂ້າພະເຈົ້າໄດ້ຖອດຈາກຄຳຮ້ອຍກອງ ມາເປັນຄຳ ຮ້ອຍແກ້ວ ຄືເປັນການເລົ່າທຳມະດາ. ແຕ່ກໍຍັງມີບາງປະໂຫຍກ ຫລືບາງຕອນ ຂ້າພະເຈົ້າກໍໄດ້ເອົາຄຳກອນຄືຄຳຮ້ອຍກອງຮູບ ເດີມຂອງນິທານ ແຊກຊອນເຂົ້າໃສ່,ທັງນີ້ເພື່ອເຮັດໃຫ້ການເລົ່າເລື່ອງແບບຮ້ອຍແກ້ວ ໄດ້ມີຄວາມໜັກແໜ້ນ ເຮັດໃຫ້ຜູ້ອ່ານເກີດຈິດສຳນຶກເຖິງຮູບພາບຂອງເນື້ອເລື່ອງລຶກຊຶ້ງຕື່ມ.

ທ່ານຜູ້ອ່ານທັງຫລາຍ ການຖອດຈາກບົດຮ້ອຍກອງມາ ເປັນຮ້ອຍແກ້ວໃນເລື່ອງນາງແຕງອ່ອນ ຖືວ່າແມ່ນເທື່ອທຳອິດ, ດັ່ງນັ້ນການຖອດຈາກຮ້ອຍກອງມາເປັນຮ້ອຍແກ້ວຂອງຂ້າພະເຈົ້າໃນເທື່ອນີ້ ຈຶ່ງຍັງບໍ່ທັນຖືວ່າມີຄວາມສົມບູນຮ້ອຍເປີເຊັນເທື່ອ; ການ ຖອດເທື່ອນີ້ ຂ້າພະເຈົ້າໄດ້ພະຍາຍາມລວບລັດຕັດຕອນໃຫ້ຫຍໍ້ເທົ່າທີ່ຈະຫຍໍ້ໄດ້ ແຕ່ຂ້າພະເຈົ້າກໍໄດ້ພະຍາຍາມຮັກສາເຄົ້າເລື່ອງທັງ ໝົດເອົາໄວ້, ເຖິງແນວໃດກໍຕາມ ຂ້າພະເຈົ້າຄິດວ່າ ການຖອດແລະຮຽບໂຮມຮຽບຮຽງຂອງ ຂ້າພະເຈົ້າໃນເທື່ອນີ້ ກໍບໍ່ສາມາດ ປາສະ

ຈາກຄວາມຂາດຕົກບົກພ່ອງໄດ້, ຂ້າພະເຈົ້າຈຶ່ງຂໍອະໄພຈາກທ່ານ ຜູ້ອ່ານ ແລະ ທ່ານຜູ້ຮູ້ທັງຫລາຍໄວ້ໃນໂອກາດນີ້ດ້ວຍ.

ວັນທີ 18 / 12 / 1989

ດ້ວຍຄວາມຮັກແພງ

ພ. ພວງສະບາ

ຫຍໍ້ເລື່ອງ

ຍັງມີເມືອງແຫ່ງຫນຶ່ງ ຊື່ວ່າໂກສີຫລືນະຄອນສີ ພະຍາປົກຄອງເມືອງນີ້ມີຊື່ວ່າ ພະຍາໂກສີ ຫລືພະຍານະຄອນສີ ມີເມຍຊື່ວ່ານາງສີສຸພະລັດຕະນາ, ຕໍ່ມານາງສີສຸພະລັດຕະນາ ໄດ້ປະສູດລູກ ເປັນຜູ້ຊາຍ ມີຊື່ວ່າ ທ້າວຈັກກີມະຫາວົງ ຫລືເອີ້ນຫຍໍ້ໆວ່າ ມະ ຫາວົງ ເມື່ອທ້າວຈັກກີມະຫາວົງໃຫຍ່ຂຶ້ນມາ ຈຶ່ງອອກເດີນດົງໄປຊອກຫາຕໍ່ໄກ່.

ເມື່ອທ້າວຈັກກີມະຫາວົງ ນຳຂະບວນເສນາອາມາດໄປຕໍ່ ໄກ່ຈຶ່ງຫລົງທາງກັບ ຈຳເປັນຕ້ອງເດີນທາງໄປຫນ້າເລື້ອຍໆ ຈົນ ຕົກໄປເຖິງແຄມຝັ່ງແມ່ນ້ຳແຫ່ງຫນຶ່ງ ພໍຕອນກາງຄືນທ້າວຈຶ່ງນອນ ຝັນເຫັນຜູ້ສາວງາມຢູ່ໃນພື້ນມະຫາສະຫມຸດ, ຕື່ນເຊົ້າມາຈຶ່ງຈຳໃຫ້ເສນາມຸດລົງໄປໃນພື້ນນ້ຳ ເພື່ອຊອກຫານາງໃນຝັນ, ເມື່ອເສນາດຳນ້ຳລົງໄປຈຶ່ງໄດ້ພົບວ່າຢູ່ພື້ນມະຫາສະຫມຸດມີເມືອງແຫ່ງຫນຶ່ງ ເຊິ່ງເປັນເມືອງຂອງພະຍາກຸມພົນ (ແຂ້ໃຫຍ່) ແລະ ໄດ້ເຫັນຜູ້ ສາວງາມດັ່ງໃນຄວາມຝັນຂອງທ້າວຈັກກີມະຫາວົງແທ້, ຈາກນັ້ນເສນາຈຶ່ງຟ້າວກັບຄືນມາລາຍງານໃຫ້ທ້າວຈັກກີມະຫາວົງຮູ້.

ພາຍຫລັງທ້າວຈັກກີມະຫາວົງ ພ້ອມເສນາອາມາດ ໄດ້ກັບຄືນເຖິງເມືອງ ໂກສີແລ້ວກໍແຕ່ງໃຫ້ເສນາຜູ້ໃຫ່ຍເດີນທາງໄປສູ່ຂໍເອົານາງໃນຝັນຄືລູກສາວຂອງພະຍາກຸມພົນ ມາເປັນເມຍ ນາງຜູ້ນັ້ນມີຊື່ວ່າ ນາງແຕງອ່ອນ, ເມື່ອໄດ້ນາງແຕງອ່ອນມາເປັນເມຍບໍ່ ດົນເທົ່າໃດ ທ້າວຈັກກີມະຫາວົງ ກໍເດີນດົງໄປຄ້ອງຊ້າງເຜືອກ ຕາມການບອກກ່າວຂອງນາຍພານ, ໃນໂອກາດນີ້ ນາງແຕງອ່ອນ ກໍຖືພາມານຄົບເດືອນຈະປະສູດລູກພໍດີ.

ຍ້ອນການອິດສາບັງບຽດຂອງແມ່ ໄວຍະກາ ແລະ ນາງ ທັງຫາ ເມື່ອເຖິງເວລານາງແຕງອ່ອນປະສູດລູກ ເຂົາຈຶ່ງເອົາແພມັດຕາແລ້ວ ເອົາແຂ້ມາປ່ຽນ, ສ່ວນລູກຂອງນາງແຕງອ່ອນທີ່ເກີດມາເປັນຄົນນັ້ນ ເຂົາໄດ້ເອົາໃສ່ໄຫໄປຝັງຢູ່ນອກເມືອງ; ຝ່າຍ ທ້າວຈັກກີມະຫາວົງ ເມື່ອກັບມາແຕ່ຄ້ອງຊ້າງ, ໄດ້ຟັງຄຳສັບສໍ່ຂອງແມ່ໄວຍະກາ ໃສ່ຄວາມວ່ານາງແຕງອ່ອນໄປຫລິ້ນກັບແຂ້ ຈຶ່ງໄດ້ ລູກມາເປັນແຂ້, ດັ່ງນັ້ນທ້າວຈັກກີມະຫາວົງຈຶ່ງໄດ້ຂັບຫນີຕີສົ່ງ ນາງອອກຈາກເມືອງ.

ນາງແຕງອ່ອນໄດ້ອອກຫນີຈາກເມືອງໄປຫາກຸມພາຜູ້ເປັນອ້າຍຈາກນັ້ນທັງສອງຈຶ່ງພາກັນເດີນທາງຕໍ່ໄປ ຫວັງຈະໄປຮຽນວິດທະຍາຄາຖານຳພະລືສີ, ຕໍ່ມາທັງສອງຈຶ່ງໄດ້ພາກັນບວດຈຳສິນພາວະນາຢູ່ກາງປ່າ ຄືກຸມພາບວດເປັນລືສີ ນາງແຕງອ່ອນບວດເປັນແມ່ ຊີຂາວ, ພາຍລຸນມາຍັກທັດຖະຈັກແຫ່ງເມືອງມັນທະພານ ໄດ້ໄປລັກເອົານາງຊີຂາວແຕງອ່ອນ ເພື່ອມາເປັນເພື່ອນໃຫ້ກັບນາງປະ ທຸມມາລູກສາວຂອງມັນ, ນາງປະທຸມມານີ້ຍັກທັດຖະຈັກໄດ້ມາ ຈາກ

ດອກບົວ.

ຕໍ່ມາທ້າວເກດສຸລິຍົງຍານ ຫລືເກດສຸລິວົງ ໄດ້ຮູ້ເລື່ອງ ຈາກພະອິນວ່າ ນາງແຕງອ່ອນຜູ້ເປັນແມ່ຢູ່ທີ່ເມືອງນັນທະພານ, ທ້າວຈຶ່ງເດີນທາງໄປນຳເອົາແມ່ແລະໄດ້ຕໍ່ສູ້ກັບຍັກທັດຖະຈັກ ຈົນຍັກທັດຖະຈັກຕາຍ. ເວລາທ້າວເຂົ້າໄປຫາແມ່ໃນຫໍຜາສາດ ຈຶ່ງໄດ້ພົບນາງປະທຸມມາ, ນາງຢາດຟ້າ ແລະ ນາງອິນທອງ ທ້າວຈຶ່ງໄດ້ ເອົານາງທັງສາມເປັນເມຍ, ຕໍ່ມາຍັກສາລະວັນກໍໄດ້ມອບລູກສາວຊື່ວ່ານາງຈັນທອນໃຫ້ເປັນເມຍອີກ ລວມເປັນສີ່ຄົນ ແລະ ທ້າວກໍໄດ້ປົກຄອງເມືອງນັນທະພານຢູ່ເຖິງສາມປີ, ຈາກນັ້ນຈຶ່ງນຳເອົາແມ່ແລະເມຍທັງສີ່ກັບຄືນສູ່ເມືອງໂກສີ ຫາມະຫາວົງຜູ້ເປັນພໍ່ ຫລັງຈາກນັ້ນທ້າວກໍໄດ້ຂຶ້ນສະເຫວີຍລາດບ້ານເມືອງແທນພໍ່.

24 / VII

ຫ້າມຈຳໜ່າຍ

1- ກ່າວເຖິງເມືອງນະຄອນສີ

ຍັງມີເມືອງແຫ່ງໜຶ່ງຊື່ວ່າ ເມືອງນະຄອນສີ ຫລືໂກສີ ເປັນເມືອງທີ່ອຸດົມສົມບູນໄປດ້ວຍຈະຕຸສະດົມທັງສີ່ຄື ວຽງ,ວັງ,ຄັງແລະນາຕະຫລອດເຖິງງົວຄວາຍຊ້າງມ້າ, ພະລາຊາປົກຄອງເມືອງນີ້ມີຊື່ວ່າ ພະຍາໂກສີ ຫລືພະຍານະຄອນສີ ພະອົງປົກຄອງບ່າວໄພ່ລາສະດອນດ້ວຍຄວາມເປັນທຳ, ແຕ່ລະປີມີຫົວເມືອງຕ່າງໆມາ ເສຍສ່ວຍໃຫ້ບໍ່ໄດ້ຂາດ, ເມືອງນະຄອນສີມີອານາເຂດກວ້າງໄກມີຊາຍແດນຕິດຈອດກັບຫົວເມືອງຕ່າງໆ ຫລາຍເມືອງ ດັ່ງຄຳກອນ ຕອນໜຶ່ງຂຽນວ່າ.

ນັບແຕ່ດິນແດນຈ້ຳ ຈິນຈານພວກຟະລັ່ງ
ກັບທັງຂອມແຂກລື້ ເຂີນພ້ອມພ່ຳຊວາ
ອັນວ່າກົງປະກຽນກວ້າງ ແກວປະກັນເມືອງມ່ານ
ທຸກດ່ານດ້າວ ທັງທົ້ຂາກະແດ

ຫລາຍພາກພື້ນ ຮ້ອຍສຳພາສາ

ຊາວກຸລາ ຫມູ່ມອນທັວຍີ້

ເອົາກໍໄຫລຫລາມເຂົ້າ ຖວາຍທຽນພູວະນາດ

ແສນໂກດລ້ານ ໄຫລເຂົ້າເພິ້ງບຸນ.

ພະຍາໂກສີໄດ້ປົກຄອງໄພ່ຟ້າຂ້າແຜ່ນດິນ ຢູ່ທີ່ເມືອງນະຄອນສີແຫ່ງນີ້ມາເປັນເວລາຊ້ານານ, ຕໍ່ມາມະເຫສີຂອງພະອົງຊື່ວ່າ ສີສຸພະລັດຕະນາ ກໍປະສູດລູກອອກມາເປັນຜູ້ຊາຍ ເຊິ່ງມີຮູບໂສມ ອັນສວຍງາມ ເປັນທີ່ເພິງພໍໃຈ ແກ່ພະຍາໂກສີເປັນຢ່າງຍິ່ງ. ພະຍາໂກສີຈິ່ງຕັ້ງຊື່ໃຫ້ກຸມານຜູ້ນັ້ນວ່າ ທ້າວມະຫາວົງຍະລາດ ຫລືຈັກກີມະຫາວົງ ພະຍານະຄອນສີຫວັງໃນໃຈເອົາໄວ້ວ່າ ເມື່ອມະຫາ ວົງໃຫຍ່ກ້າຫນ້າບານຂຶ້ນມາ ພະອົງກໍຈະໄດ້ມອບຫມາຍເມືອງນະຄອນສີໃຫ້ທ້າວມະຫາວົງ ເປັນຜູ້ປົກຄອງ, ໃນໄວເດັກມະຫາວົງຢູ່ ນຳພໍ່ແມ່ ກໍພົບແຕ່ຄວາມສຸກກາຍ ສະບາຍໃຈບໍ່ມີສິ່ງໃດມາບຽດບຽນ.

. . / .

2- ບັ້ນມະຫາວົງໄປຕໍ່ໄກ່

ເມື່ອທ້າວມະຫາວົງມີອາຍຸໄດ້ 16 ປີ ເອີ້ນວ່າສອນບ່າວແລ້ວ, ຕໍ່ມານັ້ນໜຶ່ງ ທ້າວຈຶ່ງຄິດຢາກອອກໄປທ່ຽວຫາຫລິ້ນປ່າ ເພື່ອຊອກຕໍ່ໄກ່, ເມື່ອທ້າວຄິດໄດ້ແນວນັ້ນ ຈຶ່ງເອີ້ນໃຫ້ເສນາອາມາດຂຶ້ນ ມາຫາ ພ້ອມທັງບອກຄວາມປະສົງໃຫ້ເສນາໄດ້ຮູ້ ເພື່ອຫາງຫາ ກະກຽມຊ້າງມ້າ ແລະ ຈຳນວນພົນຈຳນວນໜຶ່ງ ຕິດຕາມອອກໄປ ຕໍ່ໄກ່, ຝ່າຍເສນາເມື່ອໄດ້ຮັບຄຳສັ່ງດັ່ງນັ້ນແລ້ວ ກໍຟ້າວພາກັນ ກັບເມືອເຮືອນຊອກຫາໄກ່ຕໍ່ຕົວດີ ແລະ ກະກຽມຂະບວນຊ້າງຂະບວນມ້າເຊິ່ງເປັນຂະບວນທີ່ຄາດເຄື່ອງດ້ວຍອານຄຳທັງມວນ.

ວັນລຸນມາ ມະຫາວົງກໍນຳພົນຫລວງອອກຈາກວຽງວັງມຸ່ງໜ້າໄປສູ່ປ່າ ເພື່ອຊອກຫາຕໍ່ໄກ່ໃຫ້ຊື່ນອົກຊື່ນໃຈ, ມະຫາວົງໄດ້ນຳກຳລັງພົນເດີນທາງໄປນັບເປັນເວລາຫລາຍມື້ ຂ້າມທົ່ງນີ້ເຂົ້າທົ່ງໜ້າ ຂ້າມພູຜາປ່າໄມ້ຫ້ວຍຮ່ອງນາບຶງ ຈຶ່ງໄປເຖິງດົງແຫ່ງໜຶ່ງ ເຊິ່ງເປັນດົງຫລວງທີ່ກວ້າງໄກສຸດສາຍຕາ; ທ້າວມະຫາວົງເຫັນວ່າ ບໍລິເວນດົງບ່ອນນີ້ ມີຄວາມເໝາະສົມແກ່ການພັກຜ່ອນຢ່ອນໃຈເພື່ອຊອກຫາຕໍ່ໄກ່, ຄິດໄດ້ແນວນີ້ແລ້ວກໍມີຄຳສັ່ງໃຫ້ຂະບວນທັງໝົດຢຸດພັກຢູ່ດົງຫລວງແຫ່ງນີ້ ພ້ອມທັງໃຫ້ພາກັນປຸກຕູບປຸກຜາມຂຶ້ນ ເປັນ

ບ່ອນພັກພາອາໃສ. ເມື່ອເສນາອາມາດປຸກຕູບປຸກພາມເປັນທີ່ຮຽບຮ້ອຍແລ້ວ ກໍເຊີນມະຫາວົງຂຶ້ນພັກຜ່ອນ.

ຄືນນີ້ທ້ອງຟ້າສະຫວ່າງສະໄຫວ ພະຈັນສ່ອງແສງອັນເຮືອແຈ້ງໄປທົ່ວພິພົບ ເດິກໆມານ້ຳຫມອກກໍຮວາດໂຮຍລົງມາອາບຕາມ ພຸ່ມໄມ້ໃບຫຍ້າ ເຮັດໃຫ້ອາກາດຫນາວເຢັນ, ຝູງເສນາອາມາດ ທັງຫລາຍພາກັນພັກຜ່ອນຫລັບນອນຢ່າງສະບາຍ, ແຕ່ວ່າມະຫາວົງ ບໍ່ສາມາດຈະຫລັບຕານອນໃຫ້ມີຄວາມສຸກໄດ້ ທ້າວນອນພິກຂວ້າ ພິກຫງາຍຢູ່ພໍຮາວນັ້ນ ພໍແນມຂຶ້ນເບິ່ງທ້ອງຟ້າກໍເຫັນດາວວີ ພົ້ນ ອອກຈາກຫລືບເມກ ບຶດຫນຶ່ງກໍໄດ້ຍິນສຽງໄກ່ຂັນສື່ງຄອນ ສະແດງ ວ່າໃກ້ຈະແຈ້ງເປັນມື້ໃຫມ່ແລ້ວ ຕໍ່ມາກໍໄດ້ຍິນສຽງນົກເປີດປ່ອງ ສຽງນົກກາເວົາຮ້ອງລະງົມໄປທົ່ວດົງ; ທ້າວມະຫາວົງຈຶ່ງຟ້າວລຸກສ່ວຍຫນ້າແລ້ວຫາເຄື່ອງຄູ່ຈັບຫອມ. ຫລັງຈາກນັ້ນກໍສັ່ງໃຫ້ມະຫາດເລັກນຳໄກ່ຕໍ່ມາຖວາຍ.

ໃນເວລາຕໍ່ມາ ທ້າວມະຫາວົງ ພ້ອມດ້ວຍເສນາອາມາດ ຊັ້ນຈຳສີ່ຄົນກໍອອກເດີນທາງຈາກທີ່ພັກມຸ່ງຫນ້າເຂົ້າສູ່ກາງດົງ ຫລວງແຫ່ງນັ້ນ ຟັງສຽງໄກ່ຂັນເປັນແຊວຢູ່ຕາມດົງ, ທ້າວມະຫາວົງ ຈຶ່ງຮີບຮ້ອນພາເສນາທັງສີ່ຍ່າງໄປຫາບ່ອນທີ່ມີສຽງໄກ່ປ່າຂັນໂດຍໄວ, ພໍໄປເຖິງກໍຟ້າວລົງມືປັກຄືນອ້ອມໄກ່ຕໍ່ເອົາໄວ້ ຈາກນັ້ນໄກ່ຕໍ່ ຂອງທ້າວມະຫາວົງ ກໍຕົບປີກຂັນຈັ້ນໆຂຶ້ນໂລດ, ຝ່າຍໄກ່ປ່າພໍແຕ່ໄດ້ຍິນສຽງກໍພີປີກແລ່ນເຂົ້າໃສ່ໄກ່ຕໍ່ທັນທີ ພໍດີຕີນໄກ່ປ່າໄປຖືກຄືນທີ່ ທ້າວເອົາໄວ້.

ເມື່ອທ້າວມະຫາວົງ ກັບເສນາທັງສີ່ຕໍ່ໄດ້ໄກ່ປ່າໂຕນີ້ແລ້ວ ຊ້າ

ພັດຍັງໄດ້ຍິນສຽງຂັນຂອງໄກ່ປ່າໂຕອື່ນໆອີກ ທ້າວມະຫາວົງຈຶ່ງພາ
ເສນາທັງສີ່ມຸ່ງຫນ້າຕໍ່ ໄກ່ໄປເລື້ອຍໆນຳສຽງໄກ່ໄປຢ່າງບໍ່ຢຸດບໍ່ເຊົາ
ໄປຕາມໄປຈົນລືມກັບບ່ອນພັກເຊົາ, ຂ້າມພູຂ້າມຫ້ວຍອອກດົງ ນີ້
ເຂົ້າດົງຫນ້າຈົນອິດຈົນອ່ອນຈຶ່ງຊວາດຮູ້ເມື່ອຄຶງ ຄິດເຖິງເສນາອາ
ມາດທັງຫລາຍທີ່ຢູ່ທາງຫລັງ ເມື່ອຄິດໄດ້ແນວນີ້ ຈຶ່ງຟ້າວພາເສນາ
ກັບຄືນ; ແຕ່ບັງເອີນມີເທວະດາທີ່ຮັກສາພູມສະຖານແຫ່ງນີ້ໄດ້ ດົນ
ບັນດານບັງຕາທ້າວ ແລະ ເສນາທັງສີ່ບໍ່ໃຫ້ຮູ້ຈັກທາງຈະກັບ ຄືນ
ເພາະເທວະດາຢາກໃຫ້ທ້າວມະຫາວົງໄດ້ໄປພົບພໍ້ກັບຜູ້ຍິງຄົນຫນຶ່ງ
ທີ່ມີບຸບວາດສະຫນາຈະໄດ້ເປັນເມຍຂອງທ້າວໃນພາຍຫນ້າ, ຍ້ອນ
ພາກັນຫລົງທາງຈຶ່ງຈຳເປັນຕ້ອງຍ່າງໄປທາງຫນ້າເລື້ອຍໆ ຂຶ້ນ ພູ
ສູງລົງໂຄກຄ້ອຍຂຶ້ນຈອມດອຍລົງມາດ່ານ ຂ້າມຫ້ວຍນ້ອຍຫ້ວຍໃຫ່ຍ
ຂ້າມທົ່ງຂ້າມນາໄປຢ່າງບໍ່ມີຈຸດ, ເມື່ອເດີນທາງໄປເຖິງຈອມພູສູງ
ຫນ່ວຍຫນຶ່ງ ຈຶ່ງໄດ້ເຫັນບໍ່ແກ້ວ, ເຫັນຕົ້ນໄມ້ມະນີໂຄດ,ເຫັນ ພິ
ມານທອນທຽວໄປຕາມຈ້າຍຜາອັນສູງຊັນ, ເຫັນແມ່ນ້ຳໃຫ່ຍ ສາຍ
ຫນຶ່ງແຕ່ບໍ່ຮູ້ວ່າແມ່ນ້ຳນີ້ຢູ່ບ່ອນໃດ; ຍ້ອນຄວາມຢາກຮູ້ທ້າວມະ ຫາ
ວົງຈຶ່ງພາເສນາທັງສີ່ເດີນທາງມຸ່ງຫນ້າໄປສູ່ແມ່ນ້ຳສາຍທີ່ພວມແນມ
ເຫັນນັ້ນທັນທີ.

ເມື່ອເດີນທາງໄປເຖິງ ປະກົດວ່າແມ່ນ້ຳສາຍນີ້ ກວ້າງ ໃຫ່ຍ
ຍາວ ແລະ ມີກະແສນ້ຳໄຫລແຮງ ມີທັງລົມທັງຟອງ ໄດ້ເຫັນ ຫມູ່
ແຂ້ ແລະ ປາລ່ອງລອຍໄປມາຕາມລຽບແຄມຝັ່ງນ້ຳ ຢ່າງ ສວ່າງ
ສິນ, ບ່ອນນີ້ແມ່ນເຂດແດນຂອງພະຍາກຸມພົນແຂ້ໃຫ່ຍ ເຊິ່ງເນົາຢູ່
ທາງພື້ນນ້ຳ ເມືອງຂອງພະຍາກຸມພົນ ມີຄວາມສຸກສະບາຍ ຫລາຍ

ບ່າວໄພ່ລາສະດອນກໍມີຄວາມເບີກບານມ່ວນຊື່ນ ແຕ່ວ່າເມືອງ ນີ້ ເປັນເມືອງແຂ້ (ສັດ) ບໍ່ມີຄົນເລີຍ. ພະຍາກຸມພິນມີເມຍ ຊື່ວ່າ ນາງທອງແດງ ລູກຂອງພະຍາກຸມພິນກັບນາງທອງແດງນັ້ນ ສ່ວນ ຫລາຍລ້ວນແຕ່ແມ່ນແຂ້ ແຕ່ມີແປກຫມູ່ຢູ່ຜູ້ດຽວຄືລູກສາວຂອງພະຍາ ກຸມພິນ ມີຮູບຮ່າງເປັນຄົນ, ພະຍາກຸມພິນ ແລະ ນາງທອງ ແດງ ຮັກລູກສາວຜູ້ນີ້ສຸດສາຍໃຈ. ນາງຜູ້ນີ້ພຽບພ້ອມໄປດ້ວຍຮູບໂສມພື ພັນອັນຈີບງາມ, ພະຍາກຸມພິນຈຶ່ງສັ່ງໃຫ້ສ້າງຫໍພາສາດໃຫ້ນາງ ຢູ່ ຜູ້ດຽວ ໂດຍສະເພາະ ແລະ ຈັດໃຫ້ບັນດາກຸມພີຕ່າງໆເຝົ້າຮັກສາ ຕະຫລອດເວລາ.

3- ບັນເສບາ ບຳຫາມະຫາອົງ

ກ່າວເຖິງແສນເມືອງ ຜູ້ພາພົນພັກຢູ່ກາງປ່າ ເມື່ອບໍ່ເຫັນ ມະຫາອົງ ແລະ ເສນາທັງສີ່ກັບຄືນທີ່ພັກ ຜູ້ໃດກໍມີຄວາມຮ້ອນຮົນ , ແສນເມືອງຈຶ່ງຟ້າວນຳກຳລັງອອກຊອກຫາ ການອອກຊອກຫາ ກໍເຮັດກັນຢ່າງຄັກແນ່ ທັງຮ້ອງທັງກູກ ແຕ່ຊອກບ່ອນໃດກໍມິດ ຊ້ອຍນ້ອຍ, ຊອກເຖິງໃດດອນໃດກໍບໍ່ພໍ້ ຈົນວ່າຕີວົງອ້ອມພູເປັນ ໜ່ວຍ ຊອກໄປໝົດທຸກຍ່ອມຫຍ້າ ກໍຍັງບໍ່ເຫັນ, ຝ່າຍແສນເມືອງກໍໄດ້ແຕ່ຮ້ອງໄຫ້ຢ້ານວ່າພະຍາໂກສີຈະຕັດຄໍຖິ້ມ ເພາະສູນເສຍເຊື້ອ ແນວກະສັດຂອງພະອົງໄປ, ເຖິງຈະເປັນຕາຍຮ້າຍດີແນວໃດກໍຕາມແສນເມືອງກໍຕັດສິນໃຈພາພົນຫລວງ ເດີນທາງກັບຄືນສູ່ນະຄອນສີ ເພື່ອກາບທູນເຫດການທັງໝົດທີ່ເກີດຂຶ້ນໃນຄາວນີ້.

ເມື່ອແສນເມືອງພາພົນກັບເຖິງນະຄອນສີແລ້ວ ກໍຂຶ້ນຂາບ ທູນໃຫ້ພະຍາໂກສີຮູ້ທັນທີ, ເມື່ອພະອົງໄດ້ຮູ້ເຫດການດັ່ງກ່າວ ກໍມີຄວາມໂສກເສົ້າໄດ້ແຕ່ຮ້ອງໄຫ້ຮ່ຳໄຮ ເປັນທຸກວອດທະນາເຖິງລູກ ຈຶ່ງອອກຄຳສັ່ງໃຫ້ນຳໝໍໂຫນຂຶ້ນເຝົ້າໂດຍດ່ວນ ເພື່ອທຳນາຍທາຍທັກເບິ່ງວ່າດີຮ້າຍແນວໃດ; ເມື່ອເສນານຳໝໍໂຫນຂຶ້ນເຝົ້າ ແລ້ວ

ພະຍາໂກສີຈຶ່ງບອກໃຫ້ໜໍໂຫນທຳນາຍເບິ່ງຈະໄດ້ຮູ້ວ່າມະຫາ ອົງ ຍັງມີຊີວິດຢູ່ຫລືບໍ ດັ່ງຄຳກອນຂຽນວ່າ

ຮູ້ວ່າມໍລະນາມ້ຽນ ຕາຍໄປໃນປ່າ ຈິງລີ
ຮູ້ວ່າທ້າວຫາກຍັງຢູ່ດ້າງ ໄພກວ້າງຄວ່າຫລິງ
ຫລືວ່າຜີສາງເສືອ ໃນດົງເອົາເຊືອງ ນັ້ນລື
ຫລືວ່າເງືອກຢູ່ນ້ຳ ເອົາທ້າວຈຸ່ມວັງ ນັ້ນເດ

ຝ່າຍໜໍໂຫນຈຶ່ງຟ້າວລົງເລກຕັ້ງໄລ່ເບິ່ງດວງຊາຕາແລ້ວຈຶ່ງ ຂາບທູນຕໍ່ພະອົງວ່າ ດຽວນີ້ທ້າວຍັງບໍ່ຕາຍເທື່ອ ຂ້າຂໍຜັດເອົາໄວ້ວ່າອີກສາມເດືອນຈະກັບມາຮອດ ຖ້າເກີນສາມເດືອນບໍ່ມາຕ້ອງຍັງອີກດົນນານຈຶ່ງຈະກັບມາຮອດ, ເມື່ອພະຍານະຄອນສີໄດ້ຮັບຟັງໜໍ ໂຫນຂາບທູນຄືແນວນັ້ນ ພະອົງກໍຫາຍຈາກຄວາມໂສກເສົ້າຫງ່ວມເຫງົາ

. / .

4- ບັ້ນມະຫາວົງຝັນເຫັນ ນາງແຕງອ່ອນ

ກ່າວເຖິງຈັກກີມະຫາວົງ ພາເສນາທັງສີ່ນອນພັກຜ່ອນຢູ່ ແຄມແມ່ນ້ຳໃຫ່ຍແຫ່ງນັ້ນ ພໍຕອນຂ້ອນແຈ້ງທ້າວມະຫາວົງຝັນ ໄດ້ ໄປນອນກ່ອນກິ້ງກັບຜູ້ສາວງາມໆຢູ່ໃນພື້ນມະຫາສະຫມຸດ, ພໍແຕ່ຝັນສຸດທ້າວກໍສະດຸ້ງຕື່ນຂຶ້ນ ພ້ອມທັງ ໄດ້ຍິນສຽງ ໄກ່ຂັນເປັນແຊວໆຕາມດົງທ້າວຈຶ່ງຟ້າວລຸກສ່ວຍຫນ້າທາເຄື່ອງຫອມ, ແຕ່ປະກົດວ່າມື້ນີ້ທ້າວມະຫາວົງມີທ່າທີຫງ່ອມເຫງົາຜິດສັງເກດ ເສນາຈຶ່ງຂາບທູນຖາມເຖິງອາການເປັນຕ່າງຂອງທ້າວ ແລະ ທ້າວກໍໄດ້ບອກຄວາມຈິງວ່າ ທ້າວຝັນເຫັນຜູ້ຍິງຄົນຫນຶ່ງຢູ່ໃຕ້ມະຫາສະຫມຸດ ນາງເປັນຜູ້ຍິງງາມໆ ບໍ່ມີຍິງໃດຈະປຽບປານໄດ້ເລີຍ ທ້າວເອງຈຶ່ງຄິດຮອດນາງໃນຝັນຢູ່ບໍ່ເລີກບໍ່ລາ, ຝ່າຍເສນາທັງສີ່ຈຶ່ງຂາບທູນເປັນການອອຍໃຈພະ ອົງວ່າ ຢ່າເຊື່ອເທາະຄວາມຝັນນີ້ບໍ່ມີມູນຄວາມຈິງດອກ ລາງເທື່ອຝັນໄດ້ເງິນກໍບໍ່ເຫັນວ່າຊິໄດ້ ລາງເທື່ອຝັນຮອດໄດ້ນອນນຳເມຍຫມູ່ ກໍຍັງມີເຊົາໆພະອົງຢ່າເຊື່ອເທາະ.

ເຖິງແມ່ນເສນາຈະຂາບທູນແນວໃດກໍຕາມ ມະຫາວົງກໍຍັງຄິດຢາກໄດ້ນາງໃນຝັນຢູ່ບໍ່ເລີກບໍ່ແລ້ວ, ໃນທີ່ສຸດມະຫາວົງກໍຈຳໃຫ້ຂຸນ

ຄານລົງຊວາດນ້ຳໄປຊອກຫານາງວ່າມັນຈະມີຈິງຄືດັ່ງຄວາມຝັນຫລືບໍ. ພໍແຕ່ຂຸນຄານຊວາດນ້ຳລົງໄປໃຕ້ມະຫາສະໝຸດກໍ່ຈິ່ງແນມເຫັນເມືອງຫລວງແຫ່ງໜຶ່ງ ເຫັນທັງຫໍຜາສາດລາຊະມົນທຽນ ເຫັນທັງຍອດຊໍ່ຟ້າປະດັບປະດາໄປດ້ວຍຄຳ ມີຮູບນາກກ້ຽວເກາະກ່າຍພ້ອມທັງໄດ້ເຫັນຫໍຜາສາດເສົາດຽວ ອັນວິຈິດສວຍງາມ ມີກຸມພີ ນ້ອຍໃຫຍ່ເຝົ້າຮັກສາເຕັມໄປໝົດທຸກດ້ານ; ຂຸນຄານຈິ່ງພະຍາ ຍາມເລາະລຽບເຂົ້າໄປເບິ່ງໃກ້ໆ ຈຶ່ງໄດ້ພົບວ່າ ມີຜູ້ຍິງສາວຄົນ ໜຶ່ງທີ່ມີຮູບໂສມອັນສວຍງາມດັ່ງຄຳກອນ ຂຽນໄວ້ວ່າ

ຕັ້ງຫາກສອຍວອຍໜ້າ   ຄືຄຳທັງແທ່ງ
ຍົດທະຍິ່ງລ້ຳ   ໂສມເຈົ້າດັ່ງຂຽນ
ອັນວ່າຄິ້ມປ້ອງ   ຫາງຕາແດງຄໍ້ວກ່ອງ
ແຂນສອດສ້ວຍ   ສີກ້ຽງດັ່ງເຫລົາ

ເມື່ອພິສູດເບິ່ງຄັກແນ່ແລ້ວ ຂຸນຄານຈິ່ງຟ້າວກັບຄືນ ແລ້ວຂາບທູນໃຫ້ມະຫາວົງຮູ້ ຝ່າຍມະຫາວົງໄດ້ຟັງພໍຢາກໂດດລົງນ້ຳມຸດ ໄປຫານາງໃຫ້ສົມກັບຄວາມຕັ້ງໃຈ, ແຕ່ເສນາໄດ້ອ້າງເຫດຜົນວ່າພະອົງຈະເຮັດແນວນັ້ນກໍ່ບໍ່ສົມຄວນ ເຮົາຄວນຈະພາກັນກັບຄືນສູ່ ນະຄອນສີກ່ອນ ແລ້ວຈຶ່ງແຕ່ງໃຫ້ລາຊະທູດມາສູ່ຂໍນາງຕາມຮີດຄອງປະເພນີ; ມະຫາວົງເຫັນວ່າເສນາຂາບທູນມີເຫດມີຜົນດີ ຈິ່ງຕົກ ລົງພາເສນາທັງສີ່ກັບຄືນສູ່ນະຄອນສີ.

ພໍແຕ່ມະຫາວົງກັບຄືນເຖິງນະຄອນສີ ກໍ່ສ້າງຄວາມປິຕິຊົມ ຊື່ນໃຫ້ແກ່ບ່າວໄພ່ລາສະດອນເປັນຢ່າງຍິ່ງ ໂດຍສະເພາະແມ່ນພະຍາໂກສີ ແລະ ເມຍ, ມະຫາວົງໄດ້ເລົ່າເຖິງຄວາມຝັນຂອງຕົນໃຫ້ພໍ່

ແລະ ແມ່ໄດ້ຮູ້ ພ້ອມທັງອ້ອນວອນໃຫ້ພໍ່ ແລະ ແມ່ແຕ່ງຕັ້ງ ລາຊະທູດໄປສູ່ຂໍເອົານາງ, ພະຍາໂກສີ ຜູ້ເປັນພໍ່ໄດ້ຟັງກໍເຮັດຊຶງລຶງ ຢູ່ບຶດໜຶ່ງ ແລ້ວຈຶ່ງເວົ້າວ່າ ນາງນັ້ນເປັນຢູ່ໃນພື້ນນ້ຳ ບໍ່ສາມາດຈະເດີນທາງໄປສູ່ຂໍນາງໄດ້ດອກ, ພະຍາໂກສີບອກທ້າວວ່າ ພໍ່ໄດ້ຕິດຕໍ່ຂໍເອົາລູກສາວຂອງພະຍາສຳພາໄວ້ໃຫ້ລູກແລ້ວ ແຕ່ມະຫາ ວົງເຮັດຄືບໍ່ສົນໃຈ ພະຍາໂກສີຈຶ່ງເວົ້າຕື່ມວ່າ ຄັນຊັ້ນພໍ່ຊິໄປຂໍເອົາລູກສາວຂອງພະຍາຂອມມາໃຫ້ ນາງຜູ້ນີ້ກໍເປັນຄົນງາມໆດັ່ງບົດ ກອນຕອນໜຶ່ງວ່າ

ແຕ່ນັ້ນພໍ່ເລົ່າລົມແຈ່ມເຈົ້າ ນ້ອຍອ່ອນບຸດຕາ
ຍັງມີກຸມາລີນາງ ລູກພະຍາຂອມເຈົ້າ
ນາງນັ້ນຂຽວຂາວເຫຼື້ອມ ວັນສີໃສສ່ອງ
ອັນວ່າຜົມເກດເກົ້າ ຂຽວເຫຼື້ອມດັ່ງເທົາ ພໍ່ແລ້ວ
ເຖິງພໍ່ຈະເວົ້າແນວໃດ ມະຫາວົງກໍບໍ່ແຍ້ມບໍ່ຫົວຕໍ່ ມີແຕ່ຄິດ

ຮອດນາງໃນຝັນຄົນດຽວ ພະຍາໂກສີຈຶ່ງເວົ້ານຳທ້າວອີກ ວ່າຄັນຊັ້ນພໍ່ຊິຍົກສາວຣາມຈັກພັນໜຶ່ງໃຫ້ລູກເອົາບໍ? ມະຫາວົງ ບອກວ່າຖ້າບໍ່ໄດ້ນາງໃນຝັນ ແມ່ນບໍ່ຍອມເດັດຂາດ ດັ່ງຄຳກອນຂຽນວ່າ

ບາຄານຕ້ານ ຖະແຫລງຄຳທູນພໍ່
ຊອບທີ່ພະພໍ່ເຈົ້າ ຫາໃຫ້ກໍຊອບຄວນ ແທ້ແລ້ວ
ແຕ່ວ່າຍັງບໍ່ປານຍອດແກ້ວ ນາງນາດໃນສະໝຸດ
ອັນວ່າສາຍໃຈຄື ດັ່ງຄຳລຽງໄວ້
ອັນວ່າຄໍກົມປ້ອງ ຫູຕາຄືຊ່ຽນ
ຍາມເມື່ອຍົກຍ່າງຍ້າຍ ໄກວເຫຼື້ອມດັ່ງຫົວ

ເມື່ອບອກບໍ່ຢ່າວ່າບໍ່ຟັງ ພະຍາໂກສີເຈົ້າຄອງນະຄອນສີກໍ ຕັດສິນໃຈຕອບສະໜອງຕາມຄວາມປະສົງຂອງທ້າວ, ພະຍາໂກສີຈຶ່ງສັ່ງໃຫ້ເສນາທັງສີ່ຂຶ້ນເຝົ້າ ເພື່ອຈະໄດ້ແຕ່ງຕັ້ງໃຫ້ເປັນລາຊະ ທູດເດີນທາງໄປສູ່ຂໍເອົານາງມາໃຫ້ມະຫາວົງ ຍ້ອນວ່າເສນາທັງສີ່ ຮູ້ບ່ອນຢູ່ຂອງນາງເປັນຢ່າງດີ, ເສນາທັງສີ່ໄດ້ຂາບທູນໃຫ້ພະຍາໂກສີຮູ້ວ່າ ນາງນັ້ນແມ່ນແນວກຸມພີ ບໍ່ແມ່ນແນວນາມຄົນເຮົາໃດພະອົງ ຝ່າຍພະຍາໂກສີກໍເວົ້າ ໄດ້ຍິນມະຫາວົງເວົ້າກັບເຮົາວ່າ ນາງສາມາດປາກໄດ້ຄືກັບຄົນເຮົານີ້ແຫລະ, ກ່ອນທີ່ເສນາທັງສີ່ ແລະ ພົນທານຈຳນວນໜຶ່ງທີ່ມີຄວາມຊຳນານໃນການຊວາດນ້ຳ(ມູດນ້ຳ) ຈະອອກເດີນທາງ ພະຍາໂກສີກໍໄດ້ສັ່ງໃຫ້ເສນາຜູ້ເປັນນັກປາດ ຂຽນສານຖາມຂ່າວເຖິງພະຍາເມືອງບາດານດັ່ງນີ້

ໂອນໍສານນີ້ຊື່ວ່າອັກຄະວໍລະຈັກກີແກ້ວ ມະຫາວົງຕົນປະເສີດ

ຖາມຂ່າວເຈົ້າລຸ່ມຟ້າ ພາຍພື້ນແຕ່ໄກ ແດ້ຖອນ
ສັດຕະບົວລະພັນຊັ້ນ ມະນີໄຂຂານກາບ
ເປັນເພື່ອຈິດຈອດຝັ້ນ ເຝືອແກ້ວລູກດີ
ພີ່ຈຶ່ງມີສານໃຊ້ ທູຕາມາຮອດ
ຫ້ວາຍເຖື່ອນກ້ວາງ ກອຍດັ້ນດຸ່ງມາ ແທ້ແລ້ວ

ຂະບວນຂອງລາຊະທູດນຳລິພົນໂຍທາຫານ ອອກເດີນ ທາງຂ້າມດົງດອນພູຜາປ່າໄມ້ ທົ່ງໄຮ່ທົ່ງນາ ທ່າມກາງສຽງນົກ ນານາຊະນິດຮ້ອງຟັງແລ້ວພາໃຫ້ຈິດອື່ໃຈວອນ, ບາງຄົນພໍໄດ້ຍິນສຽງຊະນີໂທຍທວນຄວນຄາງ ກໍມີຄວາມໂສກເສົ້າຫງ່ວມເຫງົາ ຄິດ ຮອດເມຍຄິດຮອດຊູ້ຢູ່ທາງບ້ານ.

ການເດີນທາງນັບເປັນເວລາຫລາຍວັນຫລາຍຄືນ ຈິ່ງໄປເຖິງແຄມແມ່ນ້ຳໃຫ່ຍສາຍດັ່ງກ່າວ ຂະບວນໄດ້ຢຸດພັກຢູ່ແຄມແມ່ນ້ຳສາຍນີ້, ມີຕົນມາຜູ້ເປັນຫົວຫນ້າໃຫ່ຍຈິ່ງສັ່ງໃຫ້ ຄຳເຜືອຟັ້ນຂຸນຄານທ້າວເຕົ່າ ກັບທັງທ້າວຫຸ່ມຜູ້ດຳນ້ຳກ່ອນພົນ ມີພວກເສນາຜູ້ນ້ອຍຈຳນວນຮ້ອຍຫມື່ນດຳນ້ຳໄປຕາມຫລັງ, ເມື່ອດຳນ້ຳລົງໄປເຖິງຄຳເຜືອຟັ້ນກໍນຳພາພົນເຂົ້າຂາບທູນຕໍ່ພະຍາກຸມພົນ ຝ່າຍພະຍາກຸມພົນພໍ ແຕ່ແນມເຫັນຂະບວນມະນຸດ ກໍຕົກຕະລຶງໃນໃຈ ເພາະຮູ້ວ່າຈຳ ພວກເຫລົ່ານີ້ ບໍ່ແມ່ນເຊື້ອຊາດກຸມພີຂອງຕົນ ລ້ວນແຕ່ເປັນມະນຸດ ທັງມວນ, ພະຍາກຸມພົນໄດ້ໄຕ່ຖາມສຸກທຸກ ແລະ ຄວາມປະສົງ ຂອງຄຳເຜືອຟັ້ນ ທີ່ເດີນທາງມາເຖິງຕົນ ແມ່ນຕ້ອງການສິ່ງໃດ ເພາະວ່າພະອົງຢູ່ພື້ນບາດານນີ້ບໍ່ເຄີຍເຫັນໃຜເດີນທາງມາເຖິງຈັກ ເທື່ອພວກທ່ານມາຈາກທາງໃດແທ້.

ຝ່າຍຄຳເຜືອຟັ້ນ ແລະ ຂຸນຄານ ກໍຂາບທູນໃຫ້ພະຍາກຸມ ພົນຮູ້ວ່າ ພວກຕົນມາຈາກເມືອງນະຄອນສີ ເພິ່ນແຕ່ງຕັ້ງໃຫ້ມາ ສູ່ຂໍເອົາພະລາຊະບຸດຕີ (ລູກສາວ) ຂອງພະອົງໄປເປັນມະເຫສີ ໃຫ້ແກ່ທ້າວມະຫາວົງ ແລະ ໄດ້ນຳດວງສານຂອງພະຍານະຄອນສີມາຖວາຍພ້ອມ, ເມື່ອພະຍາກຸມພົນໄດ້ຮູ້ຄວາມປະສົງຂອງຝ່າຍເມືອງນະຄອນສີແລ້ວ ຈິ່ງເອີ້ນເອົາກຸມພາຜູ້ເປັນອ້າຍກົກຂອງນາງ ແຕງອ່ອນຂຶ້ນມາຫາ ພ້ອມທັງບອກໃຫ້ຮູ້ວ່າ ທາງຝ່າຍນະຄອນສີໄດ້ແຕ່ງຕັ້ງໃຫ້ລາຊະທູດມາສູ່ຂໍເອົານາງແຕງອ່ອນ ເມືອສືບສ້າງຢູ່ ທາງຝ່າຍເມືອງຄົນພຸ້ນ; ຈາກນັ້ນພະຍາກຸມພົນກໍນຳເອົາດວງສານ ຂຶ້ນມາອ່ານ ສານຂຽນວ່າ

ໂອນໍສານນີ້ຊື່ວ່າວໍລະຈັກກີແກ້ວ ນະຄອນສີຖວາຍບາດ

ຖາມຂ່າວເຈົ້າລຸ່ມຟ້າ ບຸນກວ້າງແຕ່ໄກ
ຂໍໃຫ້ເປັນຂົວແກ້ວ ສະພານທອງຫຽວທ່ອງ
ອັນວ່າເມືອງພຸ້ນພີ້ ກໍເໝືອນແຫ້ດັ່ງດຽວ ຫັ້ນຖ້ອນ
ບໍ່ກວ່າສັດຕະບົວລະພັນຊຸ້ນ ມະໂນໄຂຂານກາບ ເອົາຖ້ອນ
ສຸດແຕ່ພູວະນາດເຈົ້າ ບຸນກວ້າງຊິຮ່ຳເພິງ.

ສານໄດ້ຂຽນຍືດຍາວພັນລະນາເຖິງຄວາມຮັກຂອງທ້າວມະຫາວົງທີ່ມີຕໍ່ນາງ, ສ່ວນພະຍາກຸມພົນກໍບອກວ່າ ບໍ່ມີຄວາມຂັດ ຂ້ອງແນວໃດ ແລ້ວແຕ່ບຸນບູຣານສົມພານ ແຕ່ສຳຫລັບນາງຈະວ່າ ແນວໃດນັ້ນ ບໍ່ຮູ້ເທື່ອ ຈະຂໍຖາມນາງເບິ່ງກ່ອນ, ຈາກນັ້ນພະຍາກຸມພົນກໍສັ່ງໃຫ້ນຳນາງແຕງອ່ອນມາຫາໂດຍດ່ວນ ເມື່ອນາງແຕງອ່ອນຂຶ້ນເຝົ້າ ພະຍາກຸມພົນ ກໍບອກໃຫ້ນາງຮູ້ວ່າລູກຊາຍຂອງພະຍາ ມະຄອນສີ ຊື່ວ່າທ້າວວໍລະຈັກກີມະຫາວົງ ສົ່ງລາຊະທູດມາສູ່ຂໍ ເອົານາງໄປເປັນມະເຫສີ (ເມຍ) ລູກຊິວ່າແນວໃດ, ນາງຈຶ່ງ ບອກກັບພໍ່ວ່າ ຖ້າພໍ່ບໍ່ຂັດຂ້ອງລູກກໍບໍ່ຂັດຂືນຫຍັງ ແຕ່ວ່າເຮົາເປັນ ແນວກຸມພີ ເພິ່ນຊິມັກຊິຮັກເຮົາບໍ ດັ່ງບົດກອນຕອນໜຶ່ງວ່າ

ເຮົານີ້ແນວນາມເຊື້ອ ກຸມພີສະຖານຕ່ຳ ພໍ່ເອີຍ
ວ່າຈັກຢຽວຢ່ຳຢື້ ແນວເຊື້ອຊາດສູງ ໄດ້ລີ
ຄັນວ່າ ອົງກະສັດໄທ້ ນະຄອນສີພະບາດ ພາຍພຸ້ນ
ເພິ່ນບໍ່ເຫັນຊາດຮ້າຍ ເອົາລ້ຽງກໍວ່າບຸນ ແທ້ແລ້ວ

ຝ່າຍຂຸນເຜືອຟັ້ນຈຶ່ງຕອບນາງວ່າ ສຳຫລັບທ້າວມະຫາວົງນັ້ນບໍ່ມີວັນຈະລັງກຽດນາງດອກ ເພາະທ້າວຫລົງຮັກນາງຈົນໃຈຈະຂາດ

ຢູ່ແລ້ວ ນາງແຕງອ່ອນກໍເວົ້າວ່າ ນາງເອງກໍເຊັ່ນດຽວກັນ, ເມື່ອ ຕົກລົງປົງໃຈຄືແນວນີ້ແລ້ວ ພວກລາຊະທູດຈຶ່ງມອບເຄື່ອງບັນນາການ ອັນມີຂ້ອຍຂ້າມ້າໃຊ້ເງິນຄຳແກ້ວແຫວນແສນສິ່ງໃຫ້ແກ່ພະຍາກຸມພົນ ຫລັງຈາກນັ້ນທັງສອງຝ່າຍຈຶ່ງຫາລືການຍານດີເພື່ອແຫ່ນາງ ແຕງ ອ່ອນອອກຈາກເມືອງບາດານ ກ່ອນຈະອອກເດີນທາງນາງ ແຕງ ອ່ອນ ກໍໄດ້ສັ່ງລາພໍ່ແມ່ດ້ວຍຄວາມອາໄລອາວອນດັ່ງນີ້

ແຕ່ນັ້ນນາງກໍເອີ້ນສັ່ງເຈົ້າ	ຕົນພໍ່ປິຕາ
ທັງມາດາ	ແມ່ເມືອງຈອມຊ້ອຍ
ຄ່ອຍຢູ່ດີເຢີມາດາຂ້ອຍ	ຄຸນໂບເຫລືອມາກ
ລູກຈັກລາຈາກເຈົ້າ	ເມືອໜ້າຊິບໍ່ເຫັນ ແລນໍ
ຂໍໃຫ້ພະພໍ່ເຈົ້າ	ທັງແມ່ມາດາ
ຫາຍໂລຄາ	ຢູ່ຍືນຍາວໝັ້ນ
ຢ່າໄດ້ມີຄຳຮ້ອນ	ໄພຍາສັກສິ່ງ
ອັນວ່າລູກກິ່ງແກ້ວ	ຊິໜີແລ້ວບໍ່ເຫັນ

ສ່ວນວ່າພະຍາກຸມພົນ ກໍສັ່ງສອນລູກດ້ວຍຈິດໃຈຮັກແພງ ບອກ ໃຫ້ນາງປະຕິບັດຕົນເປັນເມຍທີ່ດີ ມີຈິດໃຈກວ້າງຂວາງ ຮູ້ຈັກແບ່ງ ສັນປັນສ່ວນ ວຽກງານໃດມີກໍໃຫ້ເອົາໃຈໃສ່ປະຕິບັດ, ນາງ ແຕງ ອ່ອນຮັບເອົາຄຳສັ່ງສອນຂອງພໍ່ແລ້ວ ກໍຈຶ່ງອອກເດີນທາງ ຈາກ ເມືອງບາດານ ເພື່ອເດີນທາງສູ່ເມືອງນະຄອນສີ ໂດຍມີຂຸນ ຄານ ເປັນຜູ້ອອກໜ້າພາທາງ.

5- ບັນຂຸນຄານນຳນາງແຕງອ່ອນອອກຈາກບ້ານ

ກ່າວເຖິງຂຸນຄານ ແລະ ຂຸນເຝືອຝັ້ນ ພີແຕ່ນຳເອົານາງແຕງອ່ອນຂຶ້ນຈາກນ້ຳ ມາຮອດຕາຝັ່ງ ຝູງເສນາອາມາດທີ່ລໍຖ້າຢູ່ ນັ້ນເມື່ອໄດ້ເຫັນຮູບໂສມຂອງນາງ ໃຜງກໍສະອອນອົກສະອອນໃຈ ໃນຄວາມຈົບຄວາມງາມຂອງນາງ ເຊິ່ງຫາຜູ້ປຽບບໍ່ໄດ້, ສ່ວນ ນາງແຕງອ່ອນກໍຖາມຂ່າວຄາວສຸກທຸກຂອງເສນາອາມາດທັງຫລາຍເຫຼົ່ານັ້ນ ແລະ ກໍຖາມຂຸນຄານ ແລະ ຂຸນເຝືອຝັ້ນວ່າ ຫົນທາງແຕ່ນີ້ໄປເຖິງເມືອງນະຄອນສີຍັງໄກປານໃດ ເມືອງນະຄອນສີຕັ້ງຢູ່ທາງກ້ຳຝ່າຍໃດ, ຂຸນຄານຈຶ່ງຕອບນາງວ່າ ຫົນທາງແຕ່ນີ້ໄປຕ້ອງໃຊ້ ເວລາເຖິງສີ່ເດືອນ ເມືອງນະຄອນສີຕັ້ງຢູ່ເບື້ອງຕາເວັນຕົກພຸ້ນ.

ເມື່ອນາງແຕງອ່ອນໄດ້ຮູ້ລາຍລະອຽດດັ່ງນີ້ແລ້ວ ຈຶ່ງສັ່ງໃຫ້ທຸກຄົນກຽມຕົວອອກເດີນທາງໂດຍດ່ວນ, ຈາກນັ້ນບັນດາເສນາ ອາມາດ ຈຶ່ງຈັດຂະບວນຊ້າງຂະບວນມ້າພ້ອມດ້ວຍຂ້າມະຫາດເລັກຈຳນວນສາມພັນ ແຫ່ແຫນແພນກັ້ງ ນຳນາງແຕງອ່ອນອອກເດີນທາງ, ສຳຫລັບນາງແຕງອ່ອນຂຶ້ນຂີ່ຊ້າງແກ້ວອອກໜ້າ ຂະບວນແຫ່ໄດ້ເຄື່ອນອອກຈາກເຂດ ຂອງພະຍາກຸມພົນເຂົ້າສູ່ດົງໜາປ່າ ໃຫ່ຍຂ້າມໂຄກຂ້າມພູ ແລະ ຫ້ວຍຫນອງຄອງບຶງ ຕາມເສັ້ນທາງ ຜ່ານ

ໄປ ດອກໄມ້ນານາຊະນິດສົ່ງກິ່ນອັນຫອມຫວນ ດັ່ງຄຳກອນຂຽນວ່າ

ມີທັງເຂົາວົງລ້ອມ ພູຮອມຫລາຍຮ່ອມ
ຫອມດອກໄມ້ ຍິນສະອື້ນອ່ອນໃຈ
ມີທັງຈຳປີພ້ອມ ຈຳປາກ້ານເກດ
ມີທັງຫອງເຫດພ້ອມ ທັງສ້ອຍດອກກະດອນ
ມີທັງຂິກສະເດືອພ້ອມ ຈັ່ງກອນແກມກິ່ງ
ມີທັງດອກເກດແກ້ວ ພວງພ້ອລຽບກຽງ

ຂະບວນແຫ່ນາງແຕງອ່ອນເດີນທາງໄປເລື້ອຍໆ ໃນທີ່ສຸດ ຂະບວນດັ່ງກ່າວກໍມາເຖິງທົ່ງນາແຄມເມືອງນະຄອນສີແລ້ວພາ ກັນຢຸດພັກຂະບວນຢູ່ບ່ອນນີ້ຊົ່ວຄາວ, ຝ່າຍຂຸນຄານ ແລະ ຂຸນເຝືອຝັນຈຶ່ງຟ້າວເຂົ້າໄປຂາບທູນໃຫ້ພະຍາໂກສີ ເຈົ້າຄອງນະຄອນສີໄດ້ຮູ້ ວ່າດຽວນີ້ ຂະບວນແຫ່ນາງແຕງອ່ອນ ມາເຖິງທົ່ງນາແຄມເມືອງ ນີ້ແລ້ວ; ສ່ວນພະຍາໂກສີ ໄດ້ຮູ້ຂ່າວກໍມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້ ຈຶ່ງສັ່ງໃຫ້ຂຸນຫລວງ ໄປບອກໃຫ້ໂຍທາທັງຫລາຍ ຕົບ ແຕ່ງແປງທາງຕັ້ງແຕ່ວັງໄປຈົນເຖິງທົ່ງນາບ່ອນຂະບວນຢຸດພັກ, ບ່ອນໃດສູງບ່ອນໃດຕ່ຳບໍ່ສະຫມ່ຳສະເຫມີ ກໍໃຫ້ຖາກໃຫ້ຖົມເປັນທີ່ ຮາບຮຽງພຽງງາມ ຕະຫລອດເຮືອນຊານລານແປ້ນຂອງຜູ້ໃດຫາກເຫັນວ່າຈະກີດຈະຂວາງຂະບວນແຫ່ ກໍສັ່ງໃຫ້ຮື້ໃຫ້ຖອນອອກຫມົດ.

ເມື່ອທາງຫາກະກຽມເປັນທີ່ຮຽບຮ້ອຍແລ້ວ ພະຍາໂກສີກໍ ສັ່ງໃຫ້ນຳຂະບວນຊ້າງ ຂະບວນມ້າ ຄາດເຄື່ອງດ້ວຍແຍ່ງຄຳອານຄຳແລ້ວເຄື່ອນຂະບວນອອກໄປຮັບນາງເຂົ້າມາສູ່ຜາສາດ ລາຊະ ມົນທຽນ ດັ່ງຄຳກອນຕອນຫນຶ່ງວ່າ.

ຟັງຍິນສຽງສະນັ່ນກ້ອງ ພິນຫລວງໄຫລອອກ ແລເຢີ
ກໍຫາກຍືດໆຍ້າຍ ເຫລືອລົ້ນທົ່ງນາ
ຫລິງດູເຍື່ອງໆຍ້າຍ ຊ້າງເຄື່ອງພວງຄຳ
ຝູງຫມູ່ໄຫລະບຳເຂົາ ອອກວຽງຍວງຍ້າຍ
ຜູ່ດູສວຍລວຍພ້ອມ ນາງຊຸນເຂົ້າແຫ່
ອັນວ່າສາວສຳນ້ອຍ ປະສົງເອ້ອອກໄປ

ຂະບວນແຫ່ເຕັມໄປດ້ວຍບັນຍາກາດເບີກບານມ່ວນຊື່ນ ບ່າວສາວກໍຍອກເຢົ້າກັນໄປ ບາງຄົນກໍເວົ້າພະຫຍາຍອກເຍີ້ຍ ບາງຄົນກໍຕະຫລົກເຮຮາ ອ້າຍບ່າວພູ້ອ້າວຂີ້ດີແດ່ ກໍຈົກນັ້ນບ່າຍນີ້ຜູ້ສາວໄປຕາມທາງ ເຮັດໃຫ້ບັນຍາກາດຄຶກຄື້ນຂຶ້ນຕື່ມ, ເມື່ອຂະບວນ ໄປເຖິງທົ່ງນາ ກໍໄດ້ເຊີນນາງແຕງອ່ອນເຂົ້າສູ່ເມືອງ, ພາຍ ຫລັງນາງແຕງອ່ອນເຂົ້າມາເມືອງແລ້ວ ກໍຈັດຕັ້ງກັນຄົບງັນເປັນການສະແດງຄວາມປິຕິຍິນດີ. ບັນດາຊາວເມືອງທັງນ້ອຍ ແລະ ໃຫຍ່ ກໍພາກັນຫລັ່ງໄຫລມາເບິ່ງມາຊົມນາງແຕງອ່ອນ ຜູ້ໃດເຫັນກໍວ່ານາງງາມໆ ບາງຄົນຈົນລືມເນື້ອລືມຕົວ, ການຄົບງັນກໍໃຊ້ເວລາ ຈົນຫມົດມື້ ຈຶ່ງເລີກລາກັນໄປ ພະຍາໂກສີຈຶ່ງສັ່ງໃຫ້ເຊີນນາງຂຶ້ນ ສູ່ແທ່ນຄຳໃນຫໍຜາສາດ.

ພໍແຕ່ກິນແລງແລ້ວ ມະຫາວົງກໍຈັດແຈງແປງຕົວລູບໄລ້ ເຄື່ອງຫອມຈັນທອນ ປະດັບເຄື່ອງເອ້ສົງວານ ສຸບແຫວນທຳມະໂຮງ, ຈາກນັ້ນທ້າວກໍຂຶ້ນໄປຫານາງ ເພື່ອຖາມຂ່າວນາງໃນຝັນຂອງທ້າວ ມະຫາວົງໄດ້ເລົ່າເຖິງ ຄວາມຮັກຄວາມມັກຂອງທ້າວທີ່ມີຕໍ່ນາງ ຫລັງຈາກນອນຫລັບຝັນເຫັນ ບໍ່ມີມື້ໃດຈະຫລົງຈະລືມນາງໄດ້ເລີຍ, ຝ່າຍ

ນາງແຕງອ່ອນໄດ້ເວົ້າຕອບທ້າວ ມະຫາວົງເປັນການສຽດສີດັ່ງນີ້.

ອັນວ່າພະບາດເຈົ້າ	ເໜືອຫົວຕົນປະເສີດ ຣຽມເອີຍ
ສັງເລົ່າມາຢອກຫລິ້ນ	ຈົນຊ້ອນຊາດຜີ ພີ່ເອີຍ
ອັນວ່ານາລີລື້ນ	ສາວຣາມເຕັມແຜ່ນ
ຂ້ານີ້ຄົນຕ່ຳໃຕ້	ທຽມທ້າວບໍ່ທ່ອນຄວນ ດອກນາ
ຂໍໃຫ້ຈັກກີເຈົ້າ	ເໜືອຫົວຕົນປະເສີດ
ຫາຫມໍ່ເຊື້ອ	ທຽມຊ້ອນຊາດດຽວ ຫັ້ນຖ້ອນ

ເຖິງນາງຈະເວົ້າແນວໃດກໍຕາມ ມະຫາວົງກໍຍັງຢືນຢັນຢູ່ ຄຳດຽວວ່າ ນອກຈາກນາງແລ້ວ ທ້າວຈະບໍ່ເອົາກັບໃຜເປັນເດັດຂາດ ພ້ອມກັບຮັບປາກວ່າ ຈະຍົກນາງຂຶ້ນເປັນໃຫຍ່ຜູ້ດຽວ ໃຫ້ຊ່າລື ໄປທົ່ວລຸ່ມຟ້າ, ທ້າວບອກວ່າແຕ່ກ່ອນ ຄິດຫານາງໃນແຕ່ລາງຝັນ ບັດນີ້ນາງໄດ້ມາເຖິງເມືອງນະຄອນສີແລ້ວ ຈະບໍ່ປະບໍ່ວາງຈະຮັກ ຈະແພງແຕ່ນາງເທົ້າຊົ່ວຊີວັງ ເຖິງແມ່ນຈະຕາຍເປັນຜີ ກໍຊິນຳ ໄປຊ້ອນ.

6- ບັ້ນແມ່ໄວຍະກາ ຖວາຍນາງທັງຫ້າ

ບັດນີ້ກ່າວເຖິງນາງທັງຫ້າ ເຊິ່ງເປັນລູກຂອງແມ່ໄວ ຍະກາ ແລະ ມະຫາເສດຖີ ແຕ່ວ່າພໍ່ຂອງນາງທັງຫາໄດ້ຕາຍໄປດົນ ນານແລ້ວ ຈຶ່ງມີແຕ່ແມ່ໄວຍະກາຜູ້ດຽວຮັບພາລະລ້ຽງດູລູກສາວທັງຫ້າ, ດົນນານຫລາຍປີຜ່ານໄປຖານະຂອງແມ່ໄວຍະກາກໍຂາດງເຂີນ ໆ ເພາະບໍ່ມີຜົວຫາລ້ຽງຊ່ອຍ ສະພາບເຊັ່ນນີ້ເຮັດໃຫ້ແມ່ໄວຍະກາອຸກອັ່ງຕັນທີ; ເວົ້າເຖິງນາງທັງຫ້າລູກແມ່ໄວຍະການີ້ເລື່ອງຮູບໂສມຜິວພັນນັ້ນງາມສະເໝີກັນທັງຫ້ານາງເລີຍ ຈະຫາຍິງໃດໃນ ນະຄອນສີປຽບປານນາງທັງຫ້າບໍ່ມີອີກແລ້ວ, ຢູ່ມາມື້ໜຶ່ງແມ່ໄວຍະກາຄິດໄດ້ຄິດດີຂຶ້ນມາ ຄືຢາກຈະນຳລູກສາວທັງຫ້າໄປຖວາຍໃຫ້ມະຫາວົງ ເພື່ອເປັນການແບ່ງເບົາພາລະລ້ຽງດູ ແມ່ໄວຍະກາຄິດຕື່ມວ່າບາງເທື່ອມະຫາວົງອາດຈະຮັບນາງທັງຫ້າໄວ້ເປັນເມຍກໍອາດເປັນໄດ້ ແລະ ຕົນເອງກໍຈະຄອຍຮັບໃຊ້ຢູ່ກັບວັງນັ້ນເລີຍ.

ເມື່ອແມ່ໄວຍະກາຄິດໄດ້ແນວນັ້ນ ຈຶ່ງເອີ້ນລູກສາວທັງຫ້າ ມາຖາມຄວາມສະມັກໃຈ ປະກົດວ່າລູກສາວທັງຫ້າຮັບປາກເປັນ ສຽງດຽວກັນວ່າ ສຸດແລ້ວແຕ່ແມ່ພວກນາງທັງຫ້າບໍ່ຂັດຂ້ອງແນວໃດດອກ,

ເມື່ອຮູ້ວ່າລູກບໍ່ຂັດຂ້ອງ ແມ່ໄວຍະກາຈຶ່ງບອກໃຫ້ລູກທັງຫ້າພັດແປ່ງແຕ່ງຕົວ ເພື່ອເດີນທາງໄປເຝົ້າມະຫາວົງຕາມຄວາມຕັ້ງໃຈ ຂອງແມ່ທີ່ວາງເອົາໄວ້.

ໃນເວລາທີ່ແມ່ໄວຍະກາພາລູກທັງຫ້ານາງເດີນທາງຈະ ໄປເຝົ້າມະຫາວົງນັ້ນ ຊາວບ້ານຊາວເມືອງໃຜງກໍພາກັນແນມເບິ່ງແມ່ໄວຍະກາ ແລະ ລູກດ້ວຍຄວາມພະວົງສົງໃສ, ຖ້າມີຜູ້ຖາມ ວ່າເປັນແນວໃດຈຶ່ງໃຫ້ລູກສາວເອ້ຍ້ອງຍ່າງຈົບງາມ ແລ້ວຍ່າງ ມຸ່ງໜ້າໄປສູ່ວັງຂອງມະຫາວົງ ແມ່ໄວຍະກາກໍຈະຕອບເຂົາວ່າ ຈະພາລູກເມືອເຝົ້າພະອົງ ເພາະບໍ່ເຄີຍພາລູກເຂົ້າໄປໃນວັງຈັກເທື່ອ

ພໍໄປເຖິງປະຕູວັງ ກໍມີຄົນຍາມນຳພາແມ່ໄວຍະກາ ແລະ ລູກທັງຫ້າຂຶ້ນໄປຂາບໄຫວ້ມະຫາວົງ, ແມ່ໄວຍະກາໄດ້ຂາບທູນ ເຖິງຄວາມປະສົງຂອງຕົນເອງໃຫ້ມະຫາວົງຮູ້ວ່າຈະຂໍນຳລູກສາວທັງຫ້າມາຖວາຍໃຫ້ມະຫາວົງຮັບໄວ້ເພື່ອປົວລະບັດຮັກສາພະອົງ, ແລະຕົວຂອງແມ່ໄວຍະກາເອງກໍເວົ້າວ່າຈະຂໍຢູ່ຮັບໃຊ້ພາຍໃນວັງນີ້ຄືກັນ ; ຝ່າຍມະຫາວົງ ພໍແຕ່ໄດ້ຮັບຟັງ ແລະ ແນມເບິ່ງໜ້ານາງທັງ ຫ້າແລ້ວ ກໍປະກົດວ່າຕ້ອງຕາງຕາໃຈ ເພາະວ່ານາງທັງຫ້າມີ ຄວາມສວຍງາມອີ່ຫລີ, ແຕ່ມະຫາວົງໄດ້ບອກກັບແມ່ໄວຍະກາວ່າ ເລື່ອງນີ້ ສຸດຂາດກັບພະຍາໂກສີຜູ້ເປັນພໍ່ ແລະ ນາງແຕງອ່ອນ ສ່ວນຕົວມະຫາວົງເອງ ບອກວ່າບໍ່ມີຄວາມຂັດຂ້ອງຫຍັງໜົດ.

ຕໍ່ມາມະຫາວົງຈຶ່ງຂຶ້ນໄປໄຫວ້ຕໍ່ພະຍາໂກສີຜູ້ເປັນພໍ່ ມະຫາວົງໄດ້ຂາບທູນເລື່ອງທັງໝົດ ທີ່ແມ່ໄວຍະກາໄດ້ເຂົ້າມາຂາບທູນ ຕໍ່ຕົນ, ຝ່າຍພະຍາໂກສີກໍບອກວ່າບໍ່ຂັດຂ້ອງ ແຕ່ໃຫ້ມະຫາວົງໄປປຶກ

ສາຂໍຄວາມເຫັນຈາກນາງແຕງອ່ອນເບິ່ງກ່ອນ ວ່ານາງຈະ ເຫັນດີເຫັນພ້ອມບໍ ? ເມື່ອມະຫາວົງຕອບວ່າຍັງບໍ່ທັນໄດ້ປຶກສານໍາ ນາງເທື່ອ ພະຍາໂກສີສັ່ງໃຫ້ເສນາໄປນໍານາງແຕງອ່ອນຂຶ້ນມາເຝົ້າພະອົງທັນທີ, ເມື່ອນາງຂຶ້ນເຝົ້າພະຍາໂກສີຈຶ່ງຖາມວ່າ ຖ້າມະຫາວົງຈະຮັບເອົານາງທັງຫ້າມາເປັນເມຍຕື່ມອີກ ຈະມີຄວາມຂັດຂ້ອງບໍ? ນາງແຕງອ່ອນໄດ້ຕອບພະຍາໂກສີຜູ້ເປັນປູ່ວ່າ ລູກເອງໄດ້ປົງ ຈິດປົງໃຈກັບທ້າວຫມົດແລ້ວ ຖ້າທ້າວຈະຮັບເອົານາງທັງຫ້າມາຢູ່ນໍາກໍຖືວ່າແມ່ນບຸນສົມພານທີ່ເຄີຍໄດ້ສ້າງສົມຮ່ວມກັນ. ແຕ່ນາງ ແຕງອ່ອນໄດ້ແກ້ຄວາມຝັນຂອງນາງສູ່ພະຍາໂກສີ ຜູ້ເປັນປູ່ຟັງເຖິງ ບົດກອນຂຽນວ່າ:

ແຕ່ນັ້ນນາງກໍຖວາຍກອນໄຫວ້ ປີຕາຕົນພໍ່
ຂ້າກໍຝັນຫລາກແທ້ ຄືນນີ້ທ່ຽງຈິງ ພໍ່ເອີຍ
ຝັນວ່າຍອດຊໍ່ຟ້າ ພົ້ນພຸ່ງສະເດັນຫັກ
ເລີຍເລົ່າເປັນກະຈອນພົງ ມຸ່ນໄປບໍ່ມີຮູ້
ມັນຫາກດັບແສງເສົ້າ ເສັຍສີຫນອງຫມົ່ນ
ຈົນວ່າຄົນໂສກເສົ້າ ສີ້ບານບໍ່ເຮືອງ
ຝັນວ່າຫລາຍປີໄດ້ ສັງຂານແນມຖ່າຍ ມານັ້ນ
ອັນວ່າຍອດຊໍ່ຟ້າ ມະນີແກ້ວຈຶ່ງເຮືອງ ພໍ່ເອີຍ.

ຝ່າຍພະຍາໂກສີໄດ້ຮັບຟັງ ນາງແກ້ຄວາມຝັນແລ້ວ ກໍບໍ່ໄດ້ໃສ່ໃຈເປັນອື່ນໃດ ພະອົງຄິດວ່າລາງຝັນນີ້ກ່ຽວກັບຕົວພະອົງເອງຄືພະອົງມີອາຍຸສັງຂານແກ່ເຖົ້າມາແລ້ວ ກໍຈະດັບສູນໄປ, ພາຍ ຫລັງມາລູກເຕົ້າຂຶ້ນຄອງບ້ານຄອງເມືອງແທນ ເວລານັ້ນບ້ານເມືອງ ກໍ

ຈະສີວິ ໄລຮຸ່ງເຮືອງ.

ເມື່ອພະຍາໂກສີໄຕ່ຖາມເບິ່ງແລ້ວ ເຫັນວ່າບໍ່ມີຜູ້ໃດຂັດ ຂ້ອງ ຈຶ່ງຕົກລົງຮັບເອົານາງທັງຫ້າ ມາເປັນເມຍໃຫ້ແກ່ມະຫາວົງ, ສ່ວນ ແມ່ໄວຍະກາ ກໍເຮັດຫນ້າທີ່ຮັບໃຊ້ຢູ່ພາຍໃນວັງ ສຳຫລັບນາງ ທັງ ຫ້າກໍຢູ່ຮ່ວມກັບມະຫາວົງ ຢ່າງມີຄວາມສຸກ.

7- ບັ້ນພະຍາໂກສີ ສິ້ນພະຊົນ (ຕາຍ)

ອັນວ່າພະຍາໂກສີ ຫລືພະຍານະຄອນສີ ແລະ ນາງສຸພະ ລັດຕະນາຜູ້ເປັນເມຍ ມີອາຍຸສັງຂານແກ່ເຖົ້າຊະລາການແລ້ວ ກໍ ໄດ້ເສຍຊີວິດໄປຕາມກົດເກນຂອງສັງຂານ, ຝ່າຍມະຫາວົງກໍໄດ້ ຂຶ້ນປົກຄອງບ້ານເມືອງແທນພໍ່, ເມື່ອພະຍາໂກສີ ແລະ ເມຍສິ້ນຊີວິດ ມະຫາວົງກໍໄດ້ຈັດເມັນ (ຫີບສົບ) ໃສ່ສາບພໍ່ ແລະ ແມ່ຢ່າງ ສົມກຽດ ພ້ອມທັງປ່າວເຕີນໄປຍັງຫົວເມືອງຕ່າງໆຊຶ່ງເປັນຫົວເມືອງສ່ວຍໃຫ້ມາຄົບງັນ ແລະ ນ້ຽນຊາກສົ່ງສະການຕາມຮີດຄອງປະເພນີ.

ຄັນໄດ້ນ້ຽນຊາກສົ່ງສະການເປັນທີ່ຮຽບຮ້ອຍແລ້ວ ມະຫາວົງກໍໄດ້ສ້າງທາດໃສ່ກະດູກຂອງພໍ່ ແລະ ແມ່ຢ່າງສົມສັກສີ, ຝ່າຍ ມະຫາວົງເອງກໍໄດ້ປົກຄອງບ່າວໄພ່ ລາສະດອນ ດ້ວຍຄວາມຮົ່ມເຢັນເປັນສຸກ ບໍ່ມີໄພໃດໆມາກຸກກວນຮາວີ.

8- ບັ້ນລັກກີມະຫາວົງໄປຄ້ອງຊ້າງ

ຍັງມີທຸສະໂກ ນາຍພານເນື້ອຜູ້ໜຶ່ງມີອາຊີບຫາລ່າເນື້ອກວາງ ຟານ ແລະ ສັດປ່ານານາຊະນິດ ເພື່ອມາຂາຍລ້ຽງຊີບເປັນປະຈຳ ມື້ນີ້ນາຍພານໄດ້ບອກໃຫ້ເມຍຫາງຫາເຂົ້າຂອງຫມາກພູຢາສູບ ໃຫ້ ເພື່ອວ່າມື້ອື່ນເຊົ້າຈະໄດ້ອອກເດີນດົງພົງໄພ ໄປທ່ຽວຊອກລ່າ ສັດ ຕາມກິດຈະວັດທີ່ເຄີຍກະທຳມາ, ຝ່າຍຜູ້ເປັນເມຍກໍໄດ້ຈັດແຈງໃຫ້ ຄົບຖ້ວນ ແລະ ສາມາດກຸ້ມໄດ້ຫລາຍໆມື້ອີກ.

ມື້ລຸນມາ ນາຍພານກໍອອກເດີນທາງໄປສູ່ດົງຫນາປ່າໃຫຍ່ຊອກ ຫາສັດປ່າ ແຕ່ປະກົດວ່າມື້ນີ້ໄປຊອກໂຕກໃດ ດົງໃດກໍມິດຊອຍມ້ອຍ ຈົນນາຍພານອິດອ່ອນ, ເມື່ອເຫັນທ່າວ່າ ຊິບໍ່ເປັນຕາໄດ້ແທ້ໆນາຍ ພານຈຶ່ງຫັກເອົາງ່າໄມ້ມາໄລ່ນໍເບິ່ງໂຊກລາບວ່າ ໄປທາງໃດ ຈຶ່ງ ຈະມີລາບ, ພໍແຕ່ຫັກໄມ້ໄລ່ນໍເບິ່ງກໍຈຶ່ງຮູ້ວ່າ ໄປທາງທິດໃຕ້ຈຶ່ງຈະ ມີໂຊກລາບ. ເມື່ອຮູ້ວ່າໂຊກລາບລໍຖ້າຢູ່ທາງທິດໃຕ້ ນາຍພານຈຶ່ງ ຟ້າວອອກເດີນທາງມຸ່ງຫນ້າໄປສູ່ທິດໃຕ້ເລື້ອຍໆ ນັບເປັນເວ ລາ ຫລາຍວັນຫລາຍຄືນ ຈຶ່ງໄດ້ເດີນທາງໄປເຖິງ ດອຍຄິດຊະກູດ.

ຢູ່ບໍລິເວນດອຍຄິດຊະກູດນີ້ ນາຍພານໄດ້ເຫັນຫມູ່ຊາວນັບເປັນ

ລ້ານໆໂຕ ຍ່າງເປັນຝູງໃຫ່ຍໄປມາຕາມຕີນພາ ເບິ່ງຮອຍຕີນຊ້າງ ຫລີ່ມຮອຍໃດກໍປານວ່ານ້ຳສ້າງເອົາໂລດ, ພ້ອມກັນນີ້ກໍເຫັນ ຊ້າງ ອີກຝູງຫນຶ່ງແຫລ້ອມຊ້າງເຜືອກແກ້ວງານິນ ຊ້າງບໍລິວານບາງໂຕກໍ ໄປຊອກຫຍ້າມາໃຫ້ຊ້າງເຜືອກ ກິນດັ່ງບົດກອນຂຽນໄວ້ວ່າ

ຝູງຫມູ່ອາສາຊ້າງ ສາມພັນນຳບາດ
ເອົາຢູ່ເຝົ້າ ແຝງລ້ອມແວດລະວັງ
ບາງພ່ອງໄປເອົາຫຍ້າ ສາມໃບກັບຍອດ
ຍໍຍົກໃຫ້ ພະຍາຊ້າງເຜືອກສານ
ແຕ່ນັ້ນ ນາຍພານຢຽມ ມອງດູຫລິງລ່ຳ
ທຸກສ່ຳຢຽມ ເຫັນຖ້ວນຊູ່ເຊີງ
ອັນວ່າປ່າຫາພົ້ນ ຕີນແດງທັງສີ່
ຝູງເລັບເຄົ້າ ດຳປີ້ດັ່ງນິນ
ຕັ້ງຫາກເປັນພະຍາຊ້າງ ງານິນໂດຍຊາດ
ຕາກໍຂາວດັ່ງແກ້ວ ພິຫູນເລັ້ມລູກງາມ
ອັນວ່າຂົນຂາວພຽງ ສຳລີປູນປຽບ ກັບແລ້ວ
ກໍຫາກພິວພ່ອງຫລື້ອມ ພະຍາຊ້າງເຜືອກສານ

ພໍແຕ່ນາຍພານໄດ້ເຫັນຊ້າງເຜືອກ ກໍຄິດຢາກໄດ້ທັນທີ ຈຶ່ງຈັບ ເອົາທະນູຂຶ້ນມາຫ້າງ ເພື່ອຈະຍິງເອົາຊ້າງ ແຕ່ພັດເກີດມີແນວຄິດ ອີດູສົງສານຊ້າງເຜືອກ ທັງນີ້ຍອນເທວະດາດົນບັນດານຈິດໃຈຂອງ ນາຍພານເອົາໄວ້, ນາຍພານຄິດຕໍ່ໄປວ່າ ຖ້າເອົາຕັດສິນໃຈ ຍິງ ຊ້າງເຜືອກຕາຍ ເອົາກໍຈະບໍ່ໄດ້ຫຍັງ ຊ້ຳບໍ່ພໍຖ້າເລື່ອງນີ້ໄດ້ຍິນໄປ ເຖິງມະຫາວົງແລ້ວ ພະອົງອາດຈະສັ່ງຕັດຄໍກໍເປັນໄດ້, ແທນວ່າ

ນຳເລື່ອງນີ້ກັບຄືນ ເມືອຂາບທູນໃຫ້ມະຫາວົງ ໄດ້ຮູ້ວ່າມີຊ້າງເຜືອກເກີດຂຶ້ນໃນດົງ ບາງທີພະອົງຈະມອບລາງວັນ ເຂົ້າຂອງເງິນ ຄຳໃຫ້ກໍເປັນໄດ້.

ເມື່ອນາຍພານຄຶດໄດ້ຄືແນວນີ້ແລ້ວ ຈຶ່ງຟ້າວກັບຄືນສູ່ບ້ານ ສູ່ເຮືອນ ນາຍພານໃຊ້ເວລາເດີນທາງຢູ່ຫລາຍວັນຫລາຍຄືນ ຈຶ່ງມາເຖິງເຮືອນຂອງຕົນ, ຝ່າຍຜູ້ເປັນເມຍເຫັນຜົວກັບມາແຕ່ມືເປົ່າບໍ່ມີຊີ້ນຕິດຫາບຕິດຄອນ ກໍເກີດແປກໃຈຈຶ່ງຖາມຜົວວ່າ ເປັນແນວ ໃດໄປລ່າສັດເທື່ອນີ້ ຄືບໍ່ໄດ້ຫຍັງມາເລີຍ ນາຍພານຈຶ່ງບອກເມຍ ວ່າຂ້ອຍໄດ້ພະຍາຍາມຊອກຫາສັດຫລາຍດົງກໍບໍ່ພໍ້ ຈົນໄປເຖິງດອຍຄິດຊະກູດ ຈຶ່ງໄດ້ພໍ້ຊ້າງເຜືອກງາມໆ ຂ້ອຍຈຶ່ງຟ້າວກັບຄືນເພື່ອ ຈະຂໍເຂົ້າເຝົ້າມະຫາວົງ ແລະ ເລົ່າເຫດການຊູ່ພະອົງຟັງ.

ມື້ລຸນມານາຍພານລຸກຈາກບ່ອນນອນແຕ່ເຊົ້າໆ ພັດເນື້ອ ແຕ່ງຕົວທຳທ່າທາງເປັນຂຸນ ແລ້ວກໍເດີນທາງໄປສູ່ວັງຂອງມະຫາ ວົງເພື່ອຂາບທູນເລື່ອງທີ່ຕົນໄດ້ພົບເຫັນຊ້າງເຜືອກ, ສ່ວນມະຫາ ວົງໄດ້ເຫັນນາຍພານເຂົ້າເຝົ້າ ຈຶ່ງໄດ້ໄຕ່ຖາມເຖິງຄວາມປະສົງ ວ່ານາຍພານມີຄວາມເດືອດຮ້ອນເຄືອງໃຈແນວໃດ ? ແຕ່ນາຍ ພານຂາບທູນມະຫາວົງວ່າ ບໍ່ມີຄວາມເດືອດຮ້ອນເຄືອງໃຈຫຍັງ ດອກພຽງແຕ່ຢາກມາທູນໃຫ້ພະອົງຮູ້ວ່າມື້ກ່ອນນີ້ຜູ້ຂ້າ ໄດ້ອອກໄປຊອກລ່າເນື້ອໃນດົງ ຜູ້ຂ້າ ໄດ້ ໄປພໍ້ຊ້າງເຜືອກໂຕຫນຶ່ງຢູ່ທາງດອຍຄິດຊະກູດພຸ້ນ ເປັນຊ້າງເຜືອກແກ້ວງາມົນ ທີ່ຈບງາມຫລາຍໆ ທັງພຽບພ້ອມໄປດ້ວຍຄຸນລັກສະນະອັນປະເສີດ ຈຶ່ງມາຂາບທູນຕໍ່ພະອົງ ເພື່ອໄດ້ຮູ້ແລ້ວແຕ່ພະອົງຈະຄິດ.

ມະຫາວົງ ເມື່ອໄດ້ຟັງນາຍພານຂາຍທູນກໍເກີດມີຄວາມປິຕິຍິນດີ ແລະ ສົນໃຈໃນຕົວຊ້າງເຜືອກທັນທີ ຈຶ່ງຖາມນາຍພານວ່າເຈົ້າເຫັນນັ້ນແມ່ນຊ້າງເຜືອກແທ້ບໍ ຫລືວ່າຜີປ່າຫາກປອມແປງ, ນາຍພານໄດ້ທູນເປັນການຢືນຢັນກັບມະຫາວົງວ່າ ແມ່ນທຳມະຊາດຊ້າງເຜືອກໂດຍກຳເນີດແທ້ ຖ້າບໍ່ແມ່ນຂໍໃຫ້ພະອົງຕັດຄໍຜູ້ຂ້າໄດ້ເລີຍ, ມະຫາວົງຈຶ່ງເວົ້າກັບນາຍພານວ່າ ຖ້າເປັນຈິງແທ້ ເຮົາຈະນຳພົນອອກໄປຄ້ອງຊ້າງເຜືອກມາເປັນມິ່ງມູນເມືອງ. ເວົ້າແລ້ວກໍສັ່ງໃຫ້ເສນາອາມາດ ປ່າວເຕີນພົນຫານພ້ອມທັງຈັດຫາຊ້າງຕໍ່ໂຕດີງແລະໄດ້ມອບໃຫ້ແສນເມືອງເປັນຜູ້ຢູ່ຮັກສາການແທນຊົ່ວຄາວ.

ຈາກນັ້ນມະຫາວົງກໍໄດ້ສັ່ງລານາງແຕງອ່ອນ ຂໍໃຫ້ຢູ່ຮັກສາ ທໍພາສາດລາຊະມົນທຽນຖ້າ, ທັງຊ່ອຍເບິ່ງແຍງເສນາອາມາດ ພ້ອມທັງນາງສະຫນົມ ຖ້າຜູ້ໃດລ່ວງເກີນກໍໃຫ້ອົບຮົມສັ່ງສອນເຂົາໂດຍດີ ສ່ວນນາງແຕງອ່ອນກໍອວຍພອນໃຫ້ມະຫາວົງ ໄປດີໃຫ້ຄ້ອງໄດ້ຊ້າງເຜືອກແກ້ວງາມົນມາໄວ້ ເປັນມິ່ງເມືອງ ແລະ ສັ່ງວ່າພະອົງໄປກໍຢ່າດົນຫລາຍ ດຽວນີ້ນ້ອງໄດ້ຖືພາມານໄດ້ເຈັດເດືອນແລ້ວ ໃຫ້ຮີບໄປຮີບກັບ ຢ້ານວ່ານ້ອງຢູ່ທາງນີ້ຈະມີມານບຽດບຽນ, ແຕ່ມະ ຫາວົງໄດ້ບອກກັບນາງວ່າ ຕົນເອງໄດ້ຈັດຕັ້ງແບ່ງປັນຫນ້າທີ່ໄວ້ໃຫ້ແຕ່ລະຄົນແລ້ວ ຜູ້ເຂົາເຄີຍຮູ້ຫນ້າຕາແຍກໍມີ ໂດຍສະເພາະແມ່ນ-ນາງທັງຫ້າ ແລະ ແມ່ໄວຍະກາ ນ້ອງຢ່າຮ້ອນຢ່າເຄືອງເລີຍດັ່ງ ບົດກອນຂຽນວ່າ

ອັນຫນຶ່ງນ້ອງກໍທັງຄັນໄດ້ ເຈັດເດືອນວັນອອກມານີ້
ເຈົ້າຢ່າໄດ້ຢູ່ຊ້າ ຕົວນ້ອງສ່ວນຊິຄອງ

ແຕ່ນັ້ນຈອມທອງທ້າວ   ມະຫາວົງອົງອາດ
ພູວະນາດຕ້ານ   ດອມນ້ອງນາດຖະແພງ
ຂໍແກ່ສີຄານແກ້ວ   ຢ່າເຄືອງແຄນຍາກ ສັງຖ້ອນ
ອັນວ່າສອນລອນລົ້ນ   ໂກສີເມືອງໃຫຍ່ ເຮົານີ້
ມີບໍ່ໄຮ້   ດິນຟ້າຢູ່ເຕັມ
ອັນໜຶ່ງຜູ້ຮອບຮູ້   ໝໍໃຫຍ່ຕຳແຍ ກໍມີ
ໄວຍະກາຍັງ   ກໍບໍ່ມີພໍຮ້າຍ
ອັນໜຶ່ງສາຍນາມເນື້ອ   ກອງແພງນາງນາດ
ຫ້າອ່ອນນ້ອຍ   ຍັງພ້ອມພ່ຳກັນ ພືນາ.

ໂອກາດດຽວກັນນີ້ ມະຫາວົງກໍໄດ້ສັ່ງກັບແມ່ໄວຍະກາແລະເສນາຜູ້ໃຫຍ່ ໃຫ້ພາກັນເອົາໃຈໃສ່ເບິ່ງແຍງນາງແຕງອ່ອນ ໃຫ້ດີ ເມື່ອໃດນາງປະສູດລູກເກີດມາ ກໍໃຫ້ພ້ອມກັນຮັກສາກຸມມານໃຫ້ດີ, ເມື່ອສັ່ງທຸກຄົນຮຽບຮ້ອຍແລ້ວ ມະຫາວົງກໍຂຶ້ນເມືອພັກຜ່ອນຮ່ວມກັບນາງແຕງອ່ອນ.

ກ່ອນວັນອອກເດີນທາງໄປຄ້ອງຊ້າງເຜືອກນັ້ນ ຝູງເສນາ ອາມາດ ຊຶ່ງເປັນພົນທານກໍມາພ້ອມພຽງຕະຫລອດຮອດຂະບວນ ຊາງຕົວດີ ກໍກຽມພ້ອມເພື່ອຕິດຕາມມະຫາວົງເດີນປ່າດົງບົດກອນ ຕອນໜຶ່ງຂຽນວ່າ

ເຂົາກໍໄຫລຫລັ່ງເຂົ້າ   ທໍລາຊະປາງທອງ
ເສນາຫລາຍ   ຫລັ່ງມາໂຮມເຕົ້າ
ເຂົາກໍໄຫລຫລູເຂົ້າ   ທໍໄຊຍິຍາບ
ມິດອື້ຕື້   ເຕັມຄຸ້ມຂ່ວງສະໜາມ

ອັນວ່າອາສາໄດ້ ທາງຕີນທຶກໝື່ນ
ຂຸນອື່ນໄດ້ ສາມຮ້ອຍແຕ່ຫານ
ອັນວ່າກຸນຊະໂລຊ້າງ ຕົວດີກ້າແກ່ນ
ໄດ້ຫ້າຮ້ອຍ ຫັນຫ້າວວ່ອງໄວ

ເມື່ອເຖິງເວລາອອກເດີນທາງ ມະຫາວົງກໍຂຶ້ນຂີ່ຊ້າງ ຕົວອົງອາດກ້າຫານອອກໜ້າຂະບວນ, ການເດີນທາງຕ້ອງຜ່ານດົງໜາປ່າໃຫຍ່ຂ້າມທົ່ງຂ້າມພູ ຈົນນົກຈົນໄມ້ໄປເລື້ອຍໆ ນັບໄດ້ 15 ວັນ ຂະບວນດັ່ງກ່າວຈຶ່ງໄປເຖິງຕີນດອຍສິດຊະກູດ; ເມື່ອໄປເຖິງນາຍພານກໍຟ້າວໄປສັງເກດເບິ່ງຊ້າງເຜືອກກ່ອນໝູ່ ເພື່ອຢາກຮູ້ ວ່າຊ້າງເຜືອກຍັງຢູ່ບ່ອນເກົ່າຫລືບໍ່ ? ປະກົດວ່າຊ້າງເຜືອກຍັງບໍ່ ໜີໄປໃສເທື່ອ ນາຍພານຈຶ່ງຟ້າວກັບມາລາຍງານໃຫ້ມະຫາວົງຮູ້.

ຝ່າຍມະຫາວົງເມື່ອໄດ້ຮູ້ເລື່ອງ ຈາກນາຍພານແລ້ວກໍມີຄວາມຊົມຊື່ນຍິນດີ ຈຶ່ງສັ່ງໃຫ້ຂະບວນພານທັງຫລາຍ ກະກຽມຄັນ ຈາມ ແລະ ບ້ວງບາດ ສຳຫລັບຄ້ອງຊ້າງ, ສັ່ງໃຫ້ທຸກຄົນເຮັ່ງຮ້ອນ ຢ່າຊັກຊ້າ ຢ້ານວ່າຝູງຊ້າງຈະແຕກຕື່ນໜີໄປທາງອື່ນໝົດ, ແບ່ງກຳລັງເຂົ້າປິດລ້ອມບ່ອນທີ່ກົ່ວຮອມ ແລ້ວຕ້ອນຝູງຊ້າງເຂົ້າຫາກັນ ໃຊ້ຊ້າງຕໍ່ຂະໜາບເອົາໄວ້ຢ່າໃຫ້ກາຍໄດ້; ເມື່ອທຸກຝ່າຍກຽມ ພ້ອມແລ້ວ ນາຍພານຜູ້ຄ້ອງຊ້າງກໍລົງມືຄ້ອງຊ້າງເຜືອກງານິນທັນທີຍອມວ່າບ້ວງຄ້ອງຫລາຍເສັ້ນຮັດຮິງ ຊ້າງເຜືອກຈຶ່ງບໍ່ສາມາດດີ້ນ ຫລຸດໄປໄດ້, ສ່ວນຊ້າງທີ່ເປັນບໍລິວານຈຳນວນໜຶ່ງ ກໍແຕກພ່າຍໜີໄປອີກຈຳນວນໜຶ່ງກໍຖືກຄ້ອງເອົາໄວ້ໄດ້ ດັ່ງຄຳກອນຂຽນໄວ້ວ່າ

ແຕ່ນັ້ນ ພາຍສາມຊ້າງ ງານິນຂາວເຜືອກ

ຫລາຍເຊືອກຄ້ອງ	ຮິງໄວ້ຜູກດີ
ເຂົາກໍກຸມເອົາຫ້າວ	ພະຍາສານຊ້າງຖ່າວ
ເຂົາກ່າວຮ້ອງ	ສຽງກ້ອງຮອດເທິງ
ແຕ່ນັ້ນເຂົາກໍຍິນດີໄດ້	ພະຍາສານຊ້າງເຜືອກ
ອັນວ່າຫນັງຜູກຫມັ້ນ	ພັນກ້ຽວແກ່ນດີ.

. / .

໑- ບັ້ນນາງແຕງອ່ອນປະສູດລູກ

ກ່າວເຖິງນາງແຕງອ່ອນ ພາຍຫລັງທີ່ມະຫາວົງໄດ້ອອກ ເດີນປ່າໄປຫາຄ້ອງຊ້າງ ນາງກໍຢູ່ສຸກສະບາຍ ບໍ່ມີພະຍາດໂລຄາອັນໃດບຽດບຽນທຸກຄ່ຳເຊົ້າວັນຄືນ ນາງສະຫນົມກົມມະວັງ ກໍຄອຍບົວລະບັດຮັກສາບໍ່ໄດ້ຂາດ, ແຕ່ຍ້ອນເວນກຳຂອງນາງມາເຖິງ ຈຶ່ງເກີດມີຜູ້ອິດສາອິ່ມເຫັງຢ້ານລື່ນຢ້ານເຫລືອ. ບັດນີ້ນາງແຕງອ່ອນ ໄດ້ຖືພາມານມາກໍພໍດີຄົບເດືອນປະສູດ ນາງຈຶ່ງມີອາການເຈັບທ້ອງຢ່າງແຮງ ພວກເສນາອາມາດຈຶ່ງຟ້າວໄປບອກໃຫ້ແມ່ໄອຍະກາຮູ້ ເພື່ອຈະໄດ້ມາເປັນຫມໍຕຳແຍໃຫ້ນາງແຕງອ່ອນ, ແຕ່ຂ່າວວ່ານາງແຕງອ່ອນເຈັບທ້ອງຈະປະສູດລູກ ທີ່ເສນານຳໄປບອກກັບແມ່ໄອຍະ ການັ້ນ ພໍປານວ່າເອົານ້ຳມັນໄປຖອກໃສ່ໄຟເອົາໂລດ, ຄວາມ ຄຽດຄວາມອິດສາທີ່ບົ່ມຊ່ອນຢູ່ໃນໃຈຂອງແມ່ໄອຍະກາ ກໍລຸກວາບຂຶ້ນຕື່ມເພາະຄຽດວ່າມະຫາວົງຮັກແຕ່ນາງແຕງອ່ອນຜູ້ດຽວ ບໍ່ຮັກບໍ່ ແພງນາງທັງຫາ.

ເມື່ອເຫັນວ່າໄດ້ໂອກາດຄືແນວນີ້ ແມ່ໄອຍະກາກໍທຸ່ມເທ ເງິນ

ຄຳທີ່ມີຢູ່ສາວເຖິງສິບແປດໂກດ ທ່ຽວຫາຈ້າງວານເປັນການ ປິດປາກ ນັບແຕ່ແສນເມືອງລົງໄປເຖິງເສນາຜູ້ນ້ອຍ ໃຫ້ຊ່ອຍປິດ ອຳເລື່ອງຕ່າງໆທີ່ເກີດຂຶ້ນດັ່ງບົດກອນຂຽນວ່າ

ໄວຍະກາໃຫ້	ຄຳເຂົາທຸກຫມູ່
ຖ້ວນຄູ່ຫນ້າ	ຈົງແທ້ຊູຄົນ
ອັນທີ່ເປັນແນວເຊື້ອ	ເສນາຜູ້ໃຫຍ່
ຄຳຫ້າຮ້ອຍ	ຍໍໃຫ້ຊູ່ຂຸນ ແທ້ແລ້ວ

ແມ່ໄວຍະກາ ຍັງຂ້ອງໃຈແຕ່ນາງຈິກນ້ອຍຜູ້ດຽວ ເຊິ່ງ ເປັນສາວສະຫນົມຜູ້ໃກ້ຊິດນາງແຕງອ່ອນ ເປັນຜູ້ບົວລະບັດນາງ ແຕງອ່ອນທຸກເຊົ້າຄ່ຳວັນຄືນ ມີຫນ້າທີ່ປູບ່ອນນອນໃຫ້ນາງແຕງອ່ອນໂດຍສະເພາະ, ແຕ່ແນວໃດກໍຕາມແມ່ໄວຍະກາກໍຈະພະຍາຍາມຊື້ຈ້າງຈອບອອຍນາງຈິກນ້ອຍໃຫ້ໄດ້, ຄິດແລ້ວກໍໃຊ້ໃຫ້ຄົນໄປນຳນາງຈິກນ້ອຍ ພ້ອມນາງສະຫນົມອື່ນໆມາຫາ. ແມ່ໄວຍະກາໄດ້ບອກໃຫ້ ຮູ້ວ່າ ເຂົາຈະເຮັດໃຫ້ນາງແຕງອ່ອນມີຖານະຕົກຕ່ຳ ເຂົາຈະ ເອົາຄຳໃຫ້ນາງຈິກນ້ອຍ ແລະ ນາງສະຫນົມອື່ນໆຜູ້ລະຮ້ອຍ ຂໍໃຫ້ ທຸກຄົນປິດງຽບຢ່າໃຫ້ເລື່ອງທັງຫມົດຟົ້ງຜື່ອໄປໃຫ້ໃຜຮູ້ເດັດຂາດ ໂດຍສະເພາະແມ່ນມະຫາວົງ, ປະກົດວ່າທຸກຄົນປິຕິຍິນດີທີ່ໄດ້ຄຳ ເປັນຄ່າຈ້າງຈາກແມ່ໄວຍະກາ.

ຕໍ່ມາແມ່ໄວຍະກາກໍຊອກຫາຫມໍເຖົ້າຜູ້ມີຄວາມສາມາດແລະສະຫລາດເຊິ່ງເຄີຍຊວາດນ້ຳ ເພື່ອວ່າຈ້າງໃຫ້ມຸດລົງໄປຊອກຫາ ແຂ້ນ້ອຍມາໃຫ້, ຝູງຫມໍເຖົ້າໄດ້ຮັບຄ່າຈ້າງກໍຈຶ່ງຟ້າວລົງສູ່ແມ່ນ້ຳຊອກຫາແຂ້ນ້ອຍ ເຂົາລ່ອງລອຍໄປຕາມແມ່ນ້ຳວັງນ້ອຍວັງໃຫຍ່ ຫລາຍ

ແຫ່ງໃນທີ່ສຸດກໍໄປພົ້ລູກແຂ້ພວມເກີດໃໝ່, ໝໍເຖົ້າຈຶ່ງກຸມຈັບເອົາແຂ້ຈົນໄດ້ ແລ້ວກໍຟ້າວນຳມາມອບໃຫ້ແມ່ໄວຍະກາ ຝ່າຍແມ່ໄວຍະກາ ເມື່ອໄດ້ແຂ້ນ້ອຍຕາມຕ້ອງການກໍມີຄວາມຊົມຊື່ນຍິນດີ.

ກ່າວເຖິງນາງແຕງອ່ອນ ປະກົດວ່າອາການເຈັບທ້ອງ ຂອງນາງໄດ້ເຈັບເພີ້ມຂຶ້ນເລື້ອຍໆ ຈົນຕະຫລອດຄືນ, ເມື່ອໄດ້ໂອ ກາດແລ້ວແມ່ໄວຍະກາ ແລະ ນາງທັງຫ້າ ກໍພາກັນຟ້າວໄປເບິ່ງ ນາງແຕງອ່ອນ ພ້ອມດ້ວຍນາງສະໜົມທັງຫລາຍ ເຊິ່ງໄດ້ຄ່າຈ້າງຂອງແມ່ໄວຍະກາ ທຸກໆຄົນໃຜກໍສະແດງທ່າທີເປັນຫ່ວງ ເປັນໃຍ ນຳນາງແຕງອ່ອນ ບາງຄົນກໍທຳທ່າບົວລະບັດຮັກສາ ຖະໜຸຖະໜອມພວກເຂົາເວົ້າກັນວ່າໃຫ້ເອົາຜ້າມາມັດຕາ ນາງໄວ້ເພາະຢ້ານວ່ານາງຈະອິນວຽນ ແມ່ໄວຍະກາຈຶ່ງຟ້າວຊອກຜ້າແພມາມັດຕາ ຂອງນາງທັນທີ ດັ່ງບົດກອນຕອນໜຶ່ງເວົ້າວ່າ

ແຕ່ນັ້ນໄວຍະກາຜູ້	ຍິງເກຄົນຖ່ອຍ
ມັນກໍເຣວຣິບຟ້າວ	ເອົາຜ້າຄາດຄຽນ
ສອງຕາເບື້ອງ	ມັນບັງອັດແຈບ
ກໍຫາກມືອມືດກຸ້ມ	ຕາເຈົ້າບໍ່ເຫັນ ຫັ້ນແລ້ວ
ເມື່ອນັ້ນບຸດຕານ້ອຍ	ລີລາສະເດັດອອກ
ເປັນຮູບທ້າວ	ກຸມານນ້ອຍໜໍ່ເມືອງ
ເຂົາເລົ່າຟ້າວ	ຣວຣິບພະລັນເປືອງ
ເອົາກຸມານ	ໃສ່ໄຫມີຊ້າ
ເຂົາກໍພາກັນອຶ້ງ	ອຳນາງບໍ່ຮູ້ເງື່ອນ
ຊັບຊິ້ມເວົ້າ	ຄຳນ້ອຍຕໍ່ກັນ

ພໍແຕ່ລູກປະສູດອອກພົ້ນທ້ອງເປັນຜູ້ຊາຍ ພວກແມ່ໄວຍະ ກາ ແລະ ນາງທັງຫ້າ ກັບສາວສະຫນົມ ກໍຟ້າວເອົາທ້າວໃສ່ໄຫ ແລ້ວ ນຳໄປຝັງໄວ້ນອກເມືອງ, ຈາກນັ້ນແມ່ໄວຍະກາ ຈຶ່ງຟ້າວນຳເອົາ ແຂ້ນ້ອຍໄປປ່ຽນແທນ ພ້ອມກັບແກ້ຜ້າແພມັດຕາອອກ ນາງ ແຕງ ອ່ອນແນມເບິ່ງກໍເຫັນແຂ້ນ້ອຍ ນາງຈຶ່ງຕື່ນຕົກໃຈ ແລະ ຫວນ ຄຶດ ເຖິງຕອນລູກອອກຈາກທ້ອງທຳອິດ ນາງໄດ້ຍິນສຽງໄຫ້ ແມ່ນ ຄົນ ແທ້ໆ ແຕ່ເປັນຫຍັງຈຶ່ງກາຍເປັນແຂ້ນ້ອຍໄປໄດ້ດັ່ງຄຳກອນຂຽນວ່າ

ຍາມເມື່ອປະສູດນ້ອຍ ເດີມເມື່ອຫົວທີ
ກູກໍຟັງດູສຽງ ແມ່ນຄົນຈິງແທ້
ຮ້ອຍວ່າເອົາຝູງນີ້ ອິດສາບັງບຽດ ກູແລ້ວ
ເອົາຈຶ່ງເອົາລູກນ້ອຍ ແນວແຂ້ປ່ຽນຕາງ ບໍ່ຢ່າແລ້ວ

ເມື່ອເກີດຄວາມສົງໃສຄືແນວນີ້ ນາງແຕງອ່ອນຈຶ່ງໄດ້ສື້ ຖາມ ກັບແມ່ໄວຍະກາວ່າ ພວກເຈົ້າເອົາລູກຂອງຂ້ອຍໄປໄວ້ທາງ ໃດ ຝ່າຍແມ່ໄວຍະກາຈຶ່ງບອກວ່າ ລູກຂອງເຈົ້າກໍແມ່ນແຂ້ນີ້ເດ, ນາງ ແຕງອ່ອນໄດ້ຮ້ອງໄຫ້ຮ່ຳໄຮທັງຫນ່ຽວອອນໃຫ້ແມ່ໄວຍະກາເອົາລູກ ມາໃຫ້ ນາງບອກວ່າແຂ້ນີ້ບໍ່ແມ່ນລູກຂອງນາງດອກ ລູກນາງ ເປັນ ຄົນພວກເຈົ້າເອົາໄປເຊື່ອງຢູ່ໃສ ຮີບໄປເອົາມາ ຖ້າພວກເຈົ້າຍັງ ຂືນອຳພາງຕໍ່ໄປຈະມີເລື່ອງບໍ່ດີເດີ, ສ່ວນແມ່ໄວຍະກາກໍທຳ ທ່າ ນາບຂູ່ ແລະ ດ່າປ້ອຍນາງຕ່າງໆ ນານາຫາວ່ານາງໄປເສບ ສົມ ກັບເຊື້ອຊາດແຂ້ດຽວກັນ ຈຶ່ງເກີດລູກມາເປັນແຂ້.

ເພື່ອຄວາມແນ່ໃຈນາງແຕງອ່ອນ ຈຶ່ງຖາມຝູງສາວໃຊ້ທັງຫຼາຍ ແຕ່ປະກົດວ່າຊູມສາວໃຊ້ໃຜໆກໍເປັນໃຈແມ່ໄວຍະກາຫມົດເພາະໄດ້

ຮັບເງິນຄຳຄ່າຈ້າງ ນາງທັງຕ້າ ໄດ້ເອົາແຂ້ນ້ອຍມອບໃຫ້ ນາງແຕງອ່ອນ ແຕ່ນາງກໍບໍ່ຫົວຊາ ນາງໄດ້ຫນີ້ຂຶ້ນເມືອສູ່ທໍ່ຜາສາດບໍ່ໄດ້ລຳໄລ ນຳແຂ້ນ້ອຍນັ້ນເລີຍ, ແຕ່ແມ່ໄວຍະກາ ແລະ ນາງທັງຕ້າພ້ອມສາວໃຊ້ທັງຫລາຍ ກໍພາກັນນຳເອົາແຂ້ນ້ອຍໄປລ້ຽງໄວ້ ເພື່ອຈະນຳຂຶ້ນເປັນຂໍ້ອ້າງຕໍ່ມະຫາວົງໃນໂອກາດຕໍ່ໄປ.

10- ບັ້ນນາງເທບລີລາ ລົງມາເອົາ ທ້າວ ເກດສຸລິຍົງຍານອອກຈາກຂຸມ

ບັດນີ້ຈັກກ່າວເຖິງ ນາງນ້ອຍເທບລີລາທີ່ຢູ່ບົນສະຫວັນນາງໄດ້ຫລຽວລົງມາເມືອງຄົນ ຈຶ່ງເຫັນກຸມມານນ້ອຍ ເຊິ່ງເປັນຫນໍ່ ໂພທິຍານ (ຜູ້ມີບຸນ) ຖືກເຂົາເອົາໃສ່ໄຫຝັງໄວ້ໃນຂຸມ, ເມື່ອນາງນ້ອຍເທບລີລາເຫັນເຫດການດັ່ງນັ້ນ ຈຶ່ງຟ້າວຮີບຮ້ອນລົງມາສູ່ເມືອງຄົນພ້ອມທັງນຳເອົາຜ້າແຜ່ນແພຖື ຕະຫລອດເຖິງເຄື່ອງກິນຕ່າງໆລວນແລ້ວແຕ່ແມ່ນອາຫານທິບທັງມວນ ລົງມາພ້ອມ; ເມື່ອນາງລົງ ມາເຖິງກໍປະກົດວ່າກຸມານຖືກຝັງໄວ້ແຄມຕົ້ນດອກເກດ ນາງຈຶ່ງ ເອົາສຽມຂຸດເອົາໄຫຂອງກຸ ມານອອກມາທັນທີ.

ເມື່ອຂຸດໄດ້ ແລະ ເອົາອອກຈາກໄຫແລ້ວ ນາງຈຶ່ງຄິດໃນໃຈວ່າ ກຸມານຍັງອ່ອນນ້ອຍ ນາງຈຶ່ງຟ້າວນິລະມິດນ້ຳນົມໃຫ້ ກຸ ມານໄດ້ດູດກິນດັ່ງກອນຂຽນວ່າ

ແຕ່ນັ້ນສີຄານແກ້ວ ຄະນິງຫວນຮີ ຮ່ຳ
ນາງກໍນິລະມິດນ້ຳ ນົມໃຫ້ດູດກິນ
ອັນວ່າບາຄານເຈົ້າ ສະເຫວີຍນົມແລ້ວອີ່ມ

ຜູ້ທີ່ເຫງົ້າ　　　　　　ບາທ້າວຊື່ນຊົມ

ນາງເທບລີລາ ໄດ້ຢູ່ເຝົ້າຮັກສາກຸ ມານດ້ວຍດີ ບໍ່ມີຄວາມທຸກ ໂສກສິ່ງໃດ ກຸ ມານພົບແຕ່ຄວາມສຸກສົດຊື່ນ, ນາງເທບລີລາ ຈິ່ງໄດ້ນິລະມິດຫໍຜາສາດປະດັບປະດາໄປດ້ວຍແກ້ວສີສັນຕ່າງໆ ອັນ ວິຈິດພິດສະດານ ມີຝູງເທວະດາ ແລະ ຝູງຜີທັງຫລາຍໃນຂົງ ເຂດນີ້ເຝົ້າຮັກສາ, ຕໍ່ມານາງເທບລີລາຈິ່ງໄດ້ປຶກສາກັບຝູງຜີທັງຫລາຍວ່າ ສົມຄວນຈະໃສ່ຊື່ກຸ ມານໂດຍໃຫ້ຖືກຕ້ອງສອດຄ່ອງກັບການກຳເນີດຂອງກຸ ມານ, ສະນັ້ນຈິ່ງໄດ້ໃສ່ຊື່ວ່າ ທ້າວເກດສຸລິວົງ ຫລືເກດສຸລິຍົງຍານ (ໂດຍຖືເອົາບ່ອນເຂົາເອົາໄຫໄປຝັງແຄມ ຕົ້ນດອກເກດ).

ເມື່ອໃສ່ຊື່ທ້າວເປັນເກດສຸລິວົງແລ້ວ ຝູງເທວະດາ ແລະຜີທັງຫລາຍກໍພ້ອມພາກັນມາສູ່ຂັວນອວຍພອນເປັນການຕ້ອນຮັບຊື່ໃຫມ່ ທີ່ເປັນມົງຄຸນຂອງທ້າວດັ່ງຄຳກອນຂຽນວ່າ

ມາເຢີຂັວນອ່ອນນ້ອຍ　　ຄ້າງບອກຄາຊຸມ
ຢ່າໄດ້ຫລົງໄຫລນຳ　　ແຕ່ຊຸມພາງຮ້າຍ
ມາເຢີຂັວນຫົວພ້ອມ　　ຂັວນຕາຄົ້ວກ່ອງ
ມີທັງຂອງທິບລົ້ນ　　ນາງແກ້ວແຕ່ງລົງ

ທຸກໆເຊົ້າຄ່ຳວັນຄືນ ຝູງຜີປ່າທັງຫລາຍກໍພາກັນມາປົກປັກ ຮັກສາທ້າວເກດສຸລິວົງ ພ້ອມທັງພາກັນເສບງັນດ້ວຍເຄື່ອງເສບ ອັນມ່ວນອອນຊອນ ທ້າວຢູທ່າງຢູ່ຢ່າງມີຄວາມສຸກກາຍສະບາຍໃຈ ບໍ່ມີໂພຍໄພສິ່ງໃດບຽດບຽນໄດ້.

11- ບັ້ນທ້າວມະຫາວົງກັບມາເມືອງ

ກ່າວເຖິງມະຫາວົງ ທີ່ໄດ້ນຳໄພ່ພົນມະຫິນໂຍທາອອກໄປຄ້ອງຊ້າງເຜືອກຢູ່ດອຍຄິດຊະກູດ ເມື່ອຄ້ອງຊ້າງໄດ້ແລ້ວ ກໍນຳໄພ່ ພົນກັບຄືນສູ່ເມືອງນະຄອນສີ, ການທີ່ມະຫາວົງໄປຄ້ອງຊ້າງເຜືອກໄດ້ເທື່ອນີ້ກໍເປັນຍ້ອນບຸນສົມພານຂອງທ້າວເກດສຸລິວົງທໍ່ແຕ່ວ່າ, ເວລານີ້ເວນກຳຂອງທ້າວຍັງນຳສະໜອງຢູ່, ການເດີນທາງກັບສູ່ ນະຄອນສີ ກໍໃຊ້ເວລາຫລາຍວັນຈິ່ງມາຮອດ ເມື່ອມາຮອດກໍຈັດແຈງແຫ່ຂະບວນຊ້າງເຜືອກເຂົ້າສູ່ສະໜາມ ເພື່ອປົກປັກຮັກສາໄວ້ເປັນຊ້າງມິ່ງເມືອງ.

ຝູງໄພ່ພົນທີ່ໄດ້ເດີນທາງຕິດຕາມມະຫາວົງໄປຄ້ອງຊ້າງ ນັ້ນເມື່ອມ້ຽນມັດເຄື່ອງຂອງຕ່າງໆຮຽບຮ້ອຍແລ້ວ ຜູ້ໃດກໍຟັ່ງຟ້າວ ກັບຄືນເມືອສູ່ຢ້າວສູ່ເຮືອນຂອງຕົນ ຢູ່ຮ່ວມລູກຮ່ວມເມຍດ້ວຍຄວາມສຸກກາຍສະບາຍໃຈ.

12- ບັ້ນແມ່ໄອຍະກາສັບສ່ວ່າ
ນາງແຕງອ່ອນຫລີ້ນຊູ້

ກ່າວເຖິງນາງທັງຫ້າກັບແມ່ໄອຍະກາ ພວກເຂົາພາກັນຂຶ້ນໄປຂາບທູນຕໍ່ມະຫາວົງແລ້ວໃສ່ຄວາມຕ່າງໆ ຕໍ່ນາງແຕງອ່ອນ ຫມາຍຈະໃຫ້ນາງເປັນຜູ້ຜິດຕໍ່ຮີດພໍຄອງເມຍ ຫວັງໃຫ້ນາງຕົກຕ່ຳ ພ້ອມທັງນຳເອົາແຂ້ນ້ອຍຂຶ້ນໄປໃຫ້ມະຫາວົງເບິ່ງ, ແມ່ໄອຍະກາ ແລະນາງທັງຫ້າ ທຳທ່າຖາມວ່າເປັນແນວໃດພະອົງເດີນປ່າໄປ ຄ້ອງຊ້າງກໍຍັງຢູ່ດີມີແຮງຢູ່ແດບໍ ! ມະຫາວົງຕອບວ່າເຮົາເອງກໍຢູ່ດີ ມີແຮງຢູ່ດອກ ແຕ່ວ່າຍັງທໍ່ເປັນຫ່ວງເຖິງພວກນາງທັງຫົກຢູ່ທາງພີ້.

ເມື່ອແມ່ໄອຍະກາຍັງຄົນຖ່ອຍໄດ້ໂອກາດຈຶ່ງກ່າວຟ້ອງ ມະຫາວົງວ່າ ພວກຂ້າຢູ່ທາງພີ້ກໍຢູ່ດີມີແຮງທຸກໆຄົນຢູ່ດອກ. ແຕ່ວ່າມີສິ່ງດຽວທີ່ເຫັນແຕກຕ່າງຄືລູກພະອົງເກີດມາເປັນແນວແຂ້, ຝ່າຍ ມະຫາວົງ ໄດ້ຟັງກໍຈຶ່ງແນມເບິ່ງແຂ້ນ້ອຍ ພ້ອມທັງກ່າວວ່າອັນນີ້ ແມ່ນເຊື້ອຊາດຂອງນາງຊຶ່ງດອກ, ແຕ່ແມ່ໄອຍະກາ ແລະນາງທັງ ຫ້າຢືນຢັນວ່າ ອັນນີ້ຕັ້ງຫາກແມ່ນລູກຂອງພະອົງທີ່ເກີດຈາກນາງ ແຕງອ່ອນແທ້ໆ. ເພື່ອຄວາມແນ່ໃຈມະຫາວົງ ຈຶ່ງແນມເບິ່ງອີກ ເທື່ອຫນຶ່ງ ພະອົງຈິນຕົກໃຈ ແລະ ອັບອາຍຕໍ່ຝູງສາວສະຫນົມສ່ອນສາວ

ສະໜົມຕ່າງກໍເວົ້າສຽດສີພະອົງວ່າ ໂອຍ! ລູກພະອົງຈົ່ງ ແມ່ນຜູ້ຈິບຜູ້ງາມເອົາແທ້ເອົາວ່າ ພໍປານເທວະດາອິນພົມດັ່ງບົດກອນຕອນໜຶ່ງກ່າວວ່າ

ເຂົາກໍແຊວງພ້ອມ ຖະແຫລງຄວາມສວຍສຽດ
ອັນວ່າລູກມະຫາລາດເຈົ້າ ງາມແຍ້ມເກົ່ງພະອິນ
ອັນວ່າຫົວຫາງພ້ອມ ຄໍຄາງສົບປາກ
ຄືດັ່ງນາກສະດຸງ ພະອິນເຈົ້າຫລໍ່ລົງ ພະເອີຍ

ມະຫາອົງໄດ້ແຕ່ນັ່ງຊືງຢູ່ບໍ່ປາກບໍ່ຕິງ ຝ່າຍແມ່ໄວຍະກາໄດ້ໂອກາດດີຈຶ່ງກ່າວຟ້ອງຕໍ່ມະຫາອົງວ່າ ນາງແຕງອ່ອນມັກລົງໄປ ຫລິ້ນໃນນ້ຳເປັນປະຈຳ ພວກຕົນຫາມກໍບໍ່ຟັງ, ກ່າວຫາວ່ານາງ ແຕງອ່ອນໄປເສບຊ້ອນກັບບັນດາແຂ້ໃນວັງນ້ຳ ຈຶ່ງອອກລູກມາເປັນ ແຂ້ຄືແນວນີ້; ມະຫາອົງໄດ້ຟັງຄຳສີບສໍ່ກໍເກີດມີຄວາມອົມຂຶ້ນທັນທີແລະເວົ້າວ່າຖ້າຫາກເປັນຄືດັ່ງພວກທ່ານທັງຫລາຍວ່າແທ້ ເຮົາຈະ ຟັນຄໍມັນໃຫ້ຕາຍຫລືບໍ່ກໍໄລ່ໜີຈາກເມືອງທັນທີ, ພວກເສນາອາ ມາດຕະຫລອດແສນເມືອງຜູ້ໃຫຍ່ທີ່ໄດ້ຮັບຄ່າຈ້າງສິນບົນຈາກແມ່ໄວ ຍະກາຕ່າງກໍພ້ອມກັນຂາບທູນມະຫາອົງເປັນສຽງດຽວກັນວ່າແມ່ນແທ້ງພະອົງເອີຍ ນາງແຕງອ່ອນລົງຫລິ້ນນ້ຳຊູມື້.

- ເພື່ອໃຫ້ໄດ້ຄວາມຈັກ ມະຫາອົງຈຶ່ງໃຊ້ໃຫ້ເສນາໄປນຳ ນາງແຕງອ່ອນມາຫາ ເພື່ອຈະໄດ້ໄຕ່ຖາມນາງເບິ່ງວ່າ ມີຄວາມຈິງປະການໃດ ຖ້າຫາກມີຈິງກໍຈະບໍ່ໄວ້ໜ້າແມ່ນແຕ່ນາທີດຽວ, ສ່ວນເສນາເມື່ອໄດ້ຮັບຄຳສັ່ງແລ້ວ ກໍຮີບໄປເຊີນນາງແຕງອ່ອນທັນທີ ແຕ່ນາງໄດ້ຖາມເສນາວ່າ ພະອົງໃຫ້ມາເຊີນເຮົາໄປພົບເລື່ອງໃດດ

ນໍ ເສນາໄດ້ແຕ່ຕອບແບບຂີ້ຕົວະວ່າບໍ່ຮູ້ນຳເພິ່ນ; ນາງແຕງ ອ່ອນກໍບໍ່ ອາດຂັດຂືນພະອົງໄດ້ ນາງຈຶ່ງຟ້າວຕົບແຕ່ງແປງກາຍປະ ດັບເອ້ຢ້ອງດ້ວຍເຄື່ອງອັນວິຈິດສວຍງາມ, ຈະຫາຍິງໃດເທົ່າ ທຽມນາງບໍ່ໄດ້ເລີຍ ເພື່ອຈະໄດ້ຂຶ້ນເຝົ້າມະຫາວົງຜູ້ເປັນຜົວດັ່ງບົດກອນຂຽນວ່າ

ແຕ່ນັ້ນນົງຮາມນ້ອຍ　　ມະເຫສີທົງເຄື່ອງ
ງາມເລີດລໍ້າ　　ໂສມໜ້າລູກອິນ
ກໍຫາກປື່ນອື່ນໜ້າ　　ມະນີສອດແສນສາຍ
ມາລາແຖວ　　ກ່ອງກອມຕະເກິງເກົ້າ
ຫລິງໃພແທ້　　ເທິງທະລັງລີເກິ່ງ
ນິ້ວແລບສ້ວຍ　　ປຸນໄລ້ແຜ່ນທອງ

ເມື່ອຕົບແຕ່ງແປງກາຍຮຽບຮ້ອຍແລ້ວ ນາງກໍລົງຈາກຫໍ ຜາສາດ ໂດຍມີນາງສະໜົມແຫ່ແຫນໄປນຳ, ເມື່ອໄປເຖິງນາງກໍຂຶ້ນຂາບໄຫວ້ມະຫາວົງຜູ້ເປັນຜົວ ພ້ອມທັງຖາມຂ່າວສຸກທຸກໃນ ການເດີນປ່າໄປຫາຄ້ອງຊ້າງຂອງພະອົງ, ຝ່າຍມະຫາວົງກໍໄດ້ ກ່າວຕອບນາງດ້ວຍຫົວໃຈທີ່ຄຶ່ງແຄ້ນວ່າ ເຮົາເດີນດົງເດີນໄພພ້ອມ ເສນາອາມາດທຸກຄົນກໍສຸກສະບາຍປອດໄພດີບໍ່ມີສິ່ງໃດຈະຂັດຂວາງດອກ, ແຕ່ນາງຢູ່ພີ້ເປັນແນວໃດບໍ່ເຈັບບໍ່ໄຂ້ບໍ ? ໄດ້ຍິນຈາກປາກຄຳຂອງແມ່ໄວຍະກາ ແລະ ນາງທັງຫ້າພ້ອມທັງໝູ່ເສນາວ່າ ເວລາເຮົາບໍ່ຢູ່ນັ້ນນາງລົງຫລິ້ນນ້ຳທຸກມື້ ແລະ ໄປເສບສົມກັບໝູ່ແຂ້ແມ່ນ ແທ້ບໍ? ນາງແຕງອ່ອນໄດ້ຕອບຄວາມຈິງໃຫ້ມະຫາວົງຮູ້ວ່າ ເລື່ອງ ທີ່ວ່າມານັ້ນເປັນການໃສ່ຮ້າຍຊຶ່ງດອກ ຄວາມຈິງແລ້ວນັບແຕ່ພະ ອົງ

ເດີນດົງເດີນປ່າ ຂ້ານ້ອຍຢູ່ນີ້ ໄດ້ປະຕິບັດຕໍ່ພົວຕາມຮີດຄອງປະ ເພນີອັນດີງາມ ແມ່ນແຕ່ເຂົ້າແປ້ງນ້ຳແດງກໍບໍ່ໄດ້ໃສ່ໄດ້ທາດັ່ງບົດກອນຂຽນໄວ້ວ່າ

ຂ້ານ້ອຍກຳນຳເຈົ້າ　　ເຫນືອຫົວເດີນເຖື່ອນ
ອັນວ່າຜ້າ　　ແດງນັ້ນກໍບໍ່ຖື
ນັບແຕ່ຄຳແດງເຫລື້ອມ　　ສີງາມຄວນຄ່າ
ບໍ່ເອົາມາຄາດເນື້ອ　　ພັນຫຸ້ມຫໍ່ຫົງ ດອກນາ
ອັນຫນຶ່ງຈູມຄຳຕ້າງ　　ມະນີແຫວນໄມ້ປິ່ນ
ກັບທັງຝູງຂີ້ຫມິ້ນ　　ບໍ່ມີໄດ້ໃສ່ຄີງ ພະເອີຍ

ນາງແຕງອ່ອນຂາບທູນມະຫາວົງວ່າ ການທີ່ນາງຕ້ອງ ຄາລຳແນວນີ້ກໍເພື່ອໃຫ້ການເດີນດົງເດີນປ່າຂອງມະຫາວົງປອດໄພ, ແຕ່ແມ່ໄວຍະກາຍິງຄົນຖ່ອຍຊ້າໄດ້ຍິນ ຈຶ່ງຂາບທູນມະຫາວົງຂຶ້ນວ່າພະອົງຢ່າເຊື່ອຄຳເວົ້າຂອງມັນເລີຍ ນາງຄົນນີ້ປາກຫວານໃຈສົ້ມ , ຄວາມຈິງແລ້ວມັນລັກໄປຫລິ້ນຊູ້ທຸກໆມື້ ໃຜຫ້າມກໍບໍ່ຟັງການ ແຕ່ງເນື້ອແຕ່ງກາຍຂອງມັນແຕ່ລະມື້ກໍນຸ່ງຫົ່ມແຕ່ເຄື່ອງສີແດງ ທາ ແປ້ງທາຂີ້ຫມິ້ນບໍ່ໄດ້ເຫືອດຄີງ, ຝ່າຍນາງແຕງອ່ອນກໍໄດ້ຖຽງແມ່ໄວຍະກາວ່າ ມຶງນັ້ນແຫລະເອົາລູກຂອງກູໄປຖິ້ມແລ້ວເອົາແຂມາ ປ່ຽນແທນ ມີທາສີ(ສາວໃຊ້) ບາງຄົນໄດ້ບອກກູວ່າ ມຶງເອົາຄຳມາ ຊື້ຈ້າງພວກເຂົາຊ່ອຍປິດອຳແມ່ນບໍ ? ແມ່ໄວຍະກາໄດ້ຍິນກໍມີ ອາການຕົກສະທ້ານຢ້ານກົວທັນທີ ແຕ່ມັນກໍສັງລວມສະຕິໄວ້ໄດ້ ແລ້ວນາບຂູ່ນາງແຕງອ່ອນຄືນ.

ເພື່ອໃຫ້ທັງສອງຢຸດເຊົາການໂຕ້ຖຽງກັນ ມະຫາວົງຈຶ່ງ ກ່າວ

ວ່າດຽວນີ້ໃຫ້ແຕ່ລະຝ່າຍໄປຊອກຫາຫລັກຖານ ພິຍານມາຢືນຢັນ ຕໍ່ເຮົາພະອົງ ຖ້າຫາກວ່າຝ່າຍໃດເປັນຜູ້ຜິດແທ້ ເຮົາຈະລົງໂທດທັນທີ, ຈາກນັ້ນ ບັນດາເສນາອາມາດທັງນ້ອຍ ແລະ ໃຫຍ່ກໍພາ ກັນມາຊຸມນຸມຕໍ່ໜ້າມະຫາວົງ ພະອົງຈຶ່ງຖາມເຖິງເລື່ອງທີ່ເກີດຂຶ້ນວ່າມີຈິງຫລືບໍ່ ປະກົດວ່າໃພງກໍພ້ອມທາງແມ່ໄວຍະກາໜົດ ຕະຫລອດຮອດແສນເມືອງຜູ້ໃຫຍ່ກໍຄືກັນ, ມະຫາວົງຈຶ່ງອວ່າຍໄປຖາມ ນາງຈັນ ແລະ ນາງຈິກນ້ອຍຜູ້ທີ່ໃກ້ຊິດນາງແຕງອ່ອນກວ່າໝູ່ໝົດ ປະກົດວ່ານາງທັງສອງກໍຕອບແບບແບ່ງຮັບແບ່ງສູ້ວ່າ ພວກຕົນມີແຕ່ ປູ່ບ່ອນນອນເທົ່ານັ້ນ, ກາງເວນກໍໄປປ່າ ໄປສວນເກັບດອກໄມ້ໂດຍສະເພາະມື້ທີ່ນາງແຕງອ່ອນກຳລູກນັ້ນ ພວກຕົນກໍໄປເກັບດອກ ໄມ້ຢູ່ສວນ ກັບຄືນມາຈຶ່ງເຫັນແຂ້ນ້ອຍຢູ່ຂ້າງນາງ ຈຶ່ງບໍ່ຮູ້ວ່າລູກຂອງນາງແຕງອ່ອນເປັນຄົນ ຫລືສັດ.

ອີງຕາມສຽງສ່ວນຫລາຍ ມະຫາວົງຈຶ່ງບໍ່ຍອມເຊື່ອຄຳ ບອກກ່າວຂອງນາງແຕງອ່ອນ ຊຶ່ງມີແຕ່ສຽງດຽວ ມະຫາວົງໄດ້ຂຽນ ຕີແລະ ຂັບໄລ່ນາງແຕງອ່ອນໃຫ້ໜີອອກຈາກເມືອງທັນທີ, ຄຽດວ່ານາງບໍ່ຟັງຄຳສັ່ງສອນກ່ອນທີ່ມະຫາວົງຈະອອກເດີນທາງ ກໍໄດ້ ສັ່ງສອນນາງແຕ່ຄວາມດີດັ່ງຄຳກອນຂຽນວ່າ

ຄາວເມື່ອ ກູຫາກອອກຈາກບ້ານ ດັ້ນດຸ່ງພະຄີລີ
ກູຫາກມີຄຳສອນ ຊູ້ອັ້ນພາຍພ້ຽນ
ສັ່ງບໍ່ເອົາຄຳຕ້ານ ກູພະອົງສອນສັ່ງ
ສັ່ງມາລັກລອບຫລິ້ນ ກະທຳຊູ້ໂລບພະຄຸນ ນີ້ເດ.

ນາງແຕງອ່ອນໄດ້ແຕ່ຈົ່ງວອນ ຂໍຄວາມເມດຕາສົງສານ ຈາກ

ມະຫາວົງຜູ້ເປັນຜົວວ່າ ຢ່າໄດ້ຂ້າໄດ້ຕີ ແລະ ຂັບໄລ່ໄສສົ່ງ ເປັນ
ຫຍັງພະອົງຈຶ່ງຟັງແຕ່ຄຳສັບສໍ່ຂອງແມ່ໄວຍະກາ ແລະ ນາງທັງຫາ
ສ່ວນເຫດຜົນຄວາມຈິງທີ່ຂ້ານ້ອຍຂາບທູນນັ້ນ ພະອົງຄືບໍ່ຮັບຟັງ ຖ້າ
ພະອົງໄລ່ໜີໄປກໍບໍ່ຮູ້ວ່າຈະໄປອາໃສເພິ່ງຜູ້ໃດ ພີ່ນ້ອງກໍບໍ່ມີ ດັ່ງ
ບົດກອນຂຽນວ່າ.

ແຕ່ນັ້ນນາງສັດຕີແກ້ວ ທູນອົງກອຍກ່າວ
ຂໍໃຫ້ພະບາດທ້າວ ເອົາລ້ຽງຕໍ່ໄປ
ສັງຊິໄລລານ້ອງ ກອງແພງດັ່ນດ່ຽວ
ດັ່ງວ່າພີ່ບໍ່ມີນ້ອງ ຕົວຂ້ອຍຜູ້ດຽວ

ນາງແຕງອ່ອນໄຫ້ກອດແຂ່ງພັນຂາ ທັງຍໍຕີນມະຫາວົງຂຶ້ນ ໃສ່
ຫົວ ແລະອ້ອນວອນຂໍໃຫ້ອີ່ດູສົງສານ, ພ້ອມທັງບອກວ່ານາງ ເປັນ
ເມຍທີ່ດີມີຄວາມສັດຊື່ບໍລິສຸດຕໍ່ຜົວ ບໍ່ເຄີຍຄິດໃນທາງອະກຸສົນ, ຖ້າ
ຫາກເປັນຄວາມຈິງຄືຄຳສັບສໍ່ແທ້ ສຸດແລ້ວແຕ່ພະອົງຈະລົງໂທດ.

ເຖິງແມ່ນນາງແຕງອ່ອນຈະຍົກເຫດຜົນ ແລະ ອ້ອນວອນແນວ
ໃດກໍຕາມ ມະຫາວົງກໍບໍ່ອະໄພໃຫ້ເລີຍ ມີແຕ່ໂກດເຄືອງນາງ ມະ
ຫາວົງໄດ້ເຕະຖີບນາງຈົນກິ້ງເກືອກໄປຕາມພື້ນຫ້ອງ ທັງຮ້າຍ ດ່າ
ຕ່າງໆນານາຕໍ່ນາງດັ່ງບົດກອນຂຽນໄວ້ວ່າ

ມຶງນີ້ເກເລຮ້າຍ ຍິງໂຖງຊາດຊົ່ວ
ມຶງຢ່າມາໜ່ຽວຂໍ້ ຂໍໄວ້ໂທດໂພຍ ທັ້ນຖອນ
ອັນວ່າ ບາຄານທ້າວ ຟັງຜ່າຍກື້ອໂກດ
ໂທດບໍ່ມີດົງ ບາທ້າວໂກດເຄັມ.

ແຕ່ນັ້ນ ຂຸນເຜືອຝັນຂຸນຄານທ້າວເຄັ່ງ ກັບທັງທ້າວໜຸ່ມຜູ້ ແລະ

ເສນາອື່ນໆ ທີ່ໄດ້ເດີນດົງເດີນປ່າຕິດຕາມມະຫາວົງໄປຄອງ ຊ້າງ ຕອນນັ້ນ, ເມື່ອໄດ້ຮູ້ຂ່າວວ່າ ມະຫາວົງຂັບຫນີຕີສົ່ງນາງແຕງອ່ອນ ພວກເຂົາກໍພາກັນເຂົ້າເຝົ້າມະຫາວົງທັນທີ; ທຸກໆຄົນໄດ້ພາ ກັນ ຮ້ອງຂໍ ນຳມະຫາວົງບໍ່ໃຫ້ຕີໃຫ້ຂ້ານາງແຕງອ່ອນ ຖ້າຫາກວ່ານາງ ມີຄວາມຜິດຄືດັ່ງກ່າວແທ້ ຂໍໃຫ້ພະອົງສົ່ງຄືນໄປໃຫ້ພະຍາກຸມພົນ ຜູ້ ເປັນພໍ່ຂອງນາງ ຂໍທານນຳຢ່າຕີຢ່າຂ້ານາງ, ພວກຂຸນເຟືອຝັ້ນໄດ້ ຍົກນິທານມາເປັນອຸທາຫອນໃຫ້ມະຫາວົງໄດ້ຄຶດວ່າ ຄາວນັ້ນມີ ໄຊ ຍະເຊດ ອອກທ່ຽວປ່າຍາມນັ້ນຜູ້ເປັນເມຍຊື່ສີສຸພັນແກ້ວຈຳປາທອງ ທ່ຽມພ່າງ ນາງກໍຖືພາມານເຖິງກຳຫນົດເດືອນອອກພໍດີ, ພວກເສ ນາອາມາດອິດສາບັງບຽດນາງ ເວລານາງເຈັບທ້ອງຈະອອກ ລູກ ເຂົາຈຶ່ງຫ້າມບໍ່ໃຫ້ໄຕ້ໄຟດັດຂາດ ເຂົາຈຶ່ງສວຍໂອກາດເອົາທ່ອນ ໄມ້ມາປ່ຽນແທນ ສ່ວນລູກຂອງນາງເຂົາກໍພາກັນເອົາໄປຝັງ; ໄຊ ຍະເຊດກັບມາເຖິງຟັງແຕ່ຄຳສັບສໍ່ ຈຶ່ງໄລ່ນາງຫນີພາຍລຸນມາເລີຍ ກິນແຫນງໃຈ.

ຝ່າຍມະຫາວົງ ເມື່ອໄດ້ຟັງຄຳຫ້າມ ແລະ ຄຳຮ້ອງຂໍຍໍມືພ້ອມ ຫົວນິທານທີ່ຍົກມາເປັນເຄື່ອງເຕືອນສະຕິ ກໍພໍປານວ່າເອົານ້ຳ ມັນ ໄປຖອກໃສ່ໄຟ ຍິ່ງລຸກຂຶ້ນຢ່າງໃຫຍ່, ຮ້າຍເປັ້ງໆວ່າ ຖ້າສູ ຈະ ເອົານາງລ້ຽງໄວ້ກູຈະຂ້າສູພ້ອມ ແລະ ຖ້າຈະນຳນາງສົ່ງຄືນ ຫາ ພະຍາກຸມພົນກໍບໍ່ໄດ້ ຈັກຫນ້ອຍພະຍາກຸມພົນຈະຍົກກຳລັງມາ ຕີ ເມືອງກູ, ມີທາງດຽວແຕ່ໄລ່ມັນຫນີ ຈະໄປຢູ່ໃສຕາຍໃສກໍ ຕາມ ຊ່າງ, ເມື່ອນາງແຕງອ່ອນຮ້ອງຂໍຍໍມືຫນ່ຽວອອນແນວໃດບໍ່ໄດ້ນາງ ຈຶ່ງລົງຈາກຜາສາດຂອງມະຫາວົງ ແລ້ວໄປສູ່ຜາສາດຂອງ ນາງ

ດ້ວຍຄວາມເຈັບຊ້ຳ ເລືອດອາບຍ້ອຍໄປທົ່ວຮ່າງຄີງ ໃນທີ່ສຸດນາງໄດ້ຕັດສິນໃຈວ່າ ໄປຕາຍທາງໜ້າດີກວ່າ.

ກ່ອນຈະອອກຈາກວັງໄປ ນາງໄດ້ເອີ້ນສັ່ງມະຫາວົງແລະແສນເມືອງ ພ້ອມທັງເສນາອາມາດ ຕະຫລອດແມ່ໄວຍະກາ ແລະນາງທັງຫ້າ ຂໍໃຫ້ຢູ່ດີເປັນສຸກ ຢ່າໄດ້ມີໂພຍໄພອັນຕະລາຍມາບຽດບຽນ ຂໍໃຫ້ແມ່ໄວຍະກາ ແລະ ນາງທັງຫ້າບົວລະບັດມະຫາວົງແທນນາງ ແລະ ໃຫ້ສາວສະໜົມບົວລະບັດນາງທັງຫ້າໃຫ້ດີ ຄືດັ່ງທີ່ພວກເຂົາໄດ້ບົວລະບັດຕໍ່ນາງ. ສ່ວນຂຸນເຝືອຝັ້ນຂຸນຄານ ແລະ ເສນາ ຈຳພວກທີ່ບໍ່ໄດ້ຮັບຄ່າຈ້າງລາງວັນ ຈາກແມ່ໄວຍະການັ້ນ ຜູ້ໃດກໍ່ ອາໄລອາວອນຄິດຮອດຄິດເຖິງນາງແຕງອ່ອນ, ຖືວ່າການຈາກ ໄປຂອງນາງໃນເທື່ອນີ້ ແມ່ນເປັນການສູນເສຍຄົນດີຢ່າງໜ້າ ເສຍດາຍທີ່ສຸດດັ່ງຄຳກອນຂຽນວ່າ

ນາງຈິ່ງທອຍຍັງຜ້າ	ກາສາເຊັດເລືອດ
ທັງເລົ່າເອີ້ນສັ່ງເຈົ້າ	ບຸນກວ້າງຄ່ອຍຢູ່ດີ
ຢ່າໄດ້ມີໂພຍຕ້ອງ	ອັນຕະລາຍບັງບຽດ
ຂໍໃຫ້ພະບາດໄທ້	ຍືນໝັ້ນໝື່ນປີ
ຄ່ອຍຢູ່ດີເຢີໄວຍະກາເຈົ້າ	ແສນເມືອງພ້ອມພໍ່
ກັບທັງສີແຈ່ມເຈົ້າ	ທັງຫ້າຄ່ອຍຢູ່ດີ

ພ້ອມດຽວກັນນີ້ນາງແຕງອ່ອນ ກໍໄດ້ສັ່ງລາທໍພາສາດລາຊະມົນທຽນ ຕະຫລອດເຖິງມຸ້ງມ່ານໝອນລາຍ ແລະ ສັດລ້ຽງຊ້າງ ມ້າ ແລະ ເຄື່ອງໃຊ້ສອຍຕ່າງໆ ຈົນໝົດຈົນສ້ຽງພາຍໃນວັງ ດັ່ງບົດກອນຕອນໜຶ່ງຂຽນວ່າ

ຄ່ອຍຢູ່ຄືເຢີຍອດຊໍ່ຟ້າ   ຜາສາດມຸງມະນີ
ທັງໃບສີ   ຫມາກກະດິງດັງກ້ອງ
ເຖິງເມື່ອຍາມແລງແລ້ວ   ລົມຕີເຟືອນຟາດ
ຝູງຫມູ່ແກ້ວກ່າຍລ້ອມ   ສຽງຫ້າວເສບພະອົງ
ບັດນີ້ພີ່ຈັກໄລລາໄວ້   ຊິໄປຕາຍຫນີຈາກ
ຫມາກກະດິງ ແລະ ແກ້ວ   ຍາເສົ້າຫມົ່ນຫມອງ

ສ່ວນວ່າຊ້າງເຜືອກມິ່ງເມືອງ ເມື່ອໄດ້ຟັງຄຳສັ່ງລາຂອງນາງ ກິນນ້ຳຕາໄຫລອາບງາ ອື່ດູສົງສານນາງຈະເດີນດົງເດີນປ່າຄົນດຽວ ຈະໄປທາງໃດກໍບໍ່ຮູ້ທິດຮູ້ທາງ, ຢາກຈະໄປນຳນາງເອົານາງ ຂີ່ຫລັງຕົນເອງ ເພື່ອວ່ານາງຈະບໍ່ທຸກບໍ່ໂສກດັ່ງບົດກອນຂຽນວ່າ

ໂອນໍມາຢາກໄປນຳແກ້ວ   ນາງງາມຜູ້ປະເສີດ ດນໍ
ແຂງວ່າຂາບໍ່ຄາໂສ້ອອງ   ຊິພາດັ້ນດຸ່ງເດີນ
ໂອນໍເຮັດໃດຈິ່ງຊິໄດ້ພານາງເຂົ້າ   ຄືລີເດີນດຸ່ງ
ເທື່ອນີ້ຕົນຫາກຄາເຊືອກໂສ້   ແສນຊິຮ້ອງກໍຫາກດາຍ
ຢາກໄປນຳແພງແສນແກ້ວ   ກັນລະຍາດັ້ນດຸ່ງ
ເອົາແຈ່ມເຈົ້າ   ແພງລ້ານຂີ່ຫລັງ

ນັບແຕ່ນາງແຕງອ່ອນໄດ້ຫນີອອກຈາກເມືອງໂກສີໄປເຮັດ ໃຫ້ບັນຍາກາດໃນທົ່ວເມືອງໂກສີມີຄວາມໂສກເສົ້າຫງ່ວມເຫງົານັບແຕ່ຊາວເມືອງຕະຫລອດຮອດສັດສິ່ງລ້ຽງ ກໍມີອາການຫງ່ວມເຫງົາ.

13- ບັນບາງແຕງອ່ອນເດີນທາງ ດ້ວຍຄວາມທຸກ

ກ່າວເຖິງນາງແຕງອ່ອນ ເດີນປ່າຜ່າພູຄົນດຽວດ້ວຍຄວາມລຳບາກຍາກແຄນ ອອກດົງນີ້ເຂົ້າສູ່ດົງໜ້າ ຟັງສຽງສັດປ່ານານາຊະນິດຮ່ຳຮ້ອງ, ບາງພ່ອງກໍໄດ້ກິ່ນຫອມຂອງດອກໄມ້ປ່າ ສົ່ງກິ່ນ ອັນຫອມຫວນມາໃສ່ເຮັດໃຫ້ນາງຍິ່ງທຸກໂສກເສົ້າຫງ່ວມເຫງົາຄົນດຽວເອົາແຕ່ນ້ຳຕາເປັນເພື່ອນຊີວິດ; ນາງຄິດເຖິງຄາວຢູ່ເມືອງໂກ ສີດອນມະຫາວົງ ຊ່າງມີແຕ່ຄວາມສຸກກາຍສະບາຍໃຈ, ບັດນີ້ໄດ້ມາທຸກຍາກລຳບາກຄົນດຽວ ບໍ່ຮູ້ວ່າເວນກຳອັນໃດນຳມາສະໜອງ.

ນາງແຕງອ່ອນເດີນທາງໄປໜ້າເລື້ອຍໆ ໂດຍບໍ່ມີຈຸດ ໝາຍປາຍທາງແຕ່ຢ່າງໃດ ບາງຄືນກໍນອນນຳຮ່ອມພູຮ່ອມຜາ, ແຕ່ຄືນນີ້ນາງນອນຢູ່ແຄມຝັ່ງແມ່ນ້ຳແຫ່ງໜຶ່ງ ໄດ້ຍິນສຽງກົບສຽງ ຂຽດຮ້ອງລະງົມໄປທົ່ວ, ຕອນອ້ອນແຈ້ງໄດ້ຍິນສຽງນົກໄສ້ຮ້ອງ ເປັນການເລົ່າລາງ ແລະ ສຽງຊະນີໂຫຍຫວນ ຊວນໃຫ້ນາງຄິດ ເຖິງອະດີດທີ່ຜ່ານມາ ນາງແຕງອ່ອນໄດ້ແຕ່ຮ້ອງໄຫ້ຮ່ຳໄຮຄົນດຽວ, ພໍແສງຕາເວນພົ້ນຈາກຂອບຟ້າ ນາງກໍລຸກຂຶ້ນຈາກການຫລັບ ນອນແລ້ວລົງໄປສ່ວຍໜ້າຢູ່ແຄມທ່ານ້ຳ.

14- ບັ້ນ ເທວະດາ ນິລະມິດສວນທິບ ຕ້ອນຮັບນາງແຕງອ່ອນ

ກ່າວເຖິງເທວະດາ ທີ່ຢູ່ຮັກສາປ່າດົງພົງໄພແຫ່ງນີ້ ເມື່ອໄດ້ຫລິງເຫັນນາງແຕງອ່ອນເດີນທາງຜູ້ດຽວ ນອນຕາມປ່າຕາມ ດົງເອົາສັດສາວາສິ່ງເປັນຫມູ່ເປັນເພື່ອນ ບໍ່ໄດ້ກິນເຂົ້າປາອາຫານ , ເທວະດາກໍອົດສົງສານບໍ່ໄດ້ ຈຶ່ງຣີບມາຊ່ວຍເຫລືອນາງນິລະ ມິດເຄື່ອງກິນຕ່າງໆໃຫ້ບັງເກີດຂຶ້ນດັ່ງບົດກອນຂຽນວ່າ

ພະກໍນິລະມິດເຂົ້າ ສາລີຕົ້ນປ່າ
ຕັ້ງວ່າສາລະພັດພ້ອມ ມີແທ້ຊູ່ອັນ
ມີທັງແຕງຈິງພ້ອມ ແຕງໂມເດຍລະດາດ
ມີທັງຫມາກນັດພ້ອມ ນາວກ້ຽງເຫລືອຫວານ
ມີທັງຜູຜາງສົ້ມ ຍົມແງວອະງຸ່ນຫລອດ
ມັງຄຸດແຂວນຂຽບຫ້ອຍ ຣົມກ້ານກອງທະລາ
ມີທັງຊຸມພູຫວ້າ ດຳດວນພີພ່ວນ
ກັບທັງກ້ວຍຕ່າງເຊື້ອ ເຄືອຫ້ອຍເຫື່ມເຫລືອງ

ນອກຈາກນິລະມິດເຄື່ອງກິນດັ່ງກ່າວແລ້ວ ເທວະດາກໍໄດ້ນິລະມິດສວນອາດອຸທິຍານ ເຕັມໄປດ້ວຍດອກໄມ້ປ່ານານາຊະນິດຢູ່ທ່າງ

ນາງແຕງອ່ອນທ່ຽວຊົມໃຫ້ເພີດເພີນທີ່ວໃຈ, ແຕ່ເຖິງປານນັ້ນນາງກໍຍັງລືມພາບພົດໃນອະດີດຂອງນາງບໍ່ໄດ້ ນາງຄິດເຖິງຄາວຢູ່ ນະຄອນໂກສີ້ຂຶ້ນມາຍາມໃດ ນາງຮູ້ສຶກຕໍ່າຄອຍນ້ອຍໃຈໃນຕົນເອງ, ແຕ່ນາງກໍອົດທ່ຽວຊົມດອກໄມ້ໃຫ້ມັນຫາຍເຫງົາ ບາງເທື່ອກໍ ທ້ວງດອກໄມ້ວ່າ ໂອດອກນີ້ງາມຫລາຍເດນໍ ດັ່ງບົດກອນຂຽນວ່າ

ນາງກໍຊົມດອກໄມ້	ກ້ານເກດຊາຍເຫີນ
ມັນຫາກເປັນກໍດົກ	ດອກແຊມນຳກ້ານ
ນາງຄານທ້ວງ	ຊາຍເຫີນຫອມດອກ
ບາງພ່ອງແຫລ້	ຂາວພ້ອມພ່ອງເຫລືອງ

ຈາກນັ້ນນາງແຕງອ່ອນກໍມຸ່ງໜ້າເດີນທາງຕໍ່ໄປ ດ້ວຍ ຄວາມທຸລະກັນດານ ມີທັງພູຜາປ່າໄມ້ ຫ້ວຍຮ່ອງຫຸບເຫວກີດຂວາງ ແຕ່ນາງກໍຄ່ອຍອິດຄ່ອຍເຍື້ອນໄປທັງພ່ອງຮ້ອງໄຫ້ຮ່ຳໄຮ່, ນາງ ເດີນໄປເຖິງຜາຫລວງໃຫ່ຍແຫ່ງໜຶ່ງ ບໍ່ສາມາດຈະຜ່ານຜ່າໄປໄດ້ເລີຍ ນາງຈຶ່ງໄຫວ້ວອນເຖິງອິນພົມຍົມມະນາໃຫ້ມາຊົດຊ່ວຍ; ປະກົດວ່າຄຳໄຫວ້ວອນຂອງນາງຮອນໄປເຖິງພະອິນທັນທີ ພະອິນຈຶ່ງຫລິງລົງເບິ່ງເຫັນນາງແຕງອ່ອນພວມໄດ້ຮັບຄວາມເດືອດຮ້ອນ ຍ້ອນບໍ່ ສາມາດຂ້າມຜ່ານຜາຫລວງໄດ້, ພະອິນຈຶ່ງນິລະມິດເປັນຍອຍໄຮຕາງຂັ້ນໃດໃຫ້ນາງໄຕ່ຂຶ້ນ ເພື່ອຂ້າມຜ່ານຜາຫລວງດັ່ງກ່າວ.

ເມື່ອຂ້າມຜາຫລວງໄດ້ແລ້ວ ນາງກໍສືບຕໍ່ເດີນທາງ ຄາວ ນີ້ນາງໄດ້ພົ້ຮອຍຊ້າງ ນາງຈຶ່ງຍ່າງໄປຕາມຮອຍຊ້າງ ເລີຍໄປພົ້ແມ່ນ້ຳໃຫ່ຍສາຍໜຶ່ງ ເຊິ່ງແມ່ນເຂດແດນຂອງພະຍາກຸມພົນຜູ້ເປັນ ພໍ່ຂອງນາງ, ເມື່ອຮູ້ວ່າໄດ້ຕົກມາເຖິງເຂດແດນຂອງຕົນແລ້ວ ນາງ

ຈຶ່ງຮ້ອງຫາອ້າຍຂອງນາງ ຊື່ວ່າ ກຸມພາໃຫ້ມາຊ່ວຍນາງດັ່ງ ບົດກອນຂຽນວ່າ

ຄ້ອນວ່ານາງຮ່ຳແລ້ວ ຖະແຫລງຄວາມເອີ້ນກ່າວ

ນາງກໍເອີ້ນຈ້ອຍໆ ຫາອ້າຍພີ່ຊາຍ

ນາງຖ້ອນ ກຸມພາພະພີ່ ກູເອີຍ

ເຈົ້າຈົ່ງມາຊ່ວຍນ້ອງ ດຽວນີ້ຫ່ຽວເປືອງ ແດ່ຖ້ອນ

ຝ່າຍກຸມພາໄດ້ຍິນສຽງເອີ້ນ ກໍຄິດແປກໃຈບໍ່ຮູ້ວ່າໃຜມາ ເອີ້ນຫາຕົນ ແຕ່ສຽງເອີ້ນແມ່ນສຽງຄົນ ຈຶ່ງຟ້າວຂຶ້ນຈາກພື້ນນ້ຳມາເບິ່ງ ຈຶ່ງໄດ້ພົບນາງແຕງອ່ອນຜູ້ເປັນນ້ອງສາວຢືນຮ້ອງໄຫ້ຮ່ຳໄຮຢູ່ ຄົນດຽວ, ກຸມພາຈຶ່ງໄຕ່ຖາມນາງວ່າ ເປັນແນວໃດນ້ອງຈຶ່ງມາ ຄົນດຽວບ່າວໄພ່ເສນາອາມາດເດ ຄືບໍ່ແຫ່ແຫນແພນກັ້ງມານຳ, ແລະພະຍາເຂີຍເດຄືບໍ່ມານຳນ້ອງ ຂ່າວວ່າທ່ານເປັນຜູ້ປ່ຽນລົ້ມໄປດ້ວຍຄູນມະຫາອັນດີ ຫລືວ່ານ້ອງຫາກເຮັດຜິດຮີດຜົວຄອງເມຍ ແລ້ວຖືກຂັບໄລ່ຫນີມາຊັ້ນບໍ ດັ່ງບົດກອນກ່າວໄວ້ວ່າ

ຕານກະບິນເບື້ອງ ບູຮົມເຖົ້າເກົ່າ

ຫລືວ່າເຈົ້າຫາກຜິດເຜົ່າຜູ້ ຜົວແກ້ວບໍ່ແມ່ນຄອງ ນ້ອງເອີຍ

ນາງແຕງອ່ອນຈຶ່ງໄດ້ເລົ່າເຫດການ ແຕ່ຕົ້ນຈົນກຸມພາຜູ້ ເປັນອ້າຍຟັງວ່າ ມະຫາວົງໄປຄ້ອງຊ້າງກັບມາຖືກແມ່ໄວຍະກາ ແລະນາງທັງຫາສິບສົ່ມະຫາວົງຈຶ່ງຂັບຫນີຕີສົ່ງນ້ອງພັດເພພະເນຈອນມາຜູ້ດຽວຄືແນວນີ້, ເມື່ອກຸມພາໄດ້ຟັງກໍມີຄວາມຄຽດແຄ້ນຫາອົນປຽບບໍ່ໄດ້ ແຕ່ຖ້າຈະໄປແກ້ ແຄ້ນຕາງນ້ອງ ກໍຮູ້ວ່າວິຊາອາຄົມຂອງຕົນບໍ່ເກັ່ງກ້າ, ຈຶ່ງເວົ້າກັບນາງແຕງອ່ອນຜູ້ເປັນນ້ອງວ່າ ເລື່ອງ ທັງ

ໝົດນ້ອງຢ່າເສຍໃຈ ອ້າຍຈະພານ້ອງເດີນປ່າໄປຊອກຮຽນວິ ຊາ ອາຄົມອັນເກັ່ງກ້າຈາກພະລືສີ ແລ້ວຈຶ່ງກັບໄປແກ້ແຄ້ນພວກເຂົາ , ນາງແຕງອ່ອນກໍເຫັນດີນຳຄວາມເວົ້າຂອງອ້າຍທຸກປະການພ້ອມກັນ ນີ້ນາງກໍໄດ້ຖາມຂ່າວເຖິງພໍ່ແມ່ວ່າເປັນແນວໃດ ກຸມພາໄດ້ບອກກັບ ນາງວ່າ ພໍ່ແມ່ໄດ້ເສຍຊີວິດໝົດແລ້ວ ດຽວນີ້ຍັງແຕ່ນ້ອງຊາຍ ຜູ້ ດຽວຄື ກິລະກັນ ເປັນຜູ້ປົກຄອງບ້ານເມືອງແທນອ້າຍ.

ທັງສອງໄດ້ປຶກສາຫາລືກັນວ່າ ເພື່ອເປັນການແກ້ແຄ້ນໃຫ້ ທັນ ສົມໃຈແທ້ ເຮົາຄວນໃຫ້ນ້ອງຊາຍກິລະກັນນຳເອົາພິນທານໄປ ພັກ ຖ້າກິນຊາວເມືອງໂກສີ ເວລາເຂົາລົງອາບນ້ຳ ໂດຍບໍ່ເລືອກໜ້າ ໃຜໝົດ ດັ່ງບົດກອນຂຽນວ່າ

ຄວນທີ່ໃຊ້ແກ່ນໄທ ນ້ອຍອ່ອນກິລະກັນ
ເອົາພິນທານ ລ່ວງລົງຕາມນ້ຳ
ໄປພັກຖ້າ ກິນຄົນລົງທ່າ
ຍາມເຂົາລົງອາບນ້ຳ ກິນສ້ຽງຢ່າຫລໍ ຊອບແລ້ວ.

ເມື່ອຕົກລົງກັນແລ້ວ ກໍຮີບເອີ້ນເອົາກິລະກັນຜູ້ເປັນນ້ອງມາຫາ ດ່ວນ, ຝ່າຍກິລະກັນ ເມື່ອໄດ້ຍິນສຽງເອີ້ນຂອງກຸມພາ ກໍຟ້າວ ຂຶ້ນ ມາຫາ ແລະ ໄດ້ເຫັນນາງແຕງອ່ອນຜູ້ເປັນເອື້ອຍຢູ່ຮ່ວມກັບກຸມພາ. ກິລະກັນຈຶ່ງຖາມເອື້ອຍວ່າ ອ້າຍເອີຍຄືບໍ່ມານຳ ນາງແຕງອ່ອນຈຶ່ງ ເລົ່າເຫດການທັງໝົດຊູ່ກິລະກັນຟັງ ພ້ອມທັງຮ້ອງຂໍໃຫ້ກິລະກັນໄປ ປາບເມືອງໂກສີໃຫ້; ສ່ວນກຸມພາກໍອ້ອນວອນກິລະກັນໃຫ້ເອົາ ໃຈ ໃສ່ຊ່ວຍນຳເອົາພິນທານອອກເດີນທາງໄປດັກຢູ່ທ່ານ້ຳແຫ່ງ ເມືອງ ໂກສີ ຖ້າຜູ້ໃດລົງອາບນ້ຳໃຫ້ສວາບກິນໂລດເດີ, ສຳຫລັບ ອ້າຍ

ຂອງຈະພານາງແຕງອ່ອນເດີນທາງໄປຊອກຮຽນວິຊາສາຕະສິນນຳ ພະລືສີ.

ສິ່ງກໍລະກັນເປັນທີ່ຮຽບຮ້ອຍແລ້ວ ກຸມພາ ແລະນາງແຕງອ່ອນ ກໍພາກັນອອກເດີນທາງໄປຊອກຫາຮຽນວິຊາອາຄົມ, ທັງສອງ ດັ້ນດົງບຸປ່າຮ່ອມຫ້ວຍພູຜາ ຈົນໄປເຖິງຜາແຫ່ງໜຶ່ງທີ່ມີລວງສູງສຸດຊື່ອສາຍຕາ ຢູ່ແຄມຜາສູງແຫ່ງນີ້ມີແມ່ນ້ຳທັງຫ້າໄຫລໂຮມກັນດັ່ງ ບົດກອນຂຽນວ່າ

ຜໍ່ດູຜາແຜ່ຕັ້ງ ຫາດໃຫ່ຍອິນແປງ
ປາຍຊັນສູງ ສອດບົນແປະຟ້າ
ເປັນຜາດາວ ດອຍສູງສຸດຂະໜາດ
ທີ່ນັ້ນມີແມ່ນ້ຳ ທັງຫ້າລ່ວງລົງ

ທັງສອງເຂົ້າໄປໃກ້ງຜາ ແນມໄປອ້ອມຮອບເຫັນພູເລັກພູນ້ອຍອ້ອມເປັນກຳແພງ ເຫັນທັງຜາເວີນຄຳລຽງລາຍ ເຫັນໜ່ວຍແກ້ວຫລາກສີ ເຫັນບັນລັງແກ້ວ ເຊິ່ງປະກອບດ້ວຍແກ້ວເຈັດປະການ , ທັງສອງຈຶ່ງພາກັນພັກເຊົາຢູ່ຖ້ຳແຫ່ງນີ້ ທັງພ່ອງເພີດເພີນໄປ ກັບຄວາມສວຍງາມຂອງທຳມະຊາດນານາປະການດັ່ງບົດກອນຂຽນວ່າ

ອັນໜຶ່ງເຫັນໜ່ວຍແກ້ວ ໃສສ່ອງພະຄູຫາ
ມີບັນລັງ ແທ່ນມະນີດວງແກ້ວ
ຕັ້ງຫາກໂຮງງເຫລື້ອມ ຫລາຍດາວດວງສ່ອງ
ສອງແຈ່ມເຈົ້າ ເຊົາຫັ້ນຊື່ນຊົມ ເຈົ້າເອີຍ

. / .

15- ບັ້ນທ້າວ ກໍລະກັບນໍາລີພົບ ໄປທໍາລາຍເມືອງໂກສີ

ທ້າວກໍລະກັນ (ແຂ້) ຜູ້ເປັນນ້ອງຊາຍຂອງທ້າວກຸມພາ ແລະ ນາງແຕງອ່ອນ ໄດ້ນໍາເອົາພົນແຂ້ນັບເປັນຫລາຍພັນໂຕ ມຸ່ງ ໜ້າ ສູ່ທ່ານ້ຳເມືອງໂກສີ, ເມື່ອໄປເຖິງກໍໄດ້ຈັດແບ່ງ ປັນໜ້າທີ່ກັນໃຫ້ ໄປປະຈໍາແຕ່ລະທ່ານ້ຳໃຫ້ຄົບຊູ່ບ່ອນ ຖ້າຊາວເມືອງລົງມາອາບນ້ຳ ໃຫ້ກິນໂລດ, ຈະເປັນໜຸ່ມນ້ອຍເຖົ້າແກ່ສາວຣາມ ອັນໃດກໍບໍ່ເລືອກ ປະຊາຊົນຊາວເມືອງໂກສີຕາຍຍ້ອນຖືກແຂ້ກິນ ບໍ່ຂາດແຕ່ລະມື້ ລະ ຍາມນັບເປັນຈໍານວນຫລາຍໝື່ນຫລາຍແສນຄົນ, ເຫດການ ດັ່ງ ກ່າວເຮັດໃຫ້ຊາວເມືອງພົບກັບເຄາະກໍາອັນຮ້າຍແຮງ ຈຶ່ງພາ ກັນ ຂຶ້ນໄປຂາບທູນຕໍ່ມະຫາວົງ ຝ່າຍມະຫາວົງໄດ້ຮັບຟັງກໍຮູ້ແກ່ໃຈດີວ່າ ມັນແມ່ນຍາດວົງຂອງນາງແຕງອ່ອນ ມາທໍາລາຍບ້ານເມືອງ ຂອງ ຕົນ.

ມະຫາວົງນັ່ງຄຶດຢູ່ໃນໃຈວ່າ ຈະຫາວິທີແກ້ໄຂໄດ້ແນວ ໃດ ເພາະມັນແມ່ນສິ່ງຄານແຂ້ມາທາງພື້ນນ້ຳ ຈຶ່ງຍາກແກ່ການປ້ອງກັນ ຮັກສາ, ປະຊາຊົນຊາວເມືອງໂກສີໃພ່ໆກໍພາກັນເວົ້າວ່າ ນັບ ແຕ່ ນາງແຕງອ່ອນໄດ້ໜີອອກຈາກເມືອງໄປ ປະກົດວ່າເມືອງໂກສີ

ບໍ່ຊື່ນ ບໍ່ບານຄືເກົ່າແລະມັກເກີດເຄາະເຂັນເວນຮ້າຍເລື້ອຍໆ ດັ່ງ ບົດກອນຂຽນວ່າ

ຝູງເຮືອນໃກ້ ແຄມຊິນແຂ້ຄາບ ໄປແລ້ວ
ຝູງຂ້າບໍ່ຫ່ອນຮູ້ ສີນນີ້ຮ່າວມີ
ນັບແຕ່ແພງສີແກ້ວ ກັນລະຍາຫນີຈາກ
ເມືອງນີ້ງກວ້າງ ສູນເສົ້າບໍ່ເຮືອງ

ເພື່ອປ້ອງກັນເຫດຮ້າຍດັ່ງກ່າວ ມະຫາວົງຈຶ່ງສັ່ງໃຫ້ ຊາວເມືອງເຮັດຮົ້ວກັ້ນວົງນ້ຳໄວ້ ບໍ່ໃຫ້ແຂ້ເຂົ້າໄປທ່ານ້ຳໄດ້, ຝ່າຍ ກໍລະກັນເຫັນວ່າ ໄດ້ແກ້ແຄ້ນແທນເອື້ອຍໄດ້ຫລາຍສົມຄວນແລ້ວ ກໍຈຶ່ງນຳພົນຈຳນວນຫນຶ່ງກັບຄືນ, ໄດ້ແບ່ງໄວ້ປະຈຳທ່ານ້ຳເມືອງ ໂກສີແຕ່ພຽງຮ້ອຍຫນຶ່ງ ແລະ ສັ່ງໃຫ້ສືບຕໍ່ກິນຄົນອີກ; ດັ່ງນັ້ນມາ ເຖິງປັດຈຸບັນນີ້ ແຂ້ຈຶ່ງໄດ້ກິນຄົນສືບໆມາ.

. / .

16- ບັ້ນກຸມພາ ແລະນາງແຕງອ່ອນ ຕາຍຢູ່ກາງປ່າ

ບັດນີ້ກ່າວເຖິງທ້າວກຸມພາ ແລະ ນາງແຕງອ່ອນທີ່ໄດ້ພາ ກັນພັກພາອາໄສຢູ່ໃນຖ້ຳແຫ່ງນັ້ນ ນັບເປັນເວລາໄດ້ຫລາຍວັນທັງສອງຈຶ່ງລົງຈາກຖ້ຳ ແລ້ວເລາະລຽບໄປຕາມບໍລິເວນຕ່າງໆ. ທັງສອງໄດ້ເຫັນສະພັງ (ໜອງສະໃຫ່ຍ) ເຕັມໄປດ້ວຍນ້ຳ ມີຝູງນົກ ນານາຊະນິດບິນສອດແສ້ວສວ່ານສິນໄປມາ ບາງໂຕກໍຈັບຕາມງ່າ ໄມ້ສິ່ງສຽງຮ້ອງອັນອອນຊອນສະອອນໃຈ.

ຈາກນັ້ນທັງສອງຈຶ່ງພາກັນອອກເດີນທາງຕໍ່ໄປເປັນເວລາຫຼາຍວັນຈຶ່ງໄປເຖິງດົງຫວາຍດົງແຍ້ດົງບຸ່ມ ເຊິ່ງຖືວ່າແມ່ນດົງໜານອັນໃຫ່ຍ ແລະ ກວ້າງໄກ. ທ້າວກຸມພາໄດ້ເວົ້າກັບນາງແຕງອ່ອນ ວ່າດົງໜານແຫ່ງນີ້ ແສນທຸລະກັນດານ ນ້ອງບໍ່ສາມາດຈະຍ່າງ ຜ່ານຂ້າມໄດ້ດອກ ນ້ອງຈຶ່ງຂຶ້ນຂີ່ຫລັງອ້າຍ ດັ່ງບົດກອນຂຽນວ່າ

ອັນວ່າກຸມພາທ້າວ ຈາມານາງນ້ອງນາດ
ສີສະອາດຂຶ້ນ ໄວພ້າວຂີ່ຫລັງ ພີ້ຖອມ
ພີ່ຈັກພານ້ອງດັ້ນ ທາງໃຫ່ຍຫວາຍຫລີມ

ເອົາຕີນພາຍ ຜ່າພູຫນາມແຍ້
ກອຍແຮງຂ້ວາມ ເຂົາຂຽວຍອດບຸ່ນ
ມັນຈັກໄປຊອດກໍ້າ ແດນຫ້ອງແຫ່ງໃດ ບໍ່ຮູ້

ນາງແຕງອ່ອນຂຶ້ນຂີ່ຫລັງອ້າຍເປັນທີ່ຮຽບຮ້ອຍແລ້ວ ກຸມພາ ຜູ້ເປັນອ້າຍຈຶ່ງພານ້ອງບຸຫມື້ນປ່າຫນາມຫວາຍ ຫນາມແຍ້ຫນາມ ບຸ່ນ ໄປດ້ວຍຄວາມຍາກເຍື້ອນ, ຫນາມປັກຕາມໂຕທ້າວກຸມພາ ແລະ ນາງແຕງອ່ອນບາດສ້ອຍໄປຫມົດ ໂດຍສະເພາະກຸມພາ ທັງ ເຈັ່ຍນ້ອງທັງພາບຸພາຫມື້ນ ເຮັດໃຫ້ກຸມພາຫມົດເຫື່ອແຮງ ຈົນຖືຄົງ ໄຂ້ ຈຶ່ງໄດ້ພານ້ອງພັກນອນເອົາແຮງ; ມື້ຕໍ່ມາກໍສືບຕໍ່ບຸຫນາມອີກ ໃນທີ່ສຸດກຸມພາກໍບໍ່ສາມາດຈະເຄື່ອນໄຫວໄດ້ ຈຶ່ງບອກກັບນ້ອງສາວ ວ່າ ອ້າຍໄປບໍ່ໄດ້ອີກແລ້ວ ອ້າຍຈະຕາຍຢູ່ບ່ອນນີ້, ຂໍໃຫ້ນ້ອງສືບຕໍ່ເດີນທາງໄປຜູ້ດຽວ ຢ່າເສົ້າໂສກໂສການຳອ້າຍເດີ ໃຫ້ນ້ອງເດີນ ໄປຈົນພົ້ນພະລີສີແລ້ວ ຂໍບວດເປັນຊີ (ແມ່ຂາວ) ຢູ່ນຳເພີ່ນ, ອ້າຍເອງແມ່ນຫມົດຊີວິດທີ່ນີ້ແຫລະ ເວົ້າແລ້ວທ້າວກຸມພາກໍສິ້ນຊີວິດທັນທີ.

ນາງແຕງອ່ອນໄດ້ຮ້ອງໄຫ້ຮ່ຳໄຮນຳອ້າຍ ທັງຈື່ມທັງວ່າຕ່າງໆ ນານາ ເມື່ອຂາດອ້າຍແລ້ວ ກໍບໍ່ສາມາດຈະໄປຄົນດຽວໄດ້ ຈຶ່ງ ຂໍຕາຍຢູ່ກັບອ້າຍດີກວ່າ, ນາງສະລົບໄປມາຫລາຍຄັ້ງຫລາຍຄາວໃນທີ່ສຸດ ນາງກໍສິ້ນຊີວິດໄປກັບກຸມພາ ສົມກັບຄວາມຕັ້ງໃຈຂອງນາງ.

17- ບັ້ນທ້າວທັດສະໄນລົງໂຜດ ທ້າວກຸມພາແລະນາງແຕງອ່ອນ

ກ່າວເຖິງເທວະດາທີ່ມີຊື່ວ່າທັດສະໄນ ອາໃສຢູ່ເທິງສະ ຫວັນ ທ້າວທັດສະໄນເປັນນ້ອງຊາຍຫລ້າຂອງພະອິນ, ຄາວນັ້ນກົງ ຈັກ ໜ້າແວ່ນແກ້ວຂອງພະອິນກະດ້າງ ເຮັດໃຫ້ພະອິນຕົກໃຈບໍ່ຮູ້ວ່າບຸນ ຂອງຜູ້ໃດກ້າແຂງເຖິງພຽງນີ້; ພະອິນຈຶ່ງສັ່ງໃຫ້ທ້າວທັດສະໄນ ຜູ້ ເປັນນ້ອງຮິບລົງສຳຫລວດພື້ນໂລກ ພ້ອມທັງໃຫ້ນຳເອົານ້ຳ ເຕົ້າ ແກ້ວລົງໄປພ້ອມ, ຖ້າພົບສະພາບແນວໃດ ໃຫ້ເອົານ້ຳເຕົ້າ ແກ້ວ ທົດລົງທັນທີ.

ທ້າວທັດສະໄນ ເມື່ອໄດ້ຮັບຄຳສັ່ງ ຈາກພະອິນຜູ້ເປັນ ອ້າຍ ແລ້ວກໍຟ້າວເຫາະລົງມາຈາກສະຫວັນ, ເມື່ອລົງມາເຖິງເມືອງ ຄົນ ກໍສອດສ່ອງສາຍຕາໄປກວດເບິ່ງຫລາຍບ່ອນ ແຕ່ບໍ່ປະກົດເຫັນ ສິ່ງ ໃດ. ທ້າວທັດສະໄນຈຶ່ງແນມເບິ່ງທາງເຂດປ່າຫິມະພານ ຈຶ່ງເຫັນ ເປັນຮູບຄົນສອງຄົນ ທ້າວທັດສະໄນຈຶ່ງຮິບຟ້າວໄປສູ່ປ່າຫິມະ ພານ ທັນທີ ດັ່ງບົດກອນຂຽນໄວ້ວ່າ

ຊັດພະເນດປ້ຽມ   ທັນທີໄພຂວາງ
ກໍຈິງເຫັນເປັນເງົາ   ສ່ອງໃສເຍືອງແຈ້ງ

ໃນຫິນຫ້ອງ　　　　ທີ່ມະພານໄພຍະມາດ
ກໍຈຶ່ງເຫັນຮູບເຈົ້າ　　　　ສອງຄ້າງແຕ່ໄພ
ແຕ່ນັ້ນທັດສະໄນທ້າວ　　　　ທະຍານໄປໂດຍຣິບ
ຜັນຖີບເຂົ້າ　　　　ເຖິງເຈົ້າບໍ່ນານ

ທ້າວທັດສະໄນໄດ້ເຫັນ ກໍຄຶດແປກໃຈ ເພາະວ່າຜູ້ໜຶ່ງ ເປັນສັດ ອີກຜູ້ໜຶ່ງເປັນຄົນ ແຕ່ທ້າວທັດສະໄນກໍຄຶດໄດ້ວ່າ ຜູ້ເປັນ ສັດຕ້ອງແມ່ນອ້າຍ ສ່ວນນາງຜູ້ເປັນຄົນນັ້ນແມ່ນນ້ອງ ແລະ ເປັນ ແມ່ຂອງໂພທິຍານ (ຜູ້ມີບຸນພະພຸດທະເຈົ້າ) ທີ່ນາງເທບລີລາໄດ້ເອົາລ້ຽງໄວ້ (ຄືທ້າວເກດສຸລີວົງນັ້ນເອງ) ທ້າວທັດສະໄນຈຶ່ງເອົານ້ຳທິບແກ້ວທິດສິງນາງໃຫ້ຄືນມາ ແລະ ງາມລື່ນເກົ່າເຖິງສາມເທົ່າ, ເວລາເອົານ້ຳທິບແກ້ວທິດ ກໍທິດພ້ອມກັນທັງສອງຈຶ່ງຄືນມາພ້ອມກັນແຕ່ຄາວນີ້ ກຸມພາໄດ້ກາຍສະພາບມາເປັນຄົນ, ທ້າວທັດສະໄນຄຶດວ່າຈະເອົານາງເຂົ້າໃສ່ຣາງຫລໍ່ໃໝ່ ແຕ່ຄຶດວ່າຢ້ານນາງຈະ ໃຈແຂງກ້າກວ່າຜູ້ຍິງທົ່ວໄປ ແລ້ວນາງຈະກັບຄືນໄປນ້ານາງເພເມືອງໂກສີ ດັ່ງບົດກອນຕອນໜຶ່ງຂຽນວ່າ

ຄັນຈັກເອົານາງເຂົ້າ　　　　ໃນຣາງຊຸບໃໝ່ ດັ່ງນັ້ນ
ໃຈນາງຈັກແກ່ກ້າ　　　　ແຂງເຂັ້ມກວ່າຍິງ
ອັນວ່າເມືອງຫລວງກວ້າງ　　　　ໂກສີຊິເປັນຝຸ່ນ
ມັນຈັກເສຍໄພ້ນ້ອຍ　　　　ເອົາຂ້າຂອດເມືອງ ທັ້ນແລ້ວ

ເມື່ອນາງແຕງອ່ອນ ແລະ ກຸມພາເກີດຄືນມາໄດ້ ນາງ ກໍນົບໄຫວ້ທ້າວທັດສະໄນ ພ້ອມທັງໄຕ່ຖາມວ່າ ທ່ານຜູ້ປະເສີດ ມາຊ່ວຍຊີວິດເທື່ອນີ້ ທ່ານມາຈາກສະຫວັນບໍ ຫລືວ່າມາແຕ່ທາງໃດ ,

ທ້າວທັດສະໄນຈຶ່ງບອກນາງວ່າ ເຮົາບໍ່ແມ່ນຄົນໂລເລດອກ ເຮົາເປັນນ້ອງຊາຍຫລ້າຂອງພະອິນ ເຮົາຊື່ທັດສະໄນ ເປັນຜູ້ມີອິດທິລິດທີ່ຫລາຍ ເວລາໃດມີເຫດການເດືອດຮ້ອນເຄືອງໃຈ ພະອິນ ທ່ານກໍໃຊ້ແຕ່ເຮົານີ້ແຫລະ.

ຈາກນັ້ນ ທ້າວທັດສະໄນ ກໍໄດ້ຖາມເຖິງຕົ້ນປາຍສາຍເຫດ ທີ່ທັງສອງພາກັນມານອນຕາຍຢູ່ກາງປ່າເປັນຍ້ອນເຫດໃດແທ້, ນາງແຕງອ່ອນຈຶ່ງຕອບໃຫ້ຮູ້ວ່າ ນາງເປັນລູກສາວຂອງພະຍາກຸມພົນ ຢູ່ເມືອງບາດານ ແລະ ມີແຕ່ນາງຜູ້ດຽວເທົ່ານີ້ເປັນແນວຄົນ; ນາງກ່າວວ່າຄາວນັ້ນ ຍັງມີມະນຸດເດີນທາງໄປພັກເຊົາຢູ່ແຄມຝັ່ງແມ່ນ້ຳ ແລະ ໄດ້ຝັນເຫັນນາງ ແລ້ວກໍຄຶດມັກຄຶດຮັກ, ຫລັງຈາກເຂົາ ກັບຄືນເມືອງຈຶ່ງແຕ່ງໃຫ້ເສນາອາມາດໄປສູ່ຂໍ ນາງຈຶ່ງໄດ້ມາ ເປັນເມຍຢູ່ຄອນເຖິງສາມປີ; ຕໍ່ມາທ້າວມະຫາວົງຜູ້ເປັນຜົວ ກໍພາ ເສນາໄປຄ້ອງຊ້າງແມ່ໄວຍະກາບັງບຽດ ເຂົາຈຶ່ງຫາເລື່ອງໃສ່ເວລາກຳລູກ ມັນໄດ້ເອົາແຂ້ນ້ອຍມາແທນ ແລ້ວນຳເອົາລູກຂອງນາງໃສ່ໄຫໄປຝັງ, ເມື່ອມະຫາວົງ ກັບມາແຕ່ຄ້ອງຊ້າງ ຟັງຄວາມຍຸແຍ່ບໍ່ພິຈາລະນາຖ້ວນຖີ່ ຈຶ່ງຂັບໜີຕີສົ່ງນາງອອກຈາກເມືອງ, ນາງ ໄດ້ເດີນທາງມາຫລາຍເດືອນ ຈຶ່ງມາພົ້ກຸມພາຜູ້ເປັນອ້າຍ ຈາກນັ້ນກຸມພາຈຶ່ງນຳພາອອກເດີນທາງຮຽນຮູ້ສາຕະສິນນຳພະລືສີ ຈຶ່ງມາຕາຍຢູ່ກາງປ່າແຫ່ງນີ້.

ນາງແຕງອ່ອນໄດ້ເວົ້າກັບທ້າວ ທັດສະໄນວ່າ ຈະຂໍບວດເປັນຂາວ (ແມ່ຊີ) ຈຳສີນຢູ່ຄອນທ່ານ ຈະບໍ່ຂໍສ້າງກຳທຳເວນກັບ ຝ່າຍເມືອງໂກສີແຕ່ປະການໃດ, ດັ່ງນັ້ນທ້າວທັດສະໄນຈຶ່ງນິລະມິດ ຜ້າ

ຂາວໃຫ້ນາງນຸ່ງຫົ່ມເປັນຊີ ແລະ ນິລະມິດຜ້າສັງຄາລາຍແບບເສືອໂຄ່ງໃຫ້ກຸມພາບວດເປັນລືສີຈຳສິນພາວະນາຢູ່ກາງປ່າ, ພ້ອມດຽວກັນ ທ້າວທັດສະໄນກໍນິລະມິດບ່ອນຢູ່ອາໃສເຄື່ອງກິນຂອງໃຊ້ຕ່າງໆໄວ້ໃຫ້ດັ່ງບົດກອນຂຽນວ່າ

ທຸກສິ່ງສ້ຽງ ຄົບເຄື່ອງຊີສົງ
ຈົມກົມເກາະ ກ່າຍແຖວຖັນກວ້າງ
ອາສົມຕັ້ງ ສາລາສອງແຫ່ງ
ມີທັງສວນດອກໄມ້ ລຽນລ້ອມລອບວົງ
ພະກໍນິລະມິດໄວ້ ສັບພະສິ່ງຂອງສັນ
ບໍລິຂານຄົບ ເຄື່ອງທົ່ງສອງເຈົ້າ
ເລີຍເລົ່າຢັງຢາຍໄວ້ ເພນີຕັ້ມແຜ່ນ
ຍູທ່າງສອງແຈ່ມເຈົ້າ ລືສີເລັ້ມເລືອກກິນ

ທ້າວທັດສະໄນໄດ້ຢູ່ອົບຮົມສັ່ງສອນ ໃຫ້ນາງຊີຂາວຈຳສິນ ພາວະນາຢ່າຂາດ ເພື່ອຈະໄດ້ໄປເຖິງນິລະພານ, ສ່ວນວ່າ ກຸມານ້ອຍລູກຂອງນາງນັ້ນ ຍັງບໍ່ຕາຍດອກ ອີກປະມານສາມປີກໍຈະ ໄດ້ພົບກັນ ຝ່າຍນາງຊີຂາວແຕງອ່ອນໄດ້ຟັງກໍສະລົບໄປຄາທີ່ ທ້າວທັດສະໄນຈິ່ງເອົານ້ຳທິບແກ້ວຫົດສົງນາງຄືນມາ, ເມື່ອຄືນມາໄດ້ນາງຊີຂາວຈິ່ງຖາມທ້າວທັດສະໄນວ່າ ຖ້າວ່າທ້າວບໍ່ຕາຍດຽວນີ້ຢູ່ໃສໃຜເດນໍລ້ຽງດູທ້າວ, ທ້າວທັດສະໄນຈິ່ງບອກວ່າມີນາງເທບລີລາຈາກສະຫວັນລົງມາລ້ຽງດູທ້າວເອົາໄວ້ ເຈົ້າຢ່າຮ້ອນຢ່າເຄືອງ ເທາະຈິ່ງຕັ້ງຕໍ່ບຳເພັນບຸນກຸສົນເອົາໄວ້.

ທ້າວທັດສະໄນລົງມາໂຜດນານເຖິງເຈັດເດືອນ ກໍຈິ່ງສັ່ງ ລາ

ສອງລີສີອ້າຍນ້ອງວ່າ ຕົນເອງຈະໄດ້ກັບຄືນສູ່ເມືອງສະຫວັນ ແລ້ວ ເພາະມາກໍດົນນານ ຢ້ານວ່າທາງສະຫວັນຈະຄອງຄອຍ ທັງສອງ ຝ່າຍຈຶ່ງສັ່ງລາກັບດ້ວຍຄວາມອາໄລອາວອນ

ຄ່ອຍຢູ່ດີເຢີພະລີສີເຈົ້າ ສອງພະອົງພ້ອມພ່ຳ ກູເອີຍ
ຢ່າໄດ້ມີພະຍາດຮ້າຍ ບຽນເຈົ້າສິ່ງໃດ
ຄັນວ່າມີໄພຍຕ້ອງ ເຖິງຕົນບັງບຽດ ເມື່ອໃດ
ໃຫ້ເຈົ້າຄຶດຮ່ຳຮູ້ ເຖິງຂ້ອຍຫາກຊິລົງ ນ້ອງເອີຍ

18- ບັ້ນທ້າວເກດສຸລິຍົງຍານ ເຮັດສົງຄາມກັບພໍ່

ບັດນີ້ກ່າວເຖິງທ້າວເກດສຸລິຍົງຍານ (1) ເຊິ່ງນາງເທບລີລາ ໄດ້ເອົາລ້ຽງໄວ້ ບັດນີ້ທ້າວອາຍຸໄດ້ 7 ປີແລ້ວ ນາງເທບລີລາຮັກທ້າວເໝືອນກັບດວງຕາຂອງນາງເອງ, ນາງຈຶ່ງສິດສອນວິຊາອາຄົມຕ່າງໆໃຫ້ແກ່ທ້າວ ແມ່ນສັດຕູຊິຂ້າຊິແກງຕັດເປັນບັ້ນເປັນ ທ່ອນກໍສາມາດຕໍ່ຄືນມາໄດ້; ແຕ່ລະມື້ທ້າວເກດສຸລິຍົງຍານຫັດຫົດ ລອງຫລິ້ນວິຊາສາຕະສິນທີ່ຮຽນໄດ້ຈາກແມ່ເທບລີລາ ໂດຍມີພວກຜີເສື້ອຮັກສາຢູ່ຕາມເມືອງພູມສະຖານຕ່າງໆ ຮ່ວມຫລິ້ນເປັນໝູ່,ຕະຫຼອດຮອດຜີເມືອງຂອງມະຫາວົງກໍຍັງໜີປະບ້ານປະເມືອງມາເຝົ້າ ມາແຫນທ້າວ ເພາະຖືວ່າແມ່ນໂພທິຍານລົງມາເກີດ.

ມື້ໜຶ່ງທ້າວເກດສຸລິຍົງຍານ ໄດ້ພາຝູງຜີຫລິ້ນຕີຄີໄປຕາມຜາຕ່າງໆ ດ້ວຍຄວາມມ່ວນຊື່ນ, ກະຕິກາໃນການຫລິ້ນກໍມີແຕ່ຝ່າຍໃດເສຍກໍຕ້ອງເຈັ້ຍໝູ່ ຫລິ້ນຕາມຫລິ້ນເລີຍກາຍເຂດອອກໄປເຖິງທົ່ງພຽງແຫ່ງໜຶ່ງ, ຍ້ອນການຫລິ້ນຕີຄີເຮັດໃຫ້ທ້າວ ແລະ ຝູງຜີ ເສື້ອ

(1) ເກດສຸລິຍົງຍານ ແມ່ນຜູ້ດຽວກັນກັບທ້າວເກດສຸລິວົງ

ຮ້ອນແດດຈຶ່ງຊວນກັນໄປຊອກຫາອາບນ້ຳ, ພໍໄປຮອດໜອງນ້ຳ ກໍໄດ້ເຫັນເສນາລ້ຽງມ້າຂອງມະຫາວົງ ຜູກມ້າໄວ້ໃກ້ໜອງນ້ຳແຕ່ພວກເຂົາພາກັນນອນຫລັບນິດຊອຍນ້ອຍ, ທ້າວເກດສຸລິຍົງ ຍານເຫັນວ່າມ້າໂຕນີ້ ແມ່ນມ້າໂຕປະເສີດເກີດຮ່ວມບຸນກັບທ້າວໂດຍສະເພາະເມື່ອໄດ້ໂອກາດ ທ້າວເກດສຸລິຍົງຍານກໍແກ້ເຊືອກມ້າ ແລ້ວຂຶ້ນຂີ່ທັນທີ ຕີມ້າແລ່ນໜີໄປຈົນເຖິງບ່ອນຢູ່ຂອງນາງເທບລີລາ ຜູ້ເປັນແມ່ລ້ຽງ, ແມ່ຈຶ່ງຖາມວ່າ ລູກໄປຊື້ມ້າມາແຕ່ທາງໃດຫືລູກ ? ທ້າວຈຶ່ງບອກແມ່ວ່າຕົນໄດ້ໄປເຫັນຢູ່ແຄມໜອງນ້ຳ ແລ້ວກໍຂີ່ ເອົາມາໂລດ, ນາງເທບລີລາຈຶ່ງບອກໃຫ້ທ້າວຮູ້ວ່າ ອັນນີ້ແມ່ນມ້າ ມຸງຄຸນຂອງພໍ່ເຈົ້າໃດທ້າວ ຈົ່ງເອົາໄວ້ດີ.

ກ່າວເຖິງພວກລ້ຽງມ້າ ເມື່ອຕື່ນນອນຂຶ້ນມາກໍບໍ່ເຫັນມ້າ ພາກັນຕົກໃຈປານກັບວ່າຕາຍທັງຢືນ ຢ້ານວ່າມະຫາວົງຈະສັ່ງຕັດຄໍ , ພວກລ້ຽງມ້າຈຶ່ງຟ້າວພາກັນເລາະຊອກຕາມແຄມໜອງ ກໍປະ ກົດເຫັນຮອຍມ້າກົ້ມກິນຫຍ້າອ່ອນຢູ່ ແຕ່ບໍ່ຮູ້ວ່າໃຜມາລັກເອົາໄປ ທາງໃດໄວວາແທ້ ພວກລ້ຽງມ້າຈຶ່ງພາກັນຊອກນຳເບິ່ງຮອຍຕີນ,ປະກົດວ່າຮອຍມ້າລຽນກັນລົງໄປທາງທິດໃຕ້ ເຂົາຈຶ່ງພາກັນມຸ່ງໜ້າຂ້າມທົ່ງລົງຫ້ວຍທ່າເມືອງໄປ ຈຶ່ງເຫັນທ້າວເກດສຸລິວົງຂີ່ຢູ່ ຈຶ່ງ ຖາມທ້າວດັ່ງຄຳກອນຂຽນວ່າ

ເລີຍເລົ່າເຫັນສີແກ້ວ ນົງເຍົາຍັງຂີ່
ເຮົາກໍເຫັນແນ່ແລ້ວ ໄປໃກ້ເລົ່າຖາມ
ດູລາເຈົ້າ ຊາຍຣາມນ້ອຍໜຸ່ມ
ເຈົ້ານີ້ຢູ່ປະເທດດ້າວ ແດນທ້າວຝ່າຍໃດ

ສັງເລົ່າຍັງອາດອ້າງ   ເກີນເຫດເປັນກະດັດ
ທະນົງຕົນລັກ   ລອບເອົາຍັງມ້າ
ອັນນີ້ອາຊະໄນເຈົ້າ   ລາຊາແພງຂະໜາດ
ມຶງຈົ່ງຄືນສົ່ງໃຫ້   ກູແທ້ຢ່ານານ ທ່ານເອີຍ

ທ້າວເກດສຸລິວົງ ໄດ້ຍິນຄຳເວົ້າຂອງພວກລ້ຽງມ້າ ທ້າວ ຈິ່ງ ຕອບເຂົາວ່າ ແມ່ນພວກສູເຈົ້າເອົາອັນໃດມາເວົ້າວ່າ ມ້ານີ້ ເປັນ ຂອງທ່ານພະຍາພວກເຈົ້າ ເຂົ້າໃຈຜິດແລ້ວ, ມ້າໂຕນີ້ແມ່ນມ້າມຸງ ຄຸນປະເສີດເກີດມາພ້ອມກັບເຮົາເອງ ເປັນມ້າຂອງເຮົາໂດຍ ແທ້ ຈິງ ພວກເຈົ້າຢ່າຍົກເອົາພະຍາມາຂົ່ມເຮົາເດີ, ພວກລ້ຽງ ມ້າ ຢາກຮ້າຍຍົກພ້າສະໂງມເງື້ອດຂຶ້ນວ່າຈະຟັນ ແຕ່ທ້າວເກດສຸລິວົງບໍ່ ຢ້ານ ບໍ່ກົວທົວສະອິກສະອ້ອຍ ແລ້ວກໍຊັກແຄ່ມມ້າໜີໄປ, ບຶດໜຶ່ງ ພັດຂີ່ມ້າກັບມາໃກ້ໆພວກລ້ຽງມ້າ ແລ້ວເອົາແສ້ມ້າຟາດຫລັງ ພວກ ເຂົາພາກັນທົວດອນໄປຕຳກັນລົ້ມຟຸບລົ້ມຟາຍ.

ເມື່ອພວກລ້ຽງມ້າ ຂໍມ້າຄືນຈາກທ້າວເກດສຸລິວົງບໍ່ໄດ້ ກໍ ພາ ກັນກັບຄືນເມືອຂາບທູນເຫດການໃຫ້ມະຫາວົງຮູ້ ພວກລ້ຽງມ້າຂາບ ທູນວ່າ ຍັງມີເດັກນ້ອຍຜູ້ໜຶ່ງ ມີລິດເດດກ້າແຂງ ມັນມາລັກ ເອົາ ມ້າຂອງພະອົງໄປ, ຝູງຂ້າທັງຫລາຍຕິດຕາມໄປເຖິງບ່ອນຢູ່ ຂອງ ມັນ ແລະ ຮ້ອງຂໍຍໍມືປານໃດ ມັນກໍບໍ່ຍອມສົ່ງມ້າຄືນໃຫ້ ມັນ ຍັງ ບອກວ່າແມ່ນມ້າຂອງມັນແມ່ຂອງມັນລ້ຽງໄວ້ໃຫ້, ຝ່າຍມະຫາ ວົງ ໄດ້ຟັງ ແລະ ບໍ່ຄິດຖີ່ຖ້ວນ ກໍຮ້າຍຂຶ້ນເປັນຟືນເປັນໄຟ ຄິດວ່າເດັກ ນ້ອຍໆທໍ່ເລັບມື ມັນຈະມາມິ່ນປະມາດ ຈິ່ງສັ່ງເສນາໃຫ້ໄປນຳແສນ ເມືອງ ແລະ ເສນາຜູ້ກ້າແກ່ນທັງຫລາຍມາເຝົ້າດ່ວນ ມະຫາ ວົງ

ຈຶ່ງບອກໃຫ້ຮູ້ວ່າ ດຽວນີ້ມີເດັກນ້ອຍມາຈາກທາງໃດບໍ່ຮູ້ ມັນມາ ຢູ່ໃນອານາເຂດບ້ານເມືອງຂອງພວກເຮົາ ມັນສະແດງທ່າທີສືບ ປະມາດເຮົາ ມັນມາລັກເອົາມ້າເຮົາໄປ ມັນບໍ່ເຄົາລົບນັບຖືເຮົາ ຖ້າຜູ້ໃດສາມາດຈັບມັນມາຖວາຍໄດ້ ເຮົາຈະມອບເມືອງໃຫ້ ເຄິ່ງໜຶ່ງ, ເຂົາບອກວ່າເດັກນ້ອຍຜູ້ນີ້ອາຍຸປະມານ 7 ປີນີ້ແຫລະ ແຕ່ມັນຫາກມີລິດເດດແຂງແຮງ; ປະກົດວ່າແສນເມືອງ ແລະ ເສນາອາມາດທັງຫລາຍ ຂານອາສາເປັນສຽງດຽວກັນວ່າ ບໍ່ຢ້ານບໍ່ ກົວເດັກນ້ອຍຜູ້ນີ້ເລີຍ ມະຫາວົງຈຶ່ງສັ່ງໃຫ້ນຳກຳລັງຫລວງຈຳ ນວນໜື່ນກວ່າອອກເດີນທາງໄປ ພ້ອມດ້ວຍຂະບວນຊ້າງຂະບວນມ້າມຸ່ງໜ້າສູ່ທົ່ງນາຫລວງ, ພໍໄປເຖິງທ້າວກາດສຸລິວົງ ຂຸນທັງຫລາຍ ກໍນຳຂະບວນຊ້າງເຂົ້າຕໍ່ສູ້ຢ່າງບໍ່ກົວເກງ ດັ່ງບົດກອນຂຽນວ່າ.

ຂຸນກໍໄສ່ສິ້ນຊ້າງ ຊູຍິ່ງມີກົວ
ວາຮຽວວາ ກ່າຍກອງກັນເຂົ້າ
ອັນວ່າ ບາບຸນທ້າວ ຫົວຊິມຊອຍຊື່ມ
ອັນວ່າບາບ່າວທ້າວ ແຜງລ້ານລ່ຳແຍງ

ທ້າວກາດສຸລິວົງ ເຫັນພົນຫລວງໄຫລຫລັ່ງເຂົ້າມາຫາຈຶ່ງຖາມເຂົາວ່າ ສູທ່ານທັງຫລາຍສະບາຍດີບໍ ສູທ່ານປະສົງຢາກໄດ້ ສິ່ງໃດນໍ, ຝ່າຍແສນເມືອງທັງສີ່ຈຶ່ງຕອບທ້າວດ້ວຍຄວາມຂົມຄຽດ ວ່າກູບໍ່ຢາກໄດ້ຫຍັງນຳມຶງດອກ ມີແຕ່ພວກກູຈະຕັດຄໍມຶງ; ເພາະ ມຶງມັນແມ່ນໂຈນໃຫ່ຍລັກເອົາມ້າພະຍາກູໄປ ບັດນີ້ເຖິງຄາວຕາຍ ມຶງມາຮອດແລ້ວ ດັ່ງບົດກອນຂຽນວ່າ

ກູບໍ່ເອົາສັງແລ້ວ ນຳມຶງຄົນຖ່ອຍ

ກູຊິຕັດຮ້ອຍບັ້ນ ຟັນເນື້ອແຕ່ງມຶງ

ມຶງນີ້ໃຈໂລຮ້າຍ ຄືນພານສາໂຫດ

ມຶງຫາກລັກລອບດັ້ນ ເອົາມ້າແຫ່ງພະຍາ ນັ້ນແລ້ວ

ທ້າວເກດສຸລິວົງ ໄດ້ບອກພວກແສນເມືອງ ແລະ ເສນາ ອາມາດທັງຫລາຍວ່າ ພວກສູເຈົ້າພາກັນກັບຄືນເມືອສາ ເຮົາເອງ ບໍ່ແມ່ນຄົນໂລເລຄືພວກສູເຈົ້າເຂົ້າໃຈດອກ, ເຮົາແມ່ນອົງໂພທິຍານ ແລະ ເຮົາກໍບໍ່ໄດ້ລັກມ້າໃຜດອກ ອັນນີ້ຫາກແມ່ນມ້າຂອງເຮົາເອງ ພວກສູເຈົ້າພາກັນກັບຄືນສາ ຢ່າເອົາຊີວິດມາສ່ຽງເພາະຊີວິດເປັນຂອງມີຄ່າ ແລະ ຫາຍາກແທ້ໃດ.

ແຕ່ປະກົດວ່າແສນເມືອງ ແລະ ຂຸນຄານບໍ່ຍອມຟັງສຽງ ທ້າວຈຶ່ງຕີຝູງຊ້າງເຂົ້າໃສ່ທ້າວເກດສຸລິວົງ ຈຶ່ງຍໍພະຂັນໄຊ (ດາບ) ແກວ່ງ ໄກວໄປມາເຮັດໃຫ້ຂຸນທັງສີ່ລົ້ມຕາຍທັນທີ, ສ່ວນຈຳ ນວນເຫລືອກໍຟ້າວເອົາຕີນກັບຄືນສູ່ເມືອງ ແລ້ວຂຶ້ນລາຍງານຕໍ່ມະຫາວົງວ່າຂຸນຜູ້ໃຫ່ຍໄດ້ຕາຍຫມົດແລ້ວ,ຝ່າຍມະຫາວົງ ໄດ້ຟັງກໍຍິ່ງຄຽດສົ້ມ ພ້ອມກັບເວົ້າວ່າ ເດັກນ້ອຍໆມັນສັງຊິມາອວດສຳຫາວກູຊິໄປ ເບິ່ງຫນ້າມັນລອງເບິ່ງກ່ອນ ມັນຊິຂະຫນາດໃດແທ້, ຖ້າມັນເກັ່ງກ້າສາມາດອີ່ຫລີ ກູຈຶ່ງຈະຕໍ່ສູ້ກັບມັນ; ວ່າແລ້ວມະຫາວົງກໍກຽມພົນ ທານນັບໄດ້ເປັນໂກດຂະບວນຊ້າງ ແລະ ມ້ານັບເປັນລ້ານໆ, ມີ ທັງພວກຖືຫອກຖືດາບຖືງ້າວ ຝູງຫມູ່ໄທທະນູກໍຍິງທະນູເບີກທາງ ໄປກ່ອນສຽງສະນັ່ນຫວັ່ນໄຫວ.

ເມື່ອມະຫາວົງນຳກຳລັງພົນທານໄປເຖິງ ກໍໄດ້ເຫັນຂຸນທັງ ສີ່ນອນຕາຍພ້ອມກັບເສນາອື່ນໆອີກ ມະຫາວົງຈຶ່ງເສກຄາຖາເປົ່າຄືນ

ມາໄດ້ທັງໝົດ, ພ້ອມດຽວກັນກໍແນມເຫັນທ້າວເກດສຸລິວົງຍັງຂີ່ມ້າ ແອະແອ່ນຫລົບຢູ່ ມະຫາວົງຈຶ່ງສັ່ງໃຫ້ກຳລັງເຂົ້າປິດລ້ອມເຖິງເຈັດ ຊັ້ນ, ສ່ວນທ້າວເກດສຸລິວົງ ກໍບໍ່ກົວເກັງແນວໃດ ຍູທ່າງຊື່ນຊົມສະ ບາຍ ແລະ ໄດ້ຖາມແມ່ຄືນາງເທບລີລາວ່າ ອັນທີ່ກົງຄັນຮົ່ມສີແດງ ນັ້ນແມ່ນໃຜແທ້ ແມ່ຈຶ່ງບອກວ່າອັນນັ້ນແມ່ນຄົນກ້າຫານຂອງພະ ຍາ ພໍ່, ແລະ ທ້າວເກດສຸລິວົງກໍໄດ້ຖາມເຖິງຜູ້ອື່ນໆ ທີ່ກັ້ງຮົ່ມສີ ແຕກ ຕ່າງກັນ ນາງເທບລີລາຜູ້ເປັນແມ່ ກໍໄດ້ໄຈແຍກໃຫ້ຮູ້ ວ່າ ມີຄວາມສຳຄັນແນວໃດ, ພິເສດແມ່ນຜູ້ທີ່ຂີ່ຄໍຊ້າງເຜືອກມີຮົ່ມກັ້ງທັງ ສີ່ດ້ານນັ້ນ ນາງເທບລີລາບອກວ່າ ຜູ້ນີ້ແມ່ນມະຫາວົງຜູ້ເປັນພໍ່ຂອງ ທ້າວເອງ ລູກຈົ່ງຈື່ຈຳເອົາໄວ້ ດັ່ງບົດກອນຂຽນວ່າ

ຜູ້ທີ່ທົງຄໍຊ້າງ	ທັງກາງຂາວເຜືອກ ມານັ້ນ
ສີ່ຮົ່ມກັ້ງ	ບັງຊອງຄູ່ມາ
ອັນນີ້ລາຊາເຈົ້າ	ປິຕາຕົນພໍ່ ບາແລວ
ເຈົ້າຢ່າໄດ້ພາດພັ້ງ	ລະວັງໜ້າແລະຫລັງ ແມ່ເນີ

ຈາກນັ້ນບັ້ນສູ້ຮົບກັນກໍໄດ້ເກີດຂຶ້ນ ພົນທານຂອງມະຫາວົງຫລັ່ງ ໄຫລເຂົ້າໃສ່ທ້າວເກດສຸລິວົງ ຈົນມືດຟ້າມົວດິນ ຟັງສຽງສະນູຫູວງ ດັງຄືດັ່ງຟ້າຈະຂາດຂວ້ຳ ປະກົດວ່າລູກປືນຂອງຝ່າຍມະຫາວົງທີ່ຍິງ ໄປໃສ່ທ້າວເກດສຸລິວົງນັ້ນ ໄດ້ກາຍເປັນເຄື່ອງຄຽວຂອງກິນທີ່ແຊບ ນົວໄປໝົດ, ໂອກາດດຽວກັນນີ້ ທ້າວເກດສຸລິວົງ ໄດ້ສັ່ງໃຫ້ຝູງຜີ ເມືອງທັງຫລາຍ ພາກັນນິລະມິດບ້ວງບາດ ແລ້ວເຂົ້າໄປຜູກ ຄ້ອງ ເອົາພົນທານຂອງພະຍາທັງໝົດມັດຕິດໄວ້ກັບຕົ້ນໄມ້, ຕໍ່ມາ ພວກ ພົນທານຂອງມະຫາວົງທັງນ້ອຍແລະໃຫຍ່ຖືກມັດຕິດຕົ້ນໄມ້ໄວ້ ຈົນ

ຫມົດ.

ຝ່າຍມະຫາວົງຜູ້ເປັນພໍ່ ແນມເຫັນພົນທານ ພ້ອມທັງຂະ ບວນຊ້າງມ້າຖືກມັດຕິດຕົ້ນໄມ້ເປັນແຖວໆ ມະຫາວົງເສກຄາຖາ ເປົ່າເທົ້າໃດຄັ້ງເທົ້າໃດຫົນກໍບໍ່ສາມາດຈະແກ້ເຊືອກອອກໄດ້ ມະຫາວົງຈຶ່ງເກີດໂມໂຫໂທໂສ ຂະຫນາບມ້າເຂົ້າໄປໃສ່ທ້າວເກດສຸລິວົງ ຜູ້ເປັນລູກ, ຈາກນັ້ນສອງພໍ່ລູກກໍຕໍ່ສູ້ກັນ ຢ່າງບໍ່ໄວ້ຊີວິດ ໃຊ້ທັງວິຊາອາຄົມ ແລະ ຫອກດາບສູ້ກັນຢູ່ພື້ນດິນແລ້ວກໍຂຶ້ນເມືອສູ້ຢູ່ເທິງ ອາກາດກາງຫາວ ສູ້ກັນໄປກັນມາບໍ່ມີໃຜຍອມໃຜ ຈຶ່ງພາກັນລົງ ພັກຜ່ອນຢູ່ທາງພື້ນດິນ, ເມື່ອພັກຜ່ອນມີແຮງແລ້ວ ກໍເລີ່ມຕໍ່ສູ້ກັນ ໃຫມ່ເບິ່ງແສງດາບເຫລື້ອມເປັນມາບໆແຕ່ກໍບໍ່ມີໃຜ ສາມາດຟັນກັນ ໄດ້ສົມດັ່ງໃຈຄຶດດັ່ງບົດກອນຂຽນວ່າ

ສອງກໍກົວດ ແກ່ວງເປື້ອງ   ພະຂັນຄ້ຳປ່າຍຟັນ
ອັນວ່າແສງຕາວເຫລື້ອມ   ປະກາຍໂຍເຮືອງຮຸ່ງ
ຄົມດາບຕ້ອງ   ສະເດັນຟົ້ງຈາກກັນ
ຊູ້ຄົນຕ່າງກໍເຊຊວນລົ້ມ   ໄກກັນແສນໂຍດ
ແລ້ວເລົ່າກັບຕ່າວຕັ້ງ   ຄືນສູ້ສິ້ງສອນ ກັນມາ

ມະຫາວົງຈຶ່ງຄຶດໃນໃຈວ່າ ເປັນແນວໃດຄືວ່າເດັກນ້ອຍໆ ນີ້ເກັ່ງກ້າສາມາດແທ້ ຜ່ານມາການສູ້ຮົບຂອງເຮົາວ່າແຕ່ສອນ ອອກຈາກແຫລ້ງໄປສັດຕູບໍ່ເຄີຍຈະມີໂຕໃດລອດຊີວິດໄປໄດ້ເລີຍ, ແຕ່ຄັ້ງນີ້ຍິງສອນໄປລູກໃດກໍມິດຈ້ອຍບໍ່ກັບຄືນມາຫາແຫລ້ງເລີຍ ຫລືພະອິນຢູ່ຟ້າແປງເພດເປັນເດັກນ້ອຍມາທົດລອງກັບເຮົາຊັ້ນບໍ, ມະຫາ ວົງຄຶດຕໍ່ໄປວ່າຖ້າຈະຂືນສູ້ກໍຈະບໍ່ຊະນະເດັກນ້ອຍຜູ້ນີ້ໄດ້ເສຍແຮງລ້າງ

ທາງທີ່ດີເຮົາຄວນໄປຖາມເບິ່ງວ່າ ເປັນຄົນມາຈາກຖິ່ນຖານ ທາງໃດຈິ່ງເກີ້ງກະດັດກະດໍ້ແທ້ ມະຫາວົງຈິ່ງຖາມທ້າວວ່າ

ດູລາເຈົ້າ ຫລານຊາຍນ້ອຍອ່ອນ
ເຈົ້ານີ້ເນົາຢູ່ກໍ້າ ນະຄອນກວ້າງທີ່ໃດ
ເປັນລູກທ້າວ ນະຄອນໃຫຍ່ເມືອງໃດ
ຫລືວ່າຜີພົງໄພ ຄວ່າມາເດີນດ້າວ
ທາສະແຫວງຫລີ້ນ ຕາມໃຈດ້ວຍຊື່
ພອຍເລື້າເຫັນມ້າແກ້ວ ກູທ້າວລັກເອົາ ນັ້ນລື

ແຕ່ນັ້ນ ທ້າວເກດສຸລິວົງ ຈິ່ງໄດ້ບອກມະຫາວົງວ່າ ເຮົາ ກໍເປັນຊາວເມືອງນະຄອນສີ ເປັນລູກຂອງມະຫາວົງ ແມ່ຂອງ ເຮົາຊື່ວ່ານາງແຕງອ່ອນຫັ້ນແຫລະ, ແຕ່ວ່າພໍ່ຂອງເຮົາຟັງຄຳສົບສໍ່ຂອງແມ່ໄວຍະກາ ແລະ ເສນາຜູ້ກິນສິນຈ້າງ ພໍ່ຈິ່ງຂັບຫນີຕີສົ່ງແມ່ອອກຈາກເມືອງໄປໄດ້ຫລາຍປີແລ້ວ ບໍ່ຮູ້ວ່າຕາຍຫລືຍັງ. ເຮົາເອງ ກໍຖືກແມ່ໄວຍະກາເອົາໃສ່ໄຫໄປຝັງ, ແຕ່ເທວະດາໄດ້ລົງມາ ເອົາເຮົາອອກຈາກຂຸມ ແລ້ວລ້ຽງດູຈົນໃຫ່ຍກ້າຫນ້າບານເຖິງດຽວນີ້.

ຝ່າຍມະຫາວົງໄດ້ຟັງການບອກກ່າວກໍເຫລືອໃຈກັ້ນໂສກເກືອບຈະເປັນລົມ ຈຶ່ງຊວາງມືໄປອູ້ມເອົາທ້າວເກດສຸລິວົງ ພ້ອມກັບບອກວ່າ ເຈົ້າແມ່ນລູກຂອງພໍ່ນີ້ເອງ, ແຕ່ມະຫາວົງກໍບໍ່ສາມາດຈະ ອູ້ມເອົາທ້າວຂຶ້ນໄດ້ ເພາະຮ່າງກາຍຫນັກປານແຜ່ນດິນ; ເຖິງ ແມ່ນມະຫາວົງຜູ້ເປັນພໍ່ຈະບອກທ້າວວ່າ ຕົນເປັນພໍ່ແທ້ໆກໍຕາມທ້າວເກດສຸລິວົງ ກໍຕ້ອງພິສູດຄວາມຈິງດ້ວຍຕົນເອງເບິ່ງກ່ອນ ຄືທ້າວໄດ້ອະທິດຖານເຖິງເທວະດາອິນພົມໃຫ້ຊ່ວຍເປັນສັກຂີພະຍານ ທ້າວ ຈະ

ໄດ້ຍິງສອນອອກໄປ ຖ້າຜູ້ກ່ຽວແມ່ນພໍ່ແທ້ໆໃຫ້ລູກສອນກາຍເປັນພົ້ວດອກໄມ້ບູຊາພໍ່ ຖ້າຫາກບໍ່ແມ່ນພໍ່ຂໍໃຫ້ລູກສອນຈົ່ງມ້າງມຸ່ນ ເຮືອນຮ່າງຂອງຜູ້ກ່ຽວໃຫ້ມຸດມອດໄປເລີຍ.

ຈາກນັ້ນທ້າວເກດສຸລິວົງ ຈິ່ງຍິງສອນອອກໄປຈາກແຫລ້ງເປັນການສ່ຽງເບິ່ງຄວາມຈິງ ຟັງສຽງລູກສອນກ້ອງສະນັ່ນຫວັ່ນ ໄຫວປານແຜ່ນດິນແຜ່ນຟ້າຈະພິກຈະປິ້ນ, ລູກສອນໄດ້ວຽນໄປອ້ອມຮອບຈັກກະວານໄດ້ 7 ຮອບ ແລ້ວກັບເຂົ້າຮອບວຽງວັງອີກ 3 ຮອບ ຝູງໄພ່ນ້ອຍທັງຫລາຍພາກັນຕົກໃຈອົກສັ່ນຂວັນຫາຍ, ຈາກນັ້ນ ລູກສອນກໍກັບຄືນໄປຫາທ້າວ ແລະ ທ້າວກໍຈັບລູກສອນຍິງໄປອີກ ເປັນຄັ້ງທີສອງ ປະກົດວ່າລູກສອນໄດ້ສຸມປາຍແຫລມຂອງມັນເຂົ້າໃສ່ມະຫາວົງ ບັນດາເສນາອາມາດທີ່ຖືກຜູກຕິດຕົ້ນໄມ້ຕ່າງກໍສະທ້ານຢ້ານກົວ ຫລັງຈາກລູກສອນໄດ້ແລ່ນອ້ອມຈັກກະວານແລ້ວ ກໍກັບ ເກີດເປັນພົ້ວດອກໄມ້ບູຊາມະຫາວົງ ດັ່ງບົດກອນຂຽນວ່າ

ແຕ້ນດວງສອນອ້ອມ　　ຈັກກະວານຫລາຍເລົ່າ
ແລ້ວຈິ່ງເປັນດອກໄມ້　　ຖວາຍໄທ້ພໍ່ຕົນ
ສອງຂອກຂ້າງ　　ອົງພໍ່ລາຊາ
ມີແຕ່ບຸບຜາບານ　　ກິ່ນຫອມໂຮຍເຮົ້າ
ສອນຈິ່ງກັບກາຍປິ້ນ　　ຄືນມາຂອງເກົ່າ
ອັນວ່າພຸວະນາດເຈົ້າ　　ບາຍໄວ້ທີ່ຄວນ ຫັ້ນແລ້ວ

ແຕ່ສອນທີ່ກາຍເປັນພົ້ວດອກໄມ້ນັ້ນ ມະຫາວົງບໍ່ສາມາດ ເຫັນໄດ້ເພາະເທວະດາອິນພົມບັງຕາເອົາໄວ້, ມະຫາວົງແນມເຫັນແຕ່ຮູບ ຮ່າງຂອງທ້າວເກດສຸລິວົງປະກົດວ່າງາມປານພະອິນພະພົມແຕ່

ເບິ່ງໃບໜ້າທ້າວແມ່ນຄືກັບນາງແຕງອ່ອນບໍ່ມີຜິດ, ມະຫາວິງເຫັນດັ່ງນັ້ນຈຶ່ງໄຫ້ສະອື້ນຫື້ນຫວງກິນແໜງແຄງໃຈກັບຕົນເອງຫາ ອັນປຽບບໍ່ໄດ້; ມະຫາວິງໄດ້ແຕ່ຕຳນິຕົນເອງວ່າ ເປັນຄົນຂາດ ເຫດຜົນ ເປັນພະຍາລ້າງຂາດການພິນິດພິຈາລະນາ ຫລົງເຊື່ອຄຳ ສັບສໍ່ຈຶ່ງໄດ້ສູນເສັຍນາງຜູ້ປະເສີດເປັນເຫດໃຫ້ບ້ານເມືອງໝື່ນໝອງ ທັງນີ້ຍ້ອນໄວຍະກາ ແລະ ແສນເມືອງລ່າຍພາງ ຈະສັ່ງຕັດຄໍພວກນີ້ຖີ້ມດັ່ງບົດກອນຂຽນວ່າ

ເປັນນຳແສນເມືອງເຖົ້າ ໄວຍະກາຄົນຖ່ອຍ
ມັນຫາກສັບສໍ່ໃຫ້ ເສັຍແກ້ວຍອດເມືອງ
ພູຈັກຕັດຫົວຖີ້ມ ຄົນງອນລັກລ່າຍ
ມັນຈັກຕາຍເທື່ອນີ້ ວອນເຂົ້າຄອບເຂົາ ແທ້ແລ້ວ

ຍ້ອນພວກນີ້ແທ້ໆ ຈຶ່ງເສຍເມັຍເສຍລູກ, ຂຸນຄານຂຸນເຄືອຂຸນເຄິ່ງ ແລະ ທ້າວທຸ່ມຜູ້ ພວກມີສິນທຳປະຈຳໃຈ ເຂົາຫາກ ຫ້າມແລະ ອ້າງເຫດອ້າງຜົນດີແລ້ວ ແຕ່ມະຫາວິງຮ້າຍໂພດບໍ່ຟັງຄວາມເຂົາຫ້າມ, ເມື່ອເຫດການມັນແຈ້ງຂາວຄືດັ່ງນີ້ ຈຶ່ງພໍປານຕາຍທັ້ງຢືນເອົາໂລດ ມະຫາວິງຈຶ່ງອ້ອນວອນໃຫ້ທ້າວເຂົ້າເມືອສະ ເຫວີຍເມືອງແທນ ເພາະເຫັນວ່າຕົນເອງເຖົ້າແກ່ແລ້ວ ສ່ວນໄວຍະ ກາແລະ ແສນເມືອງຂຸນຖ່ອຍຊ້ານັ້ນ ຂໍໃຫ້ທ້າວຂ້າມັນຖີ້ມໂລດ; ທ້າວເກດສູລິວົງ ຈຶ່ງຂານຕອບພໍ່ວ່າ ຕົນບໍ່ສາມາດຈະເຂົ້າໄປຢູ່ເມືອງໄດ້ ເພາະອັບອາຍໄພ່ຟ້າຂ້າແຜ່ນດິນ ໃພງກໍກຽດຊັງເຂົາແລະແມ່ຂອງເຂົາ.

ທ້າວເກດສູລິວົງເວົ້າໃຫ້ພໍ່ວ່າ ເມື່ອເສນາອາມາດບໍ່ນິຍົມ ຈົນ

ຊອບຈະໄປຄອງເມືອງໄດ້ແນວໃດ ອັນໜຶ່ງແມ່ກໍພັດພາກຈາກ ໄປທາງໃດບໍ່ຮູ້ ເຖິງຕົນເອງຈະໄດ້ດີມີສຸກແນວໃດກໍບໍ່ພໍໃຈ ຖ້າ ຫາກຂາດແມ່, ດັ່ງນັ້ນຈຶ່ງຂໍອອກເດີນທາງໄປຊອກຫາແມ່ສາກ່ອນ ເມື່ອໃດພົບແມ່ໄດ້ແມ່ຄືນມາແລ້ວ ຈຶ່ງຈະເຂົ້າສະເຫວີຍເມືອງ; ມະຫາວົງໄດ້ຍິນຄຳລູກເວົ້າ ກໍຍິ່ງພາໃຫ້ໂສກເສົ້າຫງ່ວມເຫງົາຄິດ ຮອດນາງແຕງອ່ອນຜູ້ເປັນເມຍ ຄິດເຖິງຕອນທີ່ມະຫາວົງເອງໄລ່ໜີ ຕີສັ່ງນາງແຕງອ່ອນໄດ້ຮ້ອງຂໍຍໍມື, ແລະ ຄິດເຖິງນ້ຳໃຈອັນປະເສີດຂອງນາງສິມເປັນຍອດຍິ່ງແທ້ ແມ່ນວ່າຕົວນາງຖືກຕີຖືກໄລ່ກໍບໍ່ສະແດງຄວາມເສຍອົກເສຍໃຈ ຍັງເອີ້ນສັ່ງຜົວດ້ວຍຄວາມອາໄລ ອາວອນ ແມ່ນກະທັ້ງໄວຍະກາ ແລະ ຜູ້ອື່ນໆ ທີ່ອິດສາບັງບຽດ ນາງກໍຍັງເອີ້ນສັ່ງລາ.

ເມື່ອມະຫາວົງອ້ອນວອນແນວໃດທ້າວເກດສຸລິວົງ ກໍບໍ່ ຍອມເຂົ້າເມືອເມືອງດອນພໍ່ ມະຫາວົງຈຶ່ງຮ້ອງຂໍໃຫ້ທ້າວເສກມົນຄາຖາເປົ່າໃສ່ເສນາອາມາດທີ່ຖືກມັດຕິດຕົ້ນໄມ້ນັ້ນ ໃຫ້ເຂົາໄດ້ຫລຸດອອກ ທ້າວເກດສຸລິວົງ ຈຶ່ງເສກຄາຖາໃສ່ ຝູງເສນາທັງຫລາຍ ກໍ ຫລຸດອອກຈາກການຖືກມັດຕິດຕົ້ນໄມ້ ຈາກນັ້ນມະຫາວົງ ຈຶ່ງສັ່ງລາ ລູກແລ້ວກໍນຳພົນທານທັງຫລາຍກັບເຂົ້າສູ່ເມືອງໂກສີ.

19- ບັ້ນລົງໂທດ ໄວຍະກາ ແລະ ແສນເມືອງ

ພາຍຫລັງທີ່ມະຫາວົງກັບຄືນເຖິງເມືອງໂກສີແລ້ວ ກໍເອີ້ນ ເສນາຜູ້ໃຫຍ່ມາຫາທັນທີ ພ້ອມທັງສັ່ງໃຫ້ໄປນຳເອົາແມ່ໄວຍະກາ , ແສນເມືອງ, ໄທເລັກນ້ອຍ ແລະ ຜູ້ອື່ນໆມາຫາ, ທັງໃຫ້ ເຊີນເອົາຄຳເຝືອຝັ້ນ, ຂຸນຄານທ້າວເຄົ້ງ ແລະ ທ້າວທຸ່ມຜູ້ຊື່ງ ເປັນພວກຮູ້ວຽກບ້ານການເມືອງດີ ມີສິນທຳປະຈຳໃຈມາພ້ອມ; ຄາວນີ້ແມ່ໄວຍະກາປານກັບວ່າ ນັ່ງຢູ່ເທິງກອງໄຟ ດັ່ງບົດກອນຂຽນວ່າ

ຍາມນັ້ນໄວຍະກາຮ້ອນ ຄືໄຟເຕົາໃຫຍ່

ເພາະວ່າກຳແລ່ນຕ້ອງ ວ່ວນຂອງຄອບງຳ ແທ້ແລ້ວ

ເມື່ອເສນາຜູ້ໃຫຍ່ສັ່ງໃຫ້ເຂົາໄປຄຸມຕົວແມ່ໄວຍະກາ ແລະ ແສນເມືອງພ້ອມດ້ວຍບໍລິວານອື່ນໆຂອງເຂົາທີ່ໄດ້ຮັບຄ່າຈ້າງ ລາງວັນຈາກແມ່ໄວຍະກາຂຶ້ນເຝົ້າແລ້ວ, ມະຫາວົງຈຶ່ງຖາມແສນເມືອງວ່າ ເວລາກູໄປຄ້ອງຊ້າງກູໃຫ້ມຶງເຝົ້າບ້ານເຝົ້າເມືອງແທນ ເປັນຫຍັງມຶງຈຶ່ງເອົາລູກກູໄປຝັງຖິ້ມ ຫວັງຈະຂ້າໃຫ້ທ້າວຕາຍ, ກ່ອນກູຈະອອກຈາກເມືອງໄປກູກໍໄດ້ສັ່ງສອນທຸກໆຄົນ ເປັນສັງຈຶ່ງມີ ໃຈໂລບລັງຽວແວ່ງວອນ ຈົນກູເສຍເມຍ ແລະ ລູກຍອນພວກສູ, ບັດນີ້ກູ

ຊິຕັດຫົວສູ້ພ້ອມທັງລູກທັງເມຍໃຫ້ມັນຕາຍໄປພ້ອມໆກັນໝົດ.

ແຕ່ນັ້ນແສນເມືອງເຖົ້າ ຈຶ່ງໄດ້ຂາບທູນຄວາມຈິງທັງໝົດຊູ່ມະຫາວົງຟັງ ບໍ່ສາມາດຈະອຳໄວ້ອີກແລ້ວ, ແສນເມືອງທັງນົບ ທັງໄຫວ້ມະຫາວົງບໍ່ໃຫ້ຂ້າໃຫ້ແກງ ພ້ອມກັບກ່າວສາລະພາບວ່າ ຝູງເຂົາທັງຫລາຍຫລົງໄຫລນຳຄຳພັນໜຶ່ງ ທີ່ແມ່ໄວຍະກາບນຳເອົາມາຊີ້ຈ້າງຈອບອອຍບໍ່ໃຫ້ໄຂຄວາມລັບ, ສ່ວນເສນາຜູ້ນ້ອຍອື່ນໆກໍ ໄດ້ຄຳຄົນລະຫ້າຮ້ອຍເປັນຄ່າຈ້າງຈາກແມ່ໄວຍະກາ ແມ່ນກະທັງຣອດພວກຄົນຮັບໃຊ້ໃນທັດຖະບານແມ່ໄວຍະກາກໍຊື້ຈ້າງໝົດ, ຍ້ອນເຫັນເງິນຫນ້າດຳເຫັນຄຳຫນ້າເສົ້າ ຜູ້ຂ້າຈຶ່ງລືມຄວາມສັ່ງສອນຂອງພະອົງ, ມະຫາວົງໄດ້ຟັງຄຳສາລະພາບກໍຍິ່ງຮ້າຍແຮງຂຶ້ນ ຈັ່ງໃດກໍຊິຂ້າພວກເຂົາຖິ້ມໃຫ້ໄດ້ດັ່ງຄຳກອນຂຽນວ່າ

ຍັງວ່າເປັນຂຸນສ້າງ	ສະເຫວີຍເມືອງຕາງລາດ
ສັງເລົ່າມາຖ່ອຍຮ້າຍ	ເຫັນໄດ້ແຕ່ຂອງ ດັ່ງນີ້
ກູຈັກເອົາພະຂັນສ໌ຽມ	ຟັນຫົວຫລາວສ໌ຽບ
ເອົາເລືອດລ້າງ	ລົງນ້ຳທ່າພະລານ ແທ້ແລ້ວ

ມະຫາວົງຈຶ່ງສັ່ງໃຫ້ເສນາຜູ້ບໍ່ມີຄວາມຜິດ ຈັດແຈ່ງຄອກຄາໄວ້ດີງແລ້ວນຳເອົາແສນເມືອງ, ແມ່ໄວຍະກາ, ນາງທັງຫົກ ພ້ອມດ້ວຍໝໍຊວາດນ້ຳ ແລະ ເສນາອາມາດຜູ້ອື່ນໆ ທີ່ໄດ້ຮັບຄ່າ ຈ້າງຈາກແມ່ໄວຍະກາ ຕະຫລອດຮອດນາງຈັນ ນາງຈິກ ເຊິ່ງເປັນ ຜູ້ບົວລະບັດໃກ້ຊິດກັບນາງແຕງອ່ອນ ກໍໃຫ້ຈັບຕົວມາຂັງຄືກັນ, ເພາະໄດ້ໄຕ່ຖາມໝົດຊູ້ຄົນແລ້ວ ແຕ່ເຂົາອຳຄວາມຈິງ ໃຫ້ເອົາເຂົາທັງໝົດໄປຂັງໄວ້ບ່ອນດຽວກັນໃສ່ກຸນແຈໃຫ້ດີຈົນກວ່າຫ້າວເກດສູລິວົງ

ລູກຊາຍຈະກັບມາເຖິງເມືອງໂກສີ ເມື່ອໃດຈຶ່ງຄ່ອຍພິຈາລະ ນາໂທດພວກເຂົາ, ປະກົດວ່າພວກເຂົາພາກັນນອນກອງກັນໃນ ຄຸກໃຫຍ່ ປົນຂີ້ປົນຍ່ຽວດັ່ງບົດກອນຂຽນວ່າ

ເຂົາກໍຈັບຈົນກຽວ ຂັງໃນຄອກໃຫຍ່

ເຂົາກໍນອນເກືອກຂີ້ ສະເຫມີດ້ານດັ່ງຫມູ

ຈາກນັ້ນມະຫາວົງ ຈຶ່ງມີການແຕ່ງຕັ້ງຜູ້ທີ່ມີຄຸນງາມຄວາມດີ ມີສິນທໍາ ສັດຊື່ບໍລິສຸດຕໍ່ພະອົງ ແລະ ປະເທດຊາດຂຶ້ນຮັບຕໍາ ແຫນ່ງໃຫມ່ຕາມຂັ້ນຕອນຄື ຄໍາເຝືອຝັ້ນໃຫ້ເປັນແສນເມືອງ ຫມາຍຄວາມວ່າເປັນຂຸນຫລວງຜູ້ໃຫຍ່ ມີສິດອອກຄໍາສັ່ງແທນມະຫາວົງໄດ້, ຂຸນຄານໃຫ້ເປັນຫລວງຈັນແທນຂຸນສີ, ທ້າວທຸ່ມຜູ້ໃຫ້ເປັນຫລວງ ຊາ ນດ, ຜູ້ຫນຶ່ງທີ່ຕູຍໆທ້ອງເອດເຣດນັ້ນ ໃຫ້ເປັນຊານົນກໍາບັນຊີ , ນາຍພານຜູ້ໄປພົ້ຊ້າງນັ້ນ ໃຫ້ເປັນຜູ້ຮັບຜິດຊອບກົມປະລັດຣາດ , ສ່ວນພວກໄພ່ນ້ອຍທີ່ມີຄວາມສະຫລາດຫລັກແຫລມ ກໍແຕ່ງຕັ້ງ ໃຫ້ເປັນຂຸນທຸກຄົນ ພ້ອມທັງແບ່ງປັນອານາເຂດໃຫ້ເທົ່າກັນ, ການປະຕິຣູບອໍານາດການປົກຄອງຄືນໃຫມ່ຂອງມະຫາວົງໃນເທື່ອນີ້ເຮັດໃຫ້ບ້ານເມືອງຢູ່ຊຸ່ມກິນດີໃພ່ໆກໍມີຄວາມປິຕິຊົມຊື່ນດອມແລ.

. / .

20- ບັນຍັກທັດຖະຈັກໄປໄດ້ລູກສາວ ຢູ່ໃນດອກບົວ

ບັດນີ້ກ່າວເຖິງຍັກທັດຖະຈັກ ຜູ້ເປັນພະຍາພີທັງຫລາຍ ໃນຊຸມພູທີບອັນນີ້, ຍັກທັດຖະຈັກເປັນຜູ້ຄອບຄອງເມືອງມັນທະພານມີເມຍຊື່ວ່ານາງສູນທອງ. ຕາມປົກກະຕິແລ້ວ ບັນດາພີທັງຫລາຍ ໃນເມືອງມັນທະພານນີ້ ມີອາຊີບໃນການເດີນດົງເດີນປ່າຊອກ ຫາກິນສັດປ່ານານາຊະນິດ, ຄາວນີ້ຍັກທັດຖະຈັກກໍຢູ່ໃນທໍພາສາດລາດຊາມູນທຽນມາດົນນານ ກໍອິດເມື່ອຍຄຶດຢາກອອກໄປຫາທ່ຽວດົງ ທ່ຽວປ່າ ເພື່ອເປັນການຊອກຊົມພາບວິວທິວທັດຂອງທຳມະຊາດ ໃຫ້ສ່ວາງອົກສວ່າງໃຈຈັກໜ່ວາງ› ແຕ່ການໄປເທື່ອນີ້ຄຶດວ່າຈະ ໄປຍ່າວໄກສົມຄວນ ຈຶ່ງສັ່ງລານາງສູນທອງຜູ້ເປັນເມຍດັ່ງບົດຄຳກອນຂຽນວ່າ

ມັນຈຶ່ງເອີ້ນສັ່ງນ້ອງ ນາງນາດສູນທອງ
ຈອມແພງເອີຍ ພີ່ຊິເດີນດົງໄພ້
ຄ້ອນສັ່ງແລ້ວ ຊັດດາບກາຍະສິດ
ທັງມຸງກຸດ ເຊີດຄຳປະດັບແກ້ວ
ແລ້ວເລົ່າບາຍເອົາໄດ້ ຕະບອງສີເພັດຊະຄາດ

ສຸບເກີບແກ້ວ ທະຍານລ້ຳລ່ວງໄປ

ຍັກທັດຖະຈັກສົ່ງເນຍແລ້ວ ມັນກໍເຫາະໄປທາງອາກາດ ໄປເຖິງພາເວີນກໍລົງເຊົາເອົາແຮງຄາວໜຶ່ງ ຈຶ່ງອອກເດີນທາງຕໍ່ໄປຈົນເຖິງພາຄຳ, ຢູ່ທີ່ພາຄຳນີ້ ຍັກທັດຖະຈັກໄດ້ເຫັນຄວາມ ສວຍງາມຫລາຍຢ່າງເປັນທີ່ສົນໃຈ ມັນຈຶ່ງເລາະລຽບເຂົ້າໄປໃນຖ້ຳໄດ້ເຫັນຂັ້ນລັງອັນສວຍງາມ ໃກ້ໆກັນກໍມີສະນ້ຳ ມີປ່າບົວບານເຮືອໄປທົ່ວໜ້ານ້ຳ, ມີຝູງແມງໄມ້ນານາຊະນິດບິນແສວສອດສະແຫວງຊົມດອກບົວ ຊຶ່ງມີທັງດອກກຸມ ແລະ ດອກບານ ທັງສົ່ງກິ່ນອັນ ຫອມຫວນດັ່ງບົດກອນຂຽນວ່າ

ຫລາຍມາກລົ້ນ ພັນເພດມາລາ
ບົວບານງາມ ໝື່ນດວງເຫລືອງເຫລື້ອມ
ດູຕະການລົ້ນ ຫອມຫວນຣົດຮ່ວາງ
ຝູງໝູ່ແມງພູ່ເຜິ້ງ ສະແຫວງກົ້ວກິ່ນລະອອງ

ຍັກທັດຖະຈັກເຊົາເອົາແຮງຢູ່ແຄມຖ້ຳ ແນມໄປເບິ່ງຝູງ ດອກບົວທັງຫລາຍທີ່ຢາຍຢັ້ງຕາມໜ້ານ້ຳ ພໍແສງຕາຈອງໄປທີ່ກາງ ສະຈຶ່ງໄດ້ເຫັນບົວດອກໜຶ່ງທີ່ແຕກຕ່າງຈາກບົວດອກອື່ນ. ຄືວ່າ ບົວດອກນີ້ໃຫຍ່ກວ່າໝູ່ ແລະ ມີສີສວຍງາມເປັນພິເສດ, ຍັກທັດ ຖະຈັກຄິດໃນໃຈວ່າຈະເອົາບົວດອກນີ້ ເມືອຕ້ອນນາງສູນທອງຜູ້ ເປັນເນຍ ເພື່ອໃຫ້ນາງເອົາບູຊາເທວະດາອິນພົມ; ເມື່ອຍັກທັດຖະຈັກຄິດໄດ້ແນວນັ້ນກໍຟ້າວລົງສູ່ໜອງສະມຸ່ງໜ້າໄປເດັດເອົາບົວ ດອກນັ້ນຂຶ້ນມາວາງໄວ້ຂອບສະນ້ຳ ຈາກນັ້ນຍັກທັດຖະຈັກກໍລອຍ ເລາະຫລິ້ນຕາມສະຈົນເວລາຄ້າຍຄ່ຳ ຈຶ່ງຂຶ້ນຈາກສະເພື່ອກັບຄືນ.

ເມື່ອຍັກທັດຖະຈັກກັບຄືນມາເຖິງຫໍພາສາດ ກໍຈຶ່ງມອບບົວດອກນັ້ນໃຫ້ແກ່ນາງສູນທອງຜູ້ເປັນເມຍເອົາບູຊາ ພ້ອມກັບບອກເມຍວ່າອ້າຍໄປທ່ຽວມື້ນີ້ກໍບໍ່ໄດ້ຫຍັງມາຕອນ ເຫັນແຕ່ບົວຈູມດອກນີ້ດີ ວ່າງາມໆຈຶ່ງໄດ້ເອົາມາມອບໃຫ້ເພື່ອບູຊາ, ນາງສູນທອງຮັບເອົານຳຜົວແລ້ວກໍເອົາໄປບູຊາຢູ່ຫໍຂອງນາງທັນທີ ພ້ອມທັງໄຫວ້ວອນ ເຖິງເທວະດາອິນພົມທີ່ສະຖິດຢູ່ທັງແປດດ້ານ ພໍໃກ້ຈະແຈ້ງບົວຈູມ ດອກນັ້ນກໍໄດ້ເຜີຍກີບເບີ່ງບານອອກມາຕ້ອນຮັບອະລຸນວັນໃຫມ່ ຢູ່ໃນບົວດອກນີ້ຍັງມີຍິງສາວຜູ້ຫນຶ່ງຊື່ວ່ານາງປະທຸມມານີຮູບໂສມປະໂນມພັນອັນສວຍງາມ ດັ່ງບົດກອນຂຽນໄວ້ວ່າ

ປະທຸມມາຊາດເຊື້ອ	ແຍ້ມກີບເກສອນ
ຕັ້ງວ່າມີນາງງາມ	ຢູ່ເນົາໃນຫ້ນ
ຊື່ວ່ານາງປະທຸມມານ້ອຍ	ຂາວເຫລືອງສີສະອາດ
ງາມເລີດລ້ຳ	ໂສມຫນ້າລູກພະອິນ ແທ້ແລ້ວ

ພໍແຕ່ກີບດອກບົວເຜີຍອອກ ນາງປະທຸມມາຜູ້ຢູ່ໃນດອກບົວກໍຕື່ນຕົກໃຈ ເພາະເຫັນວ່າສະຖານທີ່ນີ້ ບໍ່ແມ່ນສະນ້ຳຄືເກົ່າອີກ ແລ້ວນາງຈຶ່ງໄດ້ຮ້ອງໄຫ້ຮ່ຳໄຮ, ຕາມປົກກະຕິທຸກມື້ແລ້ວ ເມື່ອບົວແຍ້ມບານນາງຈະໄດ້ເຫັນສະນ້ຳ ເຫັນສາລາຂອງລືສີ ເຫັນຝູງແມງໄມ້ຕ່າງໆບິນສ່ວາຍສິນທ່ຽວຊົມເກສອນດອກໄມ້ຕ່າງໆຕາມສະນ້ຳ.

ແຕ່ມື້ນີ້ແນມເບິ່ງມັນບໍ່ເປັນເຊັ່ນນັ້ນ ມັນແມ່ນເມືອງມານ ຍັກໃຫ່ຍ ຫລືວ່າເຂົາໄປລັກນາງມາບໍ ນາງຄິດໃນໃຈຜູ້ດຽວ, ບົດຫນຶ່ງຕໍ່ມາກໍແຈ້ງອອກເປັນມື້ໃຫມ່ໃສແສງ, ເມື່ອແສງຕາເວັນໄດ້ພົ້ນຂອບຟ້າແລ້ວ ນາງສູນທອງກໍໄຂປະຕູປ່ອງຢ້ຽມສ່ອງເບິ່ງ ພ້ອມທັງ

ຍົກເອົາບົວດອກນັ້ນມາຈາກຮ້ານບູຊາ ເພື່ອຈະເອົາໄປຖອກຖົ້ມ ,
ນາງສູນທອງກໍຈຶ່ງຕື່ນຕົກໃຈທັນທີ ເມື່ອໄດ້ເຫັນນາງປະທຸມມາຢູ່ໃນ
ດອກບົວນັ້ນ. ນາງສູນທອງຈຶ່ງໄດ້ນຳເລື່ອງປະຫລາດໃຈໄປ ບອກ
ໃຫ້ຍັກທັດຖະຈັກ ຜູ້ເປັນຜົວໄດ້ຮູ້ ພ້ອມກັບຖາມວ່າເປັນຫຍັງ ເອົາ
ດອກບົວມາໃຫ້ຈຶ່ງບໍ່ບອກແດ່ວ່າມີຄົນຢູ່ໃນນັ້ນ ເກືອບຈະເອົາໄປຖົ້ມ
ລ້າງ ຍັກທັດຖະຈັກຈຶ່ງຕອບເມຍວ່າ ອ້າຍເອງກໍບໍ່ຮູ້ຄືດວ່າ ແມ່ນ
ດອກບົວທຳມະດາທົ່ວໆໄປຊັ້ນດອກ.

ຕໍ່ມາສອງຜົວເມຍກໍຟ້າວພາກັນອູ້ມເອົານາງປະທຸມມາອອກມາ
ຈາກດອກບົວ ດ້ວຍຄວາມຊື່ນຊົມຍິນດີ ເຫັນນາງມີຮູບພັອຜ່ອງ ພັນ
ອັນສວຍງາມ ທັງສອງຍິ່ງດີໃຈຖືວ່າແມ່ນບຸນກຸສົນແຕ່ປາງກ່ອນຄາດ
ໄດ້ນາງມາເປັນລູກ ເພາະທັງສອງຍັງບໍ່ທັນມີລູກຈະສືບເຊື້ອ ແທນ
ແນວເລີຍ. ເພື່ອຄວາມແນ່ໃຈນາງປະທຸມມາຈຶ່ງຖາມຍັກທັດຖະຈັກ
ວ່າ ອັນນີ້ແມ່ນສະບົວກາຍມາເປັນເມືອງບໍ ຫລືວ່າທ່ານຫາກໄປນຳ
ເອົາຂ້ານ້ອຍມາ, ຍັກທັດຖະຈັກຈຶ່ງບອກຄວາມຈິງໃຫ້ນາງຮູ້ວ່າ ມື້
ນັ້ນພໍ່ໄດ້ໄປເດີນດົງເດີນປ່າ ໄດ້ພົບດອກບົວທີ່ລູກອາໃສຢູ່ ຈຶ່ງເດັດ
ເອົາມາບູຊາ, ບ່ອນນີ້ບໍ່ແມ່ນບ່ອນລູກເກີດດອກ ອັນນີ້ແມ່ນ ເມືອງ
ນັນທະພານ ເປັນເມືອງຂອງບັນດາຜີທັງຫລາຍແລ ໃຜບໍ່ສາ ມາດ
ຈະມາລ່ວງລ້ຳໄດ້ງ່າຍໆ, ຍັກທັດຖະຈັກໄດ້ບອກໃຫ້ນາງປະທຸມມາ
ຮູ້ວ່າຈະເອົານາງເປັນລູກ ຈະຍົກເມືອງໃຫ້ນາງ ຈະຍົກນາງ ຂຶ້ນ
ເປັນຈອມນັນທະພານ ປະກົດວ່ານາງປະທຸມມາກໍໄດ້ຮັບປາກ ຕົກ
ລົງ.

ຈາກນັ້ນຍັກທັດຖະຈັກຈຶ່ງສັ່ງໃຫ້ບັນດາຜີທັງປວງປຸກທຳພາ ສາດ

ເສົາດຽວໃຫ້ນາງຢູ່ ຫໍພາສາດດັ່ງກ່າວໃຫ້ປະດັບປະດາໄປ ດ້ວຍແກ້ວເງິນຄຳອັນພິຈິດພິດສະດານ, ຍັກທັດຖະຈັກໄດ້ເອີ້ນຝູງຜີ ແຕ່ລະແຫ່ງມາໂຮມກັນ ເພື່ອກຽມປຸກພາສາດເສົາດຽວໃນບັນດາຜີທັງຫລາຍທີ່ມາໂຮມກັນນີ້ ຄຶດສະລິງເຊິ່ງຖືວ່າແມ່ນຜີທີ່ມີລິດເດດ ດີກວ່າເພື່ອນກໍມາພ້ອມ, ເມື່ອໄດ້ເວລາແລ້ວຍັກທັດຖະຈັກຈຶ່ງ ບອກໃຫ້ຜີຄຶດສະລິງຊ່ວຍປຸກພາສາດເສົາດຽວ ແຕ່ໃຫ້ມີເຈັດຍອດ ພ້ອມທັງປະດັບປະດາໃຫ້ສວຍງາມ ເປັນພິເສດ ເພື່ອໃຫ້ນາງປະທຸມມາໄດ້ຢູ່ອາໃສ.

ຜີຄຶດສະລິງໄດ້ຮັບຄຳສັ່ງກໍເຕືອນໃຫ້ບັນດາຜີທີ່ເປັນພວກ ພ້ອງຊ່ວຍກັນລົງມືກໍ່ສ້າງກ່ອນອື່ນຫມົດ ຜີຄຶດສະລິງໄດ້ທະຍານບິນໄປ ສູ່ດົງໃຫ່ຍ ເພື່ອເລືອກໄມ້ມາເຮັດເສົາພາສາດ ມັນຈຶ່ງໄປຖອດ ໄດ້ຕົ້ນຍາງໃຫ່ຍຫອບເອົາມາທັງຕົ້ນເລີຍ, ເມື່ອເອົາມາຮອດ ເມືອງມັນທະພານແລ້ວ ຝູງຜີອື່ນໆກໍຊ່ວຍກັນຖາກກັນເສາະໃຫ້ມັນກ້ຽງມັນໃສ ແລ້ວຈຶ່ງຕັ້ງຂຶ້ນເປັນເສົາພາສາດເສົາດຽວ ຕາມຄວາມປາຖະຫນາຂອງຍັກທັດຖະຈັກທຸກປະການ.

ເມື່ອປຸກພາສາດຮຽບຮ້ອຍແລ້ວ ກໍເຊີນນາງປະທຸມມາຂຶ້ນຢູ່ໂອກາດດຽວກັນນີ້ ຍັກທັດຖະຈັກ ກໍສັ່ງໃຫ້ບັນດານາງຜີຫນຸ່ມທັງຫລາຍທີ່ມີຮູບງາມຈາກທົ່ວເມືອງຕ່າງໆ ລວມໄດ້ຫົກຫມື່ນນາງສາວ ເພື່ອມາເຝົ້າ ແລະ ບົວລະບັດນາງປະທຸມມາ, ປະກົດວ່ານາງປະ ທຸມມາກໍມີຄວາມສຸກສົດຊື່ນ ທີ່ໄດ້ຢູ່ຫໍພາສາດໃນເມືອງຍັກເມືອງຜີ ອັນນີ້; ມື້ຫນຶ່ງນາງປະທຸມມາກໍຄຶດຢາກໄປເກັບດອກໄມ້ໃນສວນ ຕາງວ່າໄປທ່ຽວຫລິ້ນໃຫ້ມັນມ່ວນຊື່ນຂຶ້ນຕື່ມ ຄຶດໄດ້ແນວນັ້ນກໍຈຶ່ງໄປຄອບ

ຍັກທັດຖະຈັກຜູ້ເປັນພໍ່ ຝ່າຍຍັກທັດຖະຈັກກໍບໍ່ອາດຈະຂັດຂືນ ຄວາມປາຖະໜາຂອງນາງໄດ້ ຈຶ່ງອະນຸຍາດໃຫ້ໄປໄດ້ຕາມຈຸດປະສົງ . ນາງປະທຸມມາຈຶ່ງໄດ້ຈັດຊວນເອົາຝູງຜີໜຸ່ມທັງຫລາຍໄປນຳກັນ ມີຂະບວນລົດແຫ່ແຫນແພນກັ້ງໄປພ້ອມ ໃພງກໍມ່ວນຊື່ນ, ພໍໄປ ເຖິງສວນບ່າວສາວກໍພາກັນເກັບດອກໄມ້ມາຮ້ອຍຝາກກັນ ບາງພ່ອງ ກໍເວົ້າຢອກລໍ້ສຽດສີກັນ ຕາມປະສາຂອງບ່າວສາວ ທັງພ່ອງ ເກັບດອກໄມ້ທັງພ່ອງຫອມກິ່ນກາຍຂອງນາງປະທຸມມາ, ຫອມໄປ ຫອມມາຫລາຍເທື່ອ ກໍຄິດຢາກຈະຈົກກິນນາງທັງດິບ ຕາມສັນດານຂອງຍັກ, ຖ້າຈະພາກັນກຸມກັດກິນນາງໂລດ ກໍຢ້ານພະຍາຍັກທັດຖະຈັກຈະຕັດຄໍ ຍັກບາງໂຕກໍເວົ້າວ່າລໍຖ້າໃຫ້ພະຍາທັດຖະຈັກຕາຍ ກ່ອນຈຶ່ງກິນ ບາງໂຕກໍວ່າຮ້ວາຍຂອງແຊບສົ່ງຊິປະໄວ້ດົນແທ້ ດັ່ງ ບົດກອນຂຽນວ່າ

ລາງເລົ່າຊໍແຊເວົ້າ ຫອມນາງແຈະປາກ
ເອົາຫາກຄິດຢາກເຈົ້າ ກິນນ້ອຍຍອດນາງ
ອັນນີ້ຕັ້ງແມ່ນຂອງແຊບຊອຍ ກິນແຕ່ບູຮານ ແທ້ແລ້ວ
ຫາກແມ່ນລາຫານເຮົາ ແຕ່ປາງປະຖົມເຖົ້າ
ສັງເລົ່າເອົາມາໄວ້ ຣົມດັງລາຍອອກ ສັນນີ້
ຄອງໃຫ້ພະຢໍ່າເກົ້າ ຕາຍແລ້ວຊິຈົກກິນ ແລນາ

ແຕ່ວ່າຄວາມເວົ້າຄວາມໂລມຂອງພວກຍັກໜຸ່ມທັງຫລາຍ ໄດ້ດັງເຂົ້າເຖິງຫູຂອງນາງປະທຸມມາທຸກໆຄວາມ, ນາງຈຶ່ງຄິດໃນໃຈວ່າ ບໍ່ສົມຄວນຈະທ່ຽວຫລິ້ນຢູ່ສວນດອນພວກຍັກໜຸ່ມເລົ່ານີ້ດົນເກີນໄປ ກົວວ່າເຂົາຈະພາກັນຈຸມກິນຕົວນາງ, ດັ່ງນັ້ນນາງຈຶ່ງຟ້າວພາ

ພວກເຂົາກັບຄືນສູ່ເມືອງທັນທີ. ພາຍຫລັງມາເຖິງເມືອງແລ້ວນາງຈຶ່ງຟ້າວຂຶ້ນເລົ່າເຫດການທັງຫມົດສູ່ຍັກທັດຖະຈັກຜູ້ເປັນພໍ່ໃຫ້ຮູ້ພ້ອມທັງອ້ອນວອນໃຫ້ຍັກທັດຖະຈັກເອົານາງໄປສົ່ງຄືນ ຢູ່ສະດອກບົວດົ່ງບົດກອນຂຽນວ່າ

ຄັນວ່າຫມົດບຸນເຈົ້າ ທັງສອງພໍ່ແມ່ ໄປນັ້ນ
ເຂົາຈັກຂົບຄາບຄ້ຽວ ຕົວຂ້ອຍຈິກກິນພໍ່ເອີຍ
ຂໍໃຫ້ພະພໍ່ເຈົ້າ ເອົາຮຽມໄປສົ່ງ ເສຍຖ້ອນ
ໄວ້ທີ່ສະເກົາພຸ້ນ ບົວຕຸ້ມຫໍ່ຕົວ ພໍ່ເອີຍ

ເມື່ອຍັກທັດຖະຈັກໄດ້ຟັງ ຄຳບອກເລົ່າຂອງນາງປະທຸມມາ ກໍເກີດໂມໂຫໂຫໂສ ສັ່ງໃຫ້ໄປນຳພວກຍັກທີ່ພານາງໄປທ່ຽວສວນມາຫາດ່ວນ, ເມື່ອພວກຍັກຫນຸ່ມເຂົ້າໄປພົບ ຍັກທັດຖະຈັກກໍຮ້າຍເປິ້ງໆວ່າເປັນຫຍັງພວກສູຈຶ່ງພາກັນເວົ້າວ່າຈະກິນລູກສາວຂອງກູ ຖ້າສູບໍ່ຢາກຄືຂາດເຊົາເດີ ຢ່າເວົ້າຕື່ມອີກ.

ຕໍ່ມານາງປະທຸມມາ ຈຶ່ງເວົ້ານຳຍັກທັດຖະຈັກຜູ້ເປັນພໍ່ວ່າ ພໍ່ເອີຍ ບັນດາຍັກທັງຫລາຍຝູງນີ້ ນອກຈາກຈະບໍ່ປະຕິບັດຫນ້າທີ່ວຽກງານທີ່ພໍ່ມອບຫມາຍໃຫ້ແລ້ວ ຍັກພວກນີ້ຍັງເຫມັນສາບເຫມັນ ກູຍປານວ່າໂຄງຄວາຍຕາຍຮ່າ ລູກບໍ່ຊ່າງຊິຢູ່ນຳໄດ້ດອກ, ຝ່າຍ ຍັກທັດຖະຈັກໄດ້ຍິນຄຳເວົ້າຂອງນາງ ກໍພະຍາຍາມອົບອອຍນາງບໍ່ໃຫ້ເດືອດຮ້ອນເຄືອງໃຈ ຮັບວ່າຈະໄປຊອກເອົາຜູ້ສາວທີ່ເປັນ ແນວນາມຄືນມາຢູ່ເຝົ້າຮັກສາ; ນາງປະທຸມມາໄດ້ຟັງຄຳບອກກ່າວຂອງພໍ່ກໍດີໃຈ.

ມື້ຕໍ່ມາພະຍັກທັດຖະຈັກ ກໍເຫາະໄປສູ່ເຂດແດນຂອງເມືອງຄືນ

ຈຶ່ງໄປລັກເອົານາງອິນທອງ ເຊິ່ງເປັນລູກສາວຂອງພະຍາ ເມືອງຈັກອິນ, ນາງອິນທອງນີ້ພະຍາຈັກອິນໄດ້ເອົາໄວ້ໃນຍອດແກ້ວຂອງຜາສາດເສົາດຽວ, ແລະ ພ້ອມກັນນີ້ຍັກທັດຖະຈັກກໍເຫາະ ໄປ ສູ່ເມືອງຊຸມພູ ໄດ້ໄປລັກເອົາລູກສາວຂອງພະຍາຊຸມພູ ຢູ່ໃນ ຍອດແກ້ວຜາສາດເສົາດຽວຄືກັນ ນາງນີ້ມີຊື່ວ່າຢາດຟ້າ, ເມື່ອຍັກທັດຖະຈັກລັກໄດ້ນາງທັງສອງແລ້ວ ກໍພາເອົານາງທັງສອງມາໄວ້ໃນຫໍຜາສາດໃນເມືອງມັນທະພານ.

ຈາກນັ້ນ ຍັກທັດຖະຈັກກໍສຸບເກີບແກ້ວຂັດຕາບກາຍຍະສິດ ມືຖືຕະບອງເພັດ ເຫາະອອກຈາກເຂດມັນທະພານ ໄປສູ່ຖູມຂ່ວງ ລືສີເຊິ່ງສະຖານທີ່ນັ້ນມີແມ່ຊີຂາວຈຳສິນຢູ່ນຳອ້າຍ, ເມື່ອຍັກທັດ ຖະຈັກລົງແວ່ເຊົາທີ່ນັ້ນ ມັນໄດ້ແນມເຫັນສາລາບ່ອນຢູ່ຂອງລືສີທັງ ສອງເຊິ່ງມີຄວາມສວຍງາມຫາທີ່ປຽບບໍ່ໄດ້ ຍັກທັດຖະຈັກຄິດໃນໃຈ ວ່າແມ່ນໃຜມາຢູ່ກາງປ່າກາງດົງຄືແນວນີ້ ດັ່ງບົດກອນຂຽນວ່າ

ແຕ່ນັ້ນທັດຖະຈັກທ້າວ	ຄະນຶງໃຈຄຶດຮ່ຳ
ໃຜຜູ້ມາຢູ່ຢັ້ງ	ດົງກວ້າງປ່ຽວພອຍນີ້ເດ
ຫລືວ່າເປັນປາງເສືອ	ຂຸນມານມາແຕ່ງ ຈິງລື
ຫລືວ່າປາງທ່ານທ້າວ	ລືສີເຈົ້ານັ່ງທຳ ນັ້ນລື

ເມື່ອຄະນຶງໃນໃຈດັ່ງນັ້ນແລ້ວ ຍັກທັດຖະຈັກກໍກັບເພດ ເປັນຊາຍໜຸ່ມຊາວເມືອງ ມີຮູບໂສມງາມປານພະອິນ, ແລ້ວກໍເຂົ້າໄປໃກ້ງສາລາເລາະລຽບເບິ່ງສະພາບທົ່ວໆໄປ ຈຶ່ງໄດ້ເຫັນນາງແມ່ຊີຂາວຢູ່ໃນສາລາລຳພັງຄົນດຽວ, ເນື່ອງຈາກວ່າກຸມພາລືສີຜູ້ ເປັນອ້າຍບໍ່ຢູ່ໄປທ່ຽວຊອກຫາໝາກໄມ້ຫົວມັນມາຊຸ້ມອງກິນ.

ຝ່າຍຍັກທັດຖະຈັກຜູ້ປອມເພດລວງຕາ ເມື່ອໄດ້ໂອກາດຄືແນວນີ້ກໍ່ຟ້າວເອົາມືໄວ້ປ່ອງປະຕູສາລາ ເຮັດໃຫ້ແມ່ຊີຂາວແຕງອ່ອນຕື່ນຕົກໃຈ, ແມ່ຊີຂາວຈິ່ງຟ້າວຍ້ຽມອອກມາເບິ່ງ ຈຶ່ງເຫັນຍັກທັດ ຖະຈັກຜູ້ປອມແປງເປັນຊາຍໜຸ່ມຮູບງາມ ຢືນຢູ່ ແມ່ຊີຂາວຈິ່ງຖາມວ່າ ເຈົ້າແມ່ນໃຜ ແມ່ນພະອິນພະພົມບໍ ຫລືວ່າຝູງຜີເພດພິມານມາຫຼອກມາລວງ. ແຕ່ນັ້ນຍັກທັດຖະຈັກຈິ່ງໄດ້ບອກນາງຊີຂາວໂດຍຊື່ ວ່າ ເຮົາບໍ່ແມ່ນພະອິນພະພົມຫຍັງດອກ ເຮົາແມ່ນແນວນາມພະ ຍາເມືອງມັນທະພານ, ເຮົາມານີ້ຍ້ອນໄດ້ຂ່າວຂອງນາງ ເມື່ອມາເຖິງກໍເປັນຄວາມຈິງທຸກຢ່າງ ຈຶ່ງຂໍເຊີນນາງເມືອສະເຫວີຍ ສືບສ້າງເມືອງມັນທະພານກວ້າງໃຫຍ່ຢູ່ພຸ້ນບໍ່ມີຄວາມທຸກຍາກໄຮ້ ລຳບາກກາຍໃຈຫຍັງໝົດ, ອ້າຍຈະຍົກນາງຂຶ້ນເປັນເມຍ ແລະ ຈະມອບເມືອງມັນທະພານທັງໝົດໃຫ້ຄອບຄອງ; ແຕ່ແມ່ຊີຂາວ ແຕງອ່ອນໄດ້ບອກກັບຍັກທັດຖະຈັກວ່າ ຈະໃຫ້ນ້ອງເມືອຢູ່ເມືອງມັນ ທະພານດອນນັ້ນ ຄືຈະເປັນໄປບໍ່ໄດ້ດອກ ເພາະວ່າຢູ່ບ່ອນນີ້ກໍມີ ແຕ່ສອງອ້າຍນ້ອງນຳກັນ ຫ່ອນຊິປະກຸມພາຜູ້ເປັນອ້າຍໜີໄປໄດ້, ທຸກຍາກລຳບາກແນວໃດກໍຂໍຢູ່ປ່າດອນອ້າຍຈະບໍ່ໄປບໍ່ມາທາງໃດ ປະອ້າຍດອກ.

ເຖິງແມ່ຊີຂາວແຕງອ່ອນ ຈະປະຕິເສດ ແລະ ຮ້ອງຂໍ ຄວາມເຫັນໃຈຈາກຍັກທັດຖະຈັກປານໃດກໍຕາມ, ແຕ່ຍັກທັດຖະຈັກກໍບໍ່ຍິນຍອມ ແລະ ເວົ້າກັບແມ່ຊີຂາວວ່າ ທຳມະດາລືສີຕ້ອງຈຳສິນພາວະນາຢູ່ປ່າຢູ່ດົງຄົນດຽວ ບໍ່ຫ່ອນຊິມີພີ່ມີນ້ອງມາຢູ່ນຳຈັ່ງຊີ້ດອກ, ເວົ້າແລ້ວຍັກທັດຖະຈັກກໍຫອບອຸ້ມເອົາແມ່ຊີຂາວເຫາະດັ້ນກີບເມກ ມຸ່ງ

ຫນ້າ ໄປສູ່ເມືອງນັນທະພານທັນທີ, ສ່ວນແມ່ຊີຂາວກໍໄດ້ແຕ່ຄຶດ ຮ່ຳໄຮເຖິງລີສີຜູ້ເປັນອ້າຍ ຄຶດວ່າຕອນຄ່ຳອ້າຍກັບມາສາລາແລ້ວ ບໍ່ພໍ້ນາງ ອ້າຍກໍຈະຊອກຫາໄປທຸກຫົນທຸກແຫ່ງ. ດ້ວຍຄວາມອາໄລ ອາວອນໂສກເສົ້າເຖິງອ້າຍ ນາງຊີຂາວແຕງອ່ອນຈຶ່ງສະລົບຕາຍ ທັນທີ ຍັກທັດຖະຈັກຈຶ່ງເສກຄາຖາເປົ່າເອົານາງຄືນມາ ຫລັງຈາກຄືນມາໄດ້ຄາວຫນຶ່ງ ກໍຕາຍຕື່ມອີກ ຍັກທັດຖະຈັກກໍເປົ່າຄືນເປັນເທື່ອທີ່ສອງ.

ເພື່ອເປັນການປ້ອງກັນ ນາງໃຫ້ປອດໄພ ຍັກທັດຖະຈັກ ຈຶ່ງນິລະມິດຕົນເປັນຍົນແລ້ວ ເອົາແມ່ຊີຂາວໃສ່ໃນຫົງແກ້ວມີຍອດ ເປັນຄຳອັນວິຈິດສວຍງາມ ເປັນລັກສະນະຫໍຜາສາດ ແລ້ວກໍພາ ແມ່ຊີຂາວເຫາະໄປສູ່ເມືອງນັນທະພານ, ເມື່ອໄປເຖິງກໍເອົາຂຶ້ນ ໄວ້ເທິງຫໍຜາສາດ ແຕ່ປະກົດວ່າແມ່ຊີຂາວຍັງຮ້ອງໄຫ້ບໍ່ຢ່າບໍ່ເຊົາເທື່ອ. ຈາກນັ້ນຍັກທັດຖະຈັກ ຈຶ່ງເອີ້ນເອົານາງສູນທອງຜູ້ເປັນເມຍມາຫາ ແລະ ບອກໃຫ້ເອົາເສື້ອຜ້າອາພອນ ພ້ອມດ້ວຍເຄື່ອງປະດັບ ເອ້ຢ້ອງມາຜັດປ່ຽນເຄື່ອງຊີຂາວ ເພື່ອໃຫ້ນາງລາສິນສິກອອກ ຈາກເພດຊີຂາວ, ເມື່ອປ່ຽນເພດຊີຂາວມາເປັນາງແຕງອ່ອນທຳມະດາແລ້ວ ນາງສູນທອງເມຍຂອງທັດຖະຈັກ ກໍນັ່ງໂອ້ລົມອື່ນອອຍ ຖາມຂ່າວຄາວສຸກທຸກກັບນາງແຕງອ່ອນຄືດັ່ງເອື້ອຍກັບນ້ອງ ເວົ້າ ວ່າເມື່ອນ້ອງຕົກມາເຖິງເມືອງນັນທະພານນີ້ແລ້ວ ຢ່າໂສກຢ່າເຫງົາ ເມືອງເຮົາອຸດົມສົມບູນພຽບພ້ອມຫມົດທຸກຢ່າງ ສົມບັດຕ່າງໆ ໃນເມືອງນັນທະພານນີ້ເອື້ອຍຈະມອບໃຫ້ນ້ອງທັງຫມົດ.

ຕໍ່ມານາງສູນທອງກໍໄດ້ຖາມເຖິງ ຕົ້ນປາຍສາຍເຫດທີ່ ນາງ

ແຕງອ່ອນໄດ້ພັດເພພະເນຈອນໄປຢູ່ຖ້ຳຢູ່ປ່າ ນາງແຕງອ່ອນກໍ ໄດ້ເລົ່າໃຫ້ນາງສູນທອງຟັງແຕ່ຕົ້ນຈົນສຸດປາຍ, ເຮັດໃຫ້ນາງສູນທອງຍິນທຸກຍິນໂສກໃນຊີວິດຕົວຈິງຂອງນາງແຕງອ່ອນໃນເວລາຜ່ານມາໆ ຈາກນັ້ນຍັກທັດຖະຈັກກໍໃຫ້ລົມ ໄປນຳນາງປະທຸມມາຜູ້ເປັນລູກມາຫາ ເມື່ອນາງມາຮອດຍັກທັດຖະຈັກ ກໍບອກໃຫ້ລູກສາວຮູ້ວ່າ ດຽວນີ້ ພໍ່ໄດ້ໄປຊອກເອົາຄົນມາຢູ່ເຝົ້າລູກ ໄດ້ເຖິງສາມຄົນແລ້ວ ລູກດີໃຈຫລືບໍ່ ? ນາງປະທຸມມາກໍບອກກັບຜູ້ເປັນພໍ່ວ່າ ດີໃຈຫລາຍ ໂດຍສະເພາະແມ່ນນາງແຕງອ່ອນ ປະກົດວ່ານາງປະທຸມມາມີຄວາມພໍ ໃຈໃນຕົວຂອງນາງແຕງອ່ອນຫລາຍ ເຫັນວ່ານາງແຕງອ່ອນມີ ຄວາມພຽບພ້ອມໄປດ້ວຍຄຸນສົມບັດຂອງກຸນລະສະຕີທຸກຢ່າງ, ສ່ວນ ນາງແຕງອ່ອນກໍເຫັນວ່ານາງປະທຸມມາ ເປັນຜູ້ຍິງທີ່ໜ້າຮັກແພງສຸພາບອ່ອນຫວານ, ຈາກນັ້ນນາງປະທຸມມາຈຶ່ງພານາງແຕງອ່ອນຂຶ້ນ ໄປສູ່ຫໍຜາສາດ ແລ້ວທັງສີ່ສາວກໍຢູ່ຮ່ວມກັນດ້ວຍຄວາມຜາສຸກທຸກ ປະການ.

21- ບັນລືສີ ກຸມພາ ຮ່ຳໄຮ ຫາບ້ອງ

ກ່າວເຖິງພະລືສີ ກຸມພາຜູ້ເປັນອ້າຍຂອງນາງແຕງອ່ອນມື້ນັ້ນພໍ ຕາເວັນຄ້າຍຄ່ຳ ພະລືສີກຸມພາກໍກັບຈາກປ່າມາຫາສາລາທີ່ພັກພ້ອມ ດ້ວຍໝາກໄມ້ນານາຊະນິດ ເພື່ອມາຕ້ອນນ້ອງ, ພໍມາເຖິງກໍເອີ້ນ ໃຫ້ນ້ອງອອກມາຕ້ອນ ແຕ່ປະກົດວ່າມື້ນີ້ເອີ້ນຫາທາງໃດກໍມິດ ຊອຍ ນ້ອຍດັ່ງບົດກອນຂຽນວ່າ

ມາເຢີກອງແພງແກ້ວ	ນາງຊິນ້ອງພີ່ ກູເອີຍ
ພະພີ່ມາຮອດແລ້ວ	ນາງແກ້ວຢູ່ໃສ ພີ່ເດ
ພະກໍຮຸນແຮງເອີ້ນ	ຫານາງອິດອ່ອນ
ບໍ່ຍິນສຽງຕ່ອນຕີ້	ນາງນ້ອຍງຽບເຢັນ

ພະລືສີກຸມພາຄະນຶງໃນໃຈວ່າ ນາງແຕງອ່ອນໄປທ່ຽວຫາຫລິ້ນ ໃນປ່າແລ້ວຫລົງທາງບໍ ເມື່ອຄະນຶງແນວນັ້ນ ຈຶ່ງອອກຊອກຫານ້ອງ ໄປອ້ອມບໍລິເວນສາລາ ແຕ່ຊອກເອີ້ນທາງໃດກໍບໍ່ເຫັນ, ລືສີກຸມພາ ຈຶ່ງກັບມາອາບນ້ຳພັກຜ່ອນຢູ່ສາລາຄອງວ່ານາງແຕງອ່ອນຈະມາຄອງ ແລ້ວຄອງອີກກໍມິດ; ພະລືສີກຸມພາໄດ້ແຕ່ຮ່ຳໄຮຫານ້ອງບໍ່ຮູ້ວ່າເປັນ ຕາຍຮ້າຍດີແນວໃດ ວ່າແມ່ນເສືອຫລືສັດຮ້າຍອື່ນມາຂົບຄາບ ຄ້ຽວ ກິນກໍບໍ່ມີຮອຍເລືອດ ແມ່ນກະທັ້ງຮອດສົ້ນເສື້ອກໍບໍ່ເຫລືອໄວ້ໃຫ້ເຫັນ

ເມື່ອຊອກຫມົດທຸກແຫ່ງຫົນບໍ່ເຫັນແລ້ວ ພະລືສີກຸມພາກໍມີແຕ່ຕັ້ງໃຈບຳເພັນພາວະນາຢູ່ກາງປ່າ ຄົນດຽວ ສ່ວນຈິດໃຈກໍຍັງຄຶດເຖິງນ້ອງບໍ່ເລີກບໍ່ແລ້ວ ແຕ່ກໍຈົນປັນຍາບໍ່ຮູ້ຈະໄປຊອກຫາທາງໃດ.

24/VII
ຫ້າມຈຳໜ່າຍ

22- ບັ້ນພະອິນບອກໃຫ້
ທ້າວເກດສຸລິຍົງຍານໄປນຳເອົາແມ່

ກ່າວເຖິງພະອິນຢູ່ເທິງສະຫວັນ ມື້ຫນຶ່ງເກີດມີຄ້ອນກຸ້ມຕຸ້ມ ໄປເຖິງພະອິນ ເຮັດໃຫ້ພະອິນມີຄວາມສົງໃສ ຈຶ່ງຫລິງລົງມາ ເບິ່ງໂລກເມືອງຄົນ ຈຶ່ງໄດ້ເຫັນນາງແຕງອ່ອນ ພວມຕົກຢູ່ໃນ ເມືອງຂອງຜີມານ, ພະອິນເກີດມີຄວາມອີດູສົງສານນາງ ຈຶ່ງສັ່ງໃຫ້ ຜູ້ເປັນນ້ອງຊາຍຊື່ທັດສະໄນ ຣີບລົງມາບອກທ້າວເກດສຸລິຍົງຍານໃຫ້ໄປນຳເອົານາງແຕງອ່ອນຜູ້ເປັນແມ່ ອອກຫນີຈາກເມືອງມານ ໄປສະເຫວີຍເມືອງຄົນ ດັ່ງບົດກອນຂຽນວ່າ

ແຕ່ນັ້ນທັດສະໄນເຈົ້າ	ເຫວດລົງເປືອງ
ເຖິງຈອມເມືອງ	ຣອດປາວ ປາງ ແກ້ວ
ທັດສະໄນເຂົ້າ	ເຖິງບາບົນບອກ
ເລົ່າເຫດໃຫ້	ພໍຮູ້ຮ່າງການ

ທ້າວທັດສະໄນບອກກັບທ້າວວ່າ ດຽວນີ້ແມ່ຂອງເຈົ້າພວມ ໄດ້ຮັບຄວາມທຸກໂສກຢູ່ເມືອງຜີ ຊື່ວ່າເມືອງນັນທະພານ ເພາະຍັກທັດຖະຈັກ ໄດ້ລັກເອົາແມ່ຂອງເຈົ້າ ໄປຈາກພະລີສີກຸມພາຜູ້ເປັນອ້າຍ , ເມື່ອທ້າວເກດສຸລິຍົງຍານໄດ້ຮູ້ຂ່າວ ຈຶ່ງຟ້າວຖາມຄືນວ່າ ເມືອງ

ນັນທະພານຢູ່ທາງໃດຂໍໃຫ້ບອກແດ່, ທ້າວທັດສະໄນຈິ່ງບອກ ວ່າ ເມືອງນັນທະພານໃຫ້ທ້າວໄປຊື່ນີ້ ຢ່າຫລີກຢ່າແວ່ໄປທາງອື່ນເຫາະ ລອດດາວປະກາຍໄປຈະແນມເຫັນເມືອງນັນທະພານໂລດ ດັ່ງ ບົດ ກອນຂຽນວ່າ

ໃຫ້ເຈົ້າລອດຫນ່ວຍແກ້ວ ໃສ່ສ່ອງດາວປະກາຍ
ຫາກຈັກເຫັນເມືອງມານ ດັ່ງໃຈຈົງອ້າງ

ເມື່ອທ້າວທັດສະໄນ ບອກທິດບອກທາງໄປສູ່ເມືອງນັນທະພານ ໃຫ້ທ້າວເກດສຸລິຍົງຍານຮູ້ແລ້ວ ກໍອຳລາກັບຄືນສູ່ຊັ້ນຟ້າດາວະດຶງ.

23- ບັ້ນທ້າວເກດສຸລິຍັງຍານໄປນໍາຫາແມ່

ທ້າວເກດສຸລິຍັງຍານໄດ້ຮູ້ຂ່າວແມ່ຈາກທ້າວທັດສະໄນແລ້ວ ກໍກັບໄປອໍາລາແມ່ລຽງ ຄືນາງເທບລີລາ ບອກວ່າຈະໄປນໍາເອົາແມ່ໃຫ້ໄດ້ ຖ້າຫາກບໍ່ໄດ້ແມ່ມາ ຈະເຣັດສົງຄາມກັບພວກຍັກທັດຖະຈັກ, ຝ່າຍນາງເທບລີລາ ກໍບອກທ້າວວ່າຢ່າໄດ້ປະມາດເປັນອັນ ຂາດເພາະຍັກໂຕນີ້ບໍ່ແມ່ນຂອງທໍາມະດາປານໃດ, ສ່ວນດາບພະຂັນໄຊ ແລະສອນແສງໃຫ້ເອົາທຽມຕົວໄວ້ ເວລາໄປກໍໃຫ້ລະມັດລະ ວັງເພາະຍັກພວກມັນອອກທ່ຽວປ່າຫາຊອກກິນບໍ່ຂາດແຕ່ລະມື້, ໃຫ້ເອົາພວກຜີເມືອງໄປເປັນເພື່ອນທາງ ຍາມຈະຫລັບນອນກໍໃຫ້ມີສະຕິຜັດປ່ຽນກັນເວນຍາມດັ່ງຄໍາກອນຂຽນວ່າ

ອັນໜຶ່ງຢ່າໄດ້ຫລືອພອກພົ້ນ ເຫັນແຕ່ຄວາມນອນ ແມ່ເດີ
ຄັນວ່າເອົາມາຫລອນ ເມື່ອນອນບໍ່ມີຮູ້
ຄັນວ່າບາຄານທ້າວ ນອນລົງໃຫ້ພີຢູ່ ຍາມເດີ
ຖ້າວ່າຜີເມື່ອຍແລ້ວ ບາທ້າວຢູ່ຍາມ ແມ່ເດີ

ພ້ອມນີ້ນາງເທບລີລາກໍໄດ້ມອບຜ້າວິເສດ ແລະ ແຫວນມໍ ລະກົດໃຫ້ ເພື່ອໃຊ້ເປັນອາວຸດປາບພວກມານ ຫລືໃຊ້ເປັນເຄື່ອງບິລະ ນິດໃຫ້ເປັນຄົນນັບລ້ານນັບໂກດກໍໄດ້, ສ່ວນແຫວນນັ້ນຖ້າມານເອົ້າ

ມາໃກ້ໃຫ້ໂຍນແຫວນໃສ່ ແຫວນຈະກາຍເປັນໄຟໄຫມ້ມານທັນທີ.

ເມື່ອໄດ້ເວລາແລ້ວ ທ້າວເກດສຸລິຍົງຍ່ານ ແລະ ພີເມືອງກໍຂີ່ມ້າເຫາະລ່ອງເວຫາອາກາດໄປ ຂ້າມພູຜາປ່າໄມ້ຫ້ວຍຮ່ອງລຳເຊ ນັບເວລາໄດ້ໜຶ່ງເດືອນ ຈຶ່ງເຫາະໄປເຖິງເຂດສາລາບ່ອນລືສີກຸມພາຜູ້ເປັນລູງຢູ່ຈຳສິນພາວະນາ, ທ້າວ ແລະ ພີແນມເຫັນ ສາລາປະກົດວ່າຮຸ່ງເຮືອງສວຍງາມ ທ້າວຈຶ່ງຄິດແປກໃຈວ່າ ແມ່ນໃຜມາສ້າງທີ່ຜາສາດຢູ່ກາງປ່າຫລືພວກຜີຍັກມັນມາປອມແປງ ເພື່ອຫລອກກິນຄົນບໍ ຫລືວ່າມີລືສີມາບຳເພັນພາວະນາຢູ່ບ່ອນນີ້; ທ້າວຈຶ່ງ ລົງຜູກມ້າໃຫ້ພີຮັກສາຖ້າ ຈາກນັ້ນທ້າວກໍຄ່ອຍໆລຽບເຂົ້າໄປເບິ່ງໃກ້ໆ ຈຶ່ງຮູ້ວ່າແມ່ນພະລືສີຜູ້ຊົງທຳ ທ້າວຈຶ່ງຄິດຢາກລອງຢອກພະລືສີທ້າວຈຶ່ງເອົາໄມ້ເຄາະໄມ້ຄ້ຳເຫົ້າຂອງລືສີຢູ່ຂ້າງຝາ, ໄມ້ຄ້ຳເຫົ້າ ລົ້ມລົງເຮັດໃຫ້ພະລືສີຕື່ນຕົກໃຈ ຈຶ່ງລຸກມາໄຂປະຕູສ່ອງເບິ່ງ ແຕ່ທ້າວເກດສຸລິຍົງຍານ ໄດ້ຫລົບລີ້ບໍ່ໃຫ້ລືສີເຫັນ; ຝ່າຍລືສີຄິດໃນໃຈ ວ່າອາດແມ່ນຜີຍັກທີ່ມາລັກເອົານ້ອງໄປກິນ ແລ້ວພວກມັນກັບມາ ອີກຫວັງຈະເອົາລືສີໄປກິນຕື່ມກໍເປັນໄດ້, ພະລືສີຈຶ່ງຍ່າງອ້ອມເຂດສາລາທັງພ່ອງຈື່ມຄາຖາດີເປັນການປາບມານ.

ເພື່ອເປັນການລວງຕາ ລືສີຕື່ມອີກ ທ້າວຈຶ່ງຈອບໆເຂົ້າໄປໃນສາລາແລ້ວບາຍເອົາຜ້າຮອງນັ່ງຂອງລືສີປັ້ນທາງເທິງລົງລຸ່ມພ້ອມກັບເອົາຜົດໄມ້ມາປັກໄວ້, ເມື່ອພະລືສີກັບເຂົ້າໄປໃນສາລາກໍຈຶ່ງເຫັນຜ້າຮອງນັ່ງຜິດປົກກະຕິ ລືສີກໍຍິ່ງຈື່ມທຸກເປັນການໃຫຍ່ ເວົ້າວ່າຖ້າຊຸມຜີພວກສູຢາກກິນກູ ກໍຮີບມາກິນໃຫ້ມັນຕາຍໄປນຳນ້ອງ ໃຫ້ໝົດເວນໝົດກຳກູສາ, ເມື່ອທ້າວເກດສຸລິຍົງຍານ ໄດ້ຟັງຄຳຈື່ມ ທຸກ

ຂອງລີສີຈຶ່ງເຂົ້າໃຈວ່າ ລີສີອົງນີ້ອາດແມ່ນລູງຂອງເຮົາດັ່ງບົດກອນ ຂຽນວ່າ

ແຕ່ນັ້ນບາຄານທ້າວ ຟັງຄຳລີສີຈົ່ມ
ກໍຫາກດູປະຫລາດແທ້ ບາທ້າວຮ່ຳຄະນຶງ
ອັນນີ້ອາດແມ່ນລີສີເຈົ້າ ຕົນລູງອ້າຍແມ່ ກູແລ້ວ
ຍາມເມື່ອກູຍອກຫລິ້ນ ລີສີເຈົ້າຮ່ຳໄຮ ດັ່ງນີ້

ທ້າວເກດສຸລິຍົງຍານຄິດວ່າ ຄວນຈະເຂົ້າໄປຖາມກົກ ປາຍ ສາຍເຫດຮ້າຍດີດອນລີສີ ຄິດໄດ້ແນວນັ້ນ ທ້າວຈຶ່ງເຂົ້າໄປຫາລີສີ, ຝ່າຍລີສີເຫັນທ້າວເຂົ້າໄປໃກ້ ກໍຢ້ານກົວສັ່ນເຊັນ ທັງຈົ່ມວ່າ ມຶງ ເອົານ້ອງກູໄປກິນແລ້ວ ຍັງຈະກັບມາກິນກູອີກບໍ ມຶງນີ້ຜີມີລິດມີເດດ ແທ້ ທຳເພດເປັນຊາຍໜຸ່ມຫລອກລວງກູບໍ ມຶງເຄີຍໄດ້ກິນ ແລ້ວ ຫຍ້ານບໍ; ທ້າວເກດສຸລິຍົງຍານຈຶ່ງເວົ້າກັບລີສີວ່າ ຢ່າຢ້ານຢ່າກົວ ເທາະ ເຮົາເອງບໍ່ແມ່ນຍັກບໍ່ແມ່ນມານດອກ ເຮົາຫາກແມ່ນ ແນວ ມານໂພທິຍານ (ຜູ້ມີບຸນ) ລົງມາປາບມານທັງຫລາຍ, ເຮົາແມ່ນ ແນວໜໍ່ກະສັດເມືອງນະຄອນສີ ທໍ່ແຕ່ວ່າພໍ່ຂອງເຮົາຈຳໃຫ້ພັດພາກ ຈາກເມືອງມາ ແມ່ຂອງເຮົາຊື່ວ່າ ນາງແຕງອ່ອນ ຖືກພໍ່ໄລ່ຫນີ ຕີ ສົ່ງ ເວລານັ້ນເຮົາເອງກໍຍັງນ້ອຍບໍ່ຮູ້ທາງໄປທາງມາ ນັບແຕ່ ພຸ້ນ ມາເຖິງເວລານີ້ກໍໄດ້ແປດປີພໍດີ, ຕອນນີ້ມີທ້າວທັດສະໄນມາ ບອກ ວ່າມີຍັກທັດຖະຈັກ ແຕ່ງເມືອງບັນທະພານ ມາລັກເອົາແມ່ໄປ ດັ່ງ ບົດກອນຂຽນວ່າ

ນາງກໍຕົກເຂດຫ້ອງ ຫີນແຫ່ງນໍລະໂຄ
ຊື່ວ່າບັນທະພານຂວາງ ເຂດມານສວາງເສື້ອ

ຂ້າຈຶ່ງທົງຄຳແຄ້ນ　　　ມະໂນຂັບຈິດບ່າ
ກໍຈຶ່ງຮ້ອນເຮົ້ງຂຽວ　　　ຂຽວດັ້ນລ່ວງມາ ນີ້ແລ້ວ

ເມື່ອລືສີກຸມພາໄດ້ຟັງ ກໍມີຄວາມປິຕິຊຸ່ມຊື່ນ ເພາະຮູ້ວ່າ ທ້າວເປັນຫລານຂອງຕົນເອງ ລືສີໄດ້ເລົ່າສະພາບເຫດການທັງຫມົດ ສູ່ຫລານຟັງ ແລະ ບອກວ່າໄດ້ພານາງແຕງອ່ອນມາບວດຢູ່ປ່າ ບ່ອນນີ້ໄດ້ 3 ປີ ກໍບໍ່ເຈັບບໍ່ໄຂ້ຫຍັງ, ພໍຕົກມາເຖິງປີທີສີ່ ມື້ຫນຶ່ງ ລູງໄດ້ໄປຊອກເກັບຫມາກໄມ້ໃນປ່າມາສູ່ນ້ອງກິນ ຕອນຄ່ຳລູງກັບ ຄືນມາສາລາເລີຍບໍ່ເຫັນນ້ອງ ລູງຈຶ່ງໄດ້ເລາະຊອກຫາໄປຫລາຍບ່ອນ ຫາໃສກໍບໍ່ພໍ້; ທ້າວເກດສຸລິຍົງຍານໄດ້ຟັງລູງເລົ່າທຸກກໍມີຄວາມໂທມະນັດຄຶ່ງແຄ້ນ ໃນຄວາມທຸກຍາກລຳບາກຂອງລູງ ແລະນາງແຕງອ່ອນຜູ້ເປັນແມ່.

ທັງລູງ ແລະ ຫລານພາກັນເລົ່າທຸກເລົ່າຍາກ ພ້ອມທັງ ເອົາຫມາກໄມ້ຫົວມັນມາສູ່ຫລານ ແລະ ພີເມືອງກິນ, ທ້າວເກດສຸລິຍົງຍານ ແລະ ພີເມືອງໄດ້ພັກຄ້າງຄືນຢູ່ນຳພະລືສີ ກຸມພາຜູ້ເປັນ ລູງ ເຊົ້າມື້ຕໍ່ມາທ້າວຈຶ່ງໄດ້ອຳລາຈາກລູງ ອອກເດີນທາງໄປນຳຫາແມ່, ທ້າວ ແລະ ພີເມືອງໄດ້ຂີ່ມ້າເຫາະຂ້າມດົງຫນາປ່າໃຫຍ່ ໄປໄດ້ເດືອນຫນຶ່ງຈຶ່ງໄປເຖິງແມ່ນ້ຳແຫ່ງຫນຶ່ງ ທີ່ໃສ ແລະ ໄຫລແຮງສາມາດພັດແຮ່ພັດຊາຍໃຫ້ໄຫລໄດ້ທັງສອງ ຈຶ່ງພາກັນລົງເຊົາແຄມແມ່ນ້ຳ ເພື່ອປຶກສາຫາລືກັນ ວ່າຈະຂ້າມແມ່ນ້ຳໄປໄດ້ດ້ວຍວິທີໃດ ດັ່ງບົດກອນຂຽນວ່າ

ຫລິງດູສ່ວານງນ້ຳ　　　ນອງກະແສແສນຍ່ານ
ຟອງຍວກຍູ້　　　ຍິນສະອື້ນອ່ອນໃຈ

ເຮົາຈັກພາກັນເວັ້ນ ທາງໃດກັ້ນດຸ່ງ ໄປນັ້ນ

ກໍບໍ່ມີທີ່ເວັ້ນ ທາງຂ້າມກໍ່ວຣອມ ພີ່ເອີຍ

ທ້າວເກດສຸລິຍົງຍານ ຄິດເຫັນແພທີ່ແມ່ລ້ຽງມອບໃຫ້ ຈຶ່ງເອົາແພແກວ່ງໄກວໄປມາ ເຮັດໃຫ້ແມ່ນ້ຳແຫ້ງເປັນຊາຍພົງ ທັງ ສອງຈຶ່ງໄຕ່ຂ້າມໄປໄດ້ສະບາຍ, ແຕ່ໃຈກໍຍັງຄິດຮອດແມ່ລ້ຽງ ແລະແມ່ຄຶງບໍ່ເລີກບໍ່ແລ້ວ ທັງສອງພາກັນເດີນທາງໄປເລື້ອຍໆ ຊົມນົກຊົມໄມ້ໄປຕາມທາງ ຂ້າມປ່ານີ້ເຂົ້າປ່າໜ້າ, ໃນທີ່ສຸດກໍໄປເຖີງຫ້ວຍຮ່ອມພາແຫ່ງໜຶ່ງ ບ່ອນນີ້ແມ່ນເຂດແດນຂອງຍັກຊື່ສາລະວັນ, ຢູ່. ເຂດແດນຂອງສາລະວັນນີ້ ແມ່ນແຕ່ນົກ ແລະ ສັດປ່າອື່ນໆກໍບໍ່ ໄດ້ຍິນສຽງຮ້ອງເລີຍ ເພາະກົວເກັງຍັກສາລະວັນຈະຈັບກິນເປັນ ອາຫານເຂດນີ້ບໍ່ມີໃພກ້າຜ່ານເຂົ້າໄປໄດ້.

ພໍແຕ່ບໍລິວານຂອງຍັກສາລະວັນໄດ້ກິ່ນທ້າວ ແລະຜີເຂົ້າໄປໃນເຂດແດນຂອງມັນ ມັນຈຶ່ງເຕັ້ນເຂົ້າມາໃສ່ໂລດ ແຕ່ມັນຮູ້ວ່າທັງສອງບໍ່ແມ່ນຄົນທຳມະດາ ເປັນຜູ້ມີລິດທິເດດກ້າແຂງສົມຄວນ, ຍັກຈຶ່ງກັບເພດເປັນຕົວໃຫ່ຍປານໜ່ວຍພູ ແລ້ວຖາມທ້າວແບບຂູ່ ເຂັນວ່າ ພວກສູມາແຕ່ປະເທດໃດ ຈຶ່ງເຂົ້າມາແດນຂອງກູ ສູຊ່າງຢາກມາຕາຍແທ້ນໍ, ທ້າວເກດສຸລິຍົງຍານ ຈຶ່ງຕອບວ່າເອີ ອັນ ຄວາມຕາຍນີ້ມີຢູ່ນຳທຸກໆຄົນດອກ ເຮົາເອງບໍ່ແມ່ນຈະໃຫ້ທ່ານຂ້າແກງໄດ້ງ່າຍໆດອກ, ຝ່າຍຍັກໄດ້ຟັງກໍໂມໂຫສຸດຂີດ ຈຶ່ງຫລູບເຂົ້າໃສ່ທ້າວທັນທີ ດັ່ງບົດກອນຂຽນວ່າ

ຄ້ອນວ່າທ້າວກ່າວແລ້ວ ຍັກຄຽດຄຸງໃຈ

ມັນກໍປີລີລຸກ ແລ່ນມາມີຊ້າ

ມີບາຍຄ້ອນ　　　　ຕະບອງສິດຕິພາດ ມານັ້ນ

ທ້າວປ່າຍເປື້ອງ　　　　ພະຂັນຄ້ຳຄອບຊຽງ

ການຕໍ່ສູ້ກັນໄດ້ເກີດຂຶ້ນຢ່າງເອົາເປັນເອົາຕາຍ ທັງສອງຝ່າຍໃຊ້ວິຊາອາຄົມເຕັມຄວາມສາມາດ ໃນທີ່ສຸດຍັກກໍຖືກຂ້າຕາຍ, ຈາກນັ້ນທ້າວ ແລະ ພີ່ພ້ອມມ້າຕົວປະເສີດ ກໍໄດ້ເດີນທາງຕໍ່ໄປ ຈິ່ງຕົກໄປເຖິງເມືອງນານ ຄືເມືອງຂອງຍັກສາລະວັນ, ເມື່ອໄປ ເຖິງແຄມເມືອງ ທຳອິດກໍເຫັນວ່າເມືອງນີ້ມີຄວາມຈົບງາມ ທ້າວ ແລະ ພີ່ສົງໃສວ່າມັນແມ່ນເມືອງນັນທະພານແທ້ບໍ ເພື່ອຄວາມແນ່ໃຈທ້າວຈຶ່ງເຂົ້າໄປຖາມນາງຍັກຂິນີຜູ້ໜຶ່ງ ເຊິ່ງພວມເສຍຫຍ້າຢູ່ ແຄມເມືອງ ທ້າວຈຶ່ງໄຕ່ຖາມດັ່ງບົດກອນຂຽນວ່າ

ແຕ່ນັ້ນສອງແຈ່ມເຈົ້າ　　　ເຫັນແມ່ຂິນີ

ມັນກໍມາເສຍສອນ　　　ຢູ່ຕີນວຽງແກ້ວ

ສອງຈຶ່ງປີປາຍຕ້ານ　　　ຖາມມັນຫາເຫດ

ອັນນີ້ນີກຄະເລດຫ້ອງ　　　ນາມຊັ້ນຊື່ລີ ຍັກເອີຍ

ແຕ່ແທນທີ່ນາງຍັກຂິນີ ຈະຕອບຄຳຖາມ ມັນພັດຟ້າວຖີ້ມ ສຽມແລ້ວແລ່ນເຂົ້າໄປໃນວຽງໃຫຍ່ ໄປຫາເຮືອນຂອງມັນ ແລະ ບອກກັບຜົວມັນວ່າ ດຽວນີ້ມີຄົນຫລົງເຂົ້າມາ ໃຫ້ຮີບຫາເຊືອກໄປ ຜູກເອົາມັນມາເປັນອາຫານຄາບງາຍນີ້ໂລດ, ຜູ້ເປັນຜົວກໍດີໃຈ ຢ່າງໃຫຍ່ ຟ້າວຊອກເອົາເຊືອກ ທັງພ້ອງບອກເມຍວ່າ ຢ່າເວົ້າແຮງຫລາຍຈັກໜ້ອຍຜູ້ອື່ນຮູ້ ເຂົາຊິໄປຍາດຂອງກິນແຊບຂອງເຮົາ ດັ່ງບົດກອນຂຽນວ່າ

ຜົວກໍດີໃຈແທ້　　　ຫົວຊົມຫາເຊືອກ

ແລ້ວເລົ້າຕ້ານ　　　　　ນາງນ້ອງຢ່າປາກແຮງ
ຄັນວ່າແຊວງເວົ້າ　　　　ຫລາຍຄົນຊິຮູ້ເມື່ອ
ມັນຊິບໍ່ພໍອ່ອນປັ້ງ　　　　ແກງສົ້ມໃສ່ເກືອ ນ້ອງເອີຍ

ຈາກນັ້ນສອງຜົວເມຍກໍຖືເຊືອກແລ່ນອອກໄປ ພໍໄປເຖິງກໍ ຄິດວ່າຈະຄ້ອງເອົາແບບງ່າຍໆ ແຕ່ຖືກທ້າວເກດສຸລິວົງຍານເອົາດາບຟັນຫົວຟັ້ງປິວໄປປານວ່າຫມຸ່ນ ມັນຈຶ່ງສິ້ນໃຈຕາຍຄາທີ່, ຝ່າຍເມຍເຫັນຜົວຖືກຂ້າຕາຍ ກໍຣ້ອງໄຫ້ຮ່ຳໄຮແລ່ນເຂົ້າໄປໃນເມືອງບອກຕໍ່ບັນດາຍັກພວກພ້ອງທັງຫລາຍໃຫ້ຮູ້, ພວກຍັກທັງຫລາຍຈຶ່ງລວມພະລັງກັນອອກຕໍ່ສູ້ເປັນການໃຫ່ຍ ການສູ້ຮົບກັບຂັ້ນນີ້ ເປັນຂັ້ນໃຫ່ຍສົມຄວນ, ທ້າວ ແລະ ພີໄດ້ສູ້ກັບບັນດາຍັກຢ່າງບໍ່ຢ້ານບໍ່ກົວ ພວກຍັກພາກັນຕາຍນັບເປັນຫມື່ນເປັນແສນ, ເຫັນວ່າລິດເດດຂອງ ທ້າວແຂງ ກ້າ ພວກຍັກຈຶ່ງກັບເຂົ້າໄປລາຍງານໃຫ້ຍັກສາລະວັນຜູ້ເປັນໃຫ່ຍໄດ້ຮູ້, ຝ່າຍຍັກສາລະວັນ ໄດ້ຮູ້ເລື່ອງກໍເກີດມີຄວາມ ຄຽດແຄ້ນຄຸງໃຈ ຄຽດວ່າເດັກນ້ອຍໆມາຂົ່ມເຫັງເຖິງມັນຊິເກັ່ງກ້າ ສາມາດປານໃດ ກໍບໍ່ມີທາງຫນີລອດຕະບອງສີຂວານເດດໄປ ໄດ້ເດັດຂາດ.

ຈາກນັ້ນຍັກສາລະວັນຈຶ່ງນຳພົນ ພວກອອກສູ້ຮົບເປັນການໃຫ່ຍເພື່ອປ້ອງກັນບ້ານເມືອງຂອງມັນເອົາໄວ້ ມີທັງຂະບວນຄົນທານຂະບວນຊ້າງຂະບວນມ້າ ຍັກບາງໂຕຖອດຕົ້ນຍາງຫມົດຕົ້ນມາເຮັດໄມ້ຄ້ອນ ເພື່ອຕໍ່ສູ້ກັບທ້າວເກດສຸລິວົງຍານ, ບາງພ່ອງກໍກັບເພດເປັນຫລາຍໆໂຕ ບາງເທື່ອກໍໂຕດຽວມີຫົວເປັນພັນເປັນຫມື່ນ ບາງເທື່ອກໍຫົວເປັນຄົນໂຕເປັນເງືອກ ເປັນງູ ສາລະພັດແຕ່ຈະເຮັດພວກຍັກ

ພາກັນຕາຍເກື່ອນກອງ, ທັງສອງຝ່າຍສູ້ກັນຈົນອິດຈົນອ່ອນ ຝ່າຍຜີເມືອງຈຶ່ງເວົ້ານຳທ້າວວ່າ ເຮົາໃຊ້ດາບໃຊ້ທະນູ ແລະ ລິດເດດຕໍ່ສູ້ກັນກໍເຫລືອແຮງແລ້ວ ແຕ່ຍັກກໍຍັງຕາຍບໍ່ຫມົດ ຄວນເຮົາ ຈະໃຊ້ຜ້າວິເສດກ້ອດແກ່ວງໃຫ້ຍັກຕາຍຫມົດ ດັ່ງບົດກອນຂຽນວ່າ

ນັບແຕ່ເຮົາເຫນ້າງ	ຊຸມນານສາມເລົ່າ ເລິງແລ້ວ
ອັນວ່າສອນສອດນ້າງ	ພະຂັນຄ້ຳເມື່ອຍມີ ພີ່ເອີຍ
ຄວນທີ່ເຮົາເອົາຜ້າ	ກາສາກ້ອດແກ່ວງ ຈິ່ງຖີ້ມ
ມານມອດສິ້ນ	ຄາວນີ້ບໍ່ຄືນ ແທ້ແລ້ວ

ຂະນະທີ່ທັງສອງພັກເອົາແຮງ ພວກຍັກໂຕໃດກໍແລ່ນເຂົ້າ ໃສ່ໃນມືຖືຫີນດິນລະກ້ອນ ຍັກບາງໂຕຫອບເອົາພູເປັນຫນ່ວຍຫມາຍຈະຂ້າທ້າວເກດສູລິຍົງຍານ ແລະ ຜີໃຫ້ຕາຍ ຍັກພາກັນຖີ້ມກ້ອນ ຫີນແລະ ຫນ່ວຍພູລົງມາຈາກອາກາດເປັນສວ່ານສິນ, ທ້າວ ແລະ ຜີເຫັນດັ່ງນັ້ນ ຈຶ່ງແກ່ວງຜ້າວິເສດ ເປັນລົມຫອບເອົາຫນ່ວຍພູ ແລະຫີນປິວເປັນພົງທູລີ ທັງພ່ອງປິວກັບ ໄປຖືກຫົວພວກຍັກນຳອີກ, ສ່ວນຍັກສາລະວັນພູເປັນໃຫ່ຍ ເຫັນຈຳນວນພົນຫລວງຂອງມັນລົ້ມ ລະເນດລະນອງ ມັນຈຶ່ງຟ້າວຮວາຍມົນເປົ່າຫວັງໃຫ້ກັບຄືນ ແຕ່ ເປົ່າເທົ້າໃດກໍນິດຊ້ອຍນ້ອຍ.

ເມື່ອຍັກສາລະວັນເຫັນວ່າເປົ່າຄາຖາດີແນວໃດ ລູກນ້ອງ ກໍບໍ່ຄືນ ມັນຈຶ່ງຕັດສິນໃຈສູ້ ໂດຍນິລະມິດໂຕມັນໃຫ່ຍສູງເທົ່າພູ ແລະສະແດງລິດອອກເປັນລ້ານໂຕ ທັງຖືຄ້ອນຖືດາບຖືທະນູແລ່ນເຂົ້າໃສ່ດັ່ງບົດກອນຂຽນວ່າ

ແຕນັ້ນຍັກເຮັ່ງຮ້ອນ	ກະທຳເດດເດຊາ

ຕົນຄຽວບໍ່   ອອກມາໂດຍລ້ານ
ກໍຫາກສິນງແລ້ວ   ມີມັນມິດູ່
ຖືຫມູ່ໄມ້   ທະມູຫນ້າກົງກາງ

ທ້າວເກດສຸລິຍົງຍານ ແລະ ພີໄດ້ເຫັນກໍຮູ້ວ່າແມ່ນເສິກ ຫົວໃຫ່ຍ ໄດ້ເກີດຂຶ້ນແລ້ວ ທ້າວເກດສຸລິຍົງຍານ ຈຶ່ງເວົ້າກັບພີຜູ້ເປັນອ້າຍວ່າ ຈັ່ງໃດພວກເຮົາກໍຕ້ອງຕັດສິນໃຈສູ້ຈົນສຸດຄວາມສາ ມາດ ຖ້າຫາກວ່າເຮົາຫມົດກຳລັງແຮງແລ້ວ ຈຶ່ງແກວ່ງແຫວນຕື່ມ; ການຕໍ່ສູ້ໄດ້ເກີດຂຶ້ນໂດຍຝ່າຍຍັກສາລະວັນເປັນຜູ້ບຸກເຂົ້າໃສ່ ທ້າວ ໄດ້ເອົາດາບຕັດຫົວຍັກຕາຍຢ່າງມາກມາຍກາຍກອງ ແຕ່ມັນກໍຕໍ່ຫົວກັບຄືນມາສູ້ໃຫມ່ອີກ, ດັ່ງນັ້ນພີຈຶ່ງບອກທ້າວເກດສຸລິຍົງຍານໃຫ້ ເອົາແຫວນອອກມາແກ່ວງໃສ່ຍັກສາລະວັນ, ພໍແຕ່ທ້າວແກວ່ງແຫວນໃສ່ຫົວຍັກສາລະວັນ ບໍ່ພໍອຶດໃຈຍັກກໍເກີດມີອາການຮ້ອນຮົນດົ້ນ ຕາຍລາກເລືອໄປ ຍ້ອນລິດເດດຂອງແຫວນເຜົາໄຫມ້ຕົນຕົວມັນ ຮ້າຍກວ່າດັ່ງໄຟສຸມໃສ່, ຍັກສາລະວັນຫັກເອົາຕົ້ນໄມ້ທັງຕົ້ນມາວີ ກໍບໍ່ເປັນ ມັນຈຶ່ງມຸດລົງນ້ຳພໍແຕ່ໂປໂລຂຶ້ນ ກໍຮ້ອນໃຈຊິຂາດຄືເກົ່າ ມັນຈຶ່ງນິລະມິດໃຫ້ເປັນດິນຊາຍທີ່ຊຸ່ມຊື່ນດ້ວຍນຳໂລມໂຕ ຫວັງຈະ ໃຫ້ເຢັນ ແຕ່ກໍຜິດຫວັງອີກຕາມເຄີຍ ເພາະແຫວນໄດ້ເຜົາໄຫມ້ ເມັດຊາຍຫມົດດັ່ງບົດກອນຂຽນວ່າ

ແຕ່ນັ້ນເຕໂຊແກ້ວ   ທຳມະໂຮງລູກປະເສີດ
ໄຫມ້ແຜ່ນພົ້ນ   ເຜົາຜ້ຽນມຸ່ນທະລາຍ
ແຕ່ນັ້ນພີມານທ້າວ   ສາລະວັນໃຈຊິຂາດ ຕາຍແລ້ວ
ມັນກໍພູດລຸກຂຶ້ນ   ເຊລົ້ມທ່າວຫງາຍ

ຍັກສາລະວັນເຫັນວ່າຈະໄປບໍ່ລອດ ຈຶ່ງຕັດສິນໃຈຍໍມືກົ້ມ ຂາບເຂົ້າໄປຫາທ້າວ ເພື່ອຂໍອ່ອນຂໍຍອມ ທ້າວຈຶ່ງທຳທ່າຖາມວ່າ ເປັນຫຍັງເຈົ້າເຈັບປວດແນວໃດນໍ ? ຍັກສາລະວັນຈຶ່ງບອກວ່າ ເຈັບປວດໄປທົ່ວຮ່າງກາຍ ປານຖືກໄຟເຜົາຜານຄືໃຈຈະຂາດຕາຍ ຂໍໃຫ້ທ່ານໂຜດພາຍແດ່ທ້ອນ, ຂ້ານີ້ມັນຄົນຊົ່ວຄົນບາບຫນາສາ ໂຫດມືດມົວ ບໍ່ຮູ້ແຈ້ງເຫັນຈິງຫຍັງຫມົດ ຖ້າທ່ານບໍ່ໂຜດພາຍກໍຈະ ຕາຍຖິ້ມລ້າ ຂໍໃຫ້ທ່ານໂຜດເອົາຂ້າໄວ້ ເພື່ອຮອງຮັບໃຊ້ແດ່ທ້ອນ ຕາງວ່າໃຫ້ເປັນທາດຄອຍຕິດຕາມຮັບໃຊ້ທ່ານໄປໃນທຸກແຫ່ງຫົນ; ສ່ວນວ່າເມືອງຫລວງຂອງຂ້າຍາວສິບສອງໂຍດ ກໍຂໍມອບໃຫ້ທ່ານ ສະເຫວີຍສືບສ້າງ ຖວາຍທັງເສນາອາມາດ ແມ່ນກະທັ້ງລູກເມຍກໍ ຂໍມອບໃຫ້ທ່ານຫມົດ ບຸນຄຸນຂອງທ່ານ ຂ້າຈະຈົດຈຳບໍ່ຂໍຫລົງລືມເປັນອັນຂາດ.

ເມື່ອເຫັນວ່າຍັກສາລະວັນບໍ່ມີທາງສູ້ ແລະ ຂໍອ່ອນຍອມ ແຕ່ໂດຍດີແລ້ວ ທ້າວຈຶ່ງເອົານ້ຳເຕົ້າແກ້ວລ້າງສ່ວຍໃຫ້ ເອົາດາບຈຸ່ມນ້ຳໃຫ້ຍັກສາລະວັນກິນ, ແລ້ວຖອດເອົາແຫວນທີ່ແກວ່ງໄປນັ້ນກັບຄືນມາ ເຮັດໃຫ້ຍັກສາລະວັນຫາຍຈາກອາການຮ້ອນໄຫມ້ທັງປວງ ; ທ້າວເກດສຸລິຍົງຍານໄດ້ບອກກັບຍັກສາລະວັນວ່າ ເຮົາເອງບໍ່ ປະສົງຈະນັ່ງເມືອງແທນທ່ານດອກ ເມືອງຂອງທ່ານກໍໃຫ້ທ່ານນັ່ງເອງປົກຄອງເອງ ເພາະເຮົາຍັງມີວຽກຈະໄປທາງຫນ້າພຸ້ນ ວຽກ ນັ້ນເປັນວຽກໃຫ່ຍ ແລະ ສຳຄັນ, ເພາະວ່າຍັກໄດ້ລັກເອົາແມ່ ເຮົາໄປ ທ່ານຮູ້ບໍວ່າແຕ່ນີ້ໄປຫາເມືອງນັນທະພານຍັງໄກປານໃດ ແລະເມືອງນີ້ຢູ່ທາງໃດແທ້ ດັ່ງນິດກອນຂຽນວ່າ

ອັນວ່າທັດຖະຈັກທ້າວ ນັນທະພານແດນທິບ ທີ່ໃດນັ້ນ
ເນົາຢູ່ເຂົາເຂດອັ້ນ ເວົ້າເວັ້ຍມທີ່ໃດ ທ່ານເອີຍ
ແຕ່ນັ້ນສາລະວັນໄດ້ ຍິນຄຳທ້າວກ່າວ ມານັ້ນ
ມັນວ່າໄກເລີດລ້ຳ ເຖິງພຸ້ນສີ່ເດືອນ ພະເອີຍ

ຍັກສາລະວັນຍັງໄດ້ບອກໃຫ້ທ້າວເກດສຸລິຍັງຍານຮູ້ວ່າ ຍັກທັດຖະຈັກນັ້ນ ບໍ່ແມ່ນທຳມະດາສາມັນປານໃດດີ ເລື້ອງລິດເດດຂອງມັນນັ້ນແມ່ນແຕ່ເທວະດາອິນພົມ ກໍຍັງຢຳເກັງມັນ, ສຳລັບຄົນຢູ່ພື້ນໂລກອັນນີ້ຢ່າຊິໄປເຢາະມັນເທາະ ກະໂຕຜູ້ຂ້າເອງກໍເປັນ ຫົວເມືອງສ່ວຍຂອງມັນ ແຕ່ລະປີກໍເອົາເງິນເອົາຄຳ ໄປສ່ວຍມັນ ນັບເປັນຕື້; ແຕ່ທ້າວເກດສຸລິຍັງຍານໄດ້ເວົ້າກັບຍັກສາລະວັນວ່າເຖິງແມ່ນຍັກທັດຖະຈັກມັນຈະເກັ່ງກ້າສາມາດພຽງໃດ ເຮົາກໍບໍ່ຢ້ານ ບໍ່ກົວມັນພໍທໍ່ເສັ້ນໄຫມດອກ, ຈາກນັ້ນຍັກສາລະວັນຈຶ່ງໄດ້ເຊີນ ທ້າວແລະ ພີ່ເຂົ້າໄປເມືອງ ບັນດາຍັກທັງຫລາຍໄດ້ເອົາຫຽນເງິນຫຽນຄຳມາບູຊາທ້າວ ທັງພ່ອງມາຊົມເຊີຍ ສ່ວນຍັກສາລະວັນເອງ ກໍໄດ້ມອບລູກສາວຂອງມັນ ຊື່ວ່າ ນາງຈັນທອນໃຫ້ເປັນເມຍ.

ທ້າວເກດສຸລິຍັງຍານ ໄດ້ກ່າວໃຫ້ໂອວາດຕັກເຕືອນສິ່ງ ສອນພວກຍັກທັງຫລາຍວ່າ ໃຫ້ຕັ້ງຕົນຢູ່ໃນສິນທຳ ຢ່າໄດ້ບັງບຽດ ຜູ້ອື່ນຢ່າຖືແພ້ຜູ້ອື່ນ ບາງເທື່ອຜູ້ອື່ນດີກວ່າຕົນກໍມີຖົມໄປ ແມ່ນກະທັ້ງ ສັດສາວາສິ່ງໂຕໃດຕາຍຈຶ່ງຄ່ອຍກິນ ຢ່າໄດ້ກຸມຂ້າກຸມແກງເອົາກິນໃຫ້ຮູ້ຈັກສິນຈັກທານດັ່ງບົດກອນຂຽນວ່າ.

ອັນວ່າປາລະມີໃຫ້ ຂັນຕິອົດໂທດ ເອົາຖອນ
ຊື່ວ່າ ສິນແປດຕັ້ງ ຈຳໄວ້ຢ່າໄລ

ອັນໜຶ່ງສັດສິ່ງເນື້ອ   ໃນປ່າມິດາ (1)
ຕົວໃດມໍລະນາຕາຍ   ຈົ່ງກິນຢ່າຂ້າ
ອັນໜຶ່ງຫາບັງນັ້ນ   ໃຫ້ກິນທານລ້າງສ່ວຍ
ກັບທັງສິນຫ້າເຮື້ອ   ຄືງໄວ້ຢ່າໄລ ທ່ານເອີຍ

ບັນດາຍັກມານທັງຫລາຍໄດ້ຟັງຄຳສັ່ງສອນຂອງທ້າວແລ້ວຕ່າງກໍພາກັນຕັ້ງຕົນຢູ່ໃນສິນທຳ, ໂອກາດດຽວກັນນີ້ ບັນດາຍັກ ໜຸ່ມສາວກໍມາເຝົ້າມາແຫ່ທ້າວ ແລະ ມີເຮັດໃຫ້ທ້າວ ແລະ ພິມີຄວາມເບີກບານໃຈຍູທ່າງຈົມສາວນ້ອຍທີ່ມີຮູບໂສມຜິວພັນອັນຈົບງາມ.

./.

ມິດາ   ສັດປ່າ

24- ບັ້ນຍັກສາລະວັນ ພາໄປຮົບຍັກຫັດຖະຈັກ

ທ້າວເກດສຸລິຍົງຍານ ແລະ ພີ່ພູເປັນອ້າຍ ໄດ້ພັກຢູ່ ເມືອງຂອງຍັກສາລະວັນນານໄດ້ເຄິ່ງເດືອນ ທ້າວຈຶ່ງເວົ້າກັບພີ່ພູ ເປັນອ້າຍວ່າ ເຮົາພັກຢູ່ທີ່ນີ້ກໍດົນນານແລ້ວ ຕ້ອງອອກເດີນທາງຕໍ່ເພື່ອບໍ່ໃຫ້ຊັກຊ້າເສຍເວລາ ຝ່າຍພີ່ກໍເຫັນດີ ທ້າວຈຶ່ງສັ່ງລານາງ ຈັນທອນຜູ້ເປັນເມຍດັ່ງບົດກອນຂຽນວ່າ

ທ້າວຈຶ່ງຕານສັ່ງນ້ອງ ນາງນາດຈັນທອນ

ສາຍຄໍເອີຍ ຄ່ອຍຢູ່ດີເດີເຈົ້າ

ເຮົາພີ່ມີການຮ້ອນ ໂຮມມະໂນໃນລາດ

ແລ້ວຈະໄດ້ຈາກນ້ອງ ແພງຊ້ອນຕ່ອນສະເໜນກ່ອນແລ້ວ

ພີ່ຈັກລາຈາກເຈົ້າ ດັ້ນດຸ່ງພະດີລີ

ຄັນວ່າຫລາຍລາຕີ ຊິຕ່າວຄືນມາຊ້ອນ

ຝ່າຍນາງຈັນທອນກໍໄດ້ອວຍພອນໃຫ້ທ້າວຈຶ່ງເດີນທາງໄປໂດຍດີມີໄຊຊະນະ ພາບແພ້ຫມູ່ມານ, ຕໍ່ມາທ້າວເກດສຸລິຍົງຍານກໍ ໄດ້ມອບເວນເມືອງ ແລະ ໄພ່ພົນທັງຫມົດຄືນໃຫ້ຍັກສາລະວັນ ຄອບຄອງເອງ ແຕ່ຍັກສາລະວັນບອກທ້າວວ່າ ຈະແຕ່ງໃຫ້ລິພົນ ໂຍທາເດີນທາງໄປດອມທ້າວ ເພື່ອຈະໄດ້ເປັນກຳລັງຫລວງອັນແຂງແກ່ນ

ແຕ່ທ້າວບອກວ່າບໍ່ຈຳເປັນດອກ ເຮົາຈະໄປສອງຄົນເທົ່ານັ້ນ; ຍັກສາລະວັນບອກວ່າ ຖ້າບໍ່ເອົາລິພົນໂຍທາກໍໄດ້ ແຕ່ຕົວເຂົາເອງຈະຂໍຕິດຕາມທ້າວໄປ ຝ່າຍທ້າວເກັດສຸລິຍົງຍານ ກໍວ່າດີແລ້ວຖ້າທ່ານຈະໄປດອມເພື່ອຈະໄດ້ທ່ານເປັນນາຍພາທາງ.

ຈາກນັ້ນທັງສາມຈຶ່ງ ພ້ອມກັນອອກເດີນທາງມຸ່ງໜ້າໄປ ສູ່ເມືອງບັນທະພານ ຂ້າມດົງໜາປ່າໃຫຍ່ຫ້ວຍໜອງຄອງບຶງ ພູຜາເຫວຊັນຫລາຍຫລີບຫລັ່ນ ແຕ່ກໍຍັງບໍ່ຮອດ, ທ້າວເກດສຸລິຍົງ ຍານຈຶ່ງຖາມຍັກສາລະວັນວ່າ ຍັງອີກດົນປານໃດຈຶ່ງຈະຮອດ ຍັກສາລະວັນຕອບວ່າ ຕັ້ງແຕ່ນີ້ໄປຍັງອີກໄກແສນໄກ, ດັ່ງນັ້ນທ້າວຈຶ່ງເຕືອນໃຫ້ຮີບພາກັນເຮັ່ງຮອນ; ທັງສາມເດີນທາງດ້ວຍຄວາມລຳ ບາກຍາກແຄນ ມີບາງບ່ອນກໍໄດ້ເຫາະຂ້າມໄປຈຶ່ງຜ່ານກາຍໄດ້ ຕາມສາຍທາງທີ່ຜ່ານໄປກໍໄດ້ຊົມທຳມະຊາດທິວທັດ ແລະ ຟັງສຽງ ນົກຮ້ອງ ພ່ອງຈັກຈັ່ນແມງອີ ພາໃຫ້ຈິດວີໃຈວອນດັ່ງບົດກອນຂຽນ ວ່າ

ຟັງຍິນກາເວົ້າຮ້ອງ ຂ້ານຂັນທາຄູ່ ແລເຢີ
ມີທັງຈັກກະຈັ່ນຮ້ອງ ຈຳຈີ້ຈົ່ມທາງ
ອັນວ່າລົມພານຕ້ອງ ສາຂາເຟືອນຟາດ
ຟັງຍິນທາດຖຽນນ້ຳ ໄຫລທົ້ງທົ່ງຜາ

ທັງສາມເດີນທາງນັບເປັນເວລາໄດ້ສາມຂວບ ຈຶ່ງໄປ ເຖິງເຂດແດນຂອງເມືອງບັນທະພານ, ຕາມປົກກະຕິແລ້ວເຈາະ ລຽບເຂດແດນຂອງເມືອງບັນທະພານນີ້ ແຕ່ລະມື້ຍັກທັດຊະກິດນ້ອງຂອງຍັກທັດຖະຈັກລາດຕະເວນຢູ່ຕະຫລອດເວລາ, ທັງສາມ ກໍໄດ້ສະພາບແນວນັ້ນແລ້ວ ຈຶ່ງພາກັນແປງເພດເປັນຮົ້ນ ແຕ່ປານນັ້ນຍັກ

ທັດຊະກິດ ກໍຍັງໄດ້ກົ້ນຫອມ ເຮັດໃຫ້ມັນກົວດແກວ່ງຕະບອງໄປມາ ໝາຍຈະຂ້າ ແຕ່ທັງສາມໄດ້ພາກັນຫລົບຫລີກໄປໄດ້; ໃນທີ່ສຸດທັງສາມກໍໄປເຖິງເມືອງຫລວງຂອງຍັກທັດຖະຈັກ ໄດ້ແນມເຫັນຫໍ ຜາສາດລາຊະວັງຮຸ່ງເຮືອງເຫລືອງເຫລື້ອມຍັງປາຍໄປທົ່ວ.

ເພື່ອຄວາມແນ່ໃຈ ທ້າວເກດສຸລິຍົງຍານຈຶ່ງໄດ້ຖາມຍັກສາລະວັນວ່າ ຫໍຜາສາດທີ່ຫລຽວເຫັນມີຍອດຊໍ່ຟ້າເຖິງຈັດຍອດນັ້ນ ມັນແມ່ນບ່ອນຍັກທັດຖະຈັກຢູ່ບໍ ? ດັ່ງບົດກອນຂຽນວ່າ

ອັນທີ່ໂຮງງເຫລື້ອມ	ຫໍປາງເຈັດຍອດ ພາຍພຸ້ນ
ອັນວ່າຍອດຊໍ່ຟ້າ	ເປັນຖານຖີ່ຖັ້ນ
ຫລາຍຊ່ອງຊັ້ນ	ມຸກມາດມະນີວັນ
ທັດຖະຈັກມັນ	ຢູ່ເນົາໃນຫັ້ນ ນັ້ນລີ ?
ຫລືວ່າເປັນແດນອຸ້ນ	ທົ່ວເມືອງປາຍດ່ານ ນັ້ນເດ
ຮູ້ວ່າແມ່ນເຜົ່າຜູ້	ມັນນັ້ນຊື່ລີ ນັ້ນຈາ ?

ຍັກສາລະວັນ ຈຶ່ງບອກໃຫ້ທ້າວເກດສຸລິຍົງຍານຮູ້ວ່າຫໍຜາສາດຫລັງທີ່ກ່າວນັ້ນ ແມ່ນຍັກທັດຖະຈັກຢູ່ແທ້, ທ້າວເກດສຸລິຍົງຍານຈຶ່ງຖາມເຖິງຫໍຜາສາດຫລັງຕໍ່ໄປ ຍັກສາລະວັນ ຈຶ່ງບອກວ່າຫລັງຕໍ່ໄປນັ້ນແມ່ນຍັກທັດຊະກິດນ້ອງຊາຍຂອງມັນຢູ່, ຫລັງຖັດໄປນັ້ນ ແມ່ນຫລານຂອງມັນຊື່ວ່າກົງເພັດ. ທ້າວເກດສຸລິຍົງຍານຖາມຕື່ມ ວ່າຫລັງທີ່ຮຸ່ງເຮືອງມີຍອດຊໍ່ຟ້າເຖິງແປດຍອດນັ້ນແມ່ນໃຜຢູ່ ດັ່ງ ບົດກອນຂຽນວ່າ

ແຕ່ນັ້ນທ້າວເລົ່າຕ້ານ	ຖາມທີ່ຫລາຍທີ
ເຖິງຫໍສູງ	ຊົ່ວຕາຕອງຢຽມ

ອັນທີ່ໂຮງໆເຫລື້ອມ ທໍແດງແປດຍອດ
ຫລັງລອດຟ້າ ພິລາເຂັ້ມຄາດມູງ ນັ້ນນາ
ແຕ່ນັ້ນສາລະວັນທ້າວ ແຫນກອນກອຍບອກ
ຖວາຍທ່ານທ້າວ ຕົງຜ້ຽນບໍ່ບັງ
ທີ່ນັ້ນເປັນທໍທອງ ປະທຸມມາເນົາຢູ່
ກັບທັງນາງຍອດແກ້ວ ແພງລ້ານແມ່ບາ ແທ້ແລ້ວ
ນອກຈາກນັ້ນ ນາງນາດສາວສະຫວັນ
ເນົາດອມກັນ ຢູ່ທໍປາງແກ້ວ
ສອງນາງນັ້ນ ເປັນຄົນເມືອງອື່ນ
ໂຮມຢູ່ຫັ້ນ ນາງແກ້ວສີ້ຄົນ ພະເອີຍ

ທ້າວເກດສຸລິຍົງຍານ ໄດ້ຟັງກໍຫົວຍຸ່ມໆ ພ້ອມທັງບອກ ໃຫ້ພີ່ຜູ້ເປັນອ້າຍ ແລະ ຍັກສາລະວັນຮູ້ວ່າ ຄາວນີ້ເມືອງນັ້ນທະພານຂອງມຶງຕ້ອງມຸ່ນດ້ວຍສອນຂອງກູ.

ບັດນີ້ຍອນກ່າວເຖິງຍັກທັດຊະກິດ ທີ່ລາດຕະເວນຢູ່ເຂດ ດ່ານມັນກໍຫອມກິ່ນຄົນບໍ່ເລີກບໍ່ແລ້ວ ມັນຈຶ່ງຕິດຕາມກິ່ນໄປໃນທີ່ສຸດກໍ ໄປພໍ້ກັບທ້າວ, ຍັກທັດຊະກິດ ໄດ້ແກວ່ງຕະບອງໃສ່ພີ່ເມືອງ ເຮັດ ໃຫ້ພີ່ເມືອງເລົາຄິງຂາດອອກຈາກກັນ ແລະ ຂາດໃຈຕາຍທັນທີ, ຝ່າຍທ້າວເກດສຸລິຍົງຍານເຫັນດັ່ງນັ້ນ ກໍພາວອິນອ່ານຄາຖາເປົ່າເອົາພີ່ເມືອງຄືນມາ ຈາກນັ້ນບັ້ນສູ້ຣົບກໍເປີດສາກຂຶ້ນ ໂດຍແມ່ນຍັກສາລະວັນເປັນຜູ້ແກ່ວງຕະບອງສູ້ກັບຍັກທັດຊະກິດ; ເມື່ອຮູ້ວ່າແມ່ນຍັກສາລະວັນເປັນຄູ່ຕໍ່ສູ້ ຍັກທັດຊະກິດຈຶ່ງເວົ້າໃຫ້ຍັກສາລະວັນວ່າ ມຶງນີ້ບໍ່ດີ ແຕ່ກ່ອນມຶງເປັນຫົວເມືອງສ່ວຍ ແຕ່ລະປີມຶງເອົາຄຳມາສ່ວຍ ປີ

ລະຕີ້ ດຽວນີ້ມຶງມີໃຈຄຶດລ້ຽວນໍ, ກູຈັກຕີມຶງພ້ອມດ້ວຍເດັກນ້ອຍທັງສອງໃຫ້ມັນຕາຍພ້ອມກັນ ແລ້ວກູຈະໄປກວດເອົາຂ້ອຍຂ້ານ້າ ໃຊ້ບ່າວໄພ່ລາສະດອນ ແລະ ເມືອງຂອງມຶງມາຂຶ້ນກັບກູໂດຍກົງ.

ຝ່າຍຍັກສາລະວັນ ເມື່ອຖືກຍັກທັດຊະກິດທ້າທາຍແນວນັ້ນ ຈຶ່ງເວົ້າວ່າ ມຶງນັ້ນແຫລະຄົນໂງ່ໄບ້ ອວດວ່າໂຕເອງເກັ່ງກ້າສາມາດແກວ່ງຕະບອງມາໃສ່ໂລດ ທາງທີ່ດີມຶງຄວນຖາມກູເບິ່ງກ່ອນ ວ່າດີຮ້າຍສໍ່າໃດ, ຜູ້ເປັນນາຍຂອງກູເວລານີ້ມຶງຢ່າຄຶດວ່າຊິເຮັດ ໄດ້ຕາມໃຈຂອງມຶງຄຶດ ບໍ່ມີໃຜຈະສາມາດຕໍ່ສູ້ກັບນາຍຂອງກູໄດ້ ເລີຍດັ່ງບົດກອນຂຽນວ່າ

ມຶງຈະມາຕໍ່ສູ້	ລິດທີເດດດວງສອນ ວ່າລື
ຫລອນຈັກມໍລະນາຕາຍ	ກ່ອນພົ້ນຊາວບ້ານ
ມຶງຢ່າມາກ່າວຕ້ານ	ຖະແຫລງກ່າວຄໍາສະລັບ
ກູຈັກຈັບຄໍບິດ	ບິບເສຍສັ້ນແປ້ງ

ຝ່າຍຍັກທັດຊະກິດໄດ້ຟັງ ກໍຄຽດຈົນໂຕສັ່ນ ມັນຈຶ່ງແກວ່ງ ຕະບອງເພັດເຂົ້າໃສ່ ພີ່ຜູ້ເປັນອ້າຍກໍຈຶ່ງຕໍ່ສູ້ກັບມັນທັນທີ ຍັກສາລະວັນກໍສູ້ຊ່ວຍພີ່ ແຕ່ທ້າວເກດສຸລິຍົງຍານຍັງນັ່ງຫົວເສີຍຢູ່, ຍັກສາ ລະວັນແກວ່ງຕະບອງໃສ່ ເຮັດໃຫ້ຍັກທັດຊະກິດລົ້ມຕາຍ ແຕ່ມັນພັດກັບເກີດເປັນຊ້າງນັບເປັນແສນໆໂຕ ທັງພີ່ ແລະ ຍັກສາລະວັນ ຊ່ວຍກັນສູ້ກັບຊ້າງຢ່າງບໍ່ຢ້ານບໍ່ກົວ ຈົນຝູງຊ້າງຕາຍໝົດ; ຕໍ່ມາກໍກາຍເປັນຊ້າງເຜືອກນັບເປັນຕື້ໆໂຕ ຍັກສາລະວັນເຫັນແນວນັ້ນ ຈຶ່ງກັບເພດເປັນຊ້າງເຜືອກຄືກັນ ທັງສອງຝ່າຍຕໍ່ສູ້ກັນໃນທີ່ສຸດຊ້າງເຜືອກເຊິ່ງແມ່ນຮູບຈໍາແລງຂອງຍັກທັດຊະກິດກໍຕາຍໝົດ ຍັງແຕ່ໂຕຂອງ

ຍັກທັດຊະກິດເອງ ມັນຈຶ່ງກົວດແກວ່ງຕະບອງສູ້ຢ່າງເອົາເປັນເອົາ ຕາຍ, ຍັກສາລະວັນກັບຜີກໍພ້ອມກັນສູ້ ເຮັດໃຫ້ຍັກທັດຊະກິດຄໍຂາດ ຫົວຟົ້ງໄປ ແຕ່ມັນກໍຈັບເອົາມາຕໍ່ຄືນໃໝ່ ແລ້ວຟ້າວປົບຕາຍ ເຂົ້າ ໄປເມືອງບັນທະພານດັ່ງບົດກອນຂຽນວ່າ

ອັນວ່າຫົວສະເດນກົ້ງ   ເຊຊວນນອງເລືອດ
ໄຫລຢາດຍ້ອຍ   ຮຳໜ້າດາດແດງ
ມັນກໍແຍງເອົາໄດ້   ຫົວມາຕິດຕໍ່
ມັນຈຶ່ງກັບຕ່າວປົ້ນ   ຄືນເຂົ້າສູ່ເມືອງ ຫັ້ນແລ້ວ

ສ່ວນຍັກສາລະວັນ ແລະ ຜີເມື່ອເຫັນວ່າຍັກທັດຊະກິດມັນແລ່ນ ປົບຕາຍໜີເຂົ້າເມືອເມືອງແລ້ວ ທັງສອງກໍພາກັນລົງໄປລ້າງຄາບ ເລືອດອອກຈາກຕົນຕົວ ຈາກນັ້ນກໍພາກັນພັກຜ່ອນຢ່ອນໃຈ, ຝ່າຍຍັກ ທັດຊະກິດເມື່ອກັບເຖິງພາສາດກໍເຂົ້າລາຍງານໃຫ້ຍັກທັດຖະຈັກ ຜູ້ ເປັນອ້າຍຮູ້ທັນທີ ບອກວ່າດຽວນີ້ການເມືອງເຮົ້ງຮ້ອນເຕັມທີ ແລ້ວ ມີຄົນລ່ວງລ້ຳເຂດແດນເຂົ້າມາ, ໃນຈຳນວນນີ້ກໍມີຍັກສາລະວັນຜູ້ທີ່ ເຄີຍເປັນຫົວເມືອງສ່ວຍຂອງເຮົາ ມັນກໍເປັນບ້າປ່ວງມານຳ ເອົາ ຄົນສອງຄົນມາພ້ອມ ພວກເຂົາຈະພາກັນມາມ້າງເມືອງຂອງເຮົາ, ນ້ອງໄດ້ພົບພວກເຂົາຢູ່ຫົວເມືອງ ແລະ ນ້ອງກໍໄດ້ຕໍ່ສູ້ກັບເຂົາ ແຕ່ ຖືກເຂົາທັງສອງສູ້ຄືນ ໃນທີ່ສຸດເຂົາກໍຕັດຄໍນ້ອງຈົນຂາດ ເມື່ອນອງ ເອົາຫົວມາຕໍ່ໄດ້ກໍຈຶ່ງຟ້າວເຂົ້າມາລາຍງານ. ຍັກທັດຖະຈັກໄດ້ຟັງ ການລາຍງານກໍຄຽດແຄ້ນ ຮ້າຍເປົ້ງ ເອົາກຳປັ້ນຕີໝອນ ບາດ ແຮງງ ທັງເວົ້າຂຶ້ນວ່າ ກູນີ້ມັນແມ່ນສວາງທີ່ມີລິດເດດແມ່ນ ໃຜມັນ ຈະມາດູໝິ່ນ ໃນໂລກນີ້ເຂົາວໍ້ກູໝົດ ດັ່ງບົດກອນຂຽນວ່າ

ກູນີ້ສວ່າງຂະໜາດແທ້ ລືເດດທົ່ງລືດທີ ແທດາຍ
ຜົດແຕ່ໃນໂລກີ ເຂດອົງເຂົາງົ້
ກໍບໍ່ມີໃຜຜູ້ ດູແຄວນລ່ວງເຂດ
ເອົາຫາກຂານເດດກ້າ ກູຫ້າວທີ່ເຈັ່ງ ມາກແລ້ວ

ຢູ່ໃນເຂດນັບທະພານນີ້ແມ່ນມັນເປັນໃຫ່ຍ ບໍ່ມີໃຜຈະມາ ລ່ວງລ້ຳດິນແດນຂອງມັນໄດ້ ຄາວນີ້ມັນຄຶດວ່າທັງສາມທີ່ລ່ວງມານີ້ ຄາຍກັບວ່າເອົາອາຫານມາສົ່ງໃຫ້ມັນ, ຍັກທັດຖະຈັກຈຶ່ງເຕີນພົນ ພວກເອົາກອງທານຂອງມັນມາເຕົ້າໂຮມ ບັນດາຍັກຢູ່ໃຕ້ລຸ່ມຟ້າທີ່ ເປັນເມືອງສ່ວຍຕ່າງໆກໍຫລັ່ງໄຫລກັນມາ ທັງຂະບວນຊ້າງມ້າຫອກຫຼາວຕາວເພັດ ຍັງແຕ່ເມືອງຫລວງຂອງຍັກສາລະວັນບໍ່ມີໃຜມາ ເພາະໄດ້ເປັນ ລູກນ້ອງຂອງທ້າວເກດສຸລິຍົງຍານແລ້ວ.

ເມື່ອເຫັນວ່າມາກັນຫລາຍສົມຄວນແລ້ວ ຍັກຜູ້ເປັນຫົວໜ້າຈຶ່ງສັ່ງໃຫ້ເບິ່ງຈຳນວນພົນ ປະກົດວ່າໂຮມໄດ້ທັງໝົດ ສີ່ກືປາຍຄົ່ງບິດກອນຂຽນວ່າ

ແຕ່ນັ້ນຍັກກໍເຕີນຮ່ຳທ້າວ ຫລີງກອດດູພົນ
ພໍປະມານເຖິງ ສີ່ກືປາຍລ້ານ
ເຮົາຈັກລົງການສູ້ ສົງຄາມຄາດເຄັ່ງ
ອວນໝູ່ເຂົ້າ ໄປກຸ້ມກ່ອມເອົາ

ຈາກນັ້ນເອົາກໍຂື້ນລາຍງານໃຫ້ຍັກທັດຖະຈັກຮູ້ ຝ່າຍຍັກທັດຖະຈັກ ກໍສະແດງຄວາມຊົມຊື່ນຍິນດີ ແລ້ວບອກໃຫ້ຍັກທັດຊະກິດ, ຄິດຊະຫລີງ ແລະ ກົງເພັດ ທັງຜູ້ເປັນນ້ອງ ແລະ ຫລານບັງຄັບ ພົນທານໄປໜ້າ ບອກວ່າໃຫ້ຈັດແບ່ງກຳລັງເປັນໝວດໝູ່ຕໍ່ສູ້ໄປເທື່ອ

ລະບາດກ້າວ ຖ້າຫາກມັນມີລິດເດດແຂງແຮງ ເຮົາຈຶ່ງຍົກຫມົດພົນພວກເຂົ້າໃສ່ເລີຍໂລດ, ຝ່າຍຍັກທັດຊະກິດ ຈຶ່ງລະດົມພົນຊ້າງພົນມ້າ ແລະ ພົນທານທັງຫລາຍອອກຈາກວຽງ ເບິ່ງຍັກໂຕໃດກໍ ສະແດງລິດເດດຂອງໃຜມັນເປັນຕາຫນ້າຢ້ານກົວ ສາລະພັດແຕ່ ເຂົາຈະແປງເພດ ດັ່ງບົດກອນຂຽນວ່າ

ອັນວ່າຄ້ອນໄງຂຶ້ນ ລະງົມເມກມົວບົດ
ເຂົາກໍທຳຕົວເຫມືອນ ຫມູ່ດອຍດູຮ້າຍ
ຕັ້ງວ່າໂຂໂມຫນ້າ ດັງຍາວຍວງອອກ
ປາກຄາບງ້າວ ຕາກົ້ງເຫລືອກລານ
ບາງພ່ອງທຳກະບອນຫນ້າ ຄືຫມີເຫມືອຍປ່າ
ຂາຮູບຊ້າງ ຕົວນັ້ນຮູບຄວາຍ
ກໍຫາກຫລາຍສ່ຳລົ້ນ ແຂ້ວກົ່ງກວມຕາ
ມັນກໍຄວາເອົາດາວ ຫນ່ວຍພະຈັນອົມໄວ້
ແຕ່ນັ້ນພົນຫລວງຍ້າຍ ວຽງໄຊ ໄຫລອອກ
ຄັບຄັ່ງເຂົ້າ ເຖິງທ້າວມຶດມົວ ແທ້ແລ້ວ

ນອກຈາກນີ້ ພວກຍັກຍັງກັບເພດເປັນຊ້າງຕົວດຽວຫົວນັບເປັນແສນລາງໂຕມີຕົວດຽວ ແຕ່ມີຂາເປັນຫມື່ນຂາ ຫັງແມບລົ້ນ ຍາວໆລີງກ້ຽວເຖິງຮອດປາຍຕີນ, ແຕ່ນັ້ນຍັກສາລະວັນ ຈຶ່ງບອກໃຫ້ທ້າວເກດສຸລິຍົງຍານຮູ້ວ່າ ໃຫ້ນອນເບິ່ງຢ່າງສະຫງົບ ເຂົາກັບພີຈະຈັດການກັບພວກຍັກຊຸມນີ້ເອງ, ທ້າວເກດສຸລິຍົງຍານ ຈຶ່ງຖາມຍັກສາລະວັນວ່າ ຍັກທັດຖະຈັກກໍມາໃນຂະບວນນີ້ບໍ ? ຍັກສາລະວັນ ຈຶ່ງແຈ້ງໃຫ້ທ້າວຮູ້ວ່າ ຍັກທັດຖະຈັກບໍ່ທັນເຫັນມາ ມີແຕ່ຍັກທັດຊະກິດ,

ລົດສະຫລີງ ແລະ ກົງເພັດ ສະເພາະລົດສະຫລີງນັ້ນມືອດທີ ເດດ ແຂງກ້າແທ້ໃດ.

ໃນຂະນະທີ່ທັງສາມພວມປຶກສາກັນຢູ່ນັ້ນ ຍັກທັດຊະກິດກໍ ທະຍານເຂົ້າໃສ່ຈົນເຖິງບ່ອນທັງສາມພັກຢູ່ ພ້ອມກັບຖາມແບບຂູ່ ເຂັນວ່າ ມຶງແມ່ນເດັກນ້ອຍມາແຕ່ທາງໃດ ເປັນຫຍັງບັງອາດເຂົ້າ ມາໃນເມືອງ ໂທດສູເທົ່າຫນ່ວຍພູພຸ່ມ, ທັງສາມຈຶ່ງເອົານີ້ຊີ້ໜ້າ ຍັກທັດຊະກິດພ້ອມກັບຕອບມັນຄືນ ໄປດັ່ງບົດກອນຂຽນວ່າ

ເມື່ອນັ້ນທັງສາມຕ້ານ	ຈາພີຍັກໃຫ່ຍ
ຊີ້ຊີ້ໜ້າ	ມັນນັ້ນບໍ່ກົວ
ຕູນີ້ມີທ່ອນຮູ້	ເຊື້ອຊາດແນວພີ
ມຶງຈັກມີແນວບານ	ດັ່ງໃດມີແຈ້ງ
ກູນີ້ຊື່ວ່າ ສຸລິຍົງຍານແກ້ວ	ແນວອິນລົງຫລໍ່ ຈິງແລ້ວ
ໃຜຈັກມາຕໍ່ຕ້ອງ	ກູທ້າວມອດຊີວັງ ແທ້ແລ້ວ

ທ້າວເກດສຸລິຍົງຍານບອກໃຫ້ບັນດາຍັກທັງຫລາຍຮູ້ຕື່ມວ່າສູຢ່າພາກັນມາສ່ຽງຕາຍເທາະ ຣີບພາກັນກັບຄືນເມືອງດີກວ່າ ແລ້ວນຳເອົານາງລັດສີນີ (ນາງແຕງອ່ອນ) ມາສົ່ງໃຫ້ກູດຽວນີ້ ແລ້ວກູຈະໄວ້ຊີວິດຊີວາພວກສູ, ຝ່າຍຍັກທັດຊະກິດ ໄດ້ຟັງກໍຮ້າຍໂວຍຂຶ້ນວ່າອັນວ່ານາງແຕງອ່ອນນັ້ນ ແມ່ນນ້ອງຂອງທ່ານພະລືສີຢູ່ກາງໄພພູນ ມຶງສິຊິມາອ້າງວ່າແມ່ນແມ່ຂອງມຶງບັກອັນນີ້, ເດັດຂາດກູບໍ່ສົ່ງ ມຶງດອກ ມີແຕ່ຕະບອງເພັດນີ້ແຫລະຊິສົ່ງໃຫ້ມຶງດັ່ງບົດກອນຂຽນວ່າ

ອັນວ່າກະສັດຕີແກ້ວ	ລັດສີນີແຕງອ່ອນ
ນາງຫາກເປັນນ້ອງແກ້ວ	ລືສີພຸນຮ່ວມສະຖານ

ມິງມາອຸບປະໂຫລກຕ້ານ ວ່າເປັນແມ່ມາດາ ວ່າລີ
ມິງຮ່ວມມາພາງຕົວະ ຫລອກເອົາໄປຊ້ອມ
ກູບໍ່ມີວາງແລ້ວ ນາງງາມນ້ອມສິ່ງ
ມິແຕ່ອາວຸດແກ້ວ ຕະບອງຫ້າວຊິສິ່ງມິງ.

ເວົ້າແລ້ວເຂົາກໍເຕີນລິພົນໂຍທາຫານ ບຸກເຂົ້າໃສ່ທາງເທິງກໍ ບິນບົນມາປານແມງເຫມົ່າ ທາງພົນກໍບຸຫມົ້ນຂຶ້ນ ຍັກສາລະວັນແລະ ຜີກໍພ້ອມກັນຕໍ່ສູ້ກັບພວກຍັກຈາກເມືອງມັນທະພານເປັນການໃຫ່ຍ , ຝ່າຍທັດຊະກິດ ຄິດສະຫລີງ ແລະ ກົງເພັດກໍສູ້ຢ່າງເອົາຊີວິດເປັນ ເດີມພັນ ຫມາຍຈະຈັບກຸມເອົາຍັກສາລະວັນ ເຊິ່ງເຄີຍເປັນ ຫົວ ເມືອງຂຶ້ນໃຫ້ໄດ້, ແຕ່ຍັກສາລະວັນກັບເພດເປັນຂະບວນຍັກ ນັບ ເປັນລ້ານໆຕົວ ຍັກທັດຊະກິດກໍກັບເພດເປັນຫລາຍໂຕຄືກັນ ແລ້ວ ເຫາະຂຶ້ນໄປຕໍ່ສູ້ກັນຢູ່ເທິງອາກາດ ເຮັດໃຫ້ສົງຄາມກາງອາ ກາດ ຄັ້ງນີ້ດຸເດືອດຂ້ຽວຂາດ ແຕ່ລະຝ່າຍໃຊ້ຫມົດລິດເດດຂອງໃຜມັນຍັກ ທັດຊະກິດ ຄິດສະຫລີງ ແລະ ກົງເພັດ ເຖິງຈະຖືກບາດເຈັບແລະ ອ່ອນແຮງ ກໍສູ້ຢ່າງບໍ່ຍອມຖອຍ; ເມື່ອເຫັນວ່າເຫດການມັນນັບທະ ວີຂຶ້ນ ຍັກສາລະວັນ ຈຶ່ງເຫາະລົງມາລາຍງານໃຫ້ທ້າວເກດສຸລິຍົງ ຍານຮູ້ ແລະ ຮ້ອງຂໍໃຫ້ທ້າວຊ່ວຍ.

ທ້າວເກດສຸລິຍົງຍານຈຶ່ງເອີ້ນ ເອົາຜີຜູ້ ອ້າຍທີ່ພວມສູ້ຮົບ ຢູ່ ເທິງອາກາດໃຫ້ລົງມາ ເພື່ອເຕົ້າໂຮມກຳລັງກັນຕໍ່ສູ້ຄືນ ແລະ ໃຊ້ ສອນຍິງປາບມານ ເຮັດໃຫ້ພົນຫລວງຂອງຍັກຕາຍລະເນລະນອງ ຍັກກົງເພັດ ກໍຕາຍພ້ອມກັບພົນຂອງມັນດັ່ງບົດກອນຂຽນວ່າ

ຄໍຂາດມ້ວນ ນອງເລືອດຫລານໄຫລ

ພົນຫລວງມຸດ　　　　　　ມອດ ໄປຕົງສຽງ
ຍັງແຕ່ທັດຊະກຶດທ້າວ　　　　　ຄຶດສະຫລຶງນ້ອງພີ່
ສ່ວນວ່າກົງເພັດນັ້ນ　　　　　ມັນມ້ວຍພ່ຳພົນ ທັ້ນແລ້ວ

ຍັກທັດຊະກຶດເຫັນພົນຫລວງຕາຍຫລາຍກໍເສກຄາຖາເປົ່າຄືນແຕ່ເປົ່າແນວໃດກໍບໍ່ຄືນມາໄດ້ ມັນຈຶ່ງຕົກໃຈຟ້າວຫນີເມືອທັງສິ້ນທັງເຊັນ ເພື່ອລາຍງານໃຫ້ຍັກທັດຖະຈັກຮູ້ວ່າ ດຽວນີ້ພົນຫລວງຂອງມັນ ຕາຍຫມົດສູ້ເຂົາບໍ່ໄດ້, ພວກມັນ ທັງສອງກໍແຂນຂາດກົງເພັດກໍຕາຍ ໄປແລ້ວ ນັບແຕ່ເຮັດສົງຄາມມານີ້ ບໍ່ເຄີຍມີຄັ້ງໃດຈະພິ ລຶກພິລ້ຳ ປານເທື່ອນີ້ ຂ້າກໍບໍ່ຕາຍເຮັດແນວໃດກໍຈ້ອຍ, ຍັກທັດຊະກຶດບອກກັບ ຍັກທັດຖະຈັກຕໍ່ໄປວ່າ ມັນເປັນລູກຂອງນາງແຕງອ່ອນ ມັນບອກວ່າ ຈະຕີຍາດເອົາແມ່ມັນໃຫ້ໄດ້ ເພື່ອບໍ່ໃຫ້ເສຍເມືອງເສຍບ້ານ ແລະປ່າວໄພ່ລາສະດອນ ເຮົາຄວນສົ່ງນາງແຕງອ່ອນໃຫ້ມັນສາບໍ ?

ຝ່າຍຍັກທັດຖະຈັກໄດ້ຟັງກໍຮ້າຍຂຶ້ນສຽງເປັ້ງໆ ກູນີ້ຫວະຈະ ໄປອ່ອນຂໍ້ຍໍມືກັບມັນງ່າຍໆ ເວົ້າແລ້ວກໍເຕີນປ່າວໂຍທາຫານນຳຂະບວນອອກຕໍ່ສູ້ ມີທັງຂະບວນຊ້າງ ຂະບວນມ້າຫອກຫລາວຕະບອງເພັດ

ສ່ວນ.ຍັກທັດຖະຈັກຂຶ້ນຂີ່ຊ້າງເຜືອກ, ບັນດາເມືອງມານຕ່າງໆ ທີ່ເປັນຫົວເມືອງຂຶ້ນ ຍັກທັດຖະຈັກສັ່ງໃຫ້ນຳຂະບວນອອກສົມທົບ ຫມົດ ຍັກທັດຖະຈັກສະແດງລິດ ຈັບເອົາດວງພະອາທິດມາກຳໄວ້ມື ຂວາ ສ່ວນມືຊ້າຍກຳດວງພະຈັນ ແນມເບິ່ງດວງດາວຕ່າງໆເຫລື້ອມຍາບໆ ຕາມຕົນຕາມຕົວ ຫົວຂອງມັນປົ່ງອອກປານດວງດາວຢູ່ເທິງຫົວຂອງ ມັນ ເປັນຮູບພະຍາຈັກ ຖືພະຂັນໄຊ, ສ່ວນຍັກບໍລິວານຂອງມັນຕ່າງກໍສະແດງລິດເດດທຸກຢ່າງ ເພື່ອເປັນການຂົ່ມຂວັນທ້າວເກດສູລິຍົງຍານ,

ທ້າວເກດສຸລິຍົງຍານໄດ້ຖາມຍັກສາລະວັນວ່າ ໃນຂະບວນນີ້ມີຍັກທັດຖະຈັກມານຳຫລືບໍ ? ຍັກສາລະວັນຈຶ່ງຕອບວ່າມີແທ້ຜູ້ທີ່ຂີ່ຊ້າງ ມີກຳດວງພະອາທິດ ແລະ ດວງພະຈັນນັ້ນແຫລະ ຍັກທັດຖະຈັກ, ທ້າວຈຶ່ງບອກກັບຍັກສາລະວັນ ແລະ ພິຜູ້ເປັນອ້າຍວ່າ ຢ່າຢ້ານກົວ ມັນເລີຍ ໄວ້ໃຫ້ເຮົາຈັດການກັບມັນເອງ.

ທ້າວເກດສຸລິຍົງຍານ, ຍັກສາລະວັນ ແລະ ພິຜູ້ເປັນອ້າຍຮ່ວມກັນຕໍ່ສູ້ກັບຝູງມານ ໃຊ້ທັງເວດມົນຄາຖາ ແລະ ທະນູສອນ ຝູງມານຕາຍເກື່ອນກອງກັນເຕັມແຜ່ນດິນ ແຕ່ແລ້ວມັນກໍເປົ່າເອົາກັບຄືນ ຫລືບາງຕົວກໍຈັບຫົວມາຕິດຕໍ່ ແລ້ວສະແດງແຜງລິດຂຶ້ນນັບເປັນລ້ານໆໂຕ, ເມື່ອເຫັນວ່າຝູງມານຍັງມີທາງເອົາຫົວມາຕໍ່ຄືນໄດ້ ທ້າວຈຶ່ງ ໄດ້ຕັດສິນໃຈແກວ່ງຜ້າວິເສດ. ເຮັດໃຫ້ຝູງມານຕາຍລະເນດລະນອງ ແລະເກີດເປັນພາຍຸໃຫ່ຍພັດຫົວເຂົາໄປຕົກຂອບຟ້າມະຫາສະຫມຸດ ເຂົາບໍ່ສາມາດຈະນຳຫົວມາຕິດຕໍ່ຄືນໄດ້ອີກ ດັ່ງບົດກອນຂຽນວ່າ

ແຕ່ນັ້ນທ້າວປ່າຍເປື້ອງ ກົວດແກ່ວງພູສາ (ຜ້າ)
ເປັນລົມເຫັງ ຫອບມານມົວລົ້ນ
ເປັນກຽວພ້ານ ພານຫົວກຸດຂາດ
ດີແກ້ລົມສົ່ງຢູ້ ຫົວກິ້ງເກື່ອນກະເດນ
ຫົວມ່ານກິ້ງ ໄປໄກແສນໂຍດ .
ຕົກຂອກຄ້າຍ ເຂົາຂ້ອນຂອບສະເຫມັນ

ສ່ວນວ່າຍັກທັດຊະຄິດ ແລະ ຄິດຊະຫລີງ ກໍຕາຍພ້ອມພົນ ພວກຂອງເຂົາ ຍັງແຕ່ຍັກທັດຖະຈັກຕົວດຽວ ກຳລັງພົນຕາຍຈົນວ່າເລືອດໄຫລນອງຈົນຊ້າງລູຍໄປ; ການສູ້ຣົບເຮັດໃຫ້ອາກາດມືດຟ້າມົວ ດິນ

ຈຶ່ງຮ້ອນເຣົ່ງ ໄຫມ້ໄປເຖິງນາງເທບລີລາຜູ້ເປັນແມ່ລ້ຽງຢູ່ເຫິງ ສະຫວັນ ນາງຄິດວ່າຄາວນີ້ລູກຕ້ອງປະສົບກັບການສົງຄາມ ນາງ ຈຶ່ງແນມລົງມາເບິ່ງ ເຫັນທ້າວຍັງຢູ່ສະບາຍ ມີແຕ່ຝູງມານລົ້ມຕາຍໄຂ່ວອິນ ເຮັດໃຫ້ນາງຫາຍຈາກຄວາມກັງວົນ ດັ່ງບົດກອນຂຽນວ່າ

ແຕນັ້ນນາງນາດນ້ອຍ ຕັດສ່ອງສິລະຍານ
ກໍຈຶ່ງເຫັນບາຄານ ຄ່ອຍລົງຍັງຫມັ້ນ
ນາງກໍຫາຍຄ່ຳຮອນ ມະໂນໃນຊົມຊື່ນ
ເຫັນແຕ່ມານມອດມ້ຽນ ບາທ້າວຢູ່ກະເສີມ

ຍັກທັດຖະຈັກ ໄດ້ເສກຄາຖາເປົ່າ ຫວັງຈະໃຫ້ກຳລັງພົນຂອງມັນທີ່ຕາຍໄປນັ້ນກັບເກີດຄືນມາ ເປົ່າປານໃດກໍບໍ່ຄືນ ກອງເລືອດມີແຕ່ຍິ່ງຂຶ້ນ ທັງກັບກາຍໄປເປັນເຫລືອກເປັນຍູງ ສືບມາຮອດຊູ່ມື້ນີ້, ຍັກທັດຖະຈັກເວົ້າວ່າ ຖ້າກູບໍ່ຕາຍມຶງຢ່າຫວັງຊິໄດ້ມາປົກຄອງ ເມືອງຂອງກູ ເວົ້າແລ້ວມັນກໍກັບແພດເປັນຄືຫນ່ວຍພູນັບເປັນ ລ້ານໆຫນ່ວຍ ແຕ່ລະຫນ່ວຍມີຫົວຊ້ອງອອກມາ ແລ້ວກໍກົ້ວດແກວ່ງຕະ ບອງເຂົ້າໃສ່; ຍັກສາລະວັນຈຶ່ງບອກໃຫ້ທ້າວເກດສຸລິຍົງຍານ ເອົາ ຜ້າວິເສດຫລືວ່າຜ້າທິບອອກມາແກວ່ງ ຈຶ່ງເກີດເປັນລົມແຮງພັດ ເອົາພວກມານປີວໄປ ສ່ວນເວດມົນຄາຖາອາຄົມຂອງຍັກທັດຖະຈັກກໍຫາຍຈ້ອຍໄປຫມົດ.

ຍັກທັດຖະຈັກຈຶ່ງປ່ຽນວິທີໃຫມ່ ຄືນິລະມິດເປັນແມ່ນ້ຳໄຫລ ບ່າເຂົ້າໃສ່ທ້າວ ແລະ ຍັກສາລະວັນພ້ອມທັງຜີ ທ້າວຈຶ່ງແກວ່ງຜ້າ ວິເສດໃຫ້ເປັນລົມຍູ້ແມ່ນ້ຳຫນີໄປທາງອື່ນ, ຍັກທັດຖະຈັກເຫັນໃຊ້ວິທີນີ້ບໍ່ໄດ້ຜົນ ຈຶ່ງນິລະມິດໃຫ້ເກີດໄຟແລ້ວໃຊ້ລົມຍູ້ໄຟເຂົ້າໃສ່ ແຕ່ ທ້າວ

ໃຊ້ຜ້າແກວ່ງເປັນແມ່ນ້ຳເຂົ້າມອດໄຟ; ຍັກທັດຖະຈັກຮູ້ວ່າລິດເດດທີ່ໄດ້ສະແດງອອກມາແມ່ນໃຊ້ບໍ່ໄດ້ ຄາວນີ້ມັນຈຶ່ງຫາວິທີແຝງລິດທີ່ໜ້າງຶດງໍ້ອອກມາ ຄືມີທັງສອງເບື້ອງຖືເອົາດວງພະຈັນ ປາກຄາບ ດວງຕາເວັນ ຕີນມັນຢຽບໜ່ວຍດາວ ນັບເປັນລ້ານໆ ແນມເບິ່ງເຫລື້ອມຍາບໆປານພະອິນ ທຸກພາກສ່ວນໃນຮ່າງກາຍຂອງມັນມີແຕ່ຫົວ ປົ່ງອອກມາຊາບລາບ ມີຖືຕະບອງ ແລະ ທະນູ ໜ້າກໍມີສີ່ໜ້າ ເຫາະມາທາງອາກາດ.

ແຕ່ຍັກສາລະວັນຮູ້ຫລ່ຽມທັນ ຈຶ່ງແປງເພດຄືກັບຍັກທັດຖະ ຈັກແລ້ວບອກທ້າວເກດສຸລິຍົງຍານວ່າ ໃຫ້ພັກຜ່ອນສະບາຍ ຈະຮ່ອມກັບພີ່ຜູ້ເປັນອ້າຍຕໍ່ສູ້ກັບມັນເອງ ຖ້າຫາກວ່າເຫລືອບ່າກວ່າແຮງຈຶ່ງເຂົ້າຊ່ວຍຕາມທີ່ຫລັງ' ບັ້ນສູ້ຮົບຢູ່ເທິງອາກາດໃນການເປີດສາກບຸກ ກັນຢ່າງໜັກ ທັງສອງຝ່າຍໃຊ້ທຸກວິຊາອາຄົມທີ່ມີ ຈົນວ່າຍັກສາລະ ວັນ ແລະ ພີ່ອ່ອນແຮງ ຈຶ່ງກັບໄປຫາທ້າວ, ຝ່າຍຍັກທັດຖະຈັກເຫັນ ວ່າມັນໄດ້ທ່າດີ ຈຶ່ງໄລ່ຕິດຕາມໄປຈົນເຖິງທ້າວ ແຕ່ທ້າວໄດ້ບອກ ມັນດ້ວຍຄວາມດີວ່າ ເຊົາສາຢ່າຊິມາຕໍ່ສູ້ເທາະ ມັນຊິເສຍບ້ານ ເສຍເມືອງບ່າວໄພ່ລາສະດອນ ທາງທີ່ດີໃຫ້ກັບຄືນເມືອງມັນທະພານແລ້ວສົ່ງແມ່ຂອງເຮົາມາໃຫ້ ດັ່ງບົດກອນຂຽນວ່າ

ແຕ່ນັ້ນທັດຖະຈັກຮູ້	ສອງພະອົງໜີຫລີກ
ມັນກໍໂດດໄຕ່ຕັ້ນ	ຕາມສົ້ນໄລ່ນຳ
ເລີຍເລົ່າຖອງເຖິງທ້າວ	ກຸມມານພະເກດ
ທ້າວເລົ່າຕ້ານ	ຂານເວົ້າຕໍ່ມານ
ມັນຈັກເສຍເມືອງກວ້າງ	ບັນທະພານຂອງທ່ານ ຈິງແລ້ວ

ມັນຈັກເສຍຍອດແກ້ວ ທັງຂາໄພ່ເມືອງ ທ່ານນັ້ນ
ໃຫ້ທ່ານຄືນເມືອສ້າງ ຫອມພົນຕຸ້ມໄພ່ ເສຍຖ່ອນ
ແລ້ວຈຶ່ງຄືນສົ່ງໃຫ້ ນາງເຫຼົ້າແມ່ເຮົາ ທ່ານເອີຍ
ເຮົາຈັກເອົາເມືອ ສ້າງ ທໍປາງສະເຫວີຍລາດ
ເຮົາຈັກວາງມອບໃຫ້ ເມືອງບ້ານທ່ານທົງ ດອກນາ

ທ້າວຍັງເວົ້າກັບຍັກທັດຖະຈັກຕື່ມວ່າ ພໍປານໂຕນັ້ນຫວະຊິມາ ຕໍ່ສູ້ຊັ້ນຄູຄືເຮົາໄດ້ ເຮົາເຄີຍສັ່ງສອນໃຫ້ໂຕເປັນດີ ແຕ່ໂຕບໍ່ຍອມຟັງ; ຝ່າຍຍັກທັດຖະຈັກໄດ້ຍິນກໍພໍປານຖອກນ້ຳມັນໃສ່ໄຟ ລຸກຂຶ້ນວາບໆມັນເວົ້າວ່າ ມຶງນັ້ນເດັກນ້ອຍໆຊິມາຂີ້ຄູຍເຫາະ ຄູຂອງກູນັ້ນແມ່ນ ນາລາຍພະຍາເຫວດພຸ້ນ, ມຶງຈະໃຫ້ກູສົ່ງນາງໃຫ້ຢ່າຫວັງ ຕາຍໃດ ກູຍັງມີຊີວິດຢູ່ ເວົ້າແລ້ວມັນກໍກົວດແກວ່ງຕະບອງເຂົ້າໃສ່ທັນທີຕົວຂອງມັນທຸກເສັ້ນຂົນມີຕົວປີ່ງອອກປານຂົນເຫມັ້ນ; ຈາກນັ້ນຍັກທັດຖະ ຈັກກໍຕັ້ນເຂົ້າໃສ່ ພ້ອມກົວດແກວ່ງພະຂັນ ແລະ ຂວານເພັດໃສ່ ທ້າວເກດສຸລິຍົງຍານ, ແຕ່ທ້າວບໍ່ໄດ້ຢ້ານກົວແຕ່ປະການໃດ ທ້າວຈຶ່ງໄດ້ຍິງສອນອອກໄປໃສ່ຍັກ ເຮັດໃຫ້ຫົວຂອງມັນຂາດກະເດັດໄປ ແຕ່ມັນກໍຈັບເອົາຫົວມາຕໍ່ຄືນໄດ້; ທ້າວຮູ້ທັນ ຫລ່ຽມລາຍຂອງຍັກ ທ້າວຈຶ່ງແກວ່ງແຫວນວິເສດໃສ່ທັນທີ ແຫວນໄດ້ພັນເຂົ້າຮູທູ ເກີດເປັນ ໄຟໄຫມ້ຢູ່ໃນຮູທູ ເຮັດໃຫ້ຍັກທັດຖະຈັກດິ້ນຣົນກະວົນກະວາຍ ດັ່ງ ບົດກອນຂຽນວ່າ

ແຕ່ນັ້ນທ້າວຮຸ່ງຮູ້ ເຊີງເດດພິຫລວງ
ບາຄານວາງ ປ່ອຍແຫວນຖູຍຖົມ
ເມື່ອນັ້ນມະນີໂຊແກ້ວ ທຳມະໂຮງລູກປະເສີດ

ແຫວນກໍສີບສອດກ້ຽວ ຜັນເຂົ້າໃສ່ຫູ
ເປັນໄຟຮ້ອນ ແສນແປວລຸກລວາບ
ຍັກໃຫ່ຍຟ້າວ ພະລັນເຂົ້າສູ່ນະທີ
ມັນກໍເຊຊວນຮ້ອນ ລົງນະທີຊວາດວຸ່ນ
ໄຟກໍຍັງເລົ່າຮ້ອນ ຜັນເຂົ້າຮອດໃຈ

ຍັກທັດຖະຈັກເຮັດແນວໃດ ຄວາມຮ້ອນກໍບໍ່ເບົາບາງລົງໄດ້ ມັນຈຶ່ງຄິດຂຶ້ນມາໄດ້ວ່າ ຄວນໄປເອົານ້ຳບໍ່ແກ້ວຢູ່ໃນຖ້ຳມາທາໃຫ້ ຫາຍຈາກພິດຮ້ອນໄຫມ້ຂອງໄຟ, ຄິດແລ້ວມັນກໍຮີບຟ້າວໄປຍັງຖ້ຳບ່ອນ ທີ່ມີນ້ຳບໍ່ແກ້ວ ແລ້ວກໍຟາຍເອົານ້ຳບໍ່ແກ້ວມາລູບມາທາ ປະກົດວ່າ ພິດຂອງຄວາມຮ້ອນໄດ້ຫາຍໄປປານປິດຖິ້ມ ຍັກທັດຖະຈັກຈຶ່ງຢູ່ຢ່າງ ສະບາຍ, ຕົກຕອນບ່າຍຍັກທັດຖະຈັກ ກໍກອບເອົານ້ຳບໍ່ແກ້ວມາ ໄວ້ຜູຣ້າງ ແລ້ວເດີນທາງກັບຄືນມາສູ້ຮົບກັບທ້າວອີກຄັ້ງໃຫມ່.

ຝ່າຍທ້າວເກດສຸລິຍົງຍານ ເຫັນວ່າແຫວນຫມົດພິດແລ້ວ ທ້າວຈຶ່ງໃຊ້ຜ້າວິເສດກັວດແກວ່ງຕໍ່ສູ້ກັບຍັກ ຜ້າວິເສດໄດ້ເກີດເປັນລົມພາຍຸໃຫ່ຍ ພັດເອົານ້ຳບໍ່ແກ້ວຢູ່ຫົວຂອງຍັກໃຫ້ແຫ້ງຈົນຫມົດ ຈາກນັ້ນພິດຂອງແຫວນກໍເລີ່ມເກີດເປັນໄຟຮ້ອນ ຍັກກໍເອົານ້ຳມາທາ ລົມພາຍຸກໍພັດເອົາຫນີ ເຮັດໃຫ້ຍັກຮ້ອນອີກໃຫມ່ ສູ້ກັນໄປໄຖກັນມາຢູ່ພໍປານນັ້ນ ຍັກສາລະວັນຈຶ່ງບອກກັບທ້າວເກດສຸລິຍົງຍານວ່າ ຖ້າເຮົາຈະສູ້ ກັບມັນກໍຈະບໍ່ເລີກບໍ່ແລ້ວ ເປັນຈັກເທື່ອດອກ ເພາະວ່າກົງໃຈຂອງ ຍັກທັດຖະຈັກ ມັນໄດ້ເອົາໄປຝາກໄວ້ນຳພະຍາເວດສຸວັນພຸ້ນ ເຮົາ ຈະເຮັດແນວໃດ ມັນກໍບໍ່ຕາຍດອກ ຖ້າບໍ່ໄປເອົາກົງໃຈຂອງມັນມາ ໄດ້ແມ່ນບໍ່ມີທາງຈະຊະນະມັນໄດ້ດອກ, ທ້າວເກດສຸລິຍົງຍານໄດ້ສໍ້ຖາມ

ຍັກສາລະວັນວ່າ ຄັນຊຸ້ມຈະເຮັດແນວໃດ ຈຶ່ງຈະໄດ້ກົງໃຈຂອງ ມັນ ມາ; ຍັກສາລະວັນຕອບວ່າ ເລື່ອງນີ້ກໍຫນ້າຄິດຢູ່ຄືກັນ ເພາະພະຍາ ວອດສູ້ວັນນັ້ນ ບໍ່ແມ່ນທຳມະດາ ດັ່ງບົດກອນຂຽນວ່າ

ກໍຫາກລືຊາລ້ຳ ມາລາຍພະຍາວອດ
ຍັກຢູ່ໃຕ້ແຜ່ນຫລ້າ ເປັນນ້ອຍແຫ່ງມັນ ພະເອີຍ
ລືຈັກໄປເອົາໄດ້ ສາຍໃຈຍິນຍາກ ເສຍແລ້ວ
ລືອາດເອົາງ່າຍໄດ້ ມີຮູ້ທ່ອນເຫັນ ພະເອີຍ

ທ້າວເກດສຸລິຍົງຍານ ຈຶ່ງເວົ້າກັບຍັກສາລະວັນວ່າ ຖ້າ ເປັນ ແນວນັ້ນແທ້ ເຮົາຕ້ອງໃຊ້ຜ້າວິດເສດໄປຫລອກລວງມັນ, ເວົ້າ ແລ້ວ ທ້າວກໍຈັບເອົາຜ້າມາແກວ່ງກາຍເປັນ ໂຕກວາງຄຳສາມາດຕົ້ນໄປ ມາໄດ້ ແລ້ວກໍແລ່ນເຂົ້າໄປໃນເມືອງ ເວລານັ້ນມາລາຍພະຍາວອດ ໄດ້ໄປເຝົ້າພະອິນທີ່ຂ່ວງສະຫນາມຂອງພະອິນ, ຝ່າຍກວາງຄຳ ຜ້າ ເຫັນແນວນັ້ນຈຶ່ງຫາວິທີເລາະລຽບກິນຫຍ້າອ່ອນຢູ່ໃກ້ໆແຄມ ເມືອງ ເຮັດໃຫ້ກົງໃຈຂອງຍັກທັດຖະຈັກ ຄິດຢາກກິນເນື້ອກວາງຂຶ້ນມາທັນທີ ເພາະວ່າໂຕຍັກທັດຖະຈັກເອງນັ້ນ ນັບແຕ່ໄດ້ຕໍ່ສູ້ກັບທ້າວເກດສຸລິຍົງ ຍານມາຫລາຍວັນ ກໍບໍ່ໄດ້ອອກທ່ຽວປ່າຫາເນື້ອມາລ້ຽງກົງໃຈ ຂອງ ມັນ, ດັ່ງນັ້ນໃຈຈຶ່ງເກີດອຶດຫິວ ພໍແຕ່ເຫັນກວາງຄຳມາໃກ້ກໍ ຟ້າວ ໂດດເຂົ້າໃສ່ຫມາຍຈະຄຸບກິນຕາມທີ່ມັນຄິດໄວ້.

ຝ່າຍກວາງຄຳຜ້າວິເສດ ແນ່ໃຈວ່າແມ່ນກົງໃຈຂອງຍັກທັດ ຖະ ຈັກພວມໄລ່ຫມາຍຈະຄຸບກິນ ກໍທຳທ່າແລ່ນຫລອກລໍ້ ເຮັດໃຫ້ກົງ ໃຈ ໄລ່ຕິດຕາມໄປເລື້ອຍໆ ແລ່ນຕາມແລ່ນກໍໄປເຖິງບ່ອນທັງສາມພັກຢູ່, ກວາງຄຳຈຶ່ງກັບເພດຄືນເປັນຜືນຜ້າວິດເສດແລ້ວຕຸ້ມເອົາກົງໃຈ ໄວ້

ແລ້ວກໍເຫາະຫອບກົງໃຈໄປໃຫ້ທ້າວເກດສຸລິຍົງຍານ ທ້າວຈຶ່ງ ຟ້າວໄຂເບິ່ງ ເມື່ອຮູ້ວ່າແມ່ນກົງໃຈຂອງຍັກທັດຖະຈັກ ທ້າວຈຶ່ງເອົາດາບຟັນຜ່າລິງກົງໃຈຈົນມຸ່ນລະອຽດ ດັ່ງບົດກອນຂຽນວ່າ

ແຕ່ນັ້ນບາໄທທ້າວ	ໄຂດູຫລິງລ່ຳ
ດູປະຫລາດລ້ຳ	ພະຂັນເປື້ອງຜ່າລິງ
ທ້າວກໍຕັດຂາດຂ້ອນ	ສາຍເຊືອກກົງໃຈ
ເປັນຜູຍຜົງ	ມຸ່ນທະລາຍຫລາຍບັ້ນ
ກົງໃຈທ້າວ	ທັດຖະຈັກເລີຍຂາດ
ຫາບ່ອນບັ້ນ	ດີໄດ້ບໍ່ມີ

ຈາກນັ້ນ ທ້າວເກດສຸລິຍົງຍານ ຈຶ່ງຈັບເອົາຫ້ວງກົງໃຈຍົກ ຂຶ້ນພ້ອມກັບບອກຍັກທັດຖະຈັກໃຫ້ຮູ້ວ່າ ເບິ່ງແມ່ຢ່າຊິມືວແຕ່ຣົບແຕ່ ເລວກົງໃຈຂອງມຶງມຸ່ນຫມົດແລ້ວ, ຝ່າຍຍັກທັດຖະຈັກ ພໍແຕ່ແນມເຫັນ ກໍກົ້ມຫນ້າໄຫ້ຄອງຖາແຕ່ຕາຍຢ່າງດຽວ, ເຮົາບອກແຕ່ທົ່ວທີແລ້ວ ເດວ່າຢ່າຊິຊອກຫາບ່ອນຕາຍ ແຕ່ໂຕກໍບໍ່ຍອມເຊື່ອຟັງຄຳທີ່ເຮົາ ກ່າວຫ້າມ; ສ່ວນຍັກທັດຖະຈັກໄດ້ຮູ້ວ່າ ກົງໃຈຂອງມັນມຸ່ນແລ້ວ ຈຶ່ງໃດກໍແມ່ນຕາຍ ໂດຍບໍ່ມີທາງຈະຫລີກພົ້ນ ເຖິງແມ່ນຊິອ່ອນຍອມນົບ ໄຫວ້ແນວໃດກໍບໍ່ມີທາງຊ່ວຍໄດ້ ດັ່ງນັ້ນມັນຈຶ່ງຕັດສິນໃຈສູ້ຣົບຕໍ່ຈົນເຖິງນາທີສຸດທ້າຍ.

ການສູ້ຣົບຄັ້ງນີ້ ຍັກທັດຖະຈັກກໍແມ່ນສູ້ເພື່ອຕາຍຢ່າງດຽວ ທ້າວໄດ້ຍິງສອນເຂົ້າໃສ່ໂຕຂອງຍັກນັບເປັນຫມື່ນໆຮູ ເຮັດໃຫ້ຍັກທັດ ຖະຈັກເຈັບປວດລົ້ມລົງເລືອດໄຫລເຕັມພື້ນ ແຕ່ກໍຕາຍຍາກມັນຍັງ ດີ້ນປັບໆຢູ່, ທ້າວຈຶ່ງບອກໃຫ້ພີ່ເມືອງຜູ້ເປັນອ້າຍ ແລະ ຍັກສາລະ ວັນ

ເອົາດາບໄປຟັນຊ້ຳ ໃຫ້ມັນຕາຍແຈບຈົມ, ເມືອຍັກທັດຖະຈັກ ຕາຍແລ້ວ ທັງສາມກໍພາກັນລົງອາບນ້ຳລ້າງສ່ວຍ ຮ່າງກາຍ ຈາກນັ້ນ ກໍຂຶ້ນມາພັກຜ່ອນ ເທວະດາທີ່ຮັກສາຢູ່ຂົງເຂດດັ່ງກ່າວ ຈຶ່ງພາກັນ ຍໍພານແກ້ວຖວາຍເປັນການສະແດງຄວາມຍິນດີໃນໄຊຊະນະຄັ້ງນີ້.

/./

25- ບັ້ນທ້າວເກດສຸລິຍົງຍານ ເຂົ້າໄປໃນເມືອງບັນທະພານ

ພາຍຫລັງທີ່ທ້າວເກດສຸລິຍົງຍານ, ພີເມືອງ ແລະ ຍັກ ສາລະວັນພັກຜ່ອນກິນເຂົ້າເອົາແຮງແລ້ວ ກໍພາກັນເດີນທາງເຂົ້າໄປ ໃນກາງເມືອງບັນທະພານ ຊຶ່ງເປັນເມືອງຂອງຍັກທັດຖະຈັກ, ເມື່ອທັງສາມເຂົ້າໄປເຖິງຫໍໂຮງຂອງຍັກທັດຖະຈັກ ກໍໄດ້ພົບສາວສະ ຫນົມຫນຸ່ມນ້ອຍ ນັບເປັນຫມື່ນໆ ນາງເບິ່ງນາງໃດກໍມີແຕ່ຜູ້ຈົບງາມ, ສ່ວນວ່າເມຍຂອງຍັກທັດຖະຈັກ ທັງແປດຄົນນັ້ນ ຜູ້ໃດກໍງາມໆພໍທ້າວເຂົ້າໄປໃກ້ເຂົາພາກັນຍ້ານກົວ ແລະ ຮ້ອງໄຫ້ ທັງພ່ອງຖວາຍດອກ ໄມ້ທູບທຽນ ແລະ ເຄື່ອງບັນນາການຕ່າງໆ ດັ່ງບົດກອນຂຽນວ່າ

ອັນວ່າເທວີແກ້ວ	ທຽມມັນພໍແປດ
ງາມເລີດລ້ຳ	ສີເຂັ້ມຄາດທອງ
ຮອງງແກ້ມ	ພີວງາມໃສສ່ອງ
ທ້າວຍ່ອງໃກ້	ສຽງໄຫ້ມີນັນ

ທ້າວເກດສຸລິຍົງຍານໄດ້ໄຕ່ຖາມນາງສູນທອງ ເຖິງຮີດຄອງໃນການປົກຄອງບ້ານເມືອງ ແລະ ຖາມຫາລູກຊາຍຂອງຍັກທັດຖະ ຈັກວ່າມີຫລືບໍ່ ຖ້າມີຈະໄດ້ໃຫ້ຂຶ້ນຄອງບ້ານເມືອງແທນພໍ່ຂອງເຂົາ, ນາງ

ສູນທອງກໍໄດ້ບອກທ້າວຕາມຄວາມຈິງວ່າ ບໍ່ມີລູກຈະສືບເຊື້ອ ແທນ ແນວດອກ ຂໍໃຫ້ພະອົງທົງປົກຄອງເອງ ເພາະພູ້ຂ້າກໍມີແຕ່ນາງ ປະທຸມມາຜູ້ດຽວ ແຕ່ເປັນລູກລ້ຽງ ດຽວນີ້ນາງຢູ່ເທິງຫໍຜາສາດພຸ້ນ, ຂໍໃຫ້ພະອົງປົກຄອງໄພ່ຟ້າຂ້າແຜ່ນດິນສືບໄປຖອນ.

ທ້າວເກດສຸລິຍົງຍານ ໄດ້ເວົ້າກັບນາງສູນທອງວ່າ ເຫົ້າທີ່ນາງມອບເວນບ້ານເມືອງໃຫ້ເຮົາຄອບຄອງນັ້ນ ກໍຖືກຕ້ອງແລ້ວ ແຕ່ ເຮົາເອງຈະຂໍມອບໃຫ້ລູງເປັນຜູ້ປົກຄອງ, ເຮົາຈະກັບຄືນບ້ານ ເມືອງຂອງເຮົາ ເພາະເຮົາມາທີ່ນີ້ກໍແມ່ນມານຳຫາແມ່ ເຊິ່ງໄດ້ຕົກມາ ຢູ່ເມືອງນີ້ດົນນານແລ້ວ, ຝ່າຍນາງສູນທອງໄດ້ຟັງຈຶ່ງພ້າວຖາມ ທ້າວວ່າ ແມ່ຂອງພະອົງຊື່ແນວໃດນໍ ດັ່ງບົດກອນຂຽນວ່າ

ແຕ່ນັ້ນສູນທອງແກ້ວ ປະນົມກອນທູນບາດ
ອັນວ່ານາງນາດເຫວົ້າ ມາດາເຈົ້າຊື່ໃດ ພະເອີຍ

ທ້າວເກດສຸລິຍົງຍານ ຈຶ່ງບອກໃຫ້ນາງສູນທອງຮູ້ວ່າ ແມ່ ຂອງທ້າວຊື່ວ່າ ແມ່ຂາວຊີແຕງອ່ອນ ດຽວນີ້ເພິ່ນຢູ່ໃສແທ້ ? ນາງ ສູນທອງຈຶ່ງບອກວ່າ ນາງຢູ່ຫໍຜາສາດຫລັງສູງ ຮ່ວມກັບນາງປະທຸມມາ, ນາງອິນທອງ ແລະ ນາງຢາດຟ້າ ດັ່ງບົດກອນຂຽນວ່າ

ເມື່ອນັ້ນເທວີເຈົ້າ ສູນທອງທູນບາດ
ວ່ານາງເນົາຢູ່ຫອງ ຫໍແກ້ວຍອດສູງ ພຸ້ນແລ້ວ
ກັບທັງປະທຸມມານ້ອຍ ສາວສະຫວັນທົງຢູ່
ຜູ້ຫນຶ່ງນັ້ນ ອິນທອງແກ້ວຮ່ວມຮຽງ
ພ້ອມພ່ຳນາງຢາດຟ້າ ແກ້ວເຄືອບຄຳເຫລົາ
ນາງກໍໃສ່ຍາເນົາ ສີ້ຄົນພຽງພ້ອມ

ຖວາຍແມ່ຈອມໃຈເຈົ້າ ພິຕອງຕາມໄຕ່ ເອົາເຖິ້ນ
ໃນແຕ່ງຫອງ ທໍແກ້ວຍອດສູງ ທີ່ພຸ່ນ

ຈາກຄຳບອກເລົ່າຂອງນາງສູນທອງ ເຮັດໃຫ້ທ້າວເກດສຸ ລິຍົງຍານຍິ່ງມີຄວາມຄິດຮອດຄິດເຖິງແມ່ຂຶ້ນເລື້ອຍໆ ແຕ່ກ່ອນທ້າວຈະຂຶ້ນໄປຫາແມ່ຢູ່ທໍຜາສາດ ທ້າວໄດ້ແບ່ງປັນນາງສະໜົມໜຸ່ມທີ່ມີຮູບໂສມສວຍງາມໃຫ້ຍັກສາລະວັນທີກໝື່ນນາງ, ປັນໃຫ້ພີ່ຜູ້ອາຍກໍທີກ ໝື່ນນາງເທົ່າກັນ ເພື່ອໃຫ້ທັງສອງໄດ້ຊົມຊອນ; ພ້ອມດຽວກັນນີ້ ທ້າວເກດສຸລິຍົງຍານ ກໍໄດ້ແຕ່ງຕັ້ງໃຫ້ພີ່ຜູ້ອາຍວ່າ ການໃນຕໍາ ແໜ່ງຂອງຍັກທັດຊະກິດ ສ່ວນຍັກສາລະວັນແມ່ນດຳລົງຕຳແໜ່ງແທນ ກົງເພັດ ຜູ້ເປັນຫລານຂອງຍັກທັດຖະຈັກ ແລະ ປົກຄອງເມືອງແທນຍັກທັດຖະຈັກຕື່ມອີກ ດັ່ງບົດກອນຂຽນວ່າ

ອັນວ່າພີ່ພີ່ເຈົ້າ ທົງແທ່ນທັດຊະກິດ
ອັນວ່າສາລະວັນທົງ ແທ່ນຫລານແມວເຊື້ອ
ຊື່ວ່າກົງເພັດທ້າວ ແມວໜໍ່ຫລານລຸງ
ສາລະວັນທົງ ນັ່ງປາວປາງນັ້ນ
ກໍຈົ່ງຫາຍຄຳຮອນ ກົງວົນເສຍສວ່າງ
ທໍແຕທົງຢູ່ສ້າງ ທໍແກ້ວນັ່ງສະເຫວີຍ ທັ້ນແລ້ວ

ເມື່ອມອບໝາຍໜ້າທີ່ໃຫ້ພີ່ຜູ້ເປັນອ້າຍແລະຍັກສາລະວັນເປັນທີ່ຮຽບຮ້ອຍແລ້ວ ທ້າວເກດສຸລິຍົງຍານ ກໍຟ້າວຂຶ້ນໄປຫາແມ່ຢູ່ ທໍຜາສາດທັນທີ, ເພາະໃຈໜຶ່ງກໍຄິດຮອດແມ່ແຮງ ອີກໃຈໜຶ່ງກໍຄິດຢາກເຫັນໜ້ານາງທັງສາມ ຄືປະທຸມມາ, ອິນທອງ ແລະ ຢາດຟ້າ ; ທ້າວໄດ້ຂຶ້ນທາງຫວານສ່ອງເບິ່ງ ຈຶ່ງເຫັນໜຶດທຸກໆ ນາງນອນຮຽງ

ກັນຢູ່ ເບິ່ງຜູ້ໃດກໍງາມພໍໆກັນ ຈຶ່ງບໍ່ຮູ້ວ່າຜູ້ໃດແທ້ແມ່ນແມ່ດັ່ງບົດກອນຂຽນວ່າ.

ອັນວ່າຜິວຜ່ອງເຫລື້ອມ ສະເຫມີດັ່ງພິມດຽວ
ໃສຍານອນ ສີ້ຄົນພຽງພ້ອມ
ຈັກວ່າຄົນໃດແທ້ . ມາດາເປັນແມ່ ກູນັ້ນ
ເພາະວ່າໂສມຮູບເນື້ອ ສະເຫມີດ້ານດັ່ງດຽວ ແທ້ແລ້ວ

ເພື່ອໃຫ້ຮູ້ລະອຽດຄັກແນ່ ທ້າວຈຶ່ງລະນຶກເຖິງນາງເທບລີລາ ຜູ້ເປັນແມ່ຢູ່ເທິງສະຫວັນ ໃຫ້ລົງມາຊ່ວຍ, ດັ່ງນັ້ນນາງເທບລີລາ ຈຶ່ງລົງມາບອກໃຫ້ຮູ້ວ່າ ຜູ້ທີ່ນອນໃກ້ປະຕູນັ້ນແມ່ນແມ່ຂອງທ້າວ ຜູ້ຖັດໄປນັ້ນແມ່ນນາງປະທຸມມາ, ນາງຢາດຟ້າ ແລະ ນາງອິນທອງທັງສາມຄົນນີ້ແມ່ນຜູ້ຈະເປັນເມັຍຂອງທ້າວ ດັ່ງບົດກອນຂຽນໄວ້ວ່າ

ອັນວ່າຄົນນອນໃກ້ ປະຕູທວານທາງປ່ອງ ນັ້ນນາ
ກໍຫາກແມ່ນເຜົ່າຜູ້ ນາງແກ້ວແມ່ຍາ
ຖັດມານັ້ນ ປະທຸມມາສະໄພນິ້ງ
ກັບທັງແກ້ວຢາດຟ້າ ອິນທອງພ້ອມພໍ່າພຽງ ທ້າວເອີຍ

ເມື່ອນາງເທບລີລາບອກໃຫ້ທ້າວຮູ້ແລ້ວ ກໍອຳລາຄືນສູ່ບົນ ສະຫວັນ, ຈາກນັ້ນທ້າວກາດສຸລິຍົງຍານ ກໍຟ້າວເຂົ້າໄປຫາແມ່ [illegible]ງາມທັງຂາບລົງໃສ່ຕີນແມ່ ຝ່າຍນາງແຕງອ່ອນກໍສະດຸ້ງຕື່ນຕົກໃຈ ຟ້າວ ລຸກນັ່ງ ແລະ ຖາມຕົ້ນປາຍສາຍເຫດ; ນາງແຕງອ່ອນຜູ້ເປັນແມ່ ແນມເບິ່ງທ້າວເຂົ້າໃຈວ່າແມ່ນພະອິນ ພະພົມລົງມາຫລອກລໍ້ຫລິ້ນ ນາງຈຶ່ງຖາມວ່າ ທ້າວນ້ອຍເອີຍເຈົ້າແມ່ນໃຜມາຈາກໃສ ຫລືວ່າພະ ອິນລົງມາຖາມຂ່າວຊຸ້ນບໍ ດັ່ງບົດກອນຂຽນວ່າ

ດູລາຊາຍຣາມນ້ອຍ ສອຍວອຍຜູ້ປະເສີດ
ເຈົ້າກໍຢູ່ແຫ່ງຫ້ອງ ນະຄອນກວ້າງທີ່ໃດ
ສັງເລົ່າເດີນປ່າໄມ້ ທຽວທ່ອງໄພພະນາ
ອັນວ່າອາການໜັກ ໝູ່ມານຕັນຕ້ອນ
ຕັ້ງວ່າສັດຕູລົ້ນ ເຫລືອດິນດູຂະໜາດ
ເຈົ້າເລົ່າສາມາດຜ້າຍ ມາໄດ້ຮ່ອມໃດ
ຮູ້ວ່າເປັນໜໍ່ເຊື້ອ ເທວດຈັນໂທ ນັ້ນລີ
ຫລືວ່າເທໂວພະ ຍອດອິນສະຫວັນຟ້າ
ລົງມາຫລິ້ນ ເຖິງອອນຖາມຂ່າວ
ເຈົ້າຫາກເປັນທ່ອນທ້າວ ຄອງຟ້າເທບພະອິນ ທີ່ພຸ້ນ

ທ້າວເພດສູລິຍົງຍານ ຈຶ່ງບອກໃຫ້ນາງແຕງອ່ອນຜູ້ເປັນແມ່ຮູ້ວ່າ ເຂົາແມ່ນແນວນາມເຊື້ອ ຂອງເມືອງໂກສີ ທໍ່ແຕ່ວ່າທຸກຍາກຮ້າຍຈຶ່ງບໍ່ໄດ້ປົກຄອງບ້ານເມືອງ ຍ້ອນວ່າແມ່ຊື່ວ່າແຕງອ່ອນ ຖືກພໍ່ຂັບໜີ ຕີສຶ່ງ ແລະ ຕົວຂອງເຂົາເອງເກີດມາກໍບໍ່ໄດ້ຢູ່ໃນເມືອງໂກສີ ແຕ່ປະການໃດ, ຝ່າຍນາງແຕງອ່ອນໄດ້ຍິນຄຳບອກກ່າວຂອງທ້າວກໍ ຮ້ອງໄຫ້ຂື້ນທັນທີ ພ້ອມທັງຊວງມືໄປໂອບເອົາທ້າວ ທັງຈູບທັງດົມທັງ ໄຫ້ທັງຖາມດັ່ງບົດກອນຂຽນວ່າ

ແຕ່ນັ້ນນາງກະສັດໄຫ້ ຟັງກອນທ້າວກ່າວ
ນາງກໍຍ່າວຽນນ້ຳ ຕາຍ້ອຍຫລັ່ງລົງ
ນາງກໍໂອບເອົາແກ້ວ ບຸດຕາຕົນລູກ
ອົມຈູບເຈົ້າ ທັງໄຫ້ຄ່ອຍຖາມ
ນາງແຕງອ່ອນບອກທ້າວວ່າ ເຈົ້ານີ້ແມ່ນລູກຂອງແມ່ພັດແຕ່ອອກ

ນັ້ນທ້ອງແມ່ກໍ່ບໍ່ໄດ້ເຫັນໜ້າລູກເລີຍ, ແມ່ເອງກໍຖືກພໍ່ເຈົ້າຕີຈົນເລືອດອາບໝົດທັງຕົວຊ້ຳບໍ່ພໍຍັງຂັບໜີອອກຈາກເມືອງອີກ ນາງໄດ້ ເລົ່າເຖິງຄວາມທຸກຍາກລຳບາກຂອງນາງສູ່ລູກຟັງ ນັບແຕ່ນີ້ຖືກມະຫາວົງຂັບໄລ່ອອກຈາກເມືອງ ເຖິງນີ້ຍັກທັດຖະຈັກໄປລັກເອົາ, ແລະນາງໄດ້ຖາມທ້າວ ຕື່ມວ່າແມ່ນໃຜເອົາລູກໄປລ້ຽງຈຶ່ງໃຫຍ່ກ້າໜ້າ ບານເຖິງພຽງນີ້ ທ້າວບອກແມ່ວ່າ ເບື້ອງຕົ້ນເຂົາເອົາໄປຝັງໄວ້ໃນ ຂຸມແສນທຸກທໍລະມານ ຕໍ່ມາຈຶ່ງມີນາງເທບລີລາມາຈາກສະຫວັນ ລົງມາຊ່ວຍເອົາອອກຈາກຂຸມ ແລ້ວນຳໄປລ້ຽງພ້ອມທັງສິດສອນວິຊາອາຄົມຕ່າງໆໃຫ້ ພ້ອມທັງມອບດາບພະຂັນໄຊ, ຜ້າວິເສດ ແລະ ແຫວນປະເສີດທັງໝົດເຮັດໃຫ້ລູກມີລິດເດດທຽບເທົ້າພະອິນ.

ທ້າວເກດສຸລິຍົງຍານ ກ່າວຕໍ່ແມ່ວ່າ ລູກໄດ້ຢູ່ນຳນາງເທບລີລາເປັນເວລາເຈັດປີ ແລະ ໄດ້ສູ້ຣົບກັບມະຫາວົງຜູ້ເປັນພໍ່ ການສູ້ ຣົບກັບພໍ່ຄັ້ງນັ້ນ ພໍ່ໄດ້ສູນເສຍກຳລັງພົນມາກມາຍ ເມື່ອເຫັນວ່າບໍ່ມີທາງຈະເອົາຊະນະໄດ້ ພໍ່ຈຶ່ງຖາມຫາເຊື້ອຊາດວົງວານ ພໍຮູ້ວ່າເປັນ ລູກພໍ່ຈຶ່ງເຊີນໃຫ້ເມືອສະເຫວີຍເມືອງໂກສີ ແຕ່ລູກກໍໄດ້ປະຕິເສດ; ຕໍ່ມາມີເທວດາເຈົ້າຕົນໜຶ່ງ ຊື່ທັດສະໄນ ໄດ້ມາບອກວ່າແມ່ຖືກຍັກທັດຖະຈັກລັກພາໜີໄປຈາກລູງ, ດັ່ງນັ້ນລູກຈຶ່ງໄດ້ອອກເດີນທາງຕິດ ຕາມນຳຫາແມ່; ນັບວ່າເປັນບຸນກຸສົນທີ່ລູກສາມາດຣົບຊະນະພວກພີ ມານແລະ ໄດ້ພົບພໍ່ແມ່ຜູ້ມີພະຄຸນ ດັ່ງບົດກອນຂຽນວ່າ

ລູກກໍເຫລືອໃຈແຫ້ ມະໂນຂັນຂຽວຂຸ່ນ
ກໍຈຶ່ງຮ້ອນເຮົ້ງຂຽວ ຂຽວລ້ານລ່ວງຕາມ ແມ່ເອີຍ
ບັດນີ້ ບຸນຫລາຍໄດ້ ເຫມານມ້າງມຸ່ນ

ເປັນແຕ່ບຸນເຫລືອມກຸ້ມ ເຫັນຫນ້າພະຍອດຄຸນ ແມ່ເອີຍ

ທ້າວກາດສຸລິຍົງຍານໄດ້ເລົ່າເຖິງຄວາມຫລັງທີ່ຄັ່ງແຄ້ນ ນາງແຕງອ່ອນຜູ້ເປັນແມ່ ກໍທັງໄຫ້ທັງເລົ່າເຖິງຄວາມທຸກຍາກລຳບາກ ທີ່ຜ່ານມາສູ່ລູກຟັງ; ພ້ອມກັນນີ້ ທ້າວກໍໄດ້ຖາມຂ່າວຄາວນາງປະ ທຸມມາ, ນາງອິນທອງ ແລະ ນາງຢາດຟ້າ ເຊິ່ງຢູ່ຮ່ວມກັບນາງ ແຕງອ່ອນຜູ້ເປັນແມ່, ທ້າວໄດ້ບອກໃຫ້ພວກນາງທັງສາມຮູ້ວ່າ ຍັກທັດຖະຈັກຜູ້ເປັນພໍ່ຂອງພວກນາງນັ້ນ ທ້າວໄດ້ຂ້າຕາຍແລ້ວ ດຽວນີ້ບໍ່ມີ ໃຜຈະເປັນໃຫຍ່ປົກຄອງບ້ານເມືອງ ຈະໄດ້ມອບຫມາຍໃຫ້ພວກນາງທັງສາມເປັນຜູ້ຄອບຄອງຕໍ່ໄປ ແລະ ຊອກເອົາພວກມານມາເປັນຜົວ ; ສຳຫລັບທ້າວຈະໄດ້ພາແມ່ກັບເມືອເມືອງໂກສີ.

24/VII

ນາງປະທຸມມາຈຶ່ງໄດ້ອ້ອນວອນໃຫ້ທ້າວຢູ່ສະເຫວິຍເມືອງ ປົກຄອງບ່າວໄພ່ລາສະດອນ ສຳຫລັບນາງທັງສາມຈະຂໍເປັນຜູ້ຄອຍ ຮັບໃຊ້ທ້າວ, ນາງປະທຸມມາເວົ້າວ່າ ບໍ່ຫ່ອນຈະປະໃຫ້ຜູ້ຍິງເປັນຜູ້ ປົກຄອງບ້ານເມືອງ ອີກອັນຫນຶ່ງຈະໃຫ້ພວກນາງເອົາຜິມານມາເປັນຜົວນັ້ນ ແຫນງໃຫ້ທ້າວຂ້າພວກນາງທັງສາມຖິ້ມດີກວ່າ, ເຖິງແມ່ນ ຍັກທັດຖະຈັກຈະຖືວ່າເປັນພໍ່ກໍຈິງ ແຕ່ກໍເປັນພຽງພໍ່ທີ່ໄປລັກເອົາ ພວກນາງມາເປັນລູກບໍ່ແມ່ນ ເຊື້ອຊາດດຽວກັນແຕ່ແນວໃດເລີຍ; ທ້າວກາດສຸລິຍົງຍານຈຶ່ງໄດ້ເວົ້າເປັນເຊີງສຽດສີນາງທັງສາມວ່າ ພວກນາງໄຟ້ຝັນແຕ່ສິ່ງຈະເລີນຮຸ່ງເຮືອງ ສ່ວນເມືອງໂກສີນັ້ນເສົ້າຫມອງ ດັ່ງບົດກອນຂຽນວ່າ

ແຕ່ນັ້ນບາຄານຕ້ານ	ສາມນາງນົງຖ່າວ
ປຽວວ່າສາມຍອດແກ້ວ	ໝາຍນ້ຳອ່າງຄຳ ພື້ນາ

ອັນວ່າໂກສີເສົ້າ ເປັນຫນອງນ້ຳຂຸ່ນ ອອນເອີຍ
ມີແຕ່ຕົມຂຸ່ນຂ້ຽວ ຄາວຮ້າຍສາບສະອາງ ພີ່ແລ້ວ

ທ້າວເວົ້າວ່າບໍ່ກ້າຈະເອົານາງທັງສາມ ມາເປັນເມຍຢ້ານ ເທວະດາຫົວຂ້ວນ ທ້າວເອງປຽບດັ່ງແສງແມງຫິ່ງຫ້ອຍ ບໍ່ທ່ອນຈະ ໃສດັ່ງພະຈັນຫລືວ່າຄືຫນູນ້ອຍຕົວຫນຶ່ງທີ່ເດີນດົງເດີນປ່າ ບໍ່ທ່ອນຈະ ກັບເພດຂຶ້ນເປັນຊ້າງສານໄດ້, ຖ້າພວກນາງບໍ່ກຽດຊັງຊິໂພດພາຍເອົາເປັນຜົວກໍບໍ່ວ່າຫຍັງ; ນາງທັງສາມຕອບທ້າວວ່າ ໃຜຊິເອົາຜູ້ຍິງຂຶ້ນເອົາຜູ້ຊາຍລົງລຸ່ມ ເທວະດາຊິຫົວຂ້ວນ, ຫລັງໄດ້ ກ່ຽວພາລາສີກັນ ເປັນເວລາສົມຄວນ ທ້າວຈຶ່ງເຂົ້ານອນຮ່ວມນາງທັງສາມ ຢ່າງມີຄວາມສຸກສົດຊື່ນ.

ນັບແຕ່ທ້າວຢູ່ຄອງເມືອງນັນທະພານຮ່ວມກັບນາງທັງສາມກໍເປັນເວລານານເຖິງ 3 ປີ ບໍ່ມີໂພຍໄພສິ່ງໃດມາບຽດບຽນ ບັນດາ ຫົວເມືອງຕ່າງໆນັບເປັນຮ້ອຍກໍມາເປັນຫົວເມືອງສ່ວຍ, ທ້າວໄດ້ ສັ່ງສອນພວກຍັກພວກມານທັງຫລາຍ ໃຫ້ພາກັນຕັ້ງຫມັ້ນໃນສິນທຳ ຍຶດຖືສິນ5 ສິນ 8 ຢູ່ໃນໃຈຢ່າໄດ້ຂາດ, ຢ່າໄດ້ຄິດອິດສາບັງບຽດສັດສາວາສິງ ເຊົາຂ້າເຊົາແກງຜູ້ຄົນທ່ອງທ່ຽວໄປມາເປັນອາຫານ, ພວກຍັກທັງຫລາຍໄດ້ພາກັນປ່ຽນຈິດປ່ຽນໃຈໃຫມ່ ຍຶດຖືທຳຄຳສັ່ງ ສອນຂອງທ້າວບໍ່ອິດສາບັງບຽດທັງຄົນ ແລະ ສັດອີກ; ເພື່ອໃຫ້ເມືອງນັນທະພານໄດ້ມີຜູ້ປົກຄອງຊົ່ວຄາວ ທ້າວຈຶ່ງແຕ່ງຕັ້ງໃຫ້ຍັກສາລະ ວັນເປັນຜູ້ວ່າການ ປົກຄອງບັນດາຍັກມານເຫລົ່ານັ້ນ.

ຕໍ່ມາທ້າວເກດສຸລິຍົງຍານ ຈຶ່ງສັ່ງໃຫ້ຍັກສາລະວັນ ແລະ ພີ່ຜູ້ເປັນອ້າຍ ເດີນທາງໄປນຳເອົາລຸງເຊິ່ງຍັງບວດເປັນລືສີຢູ່ກາງ ປ່າ

ມາກ່ອນ ເພື່ອຈະໄດ້ແຕ່ງຕັ້ງໃຫ້ເປັນຜູ້ຄອບຄອງເມືອງນັນທະ ພານ ຕໍ່ໄປ, ເມື່ອຍັກສາລະວັນ ແລະ ພີ່ຜູ້ອາຍນຳເອົາກຸມພາຜູ້ເປັນ ລຸງ ມາຮອດແລ້ວ ທັງສອງຄືກຸມພາ ແລະ ແຕງອ່ອນຕ່າງກໍພາກັນ ຮ້ອງ ໄຫ້ຮໍ່າໄຮໃສ່ກັນ ຄິດເຖິງພາບອະດີດທີ່ຜ່ານມາ ທັງສອງພາກັນ ທຸກ ລະກຳລຳບາກຍາກເຂັນ ແສນສາຫັດດັ່ງບົດກອນຂຽນວ່າ

ເອົາກໍຫານລຸງຂຶ້ນ   ທໍປາວປາງໃຫຍ່

ອົນວ່າສອງນາດໄຫ້   ທິວໄຫ້ຕໍ່ກັນ

ສອງພະອົງເວົ້າ   ຄຳຫລັງໄຫ້ຮຸ່ງ

ທິວຫອດກັ້ນ   ກອຍໄຫ້ຮຸ່ງຫລັງ

ຕົກມາເຖິງຄາວນີ້ ຖືວ່າທັງສອງຫມົດເວນຫມົດກຳແລ້ວມີແຕ່ຈະ ພົບກັບຄວາມສຸກສົດຊື່ນ, ເມື່ອໄດ້ໂອກາດອັນດີ ທ້າວເກດສຸລິຍົງ ຍານຈຶ່ງທົດ ສົງລຸງ ຂຶ້ນສະເຫວີຍເມືອງນັນທະພານ ປົກຄອງບັນດາ ຍັກມານທັງຫລາຍ ສ່ວນນາງສຸນທອງເມຍຂອງຍັກທັດຖະຈັກກໍ ມອບ ໃຫ້ລຸງເອົາ ພ້ອມທັງນາງສະຫນົມທັງຫມົດ, ສຳຫລັບພີ່ຜູ້ອາຍ ນັ້ນ ທ້າວເກດສຸລິຍົງຍານຖືວ່າ ເປັນຜູ້ມີບຸນຄຸນຫລາຍ ດັ່ງນັ້ນຈຶ່ງຂໍ ຝາກ ຜັງພີ່ຜູ້ອາຍໃຫ້ຢູ່ດອມລຸງ ໃນຕຳແຫນ່ງເປັນອຸບປະຮາດ ພາກ ສ່ວນ ເສນາໃຫຍ່ນ້ອຍຕ່າງໆ ກໍໄດ້ມີການແຕ່ງຕັ້ງກັນຂຶ້ນໃຫມ່ຫມົດ.

ຕໍ່ມາຍັກສາລະວັນ ກໍໄດ້ເດີນທາງໄປເມືອງຂອງຕົນແລ້ວ ນຳ ເອົາລູກສາວຊື່ວ່າ ຈັນທອນມາມອບຖວາຍໃຫ້ເປັນເມຍຂອງ ທ້າວ ເກດສຸລິຍົງຍານຕື່ມອີກ ລວມເປັນສີ່ຄົນພໍດີ; ທ້າວຄອງຢູ່ເມືອງ ນັນ ທະພານ ນານສົມຄວນທ້າວຈຶ່ງບອກຍັກສາລະວັນ ແລະ ບັນດາ ຍັກ ທັງຫລາຍທີ່ເປັນຫົວເມືອງສ່ວຍ ໃຫ້ພາກັນໄປສົ່ງທ້າວກັບຄືນ ເມືອງ

ໂກສີ, ປະກົດວ່ານາງແຕງອ່ອນໄດ້ຄັດຄ້ານທ້າວວ່າບໍ່ໃຫ້ຄືນໄປເມືອງໂກສີເດັດຂາດ ໃຫ້ຢູ່ປົກຄອງເມືອງນີ້ ກໍພໍແລ້ວ, ນາງ ແຕງອ່ອນເວົ້າວ່າບໍ່ຢາກເຫັນໜ້າມະຫາວົງ ຜູ້ເປັນພໍ່ອີກ ນາງທັງ ຊົວທັງຄຽດທີ່ມະຫາວົງຂັບໜີຕີສ່ງ ນາງໃນຄາວນັ້ນ; ທ້າວເກດສຸລິຍົງຍານ ໄດ້ເວົ້າກັບແມ່ວ່າ ຈໍາເປັນຕ້ອງກັບໄປເມືອງໂກສີ ອັນນີ້ ມັນແມ່ນຄໍາສັ່ງຂອງພະອິນເຮົາບໍ່ອາດຈະຂັດຂືນໄດ້.

ເມື່ອນາງແຕງອ່ອນຮູ້ວ່າ ແມ່ນຄໍາສັ່ງຂອງພະອິນນາງກໍບໍ່ກ້າຈະຂັດຂືນເຖິງຈະຄຶດອູກຄຶດອັ່ງປານໃດກໍຕາມ ຈໍາເປັນຕ້ອງໄດ້ ກັບເມືອງໂກສີນໍາທ້າວ, ດັ່ງນັ້ນນາງຈຶ່ງອໍາລາກຸມພາຜູ້ເປັນລູງ ດ້ວຍຈິດໃຈເປັນຫ່ວງອາວອນ ນາງເວົ້າວ່າບໍ່ຢາກໄປເຫັນໜ້າມະຫາວົງຈັກດີ້ ແຕ່ຍອນຫລານຂອງລຸງຄືນຄຽວນ່ຽວອອນ, ຂໍໃຫ້ລຸງຈົ່ງຢູ່ດີ ມີແຮງປົກຄອງບ່າວໄພ່ລາສະດອນ ຄອງເມືອງບັນທະພານດ້ວຍຄວາມຜາສຸກສໍາລານ, ກຸມພາຜູ້ເປັນລຸງໄດ້ອວຍພອນໃຫ້ນ້ອງເດີນ ທາງດ້ວຍຄວາມປອດໄພ ສະຫວັດດີທຸກປະການ; ຝ່າຍທ້າວເກດສຸລິ ຍົງຍານ ແລະ ນາງທັງສີ່ກໍສັ່ງລາລຸງດ້ວຍຄວາມຫ່ວງໃຍ.

ກ່ອນຈະອອກເດີນທາງ ຍັກສາລະວັນ ແລະ ພີ່ຜູ້ເປັນອ້າຍກໍໄດ້ພາກັນນິລະມິດຜາສາດຂຶ້ນ ແລ້ວເຊີນເອົານາງແຕງອ່ອນ ພ້ອມດ້ວຍນາງທັງສີ່ເຂົ້າຢູ່ໃນຫໍຜາສາດ, ຈາກນັ້ນຍັກສາລະວັນ ແລະ ພີ່ກໍພາກັນເຫາະໄປທາງອາກາດ ໂດຍມີທ້າວເກດສຸລິຍົງຍານເຫາະ ຕິດຕາມ ເພື່ອມຸ່ງໜ້າໄປສູ່ເມືອງໂກສີ, ບັນດາຂະບວນຍັກກໍໄດ້ແຫ່ຕິດຕາມຢ່າງມາກມາຍຈົນມືດຟ້າມົວດິນ ການເດີນທາງໃຊ້ເວລາ ເຖິງເຈັດວັນຈຶ່ງຮອດເມືອງໂກສີ, ເມື່ອແນມເຫັນຫໍໂຮງຂອງມະຫາວົງ ຜູ້

ເປັນພໍ່ອັນຮຸ່ງເຮືອງເຫລືອງເຫລື້ອມແລ້ວ ທ້າວຈຶ່ງພັກຢູ່ທໍ່ຜາ ສາດລອຍຟ້າດອມກັບແມ່ ດັ່ງບົດກອນຂຽນວ່າ

ຫລິງເຫັນໂຮງສູງຫ້ອງ ປາງຫອງພະພໍ່
ມີແຕ່ຍອດພຸ່ງພົ້ນ ມະນີແກ້ວສ່ອງໃສ
ແຕ່ນັ້ນເຈົ້າຈຶ່ງພາພົນຢັ້ງ ທໍ່ປາງຜາສາດ
ດອມແມ່ເຈົ້າ ສະຫວັນຟ້າຢູ່ຄອງ ທັ້ນແລ້ວ

ຍາມນັ້ນຝູງຜີເສື້ອຮັກສາເມືອງໂກສີ ເຂົາກໍພາກັນມາຕຸ້ມມາ ທໍ່ທ້າວຄືແຕ່ເກົ່າມາຫລັງ ແມ່ນວ່າພືດພັນທັນຍາຫານສັດສາວາສິງພູຜາປ່າໄມ້ແມ່ນ້ຳລຳທານ ກໍມີອັນເບີກບານມ່ວນຊື່ນ ເປັນການຮັບ ການກັບຄືນມາຂອງທ້າວ, ຕະຫລອດຮອດຜູ້ຄົນຊາວເມືອງຜູ້ທີ່ເປັນ ພະຍາດບາດເຍັບກໍສວ່າງຫາຍດ້ວຍບຸນປາລະມີຂອງທ້າວເຫລື້ອມງາໍ . ເມື່ອໄດ້ເວລາດີ ທ້າວຈຶ່ງພາແມ່ແລະນາງທັງສີ່ລົງສູ່ສະຖານ ກາງເມືອງ ບັນດາພີຍັກມານ ເຊິ່ງເປັນບໍລິວານແຫ່ຕິດຕາມທ້າວມາ ນັ້ນກໍພາກັນປິຕິຊົມຊື່ນ ໄດ້ມາທ່ອງທ່ຽວເມືອງຄົນ ຈຶ່ງພາກັນທ່ຽວເລາະຫລິ້ນໄປຕາມທີ່ຕ່າງໆ ຊາວເມືອງໂກສີທັງຢາກເບິ່ງທັງຢ້ານກໍທໍ່ກັນ.

ຍ້ອນຄຶດວ່າເສິກຕ່າງດ້າວຈະເຂົ້າມາຍາດຊິງເມືອງ ເຂົາ ຈຶ່ງຂຶ້ນໄປກາບທູນໃຫ້ມະຫາວົງຮູ້ ຝ່າຍມະຫາວົງ ກໍຄຶດວ່າແມ່ນສັດ ຕູເຂົ້າເມືອງ ຈຶ່ງສັ່ງໃຫ້ກຽມຕໍ່ສູ້, ດັ່ງນັ້ນແສນເມືອງຈຶ່ງຕີຄ້ອງ ຮ້ອງປ່າວໃຫ້ເສນາອາມາດ ເຕົ້າໂຮມກຳລັງ ຕໍ່ມາພວກເສນາອາ ມາດກໍອອກຮັກສາການ ຈຶ່ງໄດ້ພົບກັບພວກຍັກທັງຫລາຍຢູ່ໃນເມືອງ ຝ່າຍເສນາຈຶ່ງຖາມຍັກວ່າ ເປັນຫຍັງພວກເຈົ້າຈຶ່ງລ່ວງເກີນຄຳຫ້າມຂອງວອດສຸວັນ, ບ່ອນນີ້ມັນແມ່ນແດນຄົນຢູ່ ພວກເຈົ້າບໍ່ມີສິດເຂົ້າມາ ໄດ້

ເດັດຂາດ; ພວກຍັກຈຶ່ງຕອບວ່າເຮົາບໍ່ແມ່ນບໍລິວານຂອງພະຍາເວດສຸວັນແຕ່ປະການໃດ ພວກເຮົາແມ່ນບໍລິວານຂອງທ້າວເກດສຸລິ ຍົງຍານ ເຮົາໄດ້ຕິດຕາມທ້າວມາ ເພາະວ່າທ້າວໄດ້ນຳເອົາແມ່ຄືນມາເມືອງໂກສີ.

ພວກເສນາອາມາດແຫ່ງເມືອງໂກສີ ໄດ້ຟັງຄຳບອກກ່າວດັ່ງນັ້ນ ກໍຟ້າວອື່ນໄປຂາບທູນໃຫ້ມະຫາວົງຮູ້ທັນທີ ເມື່ອມະຫາວົງໄດ້ ຮູ້ ກໍມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້ ແລະ ໄດ້ສັ່ງໃຫ້ເສນາຟ້າວໄປເຊີນທ້າວກັບນາງແຕງອ່ອນເຂົ້າມາສະຫວີຍເມືອງ ໂດຍດ່ວນ ດັ່ງບົດກອນຂຽນວ່າ

ເມື່ອນັ້ນມ່າຍໆໜ້າ ປິຕາຕົນພໍ່
ພະກໍຊົມຊື່ນຕານ ຄຳແມ້ງມ່ອນມະໂນ
ດີງແລ້ວ ສາຍໃຈເຈົ້າພໍ່ ກູເອີຍ
ລູກຫາກນຳແມ່ເຈົ້າ ຄືນເຂົ້າສູ່ເມືອງ ດີແລ້ວ
ສູ່ຈົ່ງປຸ່ມເປືອງຟ້າວ ເຣວພະລັນໂດຍຣິບ
ໃຫ້ໄປເຊີນທິບພະຍອດແກ້ວ ສອງເຈົ້ານັ່ງສະຫວີຍ ວ່າເນີ

ພ້ອມນັ້ນມະຫາວົງ ກໍສັ່ງໃຫ້ແປງຖະໜົນຫົນທາງໃຫ້ຮາບກ້ຽງປູກກ້ວຍອ້ອຍສອງຟາກທາງ. ປະດັບປະດາໄປດ້ວຍແພຂາວມູງ ປູດ້ວຍສາດແຕ່ວັງເຖິງທີ່ພັກຂອງທ້າວເກດສຸລິຍົງຍານ ກັບນາງແຕງອ່ອນ, ເມື່ອເສນາຫ້າງຫາກະກຽມຮຽບຮ້ອຍແລ້ວ ກໍທູນໃຫ້ມະຫາວົງຮູ້ຈາກນັ້ນມະຫາວົງ ຈຶ່ງນຳຂະບວນອອກໄປເຊີນ ທ້າວກັບນາງແຕງອ່ອນຜູ້ເປັນເມຍ, ພໍໄປຮອດທ້າວເກດສຸລິຍົງຍານກໍມາຂາບໄຫວ້ພໍ່ຂອງຕົນເສນາອາມາດຜູ້ໃດກໍສະອອນອົກສະອອນໃຈ ເມື່ອໄດ້ເຫັນນາງແຕງ

ອ່ອນງາມກວ່າເກົ່າ ພ້ອມກັນນີ້ ກໍໄດ້ເຫັນນາງທັງສີ່ ຊຶ່ງແຕ່ລະຄົນກໍງາມໆ ສ່ວນມະຫາວົງເອງກໍມີຄວາມຮູ້ສຶກເຊັ່ນດຽວກັບເສນາ ອາມາດ.

ຕໍ່ມາເສນາຜູ້ໃຫຍ່ກໍນຳຂັນອັນເຊີນທ້າວພ້ອມແມ່ ແລະ ນາງທັງສີ່ໃຫ້ເຂົ້າສະເຫວີຍເມືອງ ບອກວ່າພວກເຂົາລໍຄອຍທ້າວມາດົນແລ້ວ ດຽວນີ້ມະຫາວົງຜູ້ເປັນພໍ່ ກໍເຖົ້າແກ່ແລ້ວ, ແຕ່ທ້າວກາດສຸລິຍົງຍານໄດ້ເວົ້າກັບເສນາອາມາດວ່າ ເຂົາບໍ່ສົມຄວນຈະຂຶ້ນສະເຫວີຍເມືອງດອກ ຂໍໃຫ້ພໍ່ປົກຄອງຕໍ່ໄປ ເຂົາເປັນພຽງເຊື້ອຊາດແຂ້ ບໍ່ສົມ ຄວນຈະປົກຄອງເມືອງ ບ່າວໄພ່ລາສະດອນຈະພາກັນຫົວຂວັນດັ່ງບົດກອນຂຽນວ່າ.

ຝູງຂ້າອັງເຊີນເຈົ້າ	ນິລະມິນຕົນປະເສີດ
ເມືອສືບສ້າງ	ເປັນເຈົ້ານັ່ງປອງ ພະເອີຍ
ຝູງຂ້າຄຶດຄ່ອງຂໍ້	ຄອງຂ່າວເໜືອຫົວ
ອັນວ່າປີຕາທົງ	ແທ່ນທອງດູເຖົ້າ
ເຊີນແຈ່ມເຈົ້າ	ແທນສືບອົງກະສັດ
ຕາມປະເພນີ	ແຕ່ປາງປະຖົມຄັ້ງ
ແຕ່ນັ້ນສຸລິຍົງຍານເຈົ້າ	ກຸມມານຂານຕອບ
ຊອບທີ່ພະພໍ່ເຈົ້າ	ທົງສ້າງສືບເມືອງ ຕັ້ນຖອນ
ເຮົານີ້ເຊື້ອຊາດຊັ້ນ	ສັດຖ່ອຍກຸມພີ
ກໍບໍ່ຄວນແທນທົງ	ສືບເມືອງສະເຫວີຍສ້າງ
ອັນໜຶ່ງເຮົາກໍຍິນອາຍໜ້າ	ເສນາພວກໄພ່
ໄທພວກນ້ອຍ	ຊິຫົວລໍ້ຫລໍ່ຂວັນ ຕັ້ນແລ້ວ

ທ້າວເກດສຸລິຍົງຍານ ໄດ້ບອກກັບເສນາຜູ້ຮັບເຊີນວ່າເດັດຂາດຈະບໍ່ຍອມສະເຫວີຍເມືອງແທນພໍ່ ແຕ່ຕົນເອງຈະສ້າງເມືອງຂຶ້ນຕ່າງຫາກຢູ່ໃກ້ໆກັບເມືອງຂອງພໍ່ນີ້ແຫລະ ຈະເອົາພວກຍັກພວກມານເປັນບໍລິວານ, ຝ່າຍເສນາຜູ້ໃຫ່ຍກໍພາກັນໄຫວ້ທ້າວຕື່ມອີກວ່າ ຈັ່ງໃດກໍຂໍໃຫ້ທ້າວໂຜດພາຍແດ່ຖ້ອນ ເລື່ອງເກົ່າເລື່ອງຫລັງແມ່ນໄດ້ຈັດການໝົດແລ້ວ ໄວຍະກາ ແລະ ນາງທັງຫ້າຕະຫລອດພວກກິນສິນຈ້າງລາງວັນກໍໄດ້ຈັບໃສ່ຄຸກໃສ່ຄາໝົດແລ້ວ ຕາມແຕ່ທ້າວຈະລົງໂທດເຂົາ ດັ່ງບົດກອນຂຽນວ່າ

ອັນວ່າຝູງຍິງຮ້າຍ ໄວຍະກາແມ່ລູກ
ພະກໍຈັບຜູກຄອງ ຮັງໄວ້ພໍ່ານານ ແລ້ວເດ
ຕາມແຕ່ເຈົ້າ ທັງສອງຈະທໍາໂທດ
ແມ່ນຊິຟັນເລືອດລ້າງ ຍໍາຊິ້ນໃສ່ເກືອ ກໍຕາມຖ້ອນ

ເມື່ອຖືກເຊີນຫລາຍເທື່ອ ທ້າວເກດສຸລິຍົງຍານກໍໃຈອ່ອນອີດູ ພໍ່ຈຶ່ງເວົ້າກັບພໍ່ວ່າ ເຂົາເອງບໍ່ຂັດຂືນຖ້າຫາກວ່າແມ່ຍິນດີຈະເຂົ້າ ໄປສະເຫວີຍເມືອງ ຂໍໃຫ້ໄປຖາມແມ່ເບິ່ງກ່ອນ, ແຕ່ມະຫາວົງ ກໍ ຄຶດຍາກແກ່ໃຈຕົນເອງເຕັມທີ ບໍ່ຮູ້ຈະໃຊ້ວິທີການແນວໃດ ຍ້ອນວ່າຜ່ານມາຕົນເອງໄດ້ເຮັດຜິດນາງທຸກໆຢ່າງ ດັ່ງບົດກອນຂຽນວ່າ

ພະກໍຄຶດໄດ້ຄາມ ອາຍອ່ອນເມຍຂ້ອນ
ເປັນພະເວີພະວາຈິດ ຍາກກໍໃຈຫລາຍຊັ້ນ
ຄັນຈັກຍໍຂັນຂຶ້ນ ຂໍຍອມຍັງໂທດ ດັ່ງນັ້ນ
ກໍຫາກຜິດຮີດບ້ານ ຄອງເຖົ້າແຕ່ປະຖົມ ແທ້ແລ້ວ

ແຕ່ຖ້າບໍ່ມີວິທີການໃດໜຶ່ງ ເຮັດໃຫ້ນາງເຂົ້າໃຈຮອຍແປ້ວ ໃນ

ອະດີດກໍຈະເສຍເມຍຜູ້ປະເສີດລ້າໆ ມະຫາວົງຈຶ່ງໃຊ້ວິທີອອຍ ເອົາເພາະຮູ້ວ່າຜູ້ຍິງມັກອອຍ, ມະຫາວົງຫຍັບເຂົ້າໄປໃກ້ໆນາງ ແລ້ວອອຍວ່າ ຈະມອບບ້ານວາງເມືອງພ້ອມດ້ວຍສົມບັດໄພ່ຟ້າຂ້າແຜ່ນດິນທັງໝົດໃຫ້ນາງຄອບຄອງ; ແຕ່ປະກົດວ່າ ນາງແຕງອ່ອນບໍ່ໄດ້ສະແດງທ່າທີສົນໃຈໃນຄຳອອຍ ນາງຫັນຫລັງໃສ່ມະຫາວົງ ແລະ ຄິດເຖິງພາບໃນອະດີດທີ່ມະຫາວົງໄດ້ກະທຳຕໍ່ນາງ ເຊິ່ງເປັນແປ້ວ ຝັງໃຈບໍ່ມີມື້ລືມໄດ້ ແລະ ເວົ້າສຽດແທງມະຫາວົງດັ່ງບົດກອນຂຽນວ່າ:

ເຊີນພະເມືອນັ້ງສ້າງ ສະເບີຍແທ່ນໂກສີ ນີ້ນຖອນ
ພະຈຶ່ງເອົາເຫວີ ຫ້ານາງຫຽມຊ້ອນ
ແຕ່ນັ້ນ ລາຊາເຈົ້າ ມະຫາວົງຄະນິງມາກ
ພະກໍປາກບໍ່ໄດ້ ລະອາຍນ້ອງນາດຖະແພງ

ມະຫາວົງໄດ້ພະຍາຍາມອິ້ນອອຍນາງຕື່ມ ແລະ ຍອມຮັບຄວາມຜິດພາດທຸກຢ່າງທີ່ໄດ້ກະທຳໃນເວລາຜ່ານມາ ຍ້ອນວ່າໃຈຮ້າຍໂພດຫລົງເຊື່ອຄຳຫລອກລວງຂອງພວກບໍ່ດີ, ດຽວນີ້ໄດ້ຈັບເອົາໃສ່ຄຸກໝົດທຸກໆຄົນແລ້ວ ນ້ອງຊິຂ້າຊິຕີເອົາແນວໃດກໍສຸດແລ້ວແຕ່ໃຈ ບໍ່ຂັດບໍ່ຂືນ ມະຫາວົງນັ່ງອິ້ນອອຍນາງຈົນເດິກສະຫງັດ ແຕ່ນາງແຕງອ່ອນກໍ ຍັງປະຕິເສດຢູ່ສະເໝີ ທັງພ້ອງເວົ້າສຽດມະຫາວົງຕື່ມວ່າ ອາວ...ກະດຽວວ່ານາງທັງຫ້ານັ້ນ ແມ່ນເມຍແຕ່ແຖນແມນແຕ່ຟ້າ ມາຮ່ວມມາຮຽງບໍ່ແມ່ນຊັ້ນບໍ ຂ້ອຍນີ້ຍິງຊົ່ວເຊື້ອຊາດແຂມັກລົງຫລິ້ນນ້ຳສົມ ສູ່ກັບຊາດດຽວກັນ ບໍ່ສົມຄວນຈະເປັນເມຍດອກ, ຝ່າຍມະຫາວົງ ກໍຕອບວ່າ ດຽວນີ້ເມືອງມັນທະພານພຸ້ນ ຍັກທັດຖະຈັກມັນກໍຕາຍ ແລ້ວເຈົ້າຊິໄປຫາມັນເຮັດສັງອີກ ຄຳເວົ້າຕອນນີ້ ຍິ່ງເຮັດໃຫ້ນາງ ແຕງ

ອ່ອນ ເພີ່ມຄວາມຄຽດແຄ້ນຂຶ້ນອີກ; ແຕ່ມະຫາວົງກໍບໍ່ລົດລະ ຄວາມພາກພຽນພະຍາຍາມອ້າງເຫດຜົນ.

ໃນທີ່ສຸດນາງແຕງອ່ອນກໍຄິດໄດ້ວ່າ ເຖິງນາງຈະເກັ່ງຈະ ກ້າປານໃດກໍຕາມ ຕົວຂອງນາງກໍຍັງແມ່ນຜູ້ຍິງ ໂດຍກຳເນີດບໍ່ທ່ອນຈະເທົ່າທຽມຊາຍໄດ້ ແມ່ນຈະໄດ້ດີມີສຸກກໍຍ້ອນບຸນຂອງຜົວດັ່ງບົດ ກອນຕອນໜຶ່ງຂຽນວ່າ

ອັນນີ້ໂລກກ່າວໄວ້ ປາງກ່ອນຍູຂວາງ
ກູນີ້ແນວນາມຍິງ ປາຖະໜາກໍຍັງເວົ້ງ
ແມ່ນວ່າມີສຸກລົ້ນ ລືຊາເຊັ່ງຊ່າ ກໍດີຖອນ
ກໍເພື່ອບຸນເຜົ່າຜູ້ ຜົວແກ້ວຫລື່ອມງຳ ຫັ້ນແລ້ວ

ພໍຕາເວັນຈະຂຶ້ນເຍືອງໂລກ ນາງແຕງອ່ອນກໍໄດ້ຮັບປາກກັບມະຫາວົງ ຍອມເຂົ້າເມືອເມືອງ ບັນດາເສນາອາມາດກໍຕີຄ້ອງ ຮ້ອງປ່າວຊື່ນຊົມຍິນດີ ທີ່ໄດ້ນາງເຂົ້າສະຫວີຍເມືອງ ທຽມກັບມະຫາວົງດັ່ງເກົ່າເລົ່າສອງທີ, ເສນາຈຶ່ງເຊີນທ້າວເກດສຸລີຍົງຍານພ້ອມດ້ວຍນາງແຕງອ່ອນ ແລະ ສະໄພ້ທັງສີ່ຂຶ້ນລົດ ແລ້ວເຄື່ອນຂະບວນ ແຫ່ແຫນແພນກັ້ງເຂົ້າສູ່ຄຸ້ມຂ່ວງລາຊະວັງ, ຊາວເມືອງໂກສີໃພງກໍ ພາກັນແລ່ນມາຫຸ້ມເບິ່ງຂະບວນແຫ່ອັນຈົບງາມ ພ້ອມທັງກ່າວຂານ ກັນເຖິງຄວາມງາມຂອງນາງແຕງອ່ອນ ແລະ ລູກໄພ້ທັງສີ່, ມີບາງຄົນຈົນໂຕນເຮືອນໂຕນຊານ ລົ້ມຄຸບຫລັກຄຸບຕໍ ສົ້ນເຮັຍ ຕຳກັນລົ້ມ ຊະລົ້ມຊາຍ ຍ້ອນວ່າຟ້າວມາເບິ່ງຂະບວນແຫ່ນາງແຕງອ່ອນ ແລະທ້າວເກດສຸລີຍົງຍານ ເຂົ້າສະຫວີຍເມືອງໂກສີ.

26- ບັ້ນພະອິນມາຫົດສົງ
ທ້າວເກດສຸລິຍົງຍານນັ່ງເມືອງ

ກ່າວເຖິງພະອິນທີ່ຢູ່ບົນສະຫວັນ, ເມື່ອຫລຽວລົງມາເມືອງລຸ່ມ ກໍໄດ້ເຫັນທ້າວເຂົ້າສູ່ເມືອງ ພະອິນຈຶ່ງຟ້າວກະກຽມເຄື່ອງທິບ ຈາກເມືອງສະຫວັນລົງມາຫົດສົງທ້າວໃຫ້ນັ່ງເມືອງ, ເພາະຖືວ່າ ທ້າວເກດສຸລິຍົງຍານນັ້ນ ແມ່ນໂພທິຍານ (ພຸດທະເຈົ້າ) ພະອິນໄດ້ເອົາສາວງາມຈາກເມືອງສະຫວັນເຖິງສາມພັນນາງ ພ້ອມດ້ວຍຫອຍສັງກໍເອົາມາເປົ່ານຳ ຕະຫລອດຮອດພິນສີ່ຫນ້າ ກໍເອົາມາເພື່ອເສບທ້າວຂຶ້ນສະເຫວີຍເມືອງນັ່ງແທ່ນ ຝົນຫ່າແກ້ວກໍຕົກລົງມາເປັນ ການລ້າງສ່ວຍສິ່ງເຮີຮາຍຂຶດຽດຈັ່ງໄຮ.

ນອກຈາກນີ້ ພະອິນກໍເອົາແມ່ລ້ຽງລົງມາພ້ອມ ໂຮງສົງທ້າວໃຊ້ນາກໃຫ້ກັບເພດມາເປັນໂຮງສຳຫລັບສົງນ້ຳ ເຊິ່ງປະດັບປະດາ ໄປດ້ວຍລວງລາຍ ອັນວິຈິດສວຍງາມ ເສົາສົງກໍປະດັບດ້ວຍຕາຄຸດດັ່ງປິດກອນຂຽນວ່າ

ມີທັງນາກຄະລາດກ້ຽວ	ເປັນຮູບຮາງ ສົງ
ລາຍເຄືອເກາະ	ກ່ຽວກັນງາມລົ້ນ
ອັນວ່າເສົາ ສົງນັ້ນ	ປະດັບຕາຄຸດທະລາດ
ມີແຕ່ແກ້ວ	ຄຳເຫລື້ອມສ່ອງໃສ

ຕໍ່ມາພະອິນກໍເຊີນທ້າວ ແລະ ນາງທັງສີ່ລົງ ສົງນ້ຳຄຳ ພະອິນ ແລະ ນາງແມ່ລ້ຽງພ້ອມດ້ວຍມະຫາວົງ ແລະ ນາງແຕງອ່ອນ ຕະ

ຫລອດເສນາອາມາດທັງຫລາຍ ກໍພາກັນ ສົງນໍ້າໃຫ້ທ້າວ ແລະນາງທັງສີ່, ເມື່ອຫົດໂສງຮຽບຮ້ອຍແລ້ວ ພະອິນກໍພາທ້າວ ແລະ ນາງເຂົ້າສູ່ສະຖານທີ່ຮັບຕ້ອນ, ຫລັງຈາກນັ້ນ ໝໍພອນກໍທຳລາບາສີສູດອ້ອນໃຫ້ຢູ່ດີມີອາຍຸໝັ້ນຍືນຍາວ ດັ່ງບົດກອນຂຽນວ່າ

ແຕ່ນັ້ນ ບັນດິດຜູ້	ອາຈານທັງສີ່
ເຂົ້າກໍເຂົ້າແທບໃກ້	ປະນົມນິ້ວອ່ານພອນ
ໃຫ້ສະຫວັດສະດີລົ້ນ	ຍືນຍາວແສນຂວບ ປີຖ້ອນ
ອັນວ່າໂພຍພະຍາດຮ້າຍ	ໃຫ້ໜີເວັ້ນຫລີກໄກ ແດ່ຖ້ອນ
ອັນໜຶ່ງໃຫ້ໄດ້ທັງສຸກສ້າງ	ໂກສີສັດຕະນາກ
ຮ້ອຍປະເທດທ້າວ	ໄຫລເຂົ້າຊ່ວຍທອງ ເຈົ້າເນີ

ພໍແຕ່ໝໍພອນອ່ານຄຳອວຍພອນຈົບລົງ ສຽງເສບອັນ ປະກອບດ້ວຍສຽງປີ່ສຽງສະໄນ ຫອຍສັງ ຄ້ອງກອງກໍດັງປະສານກັນຂຶ້ນໂດຍແມ່ນພີເມືອງເປັນຜູ້ເສບ, ສ່ວນນາງເທບລີລາແມ້ລຽງ ແລະ ເທບລີໄລຜູ້ເປັນນ້ອງສາວ ກໍພ້ອມພາກັນຫວ່ານດອກໄມ້ເງິນດອກໄມ້ຄຳເປັນການບູຊາທ້າວ, ສ່ວນນາງສາວທີ່ມາຈາກສວງສະຫວັນສາມພັນນາງນັ້ນ ກໍຖວາຍໃຫ້ເປັນເມຍຂອງທ້າວຕື້ນ ເຊິ່ງມີນາງ ປະທຸມມາເປັນເມຍເອກຝ່າຍຂວາ, ນາງຈັນທອມຝ່າຍຊ້າຍ, ນາງອິນທອງຝ່າຍຫລັງ, ນາງຄຳຢາດຟ້າຝ່າຍໜ້າ; ສ່ວນມະຫາວົງຜູ້ເປັນພໍ່ນັ້ນກໍໄດ້ມອບໃຫ້ທ້າວຕື້ນອີກຫົກໝື່ນນາງ ເພື່ອເປັນສະໜົມຮັບໃຊ້, ບັດນີ້ທ້າວເກດສຸລິຍົງຍານ ໄດ້ຂຶ້ນຄອງລາຊະສົມບັດແຫ່ງເມືອງ ໂກສີແລ້ວ ເຊິ່ງມີພົນລະເມືອງທັງໝົດທີ່ຢູ່ໃຕ້ໂພທິສົມພານຂອງທ້າວເຖິງແປດອັກໂຂ.

27- ບັ້ນອິນພົມສັ່ງລາທ້າວ ຄືນສູ່ເມືອງສະຫວັນ

ເມື່ອທ້າວເກດສຸລິຍົງຍານ ໄດ້ຂຶ້ນສະເຫວີຍລາຊະສົມບັດ ແລ້ວພະອິນພະພົມ ແລະ ນາງເທບລີລາ ເທບລີໄລກໍໄດ້ສັ່ງລາ ທ້າວຄືນສູ່ເມືອງສະຫວັນ ອວຍພອນໃຫ້ທ້າວຢູ່ດີມີສຸກ ປົກຄອງບ້ານເມືອງໃຫ້ຮົ່ມເຢັນເປັນສຸກ, ຝ່າຍທ້າວເກດສຸລິຍົງຍານກໍໄດ້ອວຍພອນ ໃຫ້ທຸກຄົນເດີນທາງກັບສູ່ສະຫວັນ ດ້ວຍຄວາມສະຫວັດດີ ແລະ ກ່າວກັບນາງເທບລີລາຜູ້ເປັນແມ່ວ່າ ເມື່ອໄປເຖິງເມືອງສະຫວັນແລ້ວ ກໍຢ່າຊຸ້ມຢ່າປະລູກ ໃຫ້ໝັ່ນຫລິງລົງມາເບິ່ງແດ່ ຖ້າຫາກມີສິ່ງບໍ່ຈົບ ບໍ່ດີເກີດຂຶ້ນແມ່ກໍຢ່າປະຢ່າໄລ ດັ່ງບົດກອນຂຽນວ່າ

ຄ່ອຍເມືອດີເຍີສາຍຄໍແກ້ວ ຈອມຂວັນພະແມ່ ຂ້ອຍເອີຍ
ຄືນເຈົ້າເມືອຮອດຫ້ອງ ສະຫວັນຟ້າລ່ຳແຍງ ລູກເນີ
ອັນໜຶ່ງຫລອນວ່າມີໄພຍຕ້ອງ ອົນຕາຍບັງບຽດ
ຂໍແກ້ຜູ້ທີ່ເຕວົ້າ ມາດາເຈົ້າຢ່າໄລ ແດ່ຖ້ອນ

ຫລັງຈາກຕ່າງຝ່າຍສັ່ງລາກັນແລ້ວ ອິນພົມ ແລະ ນາງ ເທບລີລາ ລີໄລກໍເຫາະຄືນສູ່ເມືອງສະຫວັນ ແລະ ຢູ່ເທິງສະຫວັນ ດ້ວຍຄວາມສຸກສຳລານບານໃຈ, ແຕ່ກໍບໍ່ໄດ້ຫວ່າງເວັ້ນໃນການເອົາ ໃຈ

ໃສ່ຫລິ່ງລຳເບິ່ງທ້າວ ທີ່ຢູ່ທາງຊຸມພູພົ້ນເມືອງຄືນ.

ບັດນີ້ຢອນກ່າວເຖິງພະຍາຊຸມພູ ແລະ ພະຍາເມືອງທັກອິນ , ພາຍຫລັງທີ່ລູກສາວໄດ້ຫາຍສາບສູນໄປ ໂດຍບໍ່ຮູ້ຮ່ອງຮອຍ ເຮັດໃຫ້ເຂົາເຈົ້າເກີດມີຄວາມທຸກໂສກໂທມມະນັດ, ໄດ້ພາກັນທ່ຽວຊອກຫາໄປທົ່ວທຸກຍ່ອມຫຍ້າ ກໍບໍ່ຮູ້ຂ່າວຮູ້ຄາວ ຈັກວ່າເປັນຫລືຕາຍກັນແທ້; ໃນທີ່ສຸດ ຈຶ່ງພາກັນເຂົ້າໄປໃນເມືອງໂກສີ ຕັ້ງໃຈໄປຂາບທູນ ທ້າວເກດສຸລິຍົງຍານ ເພື່ອຖວາຍພອນທີ່ທ້າວໄດ້ຂຶ້ນຄອງເມືອງຈຶ່ງ ບັງອົນໄປພົ້ລູກສາວທັງສອງ ຄືນາງອິນທອງ ແລະ ນາງຢາດຟ້າ ຄຳໄຫລ, ພໍແຕ່ແນມເຫັນໜ້າລູກທັງສອງ ພະຍາກໍຮ້ອງໄຫ້ຮ່ຳໄຮ ຂຶ້ນທັນທີ ທ້າວເກດສຸລິຍົງຍານຈຶ່ງຖາມ ຫາຕົ້ນປາຍສາຍເຫດເປັນແນວໃດ ຈຶ່ງພາກັນມາຮ້ອງມາໄຫ້ຢູ່ບ່ອນນີ້, ພະຍາຊຸມພູ ແລະ ພະ ຍາທັກອິນ ຈຶ່ງແຈ້ງໃຫ້ທ້າວຮູ້ວ່າ ພວກຕົນດີໃຈໄດ້ພົບພໍ້ລູກສາວທັງສອງ ແລະ ທູນຖາມວ່າພະອົງໄດ້ນາງທັງສອງມາຈາກບ່ອນໃດ, ທ້າວຈຶ່ງຕອບວ່າ ໄດ້ເອົານາງທັງສອງມາຈາກເມືອງຍັກ ພ້ອມກັບແມ່ ຂອງທ້າວ ແລະ ກ່ອນຈະໄດ້ນາງທັງສອງມາກໍໄດ້ສູ້ຮົບກັນຢ່າງດຸ ເດືອດໄດ້ຂ້າຍັກຕາຍ ແລ້ວຈຶ່ງນຳເອົາພວກນາງກັບແມ່ຄືນມາໄດ້.

ຝ່າຍພະຍາທັງສອງໄດ້ຟັງ ກໍເກີດມີຄວາມປິຊິຊົມຊື່ນຫາອັນປຽບບໍ່ໄດ້ ພ້ອມກັບບອກທ້າວວ່າ ນາງທັງສອງແມ່ນລູກສາວຂອງ ພວກເພິ່ນ, ທ້າວກໍບອກວ່າຈະເອົາພວກນາງທັງສອງຄືນເມືອກໍບໍ່ຂັດ ຂືນສຸດແລ້ວແຕ່ໃຈ ພະຍາທັງສອງກໍບອກວ່າບໍ່ເອົາເມືອດອກ ຂໍຖວາຍແກ່ພະອົງນີ້ແລ້ວ ຕາງວ່າເປັນພີ່ ເປັນນ້ອງກັນລະຫວ່າງເມືອງພຸ້ນພີ້ ດັ່ງບົດກອນຂຽນວ່າ

ຂ້າກໍຂໍເພິ່ງເຈົ້າ ບຸນກວ້າງຫລືອນງາ
ຂໍໃຫ້ເປັນຂົວແກ້ວ ສະພານທອງທຽວທ່ອງ
ອັນວ່າເມືອງພຸ່ນພີ້ ສະເຫນີດ້ານດັ່ງດຽວ
ອັນຫນຶ່ງຂໍໃຫ້ໄນຕີຝັ່ນ ພັນປີເທົ້າຊົ່ວ
ຂໍໃຫ້ເປັນຄູ່ແກ້ວ ກັນແທ້ຊົ່ວຊີວັງ ພະເອີຍ

ຕໍ່ມາທ້າວເກດສຸລິຍົງຍານ ຈຶ່ງໄດ້ມອບເງິນຄຳເຂົ້າຂອງເຄື່ອງໃຊ້ຕ່າງໆໃຫ້ແກ່ພະຍາທັງສອງ ເຊິ່ງຖືວ່າເປັນພໍ່ເຖົ້າ, ພະຍາຊຸມພູ ແລະ ພະຍາທັກຂິນ ໄດ້ພັກຢູ່ເມືອງໂກສີດອນທ້າວ ແລະ ລູກສາວກໍເປັນເວລາເຫິງນານສົມຄວນ ຈຶ່ງໄດ້ກັບຄືນສູ່ເມືອງຂອງຕົນ, ກ່ອນຈະກັບຄືນເມືອ ພະຍາທັງສອງກໍໄດ້ສັ່ງສອນລູກສາວ ໃຫ້ຕັ້ງຕົນເປັນເມຍທີ່ດີ ຮູ້ຈັກຮີດພົວຄອງເມຍ ເອົາໃຈໃສ່ປົວລະບັດພະອົງ ໃຫ້ສົມກັບວ່າເປັນເມຍທີ່ດີ, ພ້ອມກັນນີ້ ເສນານ້ອຍໃຫ່ຍ ທີ່ເຂົ້າມາປົວລະບັດຮັກສາ ກໍໃຫ້ຮູ້ຈັກຜູ້ສູງຜູ້ຕ່ຳ ຢ່າຕີລວດກວດພຽງ, ເຖິງຂອບລະດູປີມາກໍມອບເບັ້ຍວັດເງິນເດືອນຍອງຍໍຊົມເຊີຍເຂົາ ຢ່າປ່ອຍຄ່າຂຶ້ນເຫັງເຂົາ ຢ້ານວ່າເວນກຳຈະນຳສະຫນອງພາຍຫລັງ ນາງທັງສອງກໍຍໍມືຂາບໄຫວ້ພໍ່ ຮັບເອົາຄຳໂອວາດຕັກເຕືອນໂດຍດີ.

ກ່າວເຖິງມະຫາວົງຜູ້ເປັນພໍ່ຂອງທ້າວເກດສຸລິຍົງຍານ ປະກົດວ່າແຕ່ລະມື້ລະວັນ ພະອົງກໍໄດ້ແຕ່ແຈກຢາຍສິ່ງຂອງເງິນຄຳ ໃຫ້ແກ່ຜູ້ທຸກໄຮ້ຂືນໃຈ ເພື່ອສ້າງບຸນກຸສົນໃນບັ້ນປາຍຂອງຊີວິດ; ຢູ່ມາມື້ຫນຶ່ງມະຫາວົງໄດ້ເວົ້າກັບທ້າວເກດສຸລິຍົງຍານຜູ້ເປັນລູກວ່າ ຈຳພວກ ທີ່ຖືກໂທດໃນເມື່ອກ່ອນ ທີ່ໄດ້ຈັບຂັງໃສ່ຄຸກໃສ່ຄາໄວ້ນັ້ນ ໃຫ້ເອົາ ໄປຂ້າຖິ້ມຫມົດສາ, ທ້າວໄດ້ອ້ອນວອນຕໍ່ພໍ່ວ່າ ບໍ່ຄວນຈະເຮັດແນວ ນັ້ນ

ກົວບາບເວນ ທ້າວຈຶ່ງສັ່ງໃຫ້ປ່ອຍອອກຈາກຄຸກໝົດ ບັນດາ ເສນາຜູ້ນ້ອຍ, ຍັງແຕ່ແມ່ໄວຍະກາ ກັບນາງທັງຫ້າ ພ້ອມດ້ວຍແສນເມືອງຜູ້ໃຫຍ່ ພວກນີ້ແມ່ນໃຫ້ຈຳຄຸກຕະຫລອດຊີວິດ ຖ້າເຂົາຕາຍກໍ ໃຫ້ແກ່ໄປຖິ້ມລົງວັງນ້ຳໂລດ ເພາະພວກເຂົາມີໂທດໜັກຫລາຍ.

ຕໍ່ມາຍັກສາລະວັນ ແລະ ພີ່ຜູ້ອ້າຍກໍໄດ້ສັ່ງລາທ້າວເກດສຸລິ ຍົງຍານກັບຄືນ ເມືອເມືອງມັນທະພານ ຢ້ານວ່າກຸມພາຜູ້ເປັນລຸງ ຈະຄອງຄອຍຫາ, ເມື່ອຍັກສາລະວັນ ແລະ ພີ່ຜູ້ເປັນອ້າຍກັບຄືນບັນດາຍັກໜຸ່ມທັງຫລາຍກໍພາກັນສັ່ງລາຊູ້ສາວ ດ້ວຍຄວາມອາໄລອາ ວອນຈຳໃຈຈາກຄົນຮັກຄົນແພງ, ເມື່ອຍັກສາລະວັນ ແລະ ພີ່ຜູ້ອ້າຍ ກັບເມືອຮອດເມືອງມັນທະພານແລ້ວ ກຸມພາຜູ້ເປັນລຸງ ກໍໄດ້ຖາມ ຂ່າວເຖິງທ້າວເກດສຸລິຍົງຍານຜູ້ເປັນຫລານ ແລະ ນາງແຕງອ່ອນຜູ້ເປັນນ້ອງສາວຕະຫລອດທັງຫລານໄພ້ ດັ່ງບົດກອນຂຽນວ່າ

ແຕ່ນັ້ນສາລະວັນທ້າວ ພີ່ເມືອງມາຮອດ
ລຸງຍອດທ້າວ ບຸນກວ້າງເລົ້າຖາມ
ອັນວ່າສີມງາມເຈົ້າ ຫົກພະອົງເມືອຮອດ
ເມືອງຍອດແກ້ວ ຍູ້ສາງສຳລານ ແດ່ລີ

ຍັກສາລະວັນຈຶ່ງແຈ້ງໃຫ້ລຸງຮູ້ວ່າ ທັງຫົກພະອົງກໍຢູ່ດີມີສຸກທຸກ ໆ ຄືນຢູ່ດອກ ສ່ວນທ້າວເກດສຸລິຍົງຍານນັ້ນ ໄດ້ຂຶ້ນສະເຫວີຍ ເມືອງແທນພໍ່ ປົກຄອງໄພ່ຟ້າຂ້າແຜ່ນດິນດ້ວຍຄວາມເປັນທຳທຸກຢ່າງ ຍູທ່າງໃຫ້ກິນໃຫ້ທານ ແລະ ເທສະໜາສັ່ງສອນທຸກເຊົ້າຄ່ຳວັນຄືນ , ບັນດາຫົວເມືອງຕ່າງໆ ກໍພາກັນມາເສຍສ່ວຍແຕ່ລະປີບໍ່ຂາດຝ່າຍກຸມພາຜູ້ເປັນລຸງ ກໍສະແດງຄວາມປິຕິຊົມຊື່ນດອມຫລານຊາຍທີ່ໄດ້ ສະ

ເຫວີຍເມືອງນີ້ງແທ່ນ; ສາຫລັບພີເມືອງນັ້ນກໍໄດ້ຢູ່ຮ່ວມ ປົກຄອງເມືອງບັນທະພານຄອນກຸມພາ ສ່ວນຍັກສາລະວັນນັ້ນ ໄດ້ອຳລາ ກຸມພາ ແລະ ພີເມືອງຜູ້ເປັນອ້າຍ ກັບຄືນເມືອເມືອງຂອງເຂົາ ເອງ-ຍ້ອນກ່າວເຖິງທ້າວເກດສຸລິຍົງຍານ ເຊິ່ງປົກຄອງເມືອງໂກສີ ກໍໄດ້ເຮັດໃຫ້ບ່າວໄພ່ລາສະດອນຢູ່ຊຸ່ມກິນເຢັນ ຢູທ່າງກິນຢູທ່າງທານມີທົວເມືອງຕ່າງໆມາເສຍສ່ວນ ແລະ ແລກປ່ຽນຄ້າຂາຍບໍ່ຂາດດັ່ງ ບົດກອນຂຽນວ່າ

ຢູທ່າງທາສາຂ້າ	ທຳບຸນທານທອດ
ບໍ່ທອດໄຮ້	ຫລາຍລ້ານລູກຂຸນ
ມີແຕ່ທຳບຸນສ້າງ	ຫລາຍເມືອງມາສ່ວຍ
ຮ້ອຍປະເທດດ້າວ	ໄຫລເຂົ້າເພິ່ງບຸນ,

ວັນເດືອນປີຫມູນຜ່ານໄປຕາມກົດເກນ ອາຍຸສັງຂານຂອງມະຫາວົງຜູ້ເປັນພໍ່ ແລະ ນາງແຕງອ່ອນຜູ້ເປັນແມ່ ກໍເຖົ້າແກ່ຊະລາ ການໃນທີ່ສຸດທັງສອງພະອົງກໍຊິ້ນອາຍຸສັງຂານ, ທ້າວເກດສຸລິຍົງຍານຈຶ່ງໄດ້ທຳພິທີຄົບງັນສົບພໍ່ ແລະ ແມ່ນານເຖິງສາມປີ ຈຶ່ງໄດ້ທຳການສົ່ງສະການ, ໃນມື້ຈູດສົບພໍ່ ແລະ ແມ່ນັ້ນ ພາຍຫລັງນຳສົບຂຶ້ນສູ່ ເມນຫລວງ (ກອງຟອນ) ແລ້ວ ທ້າວກໍເອົາຜ້າວິເສດມາກົວດ ແກ່ວງເກີດເປັນໄຟເຜົາສົບ ເມື່ອໄຟມອດແລ້ວ ທ້າວກໍເກັບດູກພໍ່ ແລະແມ່ມາກໍ່ທາດກວມເອົາໄວ້.

ຫລັງຈາກນັ້ນຽນຊາກສົ່ງສະການພໍ່ ແລະ ແມ່ຮຽບຮ້ອຍແລ້ວທ້າວກໍສືບຕໍ່ປົກຄອງບ້ານເມືອງ ດ້ວຍຄວາມເປັນທຳ ແລະ ເທສະ ຫນາສັ່ງສອນຝູງສັດໂລກທັງຫລາຍ ຈົນອາຍຸໄດ້ພັນປີ ທ້າວຈຶ່ງສິ້ນອາ ຍຸ

ແລ້ວເມືອສະຫວັນສຸກຢູ່ເທິງສະຫວັນ ດ້ວຍຄວາມຜາສຸກສຳ ລານ ລ້ວນແຕ່ຂອງທິບທັງມອນ.

ນິທານທັງໝົດທີ່ກ່າວມານີ້ເພິ່ນໄດ້ສະຫລຸບມ້ວນທ້າຍໃຫ້ ເຫັນທີ່ມາຂອງແຕ່ລະຕົວລະຄອນໃນເລື່ອງວ່າ ແມ່ນໃຜກັບຊາດມາເກີດດັ່ງນີ້ ມະຫາວົງເພິ່ນວ່າພະຍາສີສຸດໂທ, ນາງແຕງອ່ອນແມ່ນນາງສີຫາມາຍາ ເຊິ່ງທັງສອງແມ່ນພໍ່ ແລະ ແມ່ຂອງພະພຸດທະເຈົ້າໂຄຕົມ, ຍັກຫັດຖະຈັກນັ້ນ ແມ່ນພະໂມຄະລາ, ຍັກສາລະວັນນັ້ນແມ່ນພະສາລີບຸດ, ທັງສອງແມ່ນລູກສິດຂອງພະໂຄຕົມ, ສ່ວນກຸມພາຜູ້ເປັນລຸງນັ້ນແມ່ນພະອະນຸລຸດທະເຖນ, ອັນວ່າ ຜີ ເມືອງຜູ້ອາຍນັ້ນ ແມ່ນ ພະອານົນ ເຊິ່ງເປັນລູກອາວຂອງພະໂຄຕົມ, ສຳຫລັບທ້າວຫັດສະໄນ ພະອິນໃຊ້ລົງມາໂຜດຕອນນັ້ນ ແມ່ນລາຫຸນ ລູກຊາຍຂອງພະໂຄຕົມ , ນາງເທບລີລາ ທີ່ລົງມາລ້ຽງທ້າວເກດສຸລີຍົງຍານ ໃນຄາວນັ້ນຫາກແມ່ນນາງເຂມາ, ອັນວ່ານາງປະທຸມມາເມຍຂອງທ້າວເກດສຸລີ ຍົງຍານນັ້ນ ກໍຫາກແມ່ນໂສທະລາພິມພາ, ສ່ວນວ່ານາງຈັນທອນ, ນາງອິນທອງ, ແລະ ນາງຄຳຍາດ ຫາກແມ່ນພວກຮັບໃຊ້ສອນສາ ສະໜາທຳໄດ້ແກ່ ສາວິກາພິກຂຸນີ; ສ່ວນວ່າໄວຍະກາແມ່ລູກທີ່ສັບສໍ່ໃສ່ຄວາມໃຫ້ທ້າວມະຫາວົງ ຂ້າຕີນາງແຕງອ່ອນໃນຕອນນັ້ນ, ຫາກແມ່ນພວກທີ່ຟັງຄວາມສັບສໍ່ຂອງເດຍລັດຖີ ແລ້ວປຸ້ນຜ້າຍັດໃສ່ໃນທ້ອງ ທຳທ່າຖືພາມານ ແລະ ທ່ຽວຮ້ອງປ່າວໄປວ່າ ພະພຸດທະເຈົ້າໄດ້ ຫລິ້ນກິນກັບພວກເຂົາ, ແຕ່ຍ້ອນບາບບໍ່ແພ້ບຸນ ໜູຈິ່ງລັກກັດຜ້າທີ່ ເຮັດເປັນທ້ອງປອມນັ້ນອອກ ຊາວເມືອງຈິ່ງຫຸ້ມໄລ່ຕີພວກເຂົາ, ແລະໃນທີ່ສຸດແຜ່ນດິນກໍຍະເອົາພວກເຂົາລົງໄປໄໝ້ໃນອາເວຈີ; ພວກ ນີ້

ເຖິງແມ່ນວ່າພະສີອະລິຍະເມດ ໄຕລົງມາເກີດກໍບໍ່ສາມາດຈະ ໂຜດພວກເຂົາໄດ້ ເພາະບາບຫນັກຫນາຫລາຍໂພດ.

ອັນວ່າແສນເມືອງຜູ້ໃຫ່ຍທີ່ຖືກແມ່ໄວຍະກາຊື້ຈ້າງ ດ້ວຍ ຄຳພັນໜຶ່ງປາງນັ້ນ ຫາກແມ່ນສັດຕູໂຕສຳຄັນທີ່ນຳບຽດບຽນພະອົງທຸກຊາດທຸກພົບ ບໍ່ເລີກບໍ່ແລ້ວ ເປັນຈັກເທື່ອ, ອັນວ່າທ້າວເກດສຸລິຍົງ ຍານຫລື ເກດສຸລິວົງນັ້ນ ຫາກບໍ່ແມ່ນຜູ້ໃດອື່ນໄກ ກັບມາໃນຊາດນີ້ ຫາກແມ່ນພະໂຄດົມ ເຈົ້າສັບພັນຍູຕົນປະເສີດ ຄືພະພຸດທະເຈົ້າຂອງເຮົານັ້ນແລ

ຈົບບໍລິບູນ

ວັນທີ 30 / 3 / 1990

ສາລະບານ

1. ກ່າວເຖິງເມືອງນະຄອນສີ	ໜ້າ	1
2. ຂັ້ນມະຫາວົງໄປຕໍ່ໄກ່	-"-	3
3. ຂັ້ນເສນານຳຫາມະຫາວົງ	-"-	7
4. ຂັ້ນມະຫາວົງຝັນເຫັນນາງແຕງອ່ອນ	-"-	9
5. ຂັ້ນຂຸນຄານນຳນາງແຕງອ່ອນອອກຈາກນ້ຳ	-"-	16
6. ຂັ້ນແມ່ໄວຍະກາຖວາຍນາງທັງຫ້າ	-"-	20
7. ຂັ້ນພະຍາໂກສີສິ້ນພະຊົນ (ຕາຍ)	-"-	24
8. ຂັ້ນຈັກກີມະຫາວົງໄປຄ້ອງຊ້າງ	-"-	25
9. ຂັ້ນນາງແຕງອ່ອນປະສູດລູກ	-"-	32
10. ຂັ້ນນາງເທບລີລາລົງມາເອົາທ້າວເກດສຸລິຍົງ ຍານອອກຈາກຂຸມ	-"-	37
11. ຂັ້ນທ້າວມະຫາວົງກັບມາເມືອງ	-"-	39
12. ຂັ້ນແມ່ໄວຍະກາສັບສໍ່ວ່ານາງແຕງອ່ອນຫລິ້ນຊູ້	-"-	40
13. ຂັ້ນນາງແຕງອ່ອນເດີນທາງດ້ວຍຄວາມທຸກ	-"-	49
14. ຂັ້ນເທວະດານິລະມິດສວນທິບຕ້ອນຮັບນາງແຕງອ່ອນ	-"-	50
15. ຂັ້ນທ້າວກິລະກັນນຳລີພົນໄປທຳລາຍເມືອງໂກສີ	-"-	55

16. ບັ້ນກຸມພາ ແລະນາງແຕງອ່ອນຕາຍຢູ່ກາງປ່າ ໜ້າ 57

17. ບັ້ນທ້າວທັດສະໄນລິງໂຜດທ້າວກຸມພາແລະນາງ
ແຕງອ່ອນ -"-

18. ບັ້ນທ້າວເກດສຸລິຍົງຍານເຮັດສິງຄາມກັບພໍ່ -"- 64

19. ບັ້ນລິງໂທດໄວຍະກາ ແລະແສນເມືອງ -"- 75

20. ບັ້ນຍັກທັດຖະຈັກໄປໄດ້ລູກສາວຢູ່ໃນດອກບົວ -"- 78

21. ບັ້ນລືສີກຸມພາຮ່ຳໄຮຫານ້ອງ -"- 89

22. ບັ້ນພະອິນບອກໃຫ້ທ້າວເກດສຸລິຍົງຍານໄປນຳ
ເອົາແມ່ -"- 91

23. ບັ້ນທ້າວເກດສຸລິຍົງຍານໄປນຳຫາແມ່ -"- 93

24. ບັ້ນຍັກສາລະວັນພາໄປຮົບຍັກທັດຖະຈັກ -"- 105

25. ບັ້ນທ້າວເກດ ສຸລິຍົງຍານເອົ້າໄປໃນເມືອງ
ນັນທະພານ -"- 124

26. ບັ້ນພະອິນມາທົດສິງທ້າວເກດສຸລິຍົງຍານນັ່ງເມືອງ "- 140

27. ບັ້ນອິນພົມສັ່ງລາທ້າວຄືນສູ່ເມືອງສະຫວັນ . -"- 142

24/VII

ພິມທີ່ ໂຮງພິມມິດຕະພາບຊາວໜຸ່ມ ລາວ - ໂຊວຽດ
ຖະໜົນ ຫລວງພະບາງ ຕູ ປ.ມ. 2536.
ໂທລະສັບ : 4800 - 4576.